ຄະຕິພົດ
ປະທານເໝົາເຈີຕຸງ

ຊາວກຳມາຊີບທົ່ວໂລກ, ຈົ່ງຮ່ວມສຳພັນກັນເຂົ້າ !

ຄະຕິພົດ
ປະທານເໝົາເຈີຕຸງ

ສຳນັກພິມພາສາຕ່າງປະເທດ

ປັກກິ່ງ 1972

ພິມໃນສາທາລະນະລັດປະຊາຊົນຈີນ

ສາລະບານ

໑. ພັກກອມມູນິດ 1

໒. ຊົນຊັ້ນແລະການຕໍ່ສູ້ຊົນຊັ້ນ 10

໓. ສັງຄົມນິຍົມແລະລັດທິກອມມູນິດ 27

໔. ການແກ້ໄຂຄວາມຂັດແຍ້ງພາຍໃນປະຊາຊົນຢ່າງ
ຖືກຕ້ອງ 54

໕. ສົງຄາມກັບສັນຕິພາບ 70

໖. ຈັກກະພັດນິຍົມແລະພວກປະຕິການທັງໝົດລ້ວນ
ແຕ່ແມ່ນເສືອເຈັ້ຽ 87

໗. ກ້າຕໍ່ສູ້ ກ້າເອົາຊະນະ 98

໘. ສົງຄາມປະຊາຊົນ 105

໙. ກອງທັບປະຊາຊົນ 118

໑໐. ການນຳຂອງຄະນະກຳມະການພັກ 123

໑໑. ແນວທາງມວນຊົນ 138

໑໒. ວຽກງານການເມືອງ 156

໑໓. ການພົວພັນລະຫວ່າງພະນັກງານກັບນັກລົບ 172

໑໔. ການພົວພັນລະຫວ່າງທະຫານກັບປະຊາຊົນ 177

໑໕. ປະຊາທິປະໄຕໃຫຍ່ ໓ ປະການ 181

໑໖. ການໃຫ້ການສຶກສາແລະຝຶກແອບອົບຮົມ 189

໑໗. ຮັບໃຊ້ປະຊາຊົນ 194

໑໘. ລັດທິຮັກຊາດແລະລັດທິສາກົນ 199

໑໙. ລັດທິວິລະຊົນປະຕິວັດ 207

໒໐. ການສ້າງປະເທດດ້ວຍຄວາມໝັ່ນພຽນແລະມັດທະຍັດ 212

໒໑. ເພິ່ງກຳລັງຕົນເອງ ຕໍ່ສູ້ຢ່າງທໍລະຫົດອົດທົນ . . . 221

໒໒. ວິທີຄິດແລະວິທີເຮັດວຽກ 231

໒໓. ການສຳຫຼວດຄົ້ນຄວ້າ 263

໒໔. ການແກ້ໄຂດັດແປງແນວຄິດທີ່ຜິດ 271

໒໕. ຄວາມສາມັກຄີ 286

໒໖. ວິໄນ 289

໒໗. ການຕຳນິແລະຕຳນິຕົນເອງ 293

໒໘. ສະມາຊິກພັກກອມມູນິດ 304

໒໙. ພະນັກງານ 314

໓໐. ຊາວໜຸ່ມ 328

໓໑. ແມ່ຍິງ 335

໓໒. ວັດທະນະທຳແລະສິລະປະ 341

໓໓. ການຮ່ຳຮຽນ 348

໑. ພັກກອມມູນິດ

ກຳລັງແກ່ນສານທີ່ນຳພາພາລະກິດຂອງພວກເຮົາແມ່ນພັກກອມມູນິດຈີນ.

ພື້ນຖານທິດສະດີທີ່ຊີ້ນຳແນວຄິດຂອງພວກເຮົາແມ່ນລັດທິມາກເລນິນ.

ຄຳປາໄສເປີດປະຊຸມໃນກອງປະຊຸມເທື່ອທີ່ ໑ ຂອງ
ສະພາຜູ້ແທນປະຊາຊົນທົ່ວປະເທດສະໄໝທີ່ ໑ ຂອງ
ສາທາລະນະລັດປະຊາຊົນຈີນ(ວັນທີ ໑໕-໙-໑໙໕໔)

ເມື່ອຢາກປະຕິວັດ ກໍ່ຕ້ອງມີພັກປະຕິວັດພັກໜຶ່ງ. ຄັນບໍ່ມີພັກທີ່ປະຕິວັດພັກໜຶ່ງ, ບໍ່ມີພັກປະຕິວັດທີ່ສ້າງຂຶ້ນຕາມທິດສະດີປະຕິວັດແລະຕາມທ່າທຳນອງປະຕິວັດຂອງລັດທິມາກເລນິນພັກໜຶ່ງ

ແລ້ວ ກໍ່ບໍ່ສາມາດນຳພາຊົນຊັ້ນກຳມະກອນແລະປວງປະຊາຊົນອັນກວ້າງໃຫຍ່ເອົາຊະນະຈັກກະພັດນິຍົມແລະລູກແຫຼ້ງຕີນມືຂອງມັນໄດ້.

«ກຳລັງປະຕິວັດທົ່ວໂລກຈົ່ງສາມັກຄີກັນເຂົ້າ, ຄັດຄ້ານການລຸກລານຂອງຈັກກະພັດນິຍົມ» (ເດືອນ ໑໑-໑໙໔໘)

ຄັນບໍ່ມີຄວາມພະຍາຍາມຂອງພັກກອມມູນິດຈີນ, ບໍ່ມີຊາວພັກກອມມູນິດຈີນເປັນເສົາຄ້ຳອັນໝັ້ນແກ່ນ ຂອງປະຊາຊົນຈີນແລ້ວ, ປະເທດຈີນກໍ່ບໍ່ສາມາດໄດ້ຮັບເອກະລາດແລະການປົດປ່ອຍ, ປະເທດຈີນກໍ່ບໍ່ສາມາດເປັນແບບອຸດສາຫະກຳແລະກະເສດຕະກຳເປັນແບບທັນສະໄໝໄດ້.

«ວ່າດ້ວຍລັດຖະບານປະສົມ» (ວັນທີ ໒໔-໔-໑໙໔໕)

ພັກກອມມູນິດຈີນແມ່ນແກ່ນສານນຳພາຂອງປະຊາຊົນທົ່ວ

ປະເທດຈີນ. ຄັນບໍ່ມີແກ່ນສານນີ້ແລ້ວ, ພາລະກິດສັງຄົມນິຍົມກໍ່ບໍ່ຊະນະໄດ້.

ຄຳປາໄສໃນເວລາຮັບຕ້ອນການເຂົ້າພົບຂອງຜູ້ແທນທັງໝົດທີ່ເຂົ້າຮ່ວມກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດເທື່ອທີ ໓ ຂອງຄະນະຊາວໜຸ່ມລັດທິປະຊາທິປະໄຕໃໝ່ແຫ່ງປະເທດຈີນ (ວັນທີ ໒໕-໕-໑໙໕໗)

ພັກທີ່ມີວິໄນ, ທີ່ປະກອບອາວຸດດ້ວຍທິດສະດີລັດທິມາກເລນິນ, ທີ່ໃຊ້ວິທີຕຳນິຕົນເອງແລະພົວພັນກັບປວງປະຊາຊົນ. ກອງທັບທີ່ນຳພາໂດຍພັກດັ່ງກ່າວ. ແນວໂຮມຂອງບັນດາຊົນຊັ້ນປະຕິວັດແລະຂອງກຸ່ມປະຕິວັດຝ່າຍຕ່າງໆທີ່ນຳພາໂດຍພັກດັ່ງກ່າວ. ສາມຢ່າງນີ້ແມ່ນອາວຸດສຳຄັນຂອງພວກເຮົາສຳລັບເອົາຊະນະສັດຕູ.

«ວ່າດ້ວຍການປະເດັດການປະຊາທິປະໄຕປະຊາຊົນ» (ວັນທີ ໓໐-໖-໑໙໔໙)

ພວກເຮົາຕ້ອງເຊື່ອມວນຊົນ, ພວກເຮົາຕ້ອງເຊື່ອພັກ, ອັນນີ້ແມ່ນຫຼັກການພື້ນຖານສອງຂໍ້. ຖ້າສົງໄສຫຼັກການສອງຂໍ້ນີ້ແລ້ວ, ອັນໃດກໍ່ເຮັດບໍ່ສຳເລັດ.

«ບັນຫາກ່ຽວກັບການຈັດຕັ້ງກະເສດຕະກຳໃຫ້ເປັນແບບສະຫະກອນ» (ວັນທີ່ ໓໑-໗-໑໙໕໕)

ພັກກອມມູນິດຈີນທີ່ປະກອບອາວຸດດ້ວຍທິດສະດີ ແລະ ແນວຄິດລັດທິມາກເລນິນໄດ້ສ້າງທ່າທຳນອງການເຮັດວຽກແບບໃໝ່ຂຶ້ນໃນໝູ່ປະຊາຊົນຈີນ, ສຳຄັນແມ່ນທ່າທຳນອງທີ່ທິດສະດີກັບພາກປະຕິບັດປະສານກັນ, ທ່າທຳນອງທີ່ພົວພັນກັບປວງປະຊາຊົນຢ່າງສະໜິດແໜ້ນ ແລະທ່າທຳນອງທີ່ຕຳນິຕົນເອງ.

«ວ່າດ້ວຍລັດຖະບານປະສົມ» (ວັນທີ ໒໔-໔-໑໙໔໕)

ພັກການເມືອງທີ່ຊີ້ນຳການເຄື່ອນໄຫວປະຕິວັດອັນຍິ່ງໃຫຍ່, ຖ້າບໍ່ມີທິດສະດີປະຕິວັດ ບໍ່ມີຄວາມຮູ້ທາງປະວັດສາດ ແລະບໍ່ມີ

ຄວາມເຂົ້າໃຈການເຄື່ອນໄຫວຕົວຈິງຢ່າງເລິກຊຶ້ງແລ້ວ ບໍ່ອາດຈະໄດ້ຮັບໄຊຊະນະ.

« ຖານະຂອງພັກກອມມູນິດຈີນໃນສົງຄາມຊາດ » (ເດືອນ ໑໐-໑໙໓໘)

ແຕ່ກ່ອນພວກເຮົາເຄີຍເວົ້າວ່າ ການເຄື່ອນໄຫວປັບປຸງທ່າທຳນອງແມ່ນ "ການເຄື່ອນໄຫວອົບຮົມທາງລັດທິມາກຢ່າງທົ່ວເຖິງ". ການປັບປຸງທ່າທຳນອງນັ້ນແມ່ນທົ່ວພັກຮ່ຳຮຽນລັດທິມາກໂດຍຜ່ານການຕຳນິແລະຕຳນິຕົນເອງ. ໃນລະຫວ່າງປັບປຸງທ່າທຳນອງນັ້ນ ພວກເຮົາກໍ່ສາມາດຮຽນຮູ້ລັດທິມາກໄດ້ຫຼາຍກວ່າເກົ່າຢ່າງແນ່ນອນ.

«ຄຳປາໄສໃນກອງປະຊຸມວຽກງານໂຄສະນາທົ່ວປະເທດຂອງພັກກອມມູນິດຈີນ» (ວັນທີ່ ໑໒-໓-໑໙໕໗)

ການທີ່ຈະເຮັດໃຫ້ຄົນຈີນຫຼາຍຮ້ອຍລ້ານຄົນມີຄວາມເປັນຢູ່ດີ, ຈະສ້າງສາປະເທດຂອງພວກເຮົາທີ່ເສດຖະກິດຫຼ້າຫຼັງແລະວັດ

ທະນະທຳຫຼ້າຫຼັງໃຫ້ກາຍເປັນປະເທດຮັ່ງມີສົມບູນ ເຂັ້ມແຂງຮຸ່ງເຮືອງແລະມີລະດັບວັດທະນະທຳສູງນັ້ນ ແມ່ນພາລະໜ້າທີ່ອັນລຳບາກໜັກໜາຫຼາຍອັນໜຶ່ງ. ການທີ່ພວກເຮົາຕ້ອງປັບປຸງທ່າທຳນອງ, ໃນເວລານີ້ຕ້ອງປັບປຸງ, ເມືອໜ້າຍັງຕ້ອງປັບປຸງ, ຕ້ອງກຳຈັດສິ່ງຜິດພາດໃນກະໂຕພວກເຮົາອອກເລື້ອຍໆນັ້ນ ກໍ່ເພື່ອເຮັດໃຫ້ພວກເຮົາສາມາດຫາບແບກພາລະໜ້າທີ່ດັ່ງກ່າວໃຫ້ດີຍິ່ງຂຶ້ນແລະເພື່ອຮ່ວມເຮັດວຽກກັບບັນດາບຸກຄົນນອກພັກທີ່ມີສັດທາຕັ້ງໃຈປະຕິວັດດັດແປງນັ້ນໄດ້ດີຍິ່ງຂຶ້ນ.

«ຄຳປາໄສໃນກອງປະຊຸມວຽກງານໂຄສະນາທົ່ວປະເທດຂອງພັກກອມມູນິດຈີນ» (ວັນທີ ໑໒-໓-໑໙໕໗)

ນະໂຍບາຍແມ່ນຈຸດເລີ່ມຕົ້ນຂອງ ການກະທຳຕົວຈິງທັງໝົດຂອງພັກການເມືອງປະຕິວັດ, ພ້ອມທັງສະແດງອອກໃນຂະບວນການແລະຜົນສຸດທ້າຍຂອງການກະທຳ. ການກະທຳໃດໆຂອງພັກການເມືອງປະຕິວັດ ລ້ວນແຕ່ແມ່ນດຳເນີນນະໂຍບາຍໝົດ.

ຄັນບໍ່ແມ່ນດຳເນີນນະໂຍບາຍອັນຖືກຕ້ອງ ກໍ່ແມ່ນດຳເນີນນະໂຍບາຍອັນຜິດພາດ; ຄັນບໍ່ແມ່ນດຳເນີນນະໂຍບາຍໃດນະໂຍບາຍໜຶ່ງດ້ວຍຄວາມຮູ້ສຶກຕື່ນຕົວ ກໍ່ແມ່ນດຳເນີນຢ່າງຫຼັບຫູຫຼັບຕາ. ອັນທີ່ເອີ້ນວ່າບົດຮຽນນັ້ນ ກໍ່ແມ່ນຂະບວນການແລະຜົນສຸດທ້າຍຂອງການດຳເນີນນະໂຍບາຍນັ້ນເອງ. ນະໂຍບາຍຕ້ອງຜ່ານພາກປະຕິບັດຂອງປະຊາຊົນ, ໝາຍຄວາມວ່າຜ່ານບົດຮຽນນັ້ນເອງ ຈຶ່ງສາມາດຢັ້ງຢືນໄດ້ວ່າມັນຖືກຕ້ອງຫຼືບໍ່ແລະຈຶ່ງສາມາດວິນິດໄສໄດ້ວ່າມັນຖືກຕ້ອງຫຼືຜິດພາດໃນລະດັບໃດ ແຕ່ວ່າ ພາກປະຕິບັດຂອງຄົນເຮົາ, ໂດຍສະເພາະແມ່ນພາກປະຕິບັດຂອງພັກການເມືອງປະຕິວັດແລະມວນຊົນປະຕິວັດ, ແມ່ນບໍ່ມີອັນໃດທີ່ບໍ່ພົວພັນກັບນະໂຍບາຍຊະນິດນີ້ຫຼືຊະນິດນັ້ນ. ສະນັ້ນ ກ່ອນຈະມີການກະທຳໃດໆ ກໍ່ຕ້ອງອະທິບາຍນະໂຍບາຍທີ່ພວກເຮົາກຳນົດຂຶ້ນຕາມສະພາບການໃຫ້ແກ່ສະມາຊິກພັກແລະມວນຊົນຢ່າງແຈ່ມແຈ້ງ. ຖ້າບໍ່ດັ່ງນັ້ນ ສະມາຊິກພັກແລະມວນຊົນກໍ່ຈະຫ່າງເຫີນຈາກການນຳພາຂອງນະໂຍ

ບາຍພວກເຮົາ, ເຮັດໄປຢ່າງຫຼັບຫູຫຼັບຕາແລະປະຕິບັດຕາມນະໂຍບາຍທີ່ຜິດພາດ.

«ກ່ຽວກັບນະໂຍບາຍອຸດສາຫະກຳແລະພານິດຊະກຳ»(ວັນທີ່ ໒໗-໒-໑໙໔໘)

ພັກເຮົາໄດ້ກຳນົດແນວທາງຮວມແລະນະໂຍບາຍຮວມຂອງການປະຕິວັດຈີນ ທັງໄດ້ກຳນົດແນວທາງວຽກງານຕົວຈິງຕ່າງໆແລະນະໂຍບາຍຕົວຈິງຕ່າງໆ. ແຕ່ວ່າ ມີສະຫາຍຫຼາຍຄົນມັກຈື່ໄດ້ແຕ່ແນວທາງວຽກງານແລະນະໂຍບາຍຕົວຈິງບາງອັນຂອງພັກເຮົາ, ແລ້ວລືມແນວທາງຮວມແລະນະໂຍບາຍຮວມຂອງພັກເຮົາເສຍ. ຖ້າລືມແນວທາງຮວມແລະນະໂຍບາຍຮວມຂອງພັກເຮົາແທ້ແລ້ວ, ພວກເຮົາກໍ່ຈະເປັນຜູ້ປະຕິວັດທີ່ຫຼັບຫູຫຼັບຕາບໍ່ສົມບູນແລະສະຕິບໍ່ແຈ່ມແຈ້ງໄປ, ເມື່ອເວລາປະຕິບັດແນວທາງວຽກງານຕົວຈິງແລະນະໂຍບາຍຕົວຈິງນັ້ນ, ພວກເຮົາກໍ່ຈະຫຼົງທິດຜິດທາງ, ກໍ່ຈະຫ່ຽງໄປຫ່ຽງມາ, ກໍ່ຈະເຮັດໃຫ້

ວຽກງານຂອງພວກເຮົາເສຍຫາຍ.

«ຄຳປາໄສ ໃນກອງປະຊຸມພະນັກງານໃນເຂດປົດປ່ອຍຊານຊີ—ສຸຍຢວນ» (ວັນທີ່ ໑-໔-໑໙໔໘)

ນະໂຍບາຍແລະຍຸດໂທບາຍແມ່ນຊີວິດຂອງພັກ, ສະຫາຍຜູ້ນຳທຸກຂັ້ນຕ້ອງເອົາໃຈໃສ່ຢ່າງເຕັມທີ່, ຢ່າໄດ້ເລີນເລີ່ເຜີຕົວຢ່າງເດັດຂາດ.

«ໜັງສືແຈ້ງຂ່າວກ່ຽວກັບສະພາບການ»(ວັນທີ່ ໒໐-໓-໑໙໔໘)

໔. ຊົນຊັ້ນແລະການຕໍ່ສູ້ຊົນຊັ້ນ

ການຕໍ່ສູ້ຊົນຊັ້ນ, ບາງຊົນຊັ້ນຊະນະ, ບາງຊົນຊັ້ນດັບສູນ. ອັນນີ້ແມ່ນປະວັດສາດ, ອັນນີ້ແມ່ນປະວັດສີວິໄລໃນຫຼາຍພັນປີ. ການອະທິບາຍປະວັດສາດດ້ວຍທັດສະນະນີ້ ກໍ່ເອີ້ນວ່າວັດຖຸນິຍົມປະວັດສາດ, ຢືນຢູ່ກົງກັນຂ້າມກັບທັດສະນະນີ້ ກໍ່ແມ່ນຈິດນິຍົມປະວັດສາດ.

«ຖິ້ມຄວາມໃຝ່ຝັນ, ກຽມຕົວຕໍ່ສູ້» (ວັນທີ ໑໔-໘-໑໙໔໙)

ໃນສັງຄົມຊົນຊັ້ນ, ແຕ່ລະຄົນລ້ວນແຕ່ມີຊີວິດຢູ່ໃນຖານະຊົນຊັ້ນໃດຊົນຊັ້ນໜຶ່ງ, ບໍ່ມີແນວຄຶດຈະນິດໃດທີ່ບໍ່ຕິດຮອຍຊົນຊັ້ນ.

«ວ່າດ້ວຍພາກປະຕິບັດ» (ເດືອນ ໗-໑໙໓໗)

ການປ່ຽນແປງຂອງສັງຄົມນັ້ນ, ສຳຄັນແມ່ນຍ້ອນການຂະຫຍາຍຕົວຂອງຄວາມຂັດແຍ້ງພາຍໃນສັງຄົມ, ຄືຄວາມຂັດແຍ້ງລະຫວ່າງກຳລັງການຜະລິດກັບການພົວພັນການຜະລິດ, ຄວາມຂັດແຍ້ງລະຫວ່າງຊົນຊັ້ນ, ຄວາມຂັດແຍ້ງລະຫວ່າງໃໝ່ກັບເກົ່າ, ຍ້ອນການຂະຫຍາຍຕົວຂອງຄວາມຂັດແຍ້ງເຫຼົ່ານີ້ຈຶ່ງຊຸກຍູ້ໃຫ້ສັງຄົມກ້າວໜ້າໄປ, ຊຸກຍູ້ໃຫ້ສັງຄົມໃໝ່ເຂົ້າແທນສັງຄົມເກົ່າ.

«ວ່າດ້ວຍຄວາມຂັດແຍ້ງ» (ເດືອນ ໘-໑໙໓໗)

ການຂູດຮີດທາງເສດຖະກິດແລະການກົດຂີ່ທາງການເມືອງຢ່າງໂຫດຮ້າຍທີ່ຊົນຊັ້ນເຈົ້າທີ່ດິນເຮັດຕໍ່ຊາວນານັ້ນ ໄດ້ບັງຄັບໃຫ້ຊາວນາລຸກຮືຂື້ນສູ້ຕັ້ງຫຼາຍຕໍ່ຫຼາຍເທື່ອ ເພື່ອຕໍ່ຕ້ານການປົກຄອງຂອງຊົນຊັ້ນເຈົ້າທີ່ດິນ. ...ໃນສັງຄົມສັກດີນາຈີນ, ມີແຕ່ການຕໍ່ສູ້ຊົນຊັ້ນຂອງຊາວນາ ການລຸກຮືຂື້ນສູ້ຂອງຊາວນາແລະ

ສົງຄາມຂອງຊາວນາແນວນີ້ທີ່ນັ້ນ ຈຶ່ງແມ່ນແມ່ແຮງອັນແທ້ຈິງຂອງການຂະຫຍາຍຕົວປະວັດສາດ.

« ການປະຕິວັດຈີນກັບພັກກອມມູນິດຈີນ » (ເດືອນ ໑໒-໑໙໓໙)

ການຕໍ່ສູ້ຊົນຊາດ, ເວົ້າໃຫ້ສຸດແລ້ວ ກໍ່ແມ່ນບັນຫາການຕໍ່ສູ້ຊົນຊັ້ນ. ໃນປະເທດອາເມລິກາ, ຜູ້ທີ່ກົດຂີ່ຊາວຜິວດຳນັ້ນ ພຽງແຕ່ແມ່ນກຸ່ມປົກຄອງປະຕິການໃນໝູ່ຊາວຜິວຂາວທີ່ນັ້ນ. ພວກມັນບໍ່ສາມາດເປັນຕົວແທນໃຫ້ກຳມະກອນ ຊາວນາ ນັກຮຽນຮູ້ຜູ້ປະຕິວັດ ແລະ ບຸກຄົນກ້າວໜ້າອື່ນໆທີ່ກິນຈຳນວນສ່ວນຫຼາຍທີ່ສຸດໃນຊາວຜິວຂາວໄດ້ຢ່າງເດັດຂາດ.

«ຄຳຖະແຫຼງການສະໜັບສະໜູນການຕໍ່ສູ້ອັນເປັນທຳຂອງຊາວອາເມລິກາຜິວດຳທີ່ຄັດຄ້ານການດູໝິ່ນເຊື້ອຊາດຂອງຈັກກະພັດອາເມລິກາ» (ວັນທີ່ ໘-໘-໑໙໖໓)

ປະຊາຊົນນັ້ນຕ້ອງແມ່ນພວກເຮົາໄປຈັດຕັ້ງ. ພວກປະຕິການຂອງຈີນນັ້ນ ຕ້ອງແມ່ນພວກເຮົາຈັດຕັ້ງປະຊາຊົນໄປໂຄ່ນລົ້ມພວກມັນ. ສິ່ງໃດທີ່ເປັນປະຕິການ, ເຈົ້າບໍ່ຕີ, ມັນກໍ່ບໍ່ລົ້ມ. ອັນນີ້ກໍ່ຄືກັບກວາດເຮືອນ, ບ່ອນໃດບໍ່ກວາດ, ຂີ້ຝຸ່ນກໍ່ບໍ່ຫ່ອນຊິໜີໄປເອງ.

«ສະຖານະການພາຍຫຼັງໄດ້ໄຊຊະນະໃນສົງຄາມຕໍ່ຕ້ານຍີ່ປຸ່ນແລະເຂັມທິດຂອງພວກເຮົາ» (ວັນທີ່ ໑໓-໘-໑໙໔໕)

ສັດຕູບໍ່ຫ່ອນຊິດັບສູນເອງ. ບໍ່ວ່າພວກປະຕິການຂອງຈີນ ຫຼືອິດທິພົນລຸກລານຂອງຈັກກະພັດອາເມລິກາຢູ່ໃນປະເທດຈີນ ລ້ວນແຕ່ບໍ່ຫ່ອນຊິຖອນອອກຈາກເວທີປະວັດສາດໄປເອງ.

«ດຳເນີນການປະຕິວັດຈີນເຖິງທີ່ສຸດ» (ວັນທີ່ ໓໐-໑໒-໑໙໔໘)

ການປະຕິວັດບໍ່ແມ່ນເຊີນແຂກກິນເຂົ້າ, ບໍ່ແມ່ນແຕ່ງບົດ

ແຕ່ງເລື່ອງ, ບໍ່ແມ່ນແຕ້ມຮູບແສ່ວດອກ, ບໍ່ອາດເຮັດຢ່າງປະນີດ ຢ່າງບໍ່ຮ້ອນບໍ່ຮົນ ສຸພາບລຽບລ້ອຍຫຼືຢ່າງອຸ່ນອຽນຄ່ຽມຄົມ ເມດຕາກະລຸນາ ເຄົາລົບນົບນ້ອມ ສະຫງ່ຽມຈຽມຕົວແລະອ່ອນນ້ອມໄດ້. ການປະຕິວັດແມ່ນການລຸກຮືຂຶ້ນສູ້, ແມ່ນການກະທຳອັນດຸເດືອດຮຸນແຮງທີ່ຊົນຊັ້ນໜຶ່ງໂຄ່ນລົ້ມອີກຊົນຊັ້ນໜຶ່ງ.

«ລາຍງານການສຳຫຼວດຂະບວນເຄື່ອນໄຫວຂອງຊາວນາແຂວງຫູໜານ» (ເດືອນ ໓-໑໙໒໗)

ສິ່ງທີ່ຈຽງໄຄເຊັກເຮັດຕໍ່ປະຊາຊົນນັ້ນ ແມ່ນຍາດຍຶດສິດອຳນາດທຸກຍິບນີ ແລະຍາດຊີງຜົນປະໂຫຍດທຸກຍິບນີ. ພວກເຮົາເດ້? ເຂັມທິດຂອງພວກເຮົາແມ່ນຕໍ່ສູ້ແບບຜັດແລກຜັດ, ທີ່ດິນຄ່າຂີ້ມກໍ່ຕ້ອງຍາດແຍ່ງ. ພວກເຮົາເຮັດຕາມວິທີຂອງຈຽງໄຄເຊັກ. ແນວໃດຈຽງໄຄເຊັກກໍ່ບັງຄັບໃຫ້ປະຊາຊົນຮັບເອົາສົງຄາມ, ມືຊ້າຍມັນຖືງ້າວ ມືຂວາກໍ່ຖືງ້າວ. ພວກເຮົາກໍ່ເຮັດຕາມວິທີຂອງມັນ, ຕ້ອງຈັບງ້າວຂຶ້ນ. ...ເວລານີ້ຈຽງໄຄ

ເຊັກລັບງ້າວຢູ່ແລ້ວ, ສະນັ້ນ ພວກເຮົາກໍ່ຕ້ອງລັບງ້າວຄືກັນ.

«ສະຖານະການພາຍຫຼັງໄດ້ໄຊຊະນະໃນສົງຄາມຕໍ່ຕ້ານຍີ່ປຸ່ນແລະເຂັມທິດຂອງພວກເຮົາ» (ວັນທີ ໑໓-໘-໑໙໔໕)

ໃຜແມ່ນສັດຕູຂອງພວກເຮົາ? ໃຜແມ່ນເພື່ອນຂອງພວກເຮົາ? ບັນຫານີ້ແມ່ນບັນຫາສຳຄັນທີ່ໜຶ່ງຂອງການປະຕິວັດ. ການຕໍ່ສູ້ປະຕິວັດທັງປວງຂອງປະເທດຈີນແຕ່ກ່ອນນີ້ໄດ້ຮັບຜົນໜ້ອຍທີ່ສຸດ, ສາຍເຫດພື້ນຖານຂອງມັນກໍ່ຍ້ອນບໍ່ສາມາດສາມັກຄີເພື່ອນທີ່ແທ້ຈິງ ເພື່ອໂຈມຕີສັດຕູທີ່ແທ້ຈິງ. ພັກປະຕິວັດແມ່ນຜູ້ພາທາງຂອງມວນຊົນ, ໃນການປະຕິວັດ, ຍັງບໍ່ທັນມີຈັກເທື່ອວ່າ ເມື່ອພັກປະຕິວັດນຳພາຜິດທາງແລ້ວການປະຕິວັດຈະບໍ່ປະລາໄຊ. ເພື່ອໃຫ້ມີຄວາມໝັ້ນໃຈວ່າ ການປະຕິວັດຂອງພວກເຮົາຈະບໍ່ຖືກນຳພາຜິດທາງແລະຈະສຳເລັດຜົນຢ່າງແນ່ນອນ, ຈະບໍ່ເອົາໃຈໃສ່ນຳການສາມັກຄີເພື່ອນທີ່ແທ້ຈິງຂອງພວກເຮົາ ເພື່ອໂຈມຕີສັດຕູທີ່ແທ້ຈິງຂອງພວກເຮົານັ້ນບໍ່ໄດ້. ເມື່ອພວກເຮົາ

ຈະຈຳແນກສັດຕູກັບເພື່ອນທີ່ແທ້ຈິງແລ້ວ, ຈະບໍ່ໃຈ້ແຍກຢ່າງສັງເຂບເຖິງຖານະເສດຖະກິດຂອງຊົນຊັ້ນຕ່າງໆໃນສັງຄົມຈີນແລະທ່າທີຂອງພວກເຂົາທີ່ມີຕໍ່ການປະຕິວັດນັ້ນບໍ່ໄດ້.

«ການຈຳແນກຊົນຊັ້ນຕ່າງໆໃນສັງຄົມຈີນ» (ເດືອນ ມ-໑໙໒໖)

ພວກຂຸນເສິກ ອາດຍາສິດ ຊົນຊັ້ນນາຍໜ້າ ຊົນຊັ້ນເຈົ້າທີ່ດິນໃຫຍ່ທັງໝົດທີ່ສົມຮູ້ຮ່ວມຄິດກັບຈັກກະພັດນິຍົມ ພ້ອມທັງພວກນັກຮຽນຮູ້ປະຕິການສ່ວນໜຶ່ງທີ່ຂຶ້ນກັບພວກມັນ ແມ່ນສັດຕູຂອງພວກເຮົາ. ຊົນຊັ້ນກຳມາຊີບອຸດສາຫະກຳແມ່ນກຳລັງນຳພາການປະຕິວັດຂອງພວກເຮົາ. ຊົນຊັ້ນເຄິ່ງກຳມາຊີບແລະຊົນຊັ້ນເຈົ້າທຶນນ້ອຍທັງໝົດ ແມ່ນເພື່ອນທີ່ໃກ້ຊິດທີ່ສຸດຂອງພວກເຮົາ. ສ່ວນຊົນຊັ້ນເຈົ້າທຶນກາງທີ່ຫວັ່ນໄຫວຄອນແຄນນັ້ນ, ປີກຂວາຂອງພວກເຂົາອາດຈະແມ່ນສັດຕູຂອງພວກເຮົາ, ປີກຊ້າຍຂອງພວກເຂົາອາດຈະແມ່ນເພື່ອນຂອງພວກເຮົາ — ແຕ່ພວກເຮົາຕ້ອງລະມັດລະວັງພວກເຂົາຢູ່ສະເໝີ, ຢ່າໃຫ້ພວກເຂົາມາກໍ່

ຄວາມວຸ່ນວາຍໃນຖັນແຖວຂອງພວກເຮົາ.

«ການຈຳແນກຊົນຊັ້ນຕ່າງໆໃນສັງຄົມຈີນ» (ເດືອນ ມ-໑໙໒໖)

ຜູ້ໃດຢືນຢູ່ຝ່າຍປະຊາຊົນປະຕິວັດ ຜູ້ນັ້ນກໍ່ແມ່ນຝ່າຍປະຕິວັດ, ຜູ້ໃດຢືນຢູ່ຝ່າຍຈັກກະພັດນິຍົມ ລັດທິສັກດີນາ ລັດທິທຶນອາດຍາສິດ ຜູ້ນັ້ນກໍ່ແມ່ນພວກຕ້ານປະຕິວັດ. ຜູ້ໃດຢືນຢູ່ຝ່າຍປະຊາຊົນປະຕິວັດແຕ່ປາກ ແຕ່ການກະທຳຊ້ຳພັດເປັນອີກແນວໜຶ່ງ ຜູ້ນັ້ນກໍ່ແມ່ນຝ່າຍປະຕິວັດແຕ່ປາກ, ຖ້າຢືນຢູ່ຝ່າຍປະຊາຊົນປະຕິວັດບໍ່ພຽງແຕ່ປາກ ທັງມີການກະທຳພ້ອມແລ້ວ ຜູ້ນັ້ນກໍ່ແມ່ນຝ່າຍປະຕິວັດທີ່ສົມບູນ.

ຄຳປາໄສປິດປະຊຸມໃນກອງປະຊຸມເທື່ອທີ່ ໒ ຂອງຄະນະກຳມະການທົ່ວປະເທດສະໄໝທີ ໑ ຂອງສະພາປຶກສາການເມືອງປະຊາຊົນຈີນ (ວັນທີ ໒໓-໖-໑໙໕໐)

ເຮົາເຫັນວ່າ ສຳລັບພວກເຮົາແລ້ວ, ຄົນຜູ້ໜຶ່ງ ພັກພັກໜຶ່ງ ກອງທັບກອງທັບໜຶ່ງຫຼືໂຮງຮຽນບ່ອນໜຶ່ງ, ຄັນບໍ່ຖືກສັດຕູຄັດ

ຄ້ານ ກໍ່ບໍ່ດີ, ກໍ່ແມ່ນໄດ້ຮ່ວມເຮັດຊົ່ວຊ້າສາມານກັບສັດຕູແລ້ວຢ່າງແນ່ນອນ. ຄັນຖືກສັດຕູຄັດຄ້ານ ກໍ່ດີແລ້ວ, ອັນນັ້ນກໍ່ໄດ້ຢັ້ງຢືນໃຫ້ເຫັນວ່າ ພວກເຮົາໄດ້ຂີດເສັ້ນຂັ້ນແດນກັບສັດຕູຢ່າງຄັກແນ່ແລ້ວ. ຄັນສັດຕູຄັດຄ້ານພວກເຮົາຈົນສຸດແຮງ ເວົ້າໃສ່ພວກເຮົາຈົນບໍ່ມີບ່ອນດີຈັກດີ້ແລ້ວ ກໍ່ຍິ່ງດີ, ອັນນັ້ນກໍ່ຢັ້ງຢືນໃຫ້ເຫັນວ່າ ພວກເຮົາບໍ່ພຽງແຕ່ໄດ້ຂີດເສັ້ນຂັ້ນແດນກັບສັດຕູຢ່າງຄັກແນ່ແລ້ວ, ຍັງໄດ້ຢັ້ງຢືນໃຫ້ເຫັນວ່າ ວຽກງານຂອງພວກເຮົາໄດ້ຮັບຜົນຢ່າງຫຼວງຫຼາຍອີກດ້ວຍ.

«ຖືກສັດຕູຄັດຄ້ານແມ່ນເລື່ອງດີ ບໍ່ແມ່ນເລື່ອງບໍ່ດີ»
(ວັນທີ່ ໒໖-໕-໑໙໓໙)

ອັນໃດສັດຕູຄັດຄ້ານ ພວກເຮົາຕ້ອງສະໜັບສະໜູນ; ອັນໃດສັດຕູສະໜັບສະໜູນ ພວກເຮົາຕ້ອງຄັດຄ້ານ.

«ຄຳໃຫ້ສຳພາດແກ່ນັກຂ່າວ ສ ຄົນຂອງສຳນັກຂ່າວຈົງຢັງ ໜັງສືພິມສ່າວຕັ່ງແລະໜັງສືພິມຊິນໝິນ»
(ວັນທີ່ ໑໖-໙-໑໙໓໙)

ພວກເຮົາຢືນຢູ່ໃນຫຼັກພັ້ນຂອງຊົນຊັ້ນກຳມາຊີບແລະມວນມະຫາຊົນ. ສຳລັບສະມາຊິກພັກກອມມູນິດແລ້ວ ກໍ່ແມ່ນຕ້ອງຢືນຢູ່ໃນຫຼັກພັ້ນຂອງພັກ ຢືນຢູ່ໃນຫຼັກພັ້ນສະຕິພັກແລະນະໂຍບາຍຂອງພັກ.

«ຄຳປາໄສໃນທີ່ຊຸມນຸມສົນທະນາສິລະປະວັນນະຄະດີຢູ່ເມືອງຢ໋ານອານ» (ເດືອນ ໕-໑໙໔໒)

ຫຼັງຈາກສັດຕູທີ່ຖືປືນຖືກດັບສູນແລ້ວ ສັດຕູທີ່ບໍ່ຖືປືນຍັງຄົງມີຢູ່, ທຳມະດາແລ້ວພວກມັນຕ້ອງໂສຕາຍສູ້ກັບພວກເຮົາ, ພວກເຮົາຈະປະໝາດສັດຕູເຫຼົ່ານີ້ບໍ່ໄດ້ຢ່າງເດັດຂາດ. ເວລານີ້ ຖ້າພວກເຮົາບໍ່ຕັ້ງບັນຫາແລະບໍ່ເຂົ້າໃຈບັນຫາແນວນີ້ແລ້ວ ພວກເຮົາກໍ່ຈະຜິດພາດຢ່າງໃຫຍ່ທີ່ສຸດ.

«ຄຳລາຍງານໃນກອງປະຊຸມເຕັມຄະນະເທື່ອທີ່ ໒ ຂອງຄະນະກຳມະການສູນກາງສະໄໝທີ່ ໗ ຂອງພັກກອມມູນິດຈີນ» (ວັນທີ່ ໕-໓-໑໙໔໙)

ພວກຈັກກະພັດນິຍົມແລະພວກປະຕິການພາຍໃນປະເທດບໍ່ຍອມຕໍ່ການປະລາໄຊຂອງພວກມັນຢ່າງເດັດຂາດ, ພວກມັນຍັງຈະດີ້ນຣົນເປັນຂັ້ນສຸດທ້າຍ. ຫຼັງຈາກທົ່ວປະເທດສະຫງົບແລ້ວ ພວກມັນກໍ່ຍັງຈະທຳລາຍແລະກໍ່ການອຸ່ນອາຍດ້ວຍຮູບວິທີຕ່າງໆ, ພວກມັນຈະຜິບອງພື້ນອຳນາດຄືນໃນປະເທດຈີນທຸກມື້ທຸກເວລາ. ອັນນີ້ເປັນສິ່ງແນ່ນອນ ບໍ່ຕ້ອງສົງໄສຈັກດີ້, ພວກເຮົາຕ້ອງບໍ່ລະເຫຼີງສະຕິລະວັງຕົວຂອງຕົນ.

ຄຳປາໄສເປີດປະຊຸມໃນກອງປະຊຸມເຕັມຄະນະສະໄໝທີ່ ໑ ຂອງສະພາປຶກສາການເມືອງປະຊາຊົນຈີນ (ວັນທີ່ ໒໑-໙-໑໙໔໙)

ໃນປະເທດເຮົາ ເຖິງແມ່ນວ່າການດັດແປງເປັນແບບສັງຄົມນິຍົມໃນດ້ານລະບອບກຳມະສິດໄດ້ສຳເລັດແລ້ວໃນຂັ້ນພື້ນຖານ, ການຕໍ່ສູ້ຊົນຊັ້ນຂອງມວນຊົນອັນຂະໜາດໃຫ່ຽແບບພ້າຝົນລົມແຮງໃນສະໄໝປະຕິວັດນັ້ນໄດ້ສິ້ນສຸດແລ້ວໃນຂັ້ນພື້ນຖານ, ແຕ່ວ່າ ພວກເສດເຫຼືອຂອງຊົນຊັ້ນເຈົ້າທີ່ດິນແລະຊົນຊັ້ນນາຍ

ໜ້າທີ່ຖືກໂຄ່ນລົ້ມແລ້ວນັ້ນຍັງຄົງມີຢູ່, ຊົນຊັ້ນເຈົ້າທຶນຍັງຄົງມີຢູ່, ຊົນຊັ້ນເຈົ້າທຶນນ້ອຍຫາກໍ່ຖືກດັດແປງ. ການຕໍ່ສູ້ຊົນຊັ້ນຍັງບໍ່ທັນສິ້ນສຸດເທື່ອ. ການຕໍ່ສູ້ຊົນຊັ້ນລະຫວ່າງຊົນຊັ້ນກຳມາຊີບກັບຊົນຊັ້ນເຈົ້າທຶນ, ການຕໍ່ສູ້ຊົນຊັ້ນລະຫວ່າງກຳລັງການເມືອງຝ່າຍຕ່າງໆ, ການຕໍ່ສູ້ຊົນຊັ້ນໃນດ້ານຮູບການຈິດສຳນຶກລະຫວ່າງຊົນຊັ້ນກຳມາຊີບກັບຊົນຊັ້ນເຈົ້າທຶນນັ້ນ ຍັງຍາວນານແລະຄົດລ້ຽວ ບາງທີຈົນເຖິງຂັ້ນພິດເດືອດຫຼາຍ. ຊົນຊັ້ນກຳມາຊີບຈະດັດແປງໂລກຕາມໂລກະທັດຂອງຕົນ, ຊົນຊັ້ນເຈົ້າທຶນກໍ່ຈະດັດແປງໂລກຕາມໂລກະທັດຂອງຕົນຄືກັນ. ໃນດ້ານນີ້, ບັນຫາໃຜຊະນະໃຜເສຽໄຊລະຫວ່າງສັງຄົມນິຍົມກັບທຶນນິຍົມຍັງບໍ່ທັນແກ້ຕົກຢ່າງແທ້ຈິງເທື່ອ.

«ບັນຫາກ່ຽວກັບການແກ້ໄຂຄວາມຂັດແຍ້ງພາຍໃນປະຊາຊົນຢ່າງຖືກຕ້ອງ» (ວັນທີ່ ໒໗-໒-໑໙໕໗)

ບັນຫາໃຜຊະນະໃຜເສຽໄຊໃນການຕໍ່ສູ້ດ້ານຮູບການຈິດສຳນຶກລະຫວ່າງສັງຄົມນິຍົມກັບທຶນນິຍົມໃນປະເທດເຮົາ ຍັງຕ້ອງ

ການເວລາເຫິງສົມຄວນຈິ່ງສາມາດແກ້ຕົກໄດ້. ອັນນີ້ກໍ່ຍ້ອນວ່າຜົນສະທ້ອນຂອງຊົນຊັ້ນເຈົ້າທຶນ ແລະ ຂອງພວກນັກຮຽນຮູ້ທີ່ມາຈາກສັງຄົມເກົ່າຍັງຈະມີຢູ່ໃນປະເທດເຮົາເຫິງນານ, ຮູບການຈິດສຳນຶກທີ່ເປັນຂອງຊົນຊັ້ນດັ່ງກ່າວ ຍັງຈະມີຢູ່ໃນປະເທດເຮົາເຫິງນານ. ຖ້າເຂົ້າໃຈສະຖານະການນີ້ບໍ່ພຽງພໍຫຼືບໍ່ເຂົ້າໃຈຈັກດີແລ້ວ ກໍ່ຈະຜິດພາດຢ່າງໃຫຍ່ ກໍ່ຈະເບິ່ງຂ້າມການຕໍ່ສູ້ດ້ານແນວຄຶດອັນຈຳເປັນ.

«ບັນຫາກ່ຽວກັບການແກ້ໄຂຄວາມຂັດແຍ້ງພາຍໃນປະຊາຊົນຢ່າງຖືກຕ້ອງ» (ວັນທີ່ ໒໗-໒-໑໙໕໗)

ໃນປະເທດເຮົາ, ແນວຄຶດຊົນຊັ້ນເຈົ້າທຶນແລະຊົນຊັ້ນເຈົ້າທຶນນ້ອຍ ແນວຄຶດທີ່ຕ້ານລັດທິມາກ ຍັງຈະມີຢູ່ເຫິງນານ. ໃນປະເທດເຮົາ, ລະບອບສັງຄົມນິຍົມໄດ້ສ້າງຕັ້ງຂຶ້ນແລ້ວໃນຂັ້ນພື້ນຖານ. ພວກເຮົາໄດ້ຮັບໄຊຊະນະຂັ້ນພື້ນຖານແລ້ວໃນດ້ານດັດແປງລະບອບກຳມະສິດປັດໃຈການຜະລິດ, ແຕ່ວ່າ ໃນແນວລົບດ້ານການເມືອງແລະແນວລົບດ້ານແນວຄຶດ, ພວກເຮົາຍັງບໍ່ທັນໄດ້ຮັບໄຊຊະນະຢ່າງສົມບູນເທື່ອ. ບັນຫາໃຜຊະນະໃຜເສຍໃນດ້ານຮູບການຈິດສຳນຶກ ລະຫວ່າງຊົນຊັ້ນກຳມາຊີບກັບຊົນຊັ້ນເຈົ້າທຶນ ຍັງບໍ່ທັນແກ້ຕົກຢ່າງແທ້ຈິງເທື່ອ. ພວກເຮົາຍັງຕ້ອງດຳເນີນການຕໍ່ສູ້ກັບແນວຄຶດຊົນຊັ້ນເຈົ້າທຶນ ແລະ ຊົນຊັ້ນເຈົ້າທຶນນ້ອຍອີກເຫິງນານ. ບໍ່ເຂົ້າໃຈສະພາບການນີ້, ປະຖິ້ມການຕໍ່ສູ້ດ້ານແນວຄຶດ ກໍ່ເປັນການຜິດພາດ. ແນວຄຶດທີ່ຜິດພາດໃດໆ ຫຍ້າພິດໃດໆ ແລະ ຜີສາງນາງຮ້າຍໃດໆ ລ້ວນແຕ່ຕ້ອງຕຳນິວິຈານມັນ, ຈະປ່ອຍໃຫ້ພວກມັນນອງຖ້ວມໄປຢ່າງເສລີບໍ່ໄດ້ເປັນອັນຂາດ. ແຕ່ວ່າ ການຕຳນິວິຈານນີ້ຕ້ອງອ້າງເຫດຜົນຢ່າງເຕັມທີ່, ມີການຈຳແນກ, ມີການລຸລັ່ງໃຫ້ເຊື່ອຖືໄດ້ ແຕ່ບໍ່ຄວນເຮັດແບບຫຍາບຊ້າຮຸນແຮງ ແບບລັດທິອາດຍາສິດຫຼືແບບອະພິປັດຊະຍາ ແບບລັດທິຄຳພີ.

«ຄຳປາໄສໃນກອງປະຊຸມວຽກງານໂຄສະນາທົ່ວປະເທດຂອງພັກກອມມູນິດຈີນ» (ວັນທີ່ ໑໒-໓-໑໙໕໗)

ລັດທິຄ່ຳພີແລະລັດທິແກ້ລ້ວນແຕ່ຜ່າຝືນລັດທິມາກ. ລັດທິມາກຕ້ອງຂະຫຍາຍກ້າວໜ້າໄປຢ່າງແນ່ນອນ, ຕ້ອງຂະຫຍາຍໄປຕາມການຂະຫຍາຍຕົວຂອງພາກປະຕິບັດ, ບໍ່ອາດຢຸດຊະງັກຢູ່ໄດ້. ຖ້າຢຸດຊະງັກ ເປັນແຕ່ແນວເກົ່າຢູ່ເລື້ອຍ ມັນກໍ່ບໍ່ມີຊີວິດແລ້ວ. ແຕ່ວ່າ ຫຼັກການພື້ນຖານຂອງລັດທິມາກນັ້ນແມ່ນຜ່າຝືນບໍ່ໄດ້, ຄັນຜ່າຝືນແລ້ວກໍ່ຈະຜິດພາດ. ການໃຊ້ທັດສະນະອະພິປັດຊະຍາມາເບິ່ງລັດທິມາກ, ຖືວ່າລັດທິມາກເປັນສິ່ງຕາຍກະດ້າງນັ້ນ ແມ່ນລັດທິຄ່ຳພີ. ການປະຕິເສດຫຼັກການພື້ນຖານຂອງລັດທິມາກ, ປະຕິເສດສັດຈະທຳທົ່ວໄປຂອງລັດທິມາກນັ້ນກໍ່ແມ່ນລັດທິແກ້. ລັດທິແກ້ແມ່ນແນວຄິດຊົນຊັ້ນເຈົ້າທຶນຊະນິດໜຶ່ງ. ພວກລັດທິແກ້ລົບລ້າງຄວາມແຕກຕ່າງກັນລະຫວ່າງສັງຄົມນິຍົມກັບທຶນນິຍົມ, ລົບລ້າງຄວາມແຕກຕ່າງກັນລະຫວ່າງການຜະເດັດການຊົນຊັ້ນກຳມະຊີບກັບການຜະເດັດການຊົນຊັ້ນເຈົ້າທຶນ. ໃນພາກຕົວຈິງແລ້ວ ອັນທີ່ພວກເຂົາຍຶດຖືນັ້ນ ບໍ່ແມ່ນແນວທາງສັງຄົມນິຍົມແມ່ນແນວທາງທຶນນິຍົມ. ພາຍໃຕ້ສະພາບການປັດຈຸບັນ ລັດທິແກ້ເປັນສິ່ງທີ່ມີໄພຍິ່ງກວ່າລັດທິຄຳພີ. ພາລະໜ້າທີ່ສຳຄັນອັນໜຶ່ງຂອງພວກເຮົາໃນແນວລົບດ້ານແນວຄິດໃນປັດຈຸບັນ ແມ່ນຕ້ອງດຳເນີນການຕຳນິວິຈານລັດທິແກ້.

«ຄຳປາໄສໃນກອງປະຊຸມວຽກງານໂຄສະນາທົ່ວປະເທດຂອງພັກກອມມູນິດຈີນ» (ວັນທີ ໑໒-໓-໑໙໕໗)

ລັດທິແກ້ ຫຼືລັດທິສວຍໂອກາດທາງຂວານັ້ນ ແມ່ນກະແສແນວຄິດຊົນຊັ້ນເຈົ້າທຶນຊະນິດໜຶ່ງ, ມັນເປັນອັນຕະລາຍຍິ່ງກວ່າລັດທິຄຳພີ. ພວກລັດທິແກ້ ພວກລັດທິສວຍໂອກາດທາງຂວາ ກໍ່ເວົ້າລັດທິມາກຕິດປາກຢູ່, ພວກເຂົາກໍ່ໂຈມຕີ "ລັດທິຄຳພີ" ຢູ່ຄືກັນ. ແຕ່ສິ່ງທີ່ພວກເຂົາໂຈມຕີນັ້ນຊ້ຳແມ່ນສິ່ງຕົ້ນຕໍທີ່ສຸດຂອງລັດທິມາກນັ້ນເອງ. ພວກເຂົາຄັດຄ້ານຫຼືບິດເບືອນທິດສະດີວັດຖຸນິຍົມແລະວິທີສັດຈະວິພາກ ຄັດຄ້ານຫຼືບິປອງບັ່ນທອນການຜະເດັດການປະຊາທິປະໄຕປະຊາຊົນແລະການນຳພາ

ຂອງພັກກອມມູນິດ ຄັດຄ້ານຫຼືປີປອງບັ່ນທອນການດັດແປງເປັນແບບສັງຄົມນິຍົມແລະການສ້າງສາສັງຄົມນິຍົມ. ຫຼັງຈາກການປະຕິວັດສັງຄົມນິຍົມຂອງປະເທດເຮົາໄດ້ຮັບໄຊຊະນະໃນຂັ້ນພື້ນຖານແລ້ວ, ໃນສັງຄົມຍັງມີຄົນສ່ວນໜຶ່ງໃຝ່ຝັນຈະຟື້ນຟູລະບອບທຶນນິຍົມ, ພວກມັນໄດ້ດຳເນີນການຕໍ່ສູ້ກັບຊົນຊັ້ນກຳມະກອນໃນທຸກດ້ານ ຮວມທັງການຕໍ່ສູ້ດ້ານແນວຄິດ. ໃນການຕໍ່ສູ້ນີ້ ພວກລັດທິແກ້ແມ່ນຜູ້ຊ່ວຍທີ່ດີທີ່ສຸດຂອງພວກມັນ.

«ບັນຫາກ່ຽວກັບການແກ້ໄຂຄວາມຂັດແຍ້ງພາຍໃນ
ປະຊາຊົນຢ່າງຖືກຕ້ອງ» (ວັນທີ່ ໒໗-໒-໑໙໕໗)

ມ. ສັງຄົມນິຍົມແລະລັດທິກອມມູນິດ

ລັດທິກອມມູນິດແມ່ນລະບົບແນວຄິດ ຂອງຊົນຊັ້ນກຳມາຊີບທັງລະບົບ, ທັງແມ່ນລະບອບສັງຄົມໃໝ່ຊະນິດໜຶ່ງ. ລະບົບແນວຄິດແລະລະບອບສັງຄົມຊະນິດນີ້ຕ່າງກັບລະບົບແນວຄິດແລະລະບອບສັງຄົມໃດໝົດ, ແມ່ນລະບົບແນວຄິດແລະລະບອບສັງຄົມທີ່ສົມບູນທີ່ສຸດ ກ້າວໜ້າທີ່ສຸດ ປະຕິວັດທີ່ສຸດແລະສົມເຫດສົມຜົນທີ່ສຸດນັບແຕ່ມີປະວັດມະນຸດເປັນຕົ້ນມາ. ລະບົບແນວຄິດແລະລະບອບສັງຄົມຂອງລັດທິສັກດີນາ ແມ່ນສິ່ງທີ່ເຂົ້າຫໍພິພິທະພັນປະວັດສາດແລ້ວ. ລະບົບແນວຄິດແລະລະບອບສັງຄົມຂອງທຶນນິຍົມກໍ່ມີສ່ວນໜຶ່ງໄດ້ເຂົ້າຫໍພິພິທະພັນແລ້ວ (ໃນສະຫະພາບໂຊວຽດ); ສ່ວນທີ່ເຫຼືອນັ້ນ ກໍ່ເໝືອນດັ່ງ "ຕາເວັນຕົກຄ່ຳຄ້ຽ ນ້ຽງທາຍໃຈປາ ຊີວາຕົກຕາຮ້າຍ ບໍ່ຍ້າຍນີ້ນວັນຄືນ" ກໍ່ມໍ່ຈະ

ເຂົ້າຫໍພິພິທະພັນແລ້ວ. ມີແຕ່ລະບົບແນວຄິດແລະລະບອບສັງຄົມລັດທິກອມມູນິດອັນດຽວທໍ່ນັ້ນ ທີ່ພວມແຜ່ຂະຫຍາຍໄປທົ່ວໂລກດ້ວຍທ່າທາງຄືດັ່ງປິ້ນພູຂອ້ຳທະເລ ດ້ວຍອານຸພາບແຮງກ້າຄືຟ້າຜ່າ ແລະຮັກສາໄວຫຸ່ມອັນສວຍສົດງົດງາມຂອງຕົນໄວ້ສະເໝີ.

«ວ່າດ້ວຍລັດທິປະຊາທິປະໄຕໃໝ່» (ເດືອນ ໑-໑໙໔໐)

ແນວໃດລະບອບສັງຄົມນິຍົມ ກໍ່ຕ້ອງເຂົ້າແທນລະບອບທຶນນິຍົມໃນທີ່ສຸດ. ອັນນີ້ແມ່ນກົດເກນນອກຕົວທີ່ບໍ່ຫັນປ່ຽນໄປຕາມຈິດໃຈຂອງຄົນເຮົາ. ບໍ່ວ່າພວກປະຕິການຈະພິປອງຂັດຂວາງບໍ່ໃຫ້ກົງລໍ້ປະວັດສາດໝູນໄປໜ້າແນວໃດກໍ່ຕາມ, ການປະຕິວັດກໍ່ຕ້ອງເກີດຂຶ້ນບໍ່ໄວກໍ່ຊ້າ ແລະຈະຕ້ອງໄດ້ຮັບໄຊຊະນະຢ່າງແນ່ນອນ.

«ຄຳປາໄສໃນກອງປະຊຸມສະພາໂຊວຽດສູງສຸດແຫ່ງສະຫະພາບໂຊວຽດເພື່ອສະເຫຼີມສະຫຼອງການປະຕິວັດສັງຄົມນິຍົມເດືອນຕຸລາທີ່ຍິ່ງໃຫຍ່ຄົບຮອບ ໔໐ ປີ» (ວັນທີ່ ໗-໑໑-໑໙໕໗)

ແຕ່ໃດມາ ພວກເຮົາຊາວພັກກອມມູນິດບໍ່ປິດອຳຄວາມຄິດເຫັນທາງການເມືອງຂອງຕົນຈັກເທື່ອ. ໂຄງການການເມືອງໃນອະນາຄົດຫຼືໂຄງການການເມືອງສູງສຸດຂອງ ພວກເຮົາ ແມ່ນຈະຊຸກຍູ້ໃຫ້ປະເທດຈີນ ໄປຮອດ ສັງຄົມ ສັງຄົມນິຍົມແລະ ສັງຄົມກອມມູນິດ, ອັນນີ້ແມ່ນສິ່ງທີ່ແນ່ນອນແລະບໍ່ຕ້ອງສົງໃສຈັກເມັດ. ຊື່ພັກຂອງພວກເຮົາແລະໂລກະທັດລັດທິມາກຂອງພວກເຮົາ ໄດ້ຊີ້ໃຫ້ເຫັນຢ່າງຈະແຈ້ງເຖິງອຸດົມຄະຕິສູງສຸດໃນອະນາຄົດ ອຸດົມຄະຕິສູງສຸດອັນຮຸ່ງເຮືອງເຫຼືອງເຫຼື້ອມ ແລະ ສວຍສົດງົດງາມທີ່ສຸດ.

«ວ່າດ້ວຍລັດຖະບານປະສົມ» (ວັນທີ່ ໒໔-໔-໑໙໔໕)

ຂະບວນເຄື່ອນໄຫວປະຕິວັດຂອງປະເທດຈີນທັງ ຂະບວນ ທີ່ພັກກອມມູນິດຈີນນຳພານັ້ນ ແມ່ນຂະບວນເຄື່ອນໄຫວປະຕິວັດທັງໝົດທີ່ກວມທັງສອງໄລຍະຄື ການປະຕິວັດລັດທິປະຊາທິປະໄຕ ແລະການປະຕິວັດສັງຄົມນິຍົມ; ອັນນີ້ແມ່ນສອງຂະບວນການປະຕິວັດທີ່ມີລັກສະນະຕ່າງກັນ, ມີແຕ່ເຮັດໃຫ້ຂະບວນການປະ

ຕິວັດອັນກ່ອນສຳເລັດແລ້ວທ່ນັ້ນ ຈຶ່ງອາດຈະເຮັດໃຫ້ຂະບວນການປະຕິວັດອັນລຸນສຳເລັດໄດ້. ການປະຕິວັດລັດທິປະຊາທິປະໄຕແມ່ນການກຽມອັນຈຳເປັນໃຫ້ ການປະຕິວັດ ສັງຄົມນິຍົມ, ການປະຕິວັດສັງຄົມນິຍົມ ກໍ່ແມ່ນແງ່ຂະຫຽາຍອັນແນ່ນອນຂອງການປະຕິວັດລັດທິປະຊາທິປະໄຕ. ຈຸດມຸ່ງໝາຍບັ້ນປາຍຂອງຊາວກອມມູນິດທັງປວງແມ່ນອອກແຮງຍາດແຍ່ງເພື່ອໃຫ້ສັງຄົມສັງຄົມນິຍົມແລະສັງຄົມກອມມູນິດສຳເລັດໃນຂັ້ນສຸດທ້າຍ.

« ການປະຕິວັດຈີນກັບພັກກອມມູນິດຈີນ » (ເດືອນ ໑໒-໑໙໓໙)

ຈຸດມຸ່ງໝາຍຂອງການປະຕິວັດສັງຄົມນິຍົມແມ່ນເພື່ອປົດປ່ອຍກຳລັງການຜະລິດ. ການທີ່ກະເສດຕະກຳແລະຫັດຖະກຳປ່ຽນຈາກລະບອບກຳມະສິດເອກະເທດມາເປັນລະບອບກຳມະສິດຮວມໝູ່ແຫ່ງສັງຄົມນິຍົມ ການທີ່ອຸດສາຫະກຳແລະພານິດຊະກຳເອກະຊົນປ່ຽນຈາກລະບອບກຳມະສິດທຶນນິຍົມມາເປັນລະບອບກຳມະສິດສັງຄົມນິຍົມນັ້ນ, ແນ່ນອນຈະເຮັດໃຫ້ກຳລັງການຜະລິດໄດ້ຮັບການປົດປ່ອຍຢ່າງໃຫຽ່. ເມື່ອເປັນແນວນີ້ແລ້ວ ກໍ່ໄດ້ສ້າງເງື່ອນໄຂສັງຄົມໃຫ້ແກ່ການຂະຫຽາຍການຜະລິດດ້ານອຸດສາຫະກຳແລະກະເສດຕະກຳຢ່າງຫຼວງຫຼາຍ.

ຄຳປາໄສໃນກອງປະຊຸມກິດຈະການຂອງລັດຂັ້ນສູງສຸດ(ວັນທີ່ ໒໕-໑-໑໙໕໖)

ປັດຈຸບັນນີ້ ພວກເຮົາບໍ່ພຽງແຕ່ພວມດຳເນີນການປະຕິວັດດ້ານລະບອບສັງຄົມ ທີ່ປ່ຽນຈາກລະບອບກຳມະສິດສ່ວນຕົວມາເປັນລະບອບກຳມະສິດສ່ວນຮວມທ່ນັ້ນ ຍັງພວມດຳເນີນການປະຕິວັດດ້ານເຕັກນິກທີ່ປ່ຽນຈາກການຜະລິດແບບຫັດຖະກຳມາເປັນການຜະລິດດ້ວຍເຄື່ອງຈັກທັນສະໄໝຂະໜາດໃຫຽ່ອີກດ້ວຍ, ການປະຕິວັດສອງຊະນິດນີ້ ແມ່ນປະສານຢູ່ນຳກັນ. ພາຍໃຕ້ເງື່ອນໄຂຂອງປະເທດເຮົາ, ດ້ານກະເສດຕະກຳຈຳຕ້ອງໃຫ້ເປັນແບບສະຫະກອນສາກ່ອນ ແລ້ວຈຶ່ງສາມາດໃຊ້ເຄື່ອງຈັກໃຫຽ່ໄດ້ (ຢູ່ໃນປະເທດທຶນນິຍົມແມ່ນເຮັດໃຫ້ກະເສດຕະກຳເປັນແບບທຶນນິຍົມ). ຈາກນີ້ຈະເຫັນໄດ້ວ່າ ອຸດສາຫະກຳກັບກະເສດຕະ

ກຳ ການເຮັດໃຫ້ປະເທດເປັນແບບອຸດສາຫະກຳສັງຄົມນິຍົມກັບການດັດແປງກະເສດຕະກຳເປັນແບບສັງຄົມນິຍົມສອງເລື່ອງນີ້ພວກເຮົາຈະເບິ່ງຢ່າງຕັດຂາດອອກຈາກກັນແລະຢ່າງໂດດດ່ຽວຈາກກັນບໍ່ໄດ້ເປັນອັນຂາດ. ຈະນັ້ນພັກແຕ່ດ້ານໜຶ່ງ, ລຶດຢ່ອນອີກດ້ານໜຶ່ງບໍ່ໄດ້ເປັນອັນຂາດ.

«ບັນຫາກ່ຽວກັບການຈັດຕັ້ງກະເສດຕະກຳໃຫ້ເປັນແບບສະຫະກອນ» (ວັນທີ່ ໓໑-ກ-໑໙໕໕)

ລະບອບສັງຄົມໃໝ່ຫາກໍ່ສ້າງຕັ້ງຂຶ້ນ, ຍັງຕ້ອງການເວລາໄລຍະໜຶ່ງເພື່ອປັບປຸງໃຫ້ໝັ້ນຄົງ. ບໍ່ອາດຖືວ່າ ລະບອບໃໝ່ເມື່ອສ້າງຕັ້ງຂຶ້ນ ກໍ່ໝັ້ນຄົງທີ່ສຸດໂລດ, ອັນນີ້ແມ່ນສິ່ງທີ່ບໍ່ອາດເປັນໄປໄດ້. ຕ້ອງປັບປຸງໃຫ້ໝັ້ນຄົງເປັນກ້າວໆ. ເມື່ອຈະປັບປຸງໃຫ້ມັນໝັ້ນຄົງເຖິງທີ່ສຸດ ກໍ່ຕ້ອງເຮັດໃຫ້ປະເທດເປັນແບບອຸດສາຫະກຳສັງຄົມນິຍົມປາກົດເປັນຈິງຂຶ້ນ, ຕ້ອງຢຶດໝັ້ນປະຕິວັດສັງຄົມນິຍົມໃນແນວລົບດ້ານເສດຖະກິດ, ຍັງຕ້ອງດຳເນີນການຕໍ່ສູ້ປະຕິວັດສັງຄົມນິຍົມ ແລະ ການອົບຮົມທາງສັງຄົມນິຍົມໃນ

ແນວລົບດ້ານການເມືອງ ແລະ ແນວລົບດ້ານແນວຄຶດຢ່າງທໍລະຫົດອົດທົນຢູ່ເລື້ອຍໆ. ນອກຈາກສິ່ງເຫຼົ່ານີ້ແລ້ວ ຍັງຕ້ອງມີເງື່ອນໄຂຕ່າງໆທາງສາກົນສົມທົບນຳ.

«ຄຳປາໄສໃນກອງປະຊຸມວຽກງານໂຄສະນາທົ່ວປະເທດຂອງພັກກອມມູນິດຈີນ» (ວັນທີ່ ໑໒-ມ-໑໙໕໗)

ໃນປະເທດເຮົາ, ການຕໍ່ສູ້ເພື່ອເຮັດໃຫ້ລະບອບສັງຄົມນິຍົມໝັ້ນຄົງແລະການຕໍ່ສູ້ລະຫວ່າງສັງຄົມນິຍົມກັບທຶນນິຍົມໃຜຈະຊະນະໃຜນັ້ນ ຍັງຕ້ອງຜ່ານໄລຍະປະວັດສາດເທິງນານໄລຍະໜຶ່ງ. ແຕ່ວ່າ ພວກເຮົາທຸກຄົນຕ້ອງເຫັນວ່າ ສັງຄົມນິຍົມລະບອບໃໝ່ນີ້ຈະໝັ້ນຄົງໄດ້ຢ່າງແນ່ນອນ. ພວກເຮົາຈະສ້າງປະເທດສັງຄົມນິຍົມທີ່ມີອຸດສາຫະກຳທັນສະໄໝ ກະເສດຕະກຳທັນສະໄໝ ແລະວິທະຍາສາດວັດທະນະທຳທັນສະໄໝຂຶ້ນໄດ້ຢ່າງແນ່ນອນ.

«ຄຳປາໄສໃນກອງປະຊຸມວຽກງານໂຄສະນາທົ່ວປະເທດຂອງພັກກອມມູນິດຈີນ» (ວັນທີ່ ໑໒-ມ-໑໙໕໗)

ນັກຮຽນຮູ້ທີ່ມີໃຈເປັນສັດຕູຕໍ່ປະເທດຊາດຂອງພວກເຮົານັ້ນ ມີຈຳນວນໜ້ອຍທີ່ສຸດ. ຄົນຊະນິດນີ້ບໍ່ມັກປະເທດຊາດຜະເດັດການຊົນຊັ້ນກຳມາຊີບຂອງພວກເຮົາ. ພວກມັນອາໄລອາວອນສັງຄົມເກົ່າ. ເມື່ອຈອບໂອກາດ ພວກມັນກໍ່ຈະກໍ່ຄວາມປັ່ນປ່ວນຂຶ້ນ, ໝາຍຈະໂຄ່ນລົ້ມພັກກອມມູນິດ, ຟື້ນຟູປະເທດຈີນເກົ່າ. ລະຫວ່າງແນວທາງຊົນຊັ້ນກຳມາຊີບກັບແນວທາງຊົນຊັ້ນເຈົ້າທຶນ ລະຫວ່າງແນວທາງສັງຄົມນິຍົມກັບແນວທາງທຶນນິຍົມນັ້ນ, ຄົນພວກນີ້ຈະດື້ດ້ານຢ່າງໄປຕາມແນວທາງອັນລຸນ. ໃນຕົວຈິງແລ້ວແນວທາງອັນລຸນນີ້ ບໍ່ອາດຈະປາກົດເປັນຈິງໄດ້, ດັ່ງນັ້ນທີ່ແທ້ແລ້ວຄົນພວກນີ້ແມ່ນພວກຜູ້ທີ່ກຽມຈະຍອມຈຳນົນຈັກກະພັດນິຍົມ ລັດທິສັກດີນາແລະລັດທິອາດຍາສິດ. ຄົນພວກນີ້ມີຢູ່ທັງໃນວົງການການເມືອງ ວົງການອຸດສາຫະກຳແລະພານິດຊະກຳ ວົງການວັດທະນະທຳແລະການສຶກສາ ວົງການວິທະຍາສາດແລະເຕັກນິກ ແລະວົງການສາສະໜາ, ຄົນພວກ

ນີ້ ແມ່ນພວກປະຕິການສຸດຂີດ.

«ຄຳປາໄສໃນກອງປະຊຸມວຽກງານໂຄສະນາທົ່ວປະເທດຂອງພັກກອມມູນິດຈີນ» (ວັນທີ່ ໑໒-໓-໑໙໕໗)

ບັນຫາອັນໜັກໜ່ວງແມ່ນການອົບຮົມຊາວນາ. ເສດຖະກິດຂອງຊາວນານັ້ນແມ່ນກະແຈກກະຈາຍ, ອີງຕາມບົດຮຽນຂອງສະຫະພາບໂຊວຽດ, ຕ້ອງໃຊ້ເວລາເຫິງນານຫຼາຍແລະຕ້ອງເຮັດວຽກງານຢ່າງລະອຽດ ຈຶ່ງສາມາດເຮັດໃຫ້ກະເສດຕະກຳເປັນແບບສັງຄົມໄດ້. ຄັນບໍ່ມີກະເສດຕະກຳເປັນແບບສັງຄົມແລ້ວ ກໍ່ບໍ່ມີສັງຄົມນິຍົມທີ່ສົມບູນແລະໝັ້ນຄົງ.

«ວ່າດ້ວຍການຜະເດັດການປະຊາທິປະໄຕປະຊາຊົນ»
(ວັນທີ່ ໓໐-໖-໑໙໔໙)

ພວກເຮົາຕ້ອງເຊື່ອວ່າ (໑) ຊາວນາອັນກວ້າງໃຫຍ່ຍິນດີຈະໄປຕາມເສັ້ນທາງສັງຄົມນິຍົມເທື່ອລະກ້າວພາຍໃຕ້ການນຳພາຂອງພັກ; (໒) ພັກສາມາດນຳພາຊາວນາໄປຕາມເສັ້ນທາງ

ສັງຄົມນິຍົມ. ສອງຂໍ້ນີ້ແມ່ນທາດແທ້ແລະກະແສສຳຄັນຂອງວັດຖຸເຫດການ.

«ບັນຫາກ່ຽວກັບການຈັດຕັ້ງກະເສດຕະກຳໃຫ້ເປັນແບບສະຫະກອນ» (ວັນທີ່ ໓໑-໗-໑໙໕໕)

ໃນອົງການນຳພາໃນສະຫະກອນ ຕ້ອງສ້າງທ່າດີຂອງຊາວນາທຸກທີ່ມີຢູ່ໃນປັດຈຸບັນ ແລະ ຂອງຊາວນາກາງຊັ້ນລຸ່ມໃໝ່ໃນອົງການນຳພາ ແລະເອົາຊາວນາກາງຊັ້ນລຸ່ມເກົ່າແລະຊາວນາກາງຊັ້ນເທິງທັງເກົ່າທັງໃໝ່ເປັນກຳລັງໜູນຊ່ວຍ ຈຶ່ງສາມາດເຮັດໃຫ້ຊາວນາທຸກແລະຊາວນາກາງສາມັກຄີກັນ, ເຮັດໃຫ້ສະຫະກອນໝັ້ນຄົງ, ຂະຫຍາຍການຜະລິດແລະເຮັດໃຫ້ການດັດແປງເປັນແບບສັງຄົມນິຍົມທົ່ວຊົນນະບົດສຳເລັດຢ່າງຖືກຕ້ອງຕາມນະໂຍບາຍຂອງພັກໄດ້. ຄັນບໍ່ມີເງື່ອນໄຂອັນນີ້ແລ້ວ ຊາວນາກາງກັບຊາວນາທຸກກໍ່ບໍ່ສາມັກຄີກັນໄດ້, ສະຫະກອນກໍ່ບໍ່ໝັ້ນຄົງໄດ້, ການຜະລິດກໍ່ບໍ່ຂະຫຍາຍຕົວໄດ້ແລະການດັດແປງເປັນແບບສັງ

ຄົມນິຍົມທົ່ວຊົນນະບົດກໍ່ຈະບໍ່ປາກົດເປັນຈິງໄດ້.

ໝາຍເຫດໃນບົດຄວາມເລື່ອງ«ສະຫະກອນການຜະລິດທາງກະເສດອູດາງ ຕາແສງເກົາຊານ ເມືອງສາງຊາໄດ້ປ່ຽນສະພາບທີ່ຊາວນາກາງໄດ້ທ່າດີມາເປັນຊາວນາທຸກໄດ້ທ່າດີແນວໃດ» (ປີ ໑໙໕໕)

ຕ້ອງສາມັກຄີຊາວນາກາງ, ບໍ່ສາມັກຄີຊາວນາກາງແມ່ນຜິດພາດ. ແຕ່ວ່າ ຢູ່ໃນຊົນນະບົດ, ຊົນຊັ້ນກຳມະກອນແລະພັກກອມມູນິດຈະອາໄສຜູ້ໃດໄປສາມັກຄີຊາວນາກາງ, ເຮັດໃຫ້ການດັດແປງເປັນແບບສັງຄົມນິຍົມທົ່ວຊົນນະບົດປາກົດເປັນຈິງ? ແນ່ນອນ ມີແຕ່ຊາວນາທຸກທີ່ນັ້ນ. ເມື່ອກ່ອນພຸ້ນ, ຄາວຕໍ່ສູ້ກັບເຈົ້າທີ່ດິນ ດຳເນີນການປະຕິວັດລະບອບທີ່ດິນແມ່ນເປັນແນວນີ້, ປັດຈຸບັນນີ້ ເວລາຕໍ່ສູ້ກັບຊາວນາຮັ່ງແລະປັດໃຈທຶນນິຍົມອື່ນໆ ດຳເນີນການດັດແປງກະເສດຕະກຳໃຫ້ເປັນແບບສັງຄົມນິຍົມກໍ່ເປັນແນວນີ້ຄືກັນ. ໃນຕອນຕົ້ນຂອງການປະຕິວັດສອງໄລຍະນີ້, ຊາວນາກາງລ້ວນແຕ່ຫວັ່ນໄຫວຄອນແຄນ. ຕໍ່

ເມື່ອໄດ້ເຫັນແງ່ຂະຫຍາຍຄັກ ແລະການປະຕິວັດນ່ຳຈະຊະນະແລ້ວ, ຊາວນາກາງຈຶ່ງເຂົ້າຮ່ວມກັບຝ່າຍປະຕິວັດ. ຊາວນາທຸກຕ້ອງເຮັດວຽກຂົນຂວາຍຊາວນາກາງ, ສາມັກຄີຊາວນາກາງໃຫ້ມາຢູ່ກັບຝ່າຍຕົນ, ເຮັດໃຫ້ການປະຕິວັດນັບມື້ນັບຂະຫຍາຍກວ້າງ ຈົນເຖິງໄດ້ຮັບໄຊຊະນະຂັ້ນສຸດທ້າຍ.

ໝາຍເຫດໃນບົດຄວາມເລື່ອງ «ບົດຮຽນຈາກການເກີດມີ"ສະຫະກອນຊາວນາກາງ"ແລະ"ສະຫະກອນຊາວນາທຸກ"ຂຶ້ນໃນເມືອງປູອານ» (ປີ ໑໙໕໔)

ທ່າທ່ຽງໄປທາງທຶນນິຍົມໃນໝູ່ຊາວນາຕູ້ອ່າວຮັ່ງນັ້ນໜັກໜ່ວງຢູ່. ໃນການເຄື່ອນໄຫວຈັດຕັ້ງກະເສດຕະກຳໃຫ້ເປັນແບບສະຫະກອນ ຈົນກະທັ້ງໃນໄລຍະເວລາອັນເຫິງນານໄລຍະໜຶ່ງຕໍ່ຈາກນັ້ນ, ຄົນພວກເຮົາຫາກຍ່ອນຍານວຽກງານການເມືອງຕໍ່ຊາວນາຈັກໜ່ອຍແລ້ວ, ທ່າທ່ຽງໄປທາງທຶນນິຍົມກໍ່ຈະນອງຖ້ວມຂຶ້ນ.

ໝາຍເຫດໃນບົດຄວາມເລື່ອງ «ຕ້ອງຕໍ່ສູ້ຢ່າງເດັດດ່ຽວກັບຄວາມທ່ຽງໄປທາງທຶນນິຍົມ» (ປີ ໑໙໕໘)

ການເຄື່ອນໄຫວຈັດຕັ້ງກະເສດຕະກຳໃຫ້ເປັນແບບສະຫະກອນນັ້ນ, ພໍເລີ່ມຕົ້ນ ກໍ່ແມ່ນການຕໍ່ສູ້ອັນໜັກໜ່ວງຊະນິດໜຶ່ງທາງແນວຄິດແລະທາງການເມືອງ. ສະຫະກອນທຸກແຫ່ງ ຄົນບໍ່ຜ່ານການຕໍ່ສູ້ແນວນີ້ບັ້ນໜຶ່ງ ກໍ່ບໍ່ສາມາດສ້າງຕັ້ງຂຶ້ນໄດ້. ການຈະສ້າງລະບອບສັງຄົມໃໝ່ສຸດລະບອບໜຶ່ງຂຶ້ນເທິງພື້ນຖານຂອງລະບອບເກົ່ານັ້ນ ກໍ່ຕ້ອງກວາດລ້າງພື້ນຖານນີ້ເສຍກ່ອນ. ເສດເຫຼືອແນວຄິດເກົ່າທີ່ສອງແສງລະບອບເກົ່ານັ້ນ ມັກຈະເຫຼືອຢູ່ໃນສະໝອງຂອງຄົນເຮົາເປັນເວລາເຫິງນານ, ບໍ່ຍອມຖອຍໜີຢ່າງງ່າຍດາຍ. ຫຼັງຈາກສະຫະກອນໄດ້ສ້າງຕັ້ງຂຶ້ນແລ້ວ ຍັງຕ້ອງຜ່ານການຕໍ່ສູ້ຫຼາຍຕໍ່ຫຼາຍເທື່ອຈຶ່ງຈະເຮັດໃຫ້ຕົນໝັ້ນຄົງໄດ້. ເມື່ອໝັ້ນຄົງແລ້ວ, ຄົນຫາກລະຫຼົນໜ່ອຍໜຶ່ງ ກໍ່ອາດຈະລົ້ມລະລາຍ.

ໝາຍເຫດໃນບົດຄວາມເລື່ອງ «ບົດຮຽນອັນໜັກໜ່ວງ» (ປີ ໑໙໕໘)

ໃນລະຫວ່າງບໍ່ເທົ່າໃດປີມານີ້, ອິດທິພົນທຶນນິຍົມທີ່ເກີດເອງໃນຊົນນະບົດໄດ້ນັບມື້ນັບຂະຫຍາຍຕົວ, ຊາວນາຮັ່ງໃໝ່ໄດ້ປາກົດ

ຕົວຂຶ້ນທົ່ວທຸກແຫ່ງ, ຊາວນາກາງຜູ້ອ່າວຮັ່ງຈຳນວນຫຼວງຫຼາຍພວມພະຍາຍາມສ້າງຕົນໃຫ້ກາຍເປັນຊາວນາຮັ່ງ. ຊາວນາທຸກຈຳນວນຫຼວງຫຼາຍ ຍ້ອນວ່າປັດໃຈການຜະລິດບໍ່ພຽງພໍ ຈຶ່ງຍັງຕົກຢູ່ໃນຖານະທຸກຈົນ, ບາງຄົນຕິດໜີ້ຕິດສິນ, ບາງຄົນຂາຍທີ່ດິນຫຼືເອົາທີ່ດິນໃຫ້ຜູ້ອື່ນເຊົ່າ. ຖ້າປະໃຫ້ສະພາບການນີ້ຂະຫຍາຍຕໍ່ໄປແລ້ວ, ປາກົດການທີ່ຜັນແຍກໄປຫາສອງສົ້ນໃນຊົນນະບົດກໍ່ຈະນັບມື້ນັບຮ້າຍແຮງຂຶ້ນຢ່າງແນ່ນອນ. ຊາວນາທີ່ສູນເສຽທີ່ດິນ ແລະ ຊາວນາທີ່ຍັງຕົກຢູ່ໃນຖານະທຸກຈົນຕໍ່ໄປນັ້ນຈະຈົ່ມຕິຕຽນພວກເຮົາ, ເວົ້າໃຫ້ພວກເຮົາວ່າເຫັນຄົນຈະຕາຍກໍ່ບໍ່ຊ່ວຍ, ບໍ່ຊ່ວຍພວກເຂົາເຈົ້າແກ້ໄຂຄວາມຫຍຸ້ງຍາກລຳບາກ. ພວກຊາວນາກາງຜູ້ອ່າວຮັ່ງທີ່ພວມຂະຫຍາຍໄປສູ່ທິດທາງທຶນນິຍົມກໍ່ຈະບໍ່ພໍໃຈນຳພວກເຮົາ, ເພາະວ່າ ຄົນພວກເຮົາບໍ່ຢາກໄປທາງທຶນນິຍົມ ກໍ່ບໍ່ມີຍາມຈະຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງຊາວນາເຫຼົ່ານີ້ໄດ້. ຢູ່ໃຕ້ສະພາບການແນວນີ້, ພັນທະພາບລະຫວ່າງກຳມະກອນກັບຊາວນາຈະໝັ້ນຄົງຕໍ່ໄປໄດ້

ບໍ່? ຄັກແນ່ວ່າ ບໍ່ສາມາດເປັນໄປໄດ້ດອກ. ມີແຕ່ຢູ່ເທິງພື້ນຖານໃໝ່ທໍ່ນັ້ນ ຈຶ່ງສາມາດແກ້ໄຂບັນຫານີ້ໄດ້. ຄືວ່າໄປຄຽງຄູ່ກັບການເຮັດໃຫ້ອຸດສາຫະກຳເປັນແບບສັງຄົມນິຍົມປາກົດເປັນຈິງຂຶ້ນເທື່ອລະກ້າວໆ ແລະການດັດແປງຫັດຖະກຳ ອຸດສາຫະກຳແລະພານິດຊະກຳທຶນນິຍົມໃຫ້ເປັນແບບສັງຄົມນິຍົມປາກົດເປັນຈິງຂຶ້ນເທື່ອລະກ້າວໆນັ້ນ ກໍ່ຕ້ອງດັດແປງກະເສດຕະກຳທັງໝົດໃຫ້ເປັນແບບສັງຄົມນິຍົມປາກົດເປັນຈິງຂຶ້ນເທື່ອລະກ້າວໆ ຄືເຮັດໃຫ້ເປັນແບບສະຫະກອນ, ດັບສູນລະບອບເສດຖະກິດຊາວນາຮັ່ງແລະລະບອບເສດຖະກິດເອກະເທດຢູ່ໃນຊົນນະບົດ, ເຮັດໃຫ້ປະຊາຊົນທັງໝົດໃນຊົນນະບົດຮັ່ງມີຂຶ້ນນຳກັນ. ພວກເຮົາເຫັນວ່າ ມີແຕ່ເຮັດແນວນີ້ທໍ່ນັ້ນ, ພັນທະພາບລະຫວ່າງກຳມະກອນກັບຊາວນາຈຶ່ງສາມາດໝັ້ນຄົງໄດ້.

«ບັນຫາກ່ຽວກັບການຈັດຕັ້ງກະເສດຕະກຳໃຫ້ເປັນແບບສະຫະກອນ» (ວັນທີ່ ໓໑-໗-໑໙໕໕)

...ການວາງແຜນການເປັນເອກະພາບເບິ່ງກວມທຸກດ້ານນັ້ນ ໝາຍເຖິງການວາງແຜນການເປັນເອກະພາບເບິ່ງກວມທຸກດ້ານສຳລັບພົນລະເມືອງ ໖໐໐ ລ້ານຄົນ. ເມື່ອພວກເຮົາວາງແຜນການ ເຮັດວຽກງານແລະຄິດຕອງບັນຫາ ລ້ວນແຕ່ຕ້ອງເລີ່ມຈາກຈຸດທີ່ປະເທດເຮົາມີພົນລະເມືອງ ໖໐໐ ລ້ານຄົນ, ຢ່າໄດ້ລືມຈຸດນີ້ເດັດຂາດ.

«ບັນຫາກ່ຽວກັບການແກ້ໄຂຄວາມຂັດແຍ້ງພາຍໃນປະຊາຊົນຢ່າງຖືກຕ້ອງ» (ວັນທີ ໒໗-໒-໑໙໕໗)

ນອກຈາກການນຳພາຂອງພັກແລ້ວ, ພົນລະເມືອງ ໖໐໐ ລ້ານຄົນແມ່ນປັດໃຈຊີ້ຂາດອັນໜຶ່ງ. ຄົນຫຼາຍຄວາມຄິດຄວາມເຫັນກໍ່ຫຼາຍ, ນ້ຳຈິດນ້ຳໃຈກໍ່ຟົດຟື້ນ, ເຮັດວຽກກໍ່ຂັນແຂງ. ແຕ່ໃດມາບໍ່ເຄີຍເຫັນປວງປະຊາຊົນມີຈິດໃຈຫ້າວຫັນຂັນແຂງ, ມີນ້ຳໃຈສູ້ລົບຫ້າວຫານແລະມີນ້ຳໃຈຟົດຟື້ນຊື່ນບານ ຄືຊູ່ມື້ນີ້ຈັກເທື່ອ.

«ແນະນຳສະຫະກອນບ່ອນໜຶ່ງ» (ວັນທີ ໑໕-໔-໑໙໕໘)

ນອກຈາກຈຸດພິເສດອັນອື່ນແລ້ວ, ຈຸດພິເສດເດັ່ນຂອງພົນລະເມືອງຈີນ ໖໐໐ ລ້ານຄົນແມ່ນ ໑ ທຸກ ໒ ເປົ່າ. ເລື່ອງເຫຼົ່ານີ້ເມື່ອເບິ່ງໄປຄືເປັນເລື່ອງບໍ່ດີ, ທີ່ແທ້ເປັນເລື່ອງດີ. ເມື່ອທຸກກໍ່ຍ່ອມຄິດປ່ຽນແປງ, ຍ່ອມສູ້, ຍ່ອມປະຕິວັດ. ເຈ້ຍເປົ່າໃບໜຶ່ງບໍ່ມີພາລະຫຍັງ ສາມາດຂຽນໜັງສືໃໝ່ແລະງາມທີ່ສຸດໃສ່, ສາມາດແຕ້ມຮູບໃໝ່ແລະງາມທີ່ສຸດໃສ່.

«ແນະນຳສະຫະກອນບ່ອນໜຶ່ງ» (ວັນທີ ໑໕-໔-໑໙໕໘)

ຫຼັງຈາກການປະຕິວັດຈີນໄດ້ຮັບໄຊຊະນະທົ່ວປະເທດ ແລະໄດ້ແກ້ໄຂບັນຫາທີ່ດິນແລ້ວ, ປະເທດຈີນຍັງມີຄວາມຂັດແຍ້ງພື້ນຖານສອງຊະນິດ. ຊະນິດທີ່ໜຶ່ງແມ່ນພາຍໃນປະເທດ ຄື ຄວາມຂັດແຍ້ງລະຫວ່າງຊົນຊັ້ນກຳມະກອນກັບຊົນຊັ້ນເຈົ້າທຶນ. ຊະນິດທີ່ສອງແມ່ນພາຍນອກປະເທດ ຄື ຄວາມຂັດແຍ້ງລະຫວ່າງປະເທດຈີນກັບປະເທດຈັກກະພັດນິຍົມ. ເນື່ອງດ້ວຍເຫດນີ້ຫຼັງຈາກການປະຕິວັດປະຊາທິປະໄຕປະຊາຊົນໄດ້ຮັບໄຊຊະນະ

ແລ້ວ, ອຳນາດການປົກຄອງຂອງສາທາລະນະລັດປະຊາຊົນທີ່ນຳພາໂດຍຊົນຊັ້ນກຳມະກອນນັ້ນ ບໍ່ແມ່ນຈະບັ່ນທອນໃຫ້ອ່ອນລົງ, ແຕ່ຕ້ອງເພີ່ມທະວີໃຫ້ເຂັ້ມແຂງຂຶ້ນ.

«ຄຳລາຍງານໃນກອງປະຊຸມເຕັມຄະນະເທື່ອທີ່ ໒ ຂອງຄະນະກຳມະການສູນກາງສະໄໝທີ່ ໗ ຂອງພັກກອມມູນິດຈີນ» (ວັນທີ່ ໕-໓-໑໙໔໙)

" ພວກເຈົ້າບໍ່ແມ່ນຕ້ອງການຈະດັບສູນອຳນາດລັດຫວາ? "

ແມ່ນ, ພວກເຮົາຕ້ອງການ. ແຕ່ດຽວນີ້ພວກເຮົາຍັງບໍ່ຕ້ອງການ, ດຽວນີ້ພວກເຮົາຍັງຕ້ອງການບໍ່ໄດ້ເທື່ອ. ຍ້ອນຫຍັງ? ຍ້ອນຈັກກະພັດນິຍົມຍັງມີຢູ່, ພວກປະຕິການໃນປະເທດຍັງມີຢູ່, ຊົນຊັ້ນໃນປະເທດຍັງມີຢູ່. ພາລະໜ້າທີ່ຂອງພວກເຮົາໃນປັດຈຸບັນແມ່ນຕ້ອງເພີ່ມທະວີເຄື່ອງຈັກລັດຂອງປະຊາຊົນໃຫ້ເຂັ້ມແຂງ, ສຳຄັນແມ່ນໝາຍເຖິງກອງທັບຂອງປະຊາຊົນ ຕຳຫຼວດຂອງປະຊາຊົນແລະສານຂອງປະຊາຊົນ, ເພື່ອເຮັດໃຫ້ການປ້ອງກັນ

ປະເທດໝັ້ນຄົງແລະປົກປັກຮັກສາຜົນປະໂຫຍດຂອງປະຊາຊົນ.

«ວ່າດ້ວຍການຜະເດັດການປະຊາທິປະໄຕປະຊາຊົນ» (ວັນທີ່ ໓໐-໖-໑໙໔໙)

ປະເທດຂອງພວກເຮົາແມ່ນປະເທດຜະເດັດການປະຊາທິປະໄຕປະຊາຊົນທີ່ຊົນຊັ້ນກຳມະກອນນຳພາແລະເອົາພັນທະພາບກຳມະກອນຊາວນາເປັນພື້ນຖານ. ການຜະເດັດການນີ້ເຮັດຫຍັງແດ່? ບົດບາດອັນທີ່ໜຶ່ງຂອງການຜະເດັດການແມ່ນກົດຂີ່ຊົນຊັ້ນປະຕິການ ພວກປະຕິການແລະພວກຂູດຮີດທີ່ຕ້ານການປະຕິວັດສັງຄົມນິຍົມຢູ່ໃນປະເທດ, ກົດຂີ່ພວກທຳລາຍການສ້າງສາສັງຄົມນິຍົມ, ທັງນີ້ກໍ່ເພື່ອແກ້ໄຂຄວາມຂັດແຍ້ງລະຫວ່າງເຮົາກັບສັດຕູໃນປະເທດ. ຕົວຢ່າງຄື ຈັບກຸມພວກຕ້ານປະຕິວັດຈຳນວນໜຶ່ງແລະຕັດສິນລົງໂທດພວກມັນ, ບໍ່ໃຫ້ພວກຊົນຊັ້ນເຈົ້າທີ່ດິນແລະພວກຊົນຊັ້ນເຈົ້າທຶນອາດຍາສິດມີສິດເລືອກຕັ້ງ, ບໍ່ໃຫ້ພວກເຂົາມີສິດເສລີໃນການປາກການຂຽນໃນໄລຍະເວລາໜຶ່ງ, ທັງໝົດນີ້ລ້ວນແຕ່ຢູ່ໃນຂອບເຂດຜະເດັດການ. ເພື່ອຮັກສາລະບຽບ

ສັງຄົມແລະຜົນປະໂຫຍດຂອງປະຊາຊົນອັນກວ້າງໃຫຍ່ ກໍ່ຕ້ອງດຳເນີນການຕະເດັດການຕໍ່ພວກຂີ້ລັກນັກສິກ ພວກຂີ້ສໍ້ລໍ້ລວງ, ພວກຂ້າຄົນ ພວກຈູດເລົາເຜົາຜານ ກຸ່ມນັກເລງແລະພວກຄົນຊົ່ວປະເພດຕ່າງໆທີ່ທຳລາຍລະບຽບສັງຄົມຢ່າງຮ້າຍແຮງ. ການຕະເດັດການຍັງມີບົດບາດອັນທີ່ສອງຄື ກັ້ນກາງການເຄື່ອນໄຫວໂຄ່ນລົ້ມ ແລະ ການລຸກລານທີ່ອາດຈະເກີດຂຶ້ນຈາກສັດຕູນອກປະເທດ. ເມື່ອມີສະພາບການດັ່ງກ່າວເກີດຂຶ້ນ, ການຕະເດັດການກໍ່ຫາບແບກພາລະໜ້າທີ່ແກ້ໄຂຄວາມຂັດແຍ້ງລະຫວ່າງເຮົາກັບສັດຕູນອກປະເທດ. ຈຸດປະສົງຂອງການຕະເດັດການແມ່ນເພື່ອປົກປັກຮັກສາໃຫ້ປະຊາຊົນທຸກຄົນໄດ້ອອກແຮງງານຢ່າງສັນຕິ, ສ້າງສາປະເທດເຮົາໃຫ້ກາຍເປັນປະເທດສັງຄົມນິຍົມທີ່ມີອຸດສາຫະກຳທັນສະໄໝ ກະເສດຕະກຳທັນສະໄໝແລະວິທະຍາສາດວັດທະນະທຳທັນສະໄໝ.

«ບັນຫາກ່ຽວກັບການແກ້ໄຂຄວາມຂັດແຍ້ງພາຍໃນ
ປະຊາຊົນຢ່າງຖືກຕ້ອງ» (ວັນທີ່ ໒໗-໒-໑໙໕໗)

ການຕະເດັດການປະຊາທິປະໄຕປະຊາຊົນຕ້ອງການການນຳພາຂອງຊົນຊັ້ນກຳມະກອນ. ເພາະວ່າ ມີແຕ່ຊົນຊັ້ນກຳມະກອນທີ່ນັ້ນຈຶ່ງເຫັນກວ້າງມອງໄກທີ່ສຸດ ເຫັນແກ່ສ່ວນຮວມບໍ່ເຫັນແກ່ສ່ວນຕົວ ແລະ ສົມບູນດ້ວຍລັກສະນະປະຕິວັດເຖິງຖອງທີ່ສຸດ. ປະວັດການປະຕິວັດທັງໝົດໄດ້ຢັ້ງຢືນໃຫ້ເຫັນວ່າ ຄັນບໍ່ມີການນຳພາຂອງຊົນຊັ້ນກຳມະກອນ, ການປະຕິວັດກໍ່ຈະປະລາໄຊ, ເມື່ອມີການນຳພາຂອງຊົນຊັ້ນກຳມະກອນແລ້ວ ການປະຕິວັດກໍ່ຊະນະ.

«ວ່າດ້ວຍການຕະເດັດການປະຊາທິປະໄຕປະຊາຊົນ»
(ວັນທີ່ ໓໐-໖-໑໙໔໙)

ພື້ນຖານຂອງການຕະເດັດການປະຊາທິປະໄຕປະຊາຊົນແມ່ນພັນທະພາບລະຫວ່າງຊົນຊັ້ນກຳມະກອນ ຊົນຊັ້ນຊາວນາ ແລະຊົນຊັ້ນເຈົ້າທຶນນ້ອຍໃນໂຕເມືອງ, ແຕ່ສຳຄັນແມ່ນພັນທະພາບລະຫວ່າງກຳມະກອນກັບຊາວນາ, ຍ້ອນວ່າສອງຊົນຊັ້ນນີ້ກິນຈຳນວນພົນລະເມືອງຂອງປະເທດຈີນ ໘໐ ຫາ ໙໐ ສ່ວນຮ້ອຍ.

ການໂຄ່ນລົ້ມຈັກກະພັດນິຍົມແລະພວກກົກມິນຕັງປະຕິການນັ້ນ ສຳຄັນແມ່ນກຳລັງຂອງສອງຊົນຊັ້ນນີ້. ຈາກລັດທິປະຊາທິປະໄຕໃໝ່ໄປສູ່ສັງຄົມນິຍົມນັ້ນ ສຳຄັນແມ່ນອາໄສພັນທະພາບຂອງສອງຊົນຊັ້ນນີ້.

«ວ່າດ້ວຍການຜະເດັດການປະຊາທິປະໄຕປະຊາຊົນ»
(ວັນທີ່ ໓໐-໖-໑໙໔໙)

ການຕໍ່ສູ້ຊົນຊັ້ນ ການຕໍ່ສູ້ການຜະລິດແລະການທົດລອງວິທະຍາສາດແມ່ນການເຄື່ອນໄຫວປະຕິວັດອັນຍິ່ງໃຫຍ່ສາມປະການໃນການສ້າງປະເທດສັງຄົມນິຍົມທີ່ເຂັ້ມແຂງໃຫຍ່ໂຕ, ແມ່ນການຮັບປະກັນອັນຄັກແນ່ໃນການເຮັດໃຫ້ຊາວພັກກອມມູນິດພົ້ນຈາກລັດທິອາດຍາສິດ ຫຼີກເວັ້ນລັດທິແກ້ແລະລັດທິຄຳພີ, ຕັ້ງຕົວຢູ່ໃນທ່າບໍ່ເສຽໄຊຈົນເທົ້າໃດໆ, ແມ່ນການຮັບປະກັນທີ່ໄວ້ໃຈໄດ້ໃນການເຮັດໃຫ້ຊົນຊັ້ນກຳມາຊີບສາມາດຮ່ວມສຳພັນກັບມວນຊົນຜູ້ອອກແຮງງານອັນກວ້າງໃຫຍ່ດຳເນີນການຜະເດັດການປະຊາທິປະໄຕ. ຖ້າບໍ່ດັ່ງນັ້ນ ປ່ອຍໃຫ້ພວກເຈົ້າທີ່ດິນ ພວກ

ຊາວນາຮັ່ງ ພວກຕ້ານປະຕິວັດ ພວກຄົນຊົ່ວແລະຜີສາງນາງຮ້າຍພາກັນຫຼັ່ງອອກມາ, ພະນັກງານພວກເຮົາຊ້ຳພັດເອົາຫູໄປນາເອົາຕາໄປໄຮ່, ມີຫຼາຍຄົນຮອດບໍ່ແຍກເຮົາກັບສັດຕູ, ສົມຮູ້ຮ່ວມຄິດກັບສັດຕູ ຖືກສັດຕູກັດກິນຊຶມແຊກ ແບ່ງແຍກມ້າງເພ ດຶງອອກໄປແລະລອດເຂົ້າມາ, ມີກຳມະກອນ ຊາວນາແລະນັກຮຽນຮູ້ເປັນຈຳນວນຫຼວງຫຼາຍກໍ່ຖືກສັດຕູໃຊ້ໄມ້ອ່ອນໄມ້ແຂງເຮັດຄືດຽວກັນ, ເມື່ອເປັນແນວນີ້ແລ້ວ ກໍ່ຈະບໍ່ເຫິງນານປານໃດ, ຢ່າງໜ້ອຍກໍ່ບໍ່ທໍ່ໃດປີຫຼືສິບກວ່າປີ, ຢ່າງຫຼາຍກໍ່ບໍ່ທໍ່ໃດສິບປີ, ການຟື້ນອຳນາດຕ້ານປະຕິວັດທົ່ວປະເທດກໍ່ຈະປາກົດຂຶ້ນຢ່າງບໍ່ອາດຫຼີກເວັ້ນໄດ້. ພັກລັດທິມາກເລນິນກໍ່ຈະກາຍເປັນພັກລັດທິແກ້, ກາຍເປັນພັກຟັດຊິດຢ່າງແນ່ນອນ, ທົ່ວປະເທດຈີນກໍ່ຈະປ່ຽນສີ.

ຄັດຈາກບົດຄວາມເລື່ອງ «ກ່ຽວກັບລັດທິກອມມູນິດຈອມປອມຂອງຄະລຸດຊົບແລະບົດຮຽນໃນປະວັດສາດຂອງໂລກໃນເລື່ອງນີ້» (ວັນທີ່ ໑໔-໗-໑໙໖໔)

ການພະເດັດການປະຊາທິປະໄຕປະຊາຊົນມີສອງວິທີ. ສຳລັບສັດຕູແລ້ວ ແມ່ນໃຊ້ວິທີພະເດັດການ, ໝາຍຄວາມວ່າ ໃນໄລຍະເວລາອັນຈຳເປັນ, ບໍ່ໃຫ້ພວກມັນເຂົ້າຮ່ວມການເຄື່ອນໄຫວການເມືອງ, ບັງຄັບໃຫ້ພວກມັນຍອມປະຕິບັດຕາມກົດໝາຍຂອງລັດຖະບານປະຊາຊົນ, ບັງຄັບໃຫ້ພວກມັນອອກແຮງງານແລະດັດແປງພວກມັນໃຫ້ກາຍເປັນຄົນໃໝ່ໃນລະຫວ່າງອອກແຮງງານ. ກົງກັນຂ້າມ, ສຳລັບປະຊາຊົນແລ້ວ ບໍ່ແມ່ນໃຊ້ວິທີບັງຄັບ, ແມ່ນໃຊ້ວິທີປະຊາທິປະໄຕ, ໝາຍຄວາມວ່າ ຕ້ອງໃຫ້ພວກເຂົາເຈົ້າເຂົ້າຮ່ວມການເຄື່ອນໄຫວການເມືອງ, ບໍ່ແມ່ນບັງຄັບໃຫ້ພວກເຂົາເຈົ້າເຮັດແນວນັ້ນແນວນີ້, ແມ່ນອົບຮົມແລະລຸລົ່ງພວກເຂົາເຈົ້າດ້ວຍວິທີປະຊາທິປະໄຕ.

ຄຳປາໄສປິດປະຊຸມໃນກອງປະຊຸມເທື່ອທີ່ ໒ ຂອງຄະນະກຳມະການທົ່ວປະເທດສະໄໝທີ່ ໑ ຂອງສະພາປຶກສາການເມືອງປະຊາຊົນຈີນ (ວັນທີ່ ໒໓-໖-໑໙໕໐)

ເພື່ອຂະຫຽາຍພາລະກິດສັງຄົມນິຍົມຂອງຈີນຢ່າງວ່ອງໄວຢູ່ເທິງພື້ນຖານອັນໝັ້ນຄົງກວ່າເກົ່າ, ປະຊາຊົນຈີນທີ່ຢູ່ພາຍໃຕ້ການນຳພາຂອງພັກກອມມູນິດຈີນພວມດຳເນີນການເຄື່ອນໄຫວປັບປຸງທ່າທຳນອງຢ່າງພົດພື້ນມີຊີວິດຊີວາ. ຄືວ່າໃນຕົວເມືອງແລະຊົນນະບົດ ໄດ້ເປີດການຖົກຖຽງກັນຂະໜາດໃຫຍ່ທີ່ມີລັກສະນະປອງຊົນຢ່າງມີການນຳ ແລະຢ່າງເສລີດ້ວຍວິທີຍົກຄວາມຈິງ ແລະ ອ້າງເຫດຜົນກ່ຽວກັບບັນຫາສອງເສັ້ນທາງລະຫວ່າງສັງຄົມນິຍົມກັບທຶນນິຍົມ ລະບອບພື້ນຖານແລະນະໂຍບາຍສຳຄັນຂອງລັດ ທ່າທຳນອງເຮັດວຽກຂອງພະນັກງານຂອງພັກແລະລັດ ສະຫວັດດີການຄວາມເປັນຢູ່ຂອງປະຊາຊົນ ໆລໆ ເພື່ອແກ້ໄຂບັນດາບັນຫາຄວາມຂັດແຍ້ງຕົວຈິງພາຍໃນປະຊາຊົນທີ່ຈຳຕ້ອງແກ້ໄຂໃນປັດຈຸບັນຢ່າງຖືກຕ້ອງ. ອັນນີ້ແມ່ນການເຄື່ອນໄຫວສັງຄົມນິຍົມທີ່ປະຊາຊົນອົບຮົມຕົວເອງແລະດັດແປງ

ຕົວເອງ.

«ຄຳປາໄສໃນກອງປະຊຸມສະພາໂຊວຽດສູງສຸດແຫ່ງສະຫະພາບໂຊວຽດເພື່ອສະເຫຼີມສະຫຼອງການປະຕິວັດສັງຄົມນິຍົມເດືອນຕຸລາທີ່ຍິ່ງໃຫຍ່ຄົບຮອບ ໔໐ ປີ» (ວັນທີ່ ໗-໑໑-໑໙໕໗)

ເພື່ອດຳເນີນວຽກງານສ້າງສາອັນຍິ່ງໃຫຍ່, ພາລະໜ້າທີ່ອັນໜັກໜາທີ່ສຸດໄດ້ວາງຢູ່ຕໍ່ໜ້າພວກເຮົາ. ເຖິງວ່າພວກເຮົາມີສະມາຊິກພັກ ໑໐ ກວ່າລ້ານຄົນກໍ່ຕາມ, ແຕ່ຍັງກິນຈຳນວນໜ້ຽທີ່ສຸດໃນພົນລະເມືອງທົ່ວປະເທດ. ໃນບັນດາວຽກງານຂອງລັດແລະໃນກິດຈະການສັງຄົມຕ່າງໆຂອງພວກເຮົາ, ວຽກງານຈຳນວນຫຼວງຫຼາຍຕ້ອງອາໄສຄົນນອກພັກໄປເຮັດ. ຖ້າພວກເຮົາບໍ່ຊ່າງອາໄສປວງປະຊາຊົນ, ບໍ່ຊ່າງຮ່ວມໄມ້ຮ່ວມມືກັບຄົນນອກພັກແລ້ວ ກໍ່ບໍ່ສາມາດເຮັດວຽກງານໃຫ້ດີໄດ້. ເວລາພວກເຮົາສືບຕໍ່ເພີ່ມທະວີຄວາມສາມັກຄີທົ່ວພັກ, ພວກເຮົາຍັງຈຳຕ້ອງສືບຕໍ່ເພີ່ມທະວີຄວາມສາມັກຄີບັນດາຊົນຊາດ ບັນດາ

ຊົນຊັ້ນປະຊາທິປະໄຕ ບັນດາພັກຝ່າຍປະຊາທິປະໄຕແລະບັນດາອົງການຈັດຕັ້ງປະຊາຊົນ, ສືບຕໍ່ປັບປຸງແລະຂະຫຍາຍແນວໂຮມປະຊາທິປະໄຕປະຊາຊົນຂອງພວກເຮົາ, ຕ້ອງຕັ້ງໜ້າແກ້ໄຂດັດແປງທຸກປາກົດການອັນບໍ່ດີໃນທຸກບ່ອນວຽກງານທີ່ເປັນໄພຂັດຂວາງຄວາມສາມັກຄີລະຫວ່າງພັກກັບປະຊາຊົນ.

«ຄຳປາໄສເປີດກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດເທື່ອທີ່ ໘ ຂອງພັກກອມມູນິດຈີນ» (ວັນທີ່ ໑໕-໙-໑໙໕໖)

໔. ການແກ້ໄຂຄວາມຂັດແຍ້ງ ພາຍໃນປະຊາຊົນຢ່າງຖືກຕ້ອງ

ຕໍ່ໜ້າພວກເຮົາມີຄວາມຂັດແຍ້ງທາງສັງຄົມສອງປະເພດ ຄື ຄວາມຂັດແຍ້ງລະຫວ່າງເຮົາກັບສັດຕູແລະຄວາມຂັດແຍ້ງພາຍໃນປະຊາຊົນ. ອັນນີ້ແມ່ນຄວາມຂັດແຍ້ງສອງປະເພດທີ່ມີລັກສະນະຕ່າງກັນຢ່າງສິ້ນເຊີງ.

«ບັນຫາກ່ຽວກັບການແກ້ໄຂຄວາມຂັດແຍ້ງພາຍໃນປະຊາຊົນຢ່າງຖືກຕ້ອງ» (ວັນທີ່ ໒໗-໒-໑໙໕໗)

ເພື່ອເຂົ້າໃຈຄວາມຂັດແຍ້ງສອງປະເພດທີ່ຕ່າງກັນຄືຄວາມຂັດແຍ້ງລະຫວ່າງເຮົາກັບສັດຕູແລະຄວາມຂັດແຍ້ງພາຍໃນປະຊາຊົນຢ່າງຖືກຕ້ອງ, ກ່ອນອື່ນຄວນເຂົ້າໃຈແຈ່ມແຈ້ງວ່າອັນ

ໃດແມ່ນປະຊາຊົນ ອັນໃດແມ່ນສັດຕູ. ...ໃນໄລຍະປັດຈຸບັນໃນສະໄໝສ້າງສາສັງຄົມນິຍົມ, ບັນດາຊົນຊັ້ນ ຊັ້ນຊົນແລະກຸ່ມສັງຄົມທີ່ເຫັນດີ ສະໜັບສະໜູນແລະເຂົ້າຮ່ວມພາລະກິດສ້າງສາສັງຄົມນິຍົມລ້ວນແຕ່ຢູ່ໃນຂອບເຂດປະຊາຊົນ; ບັນດາອິດທິພົນສັງຄົມແລະກຸ່ມສັງຄົມທີ່ຕ້ານການປະຕິວັດສັງຄົມນິຍົມ, ປອງຮ້າຍແລະມ້າງເພການສ້າງສາສັງຄົມນິຍົມ ລ້ວນແຕ່ແມ່ນສັດຕູຂອງປະຊາຊົນ.

«ບັນຫາກ່ຽວກັບການແກ້ໄຂຄວາມຂັດແຍ້ງພາຍໃນປະຊາຊົນຢ່າງຖືກຕ້ອງ» (ວັນທີ່ ໒໗-໒-໑໙໕໗)

ພາຍໃຕ້ເງື່ອນໄຂປັດຈຸບັນຂອງປະເທດເຮົາ, ທີ່ວ່າຄວາມຂັດແຍ້ງພາຍໃນປະຊາຊົນນັ້ນ ຮວມມີຄວາມຂັດແຍ້ງພາຍໃນຊົນຊັ້ນກຳມະກອນ, ຄວາມຂັດແຍ້ງພາຍໃນຊົນຊັ້ນຊາວນາ, ຄວາມຂັດແຍ້ງພາຍໃນນັກຮຽນຮູ້, ຄວາມຂັດແຍ້ງລະຫວ່າງຊົນຊັ້ນກຳມະກອນກັບຊົນຊັ້ນຊາວນາ, ຄວາມຂັດແຍ້ງລະຫວ່າງ

ກຳມະກອນ ຊາວນາກັບນັກຮຽນຮູ້, ຄວາມຂັດແຍ້ງລະຫວ່າງຊົນຊັ້ນກຳມະກອນ ແລະ ປະຊາຊົນຜູ້ອອກແຮງງານອື່ນໆກັບຊົນຊັ້ນເຈົ້າທຶນຊາດ, ຄວາມຂັດແຍ້ງພາຍໃນຊົນຊັ້ນເຈົ້າທຶນຊາດ ຯລຯ. ລັດຖະບານປະຊາຊົນຂອງພວກເຮົາແມ່ນລັດຖະບານທີ່ເປັນຕົວແທນຜົນປະໂຫຍດຂອງປະຊາຊົນຢ່າງແທ້ຈິງ, ແມ່ນລັດຖະບານທີ່ຮັບໃຊ້ປະຊາຊົນ, ແຕ່ລະຫວ່າງລັດຖະບານກັບປວງປະຊາຊົນກໍ່ຍັງມີຄວາມຂັດແຍ້ງອັນໃດອັນໜຶ່ງຢູ່. ຄວາມຂັດແຍ້ງນີ້ຮວມມີຄວາມຂັດແຍ້ງລະຫວ່າງຜົນປະໂຫຍດຂອງຊາດ ຜົນປະໂຫຍດສ່ວນຮວມກັບຜົນປະໂຫຍດສ່ວນຕົວ, ຄວາມຂັດແຍ້ງລະຫວ່າງປະຊາທິປະໄຕກັບການຮວມສູນ, ຄວາມຂັດແຍ້ງລະຫວ່າງຜູ້ນຳພາກັບຜູ້ຖືກນຳພາ, ຄວາມຂັດແຍ້ງລະຫວ່າງມວນຊົນກັບທ່າທຳນອງລັດທິອາດຍາສິດຂອງພະນັກງານບາງຄົນໃນອົງການລັດຖະບານ. ຄວາມຂັດແຍ້ງແນວນີ້ກໍ່ແມ່ນຄວາມຂັດແຍ້ງອັນໜຶ່ງພາຍໃນປະຊາຊົນຄືກັນ. ເວົ້າ ທົ່ວໄປ ແລ້ວ, ຄວາມຂັດແຍ້ງພາຍໃນປະຊາຊົນນັ້ນ ແມ່ນຄວາມຂັດແຍ້ງຢູ່

ເທິງພື້ນຖານທີ່ຜົນປະໂຫຍດຂອງປະຊາຊົນເປັນອັນໜຶ່ງອັນດຽວກັນໃນຂັ້ນຕົ້ນຕໍ.

«ບັນຫາກ່ຽວກັບການແກ້ໄຂຄວາມຂັດແຍ້ງພາຍໃນປະຊາຊົນຢ່າງຖືກຕ້ອງ» (ວັນທີ່ ໒໗-໒-໑໙໕໗)

ຄວາມຂັດແຍ້ງລະຫວ່າງເຮົາກັບສັດຕູແມ່ນຄວາມຂັດແຍ້ງທີ່ມີລັກສະນະປະຕິປັກ. ຄວາມຂັດແຍ້ງພາຍໃນປະຊາຊົນນັ້ນ ເວົ້າສຳລັບລະຫວ່າງປະຊາຊົນຜູ້ອອກແຮງງານດ້ວຍກັນແລ້ວ ແມ່ນມີລັກສະນະບໍ່ປະຕິປັກ; ເວົ້າສຳລັບລະຫວ່າງຊົນຊັ້ນທີ່ຖືກຂູດຮີດກັບຊົນຊັ້ນຂູດຮີດ, ນອກຈາກດ້ານລັກສະນະປະຕິປັກແລ້ວ, ຍັງມີດ້ານລັກສະນະບໍ່ປະຕິປັກ.

«ບັນຫາກ່ຽວກັບການແກ້ໄຂຄວາມຂັດແຍ້ງພາຍໃນປະຊາຊົນຢ່າງຖືກຕ້ອງ» (ວັນທີ່ ໒໗-໒-໑໙໕໗)

ໃນຊີວິດການເມືອງຂອງປະຊາຊົນປະເທດເຮົາ, ຄວນວິນິດໄສແນວໃດວ່າກິລິຍາວາຈາຂອງພວກເຮົາຖືກຫຼືຜິດ? ໂດຍອີງຕາມຫຼັກການລັດຖະທຳມະນູນຂອງປະເທດເຮົາ, ອີງຕາມຄວາມ

ມຸ່ງມາດປາຖະໜາຂອງປະຊາຊົນສ່ວນຫຼາຍທີ່ສຸດໃນປະເທດເຮົາ ແລະ ຄວາມຄິດເຫັນທາງການເມືອງຮ່ວມກັນທີ່ບັນດາພັກຝ່າຍໃນປະເທດເຮົາປະກາດມາແລ້ວຫຼາຍເທື່ອ, ພວກເຮົາເຫັນວ່າ ພໍຈະກຳນົດເປັນຫຼັກມາດຕະຖານໄດ້ດັ່ງນີ້ຄື (໑) ມີຜົນດີຕໍ່ການສາມັກຄີປະຊາຊົນທຸກຊົນຊາດທົ່ວປະເທດ, ບໍ່ແມ່ນແບ່ງແຍກປະຊາຊົນ; (໒) ມີຜົນດີຕໍ່ການດັດແປງເປັນແບບສັງຄົມນິຍົມແລະການສ້າງສາສັງຄົມນິຍົມ, ບໍ່ແມ່ນມີຜົນຮ້າຍຕໍ່ການດັດແປງເປັນແບບສັງຄົມນິຍົມ ແລະ ການສ້າງສາສັງຄົມນິຍົມ; (໓) ມີຜົນດີຕໍ່ການປັບປຸງການຜະເດັດການປະຊາທິປະໄຕປະຊາຊົນໃຫ້ໝັ້ນຄົງ, ບໍ່ແມ່ນມ້າງເພຫຼືບັ່ນທອນການຜະເດັດການນີ້ໃຫ້ອ່ອນລົງ; (໔) ມີຜົນດີຕໍ່ການປັບປຸງລະບອບປະຊາທິປະໄຕຮວມສູນໃຫ້ໝັ້ນຄົງ, ບໍ່ແມ່ນມ້າງເພຫຼືບັ່ນທອນລະບອບນີ້ໃຫ້ອ່ອນລົງ; (໕) ມີຜົນດີຕໍ່ການປັບປຸງການນຳພາຂອງພັກກອມມູນິດໃຫ້ໝັ້ນຄົງ, ບໍ່ແມ່ນຜີກພີຫຼືບັ່ນທອນການນຳພານີ້ໃຫ້ອ່ອນລົງ; (໖) ມີຜົນດີຕໍ່ຄວາມສາມັກຄີສາກົນຂອງສັງຄົມນິຍົມ ແລະ

ຄວາມສາມັກຄີສາກົນຂອງປະຊາຊົນຜູ້ຮັກຫອມສັນຕິພາບທົ່ວໂລກ, ບໍ່ແມ່ນເຮັດຄວາມເສັຽຫາຍໃຫ້ແກ່ຄວາມສາມັກຄີເຫຼົ່ານີ້. ໃນຫຼັກມາດຕະຖານ ໖ ຂໍ້ນີ້, ທີ່ສຳຄັນທີ່ສຸດມີ ໒ ຂໍ້ ຄືເສັ້ນທາງສັງຄົມນິຍົມແລະການນຳພາຂອງພັກ.

«ບັນຫາກ່ຽວກັບການແກ້ໄຂຄວາມຂັດແຍ້ງພາຍໃນປະຊາຊົນຢ່າງຖືກຕ້ອງ» (ວັນທີ ໒໗-໒-໑໙໕໗)

ບັນຫາການກວາດລ້າງພວກຕ້ານປະຕິວັດ ແມ່ນບັນຫາການຕໍ່ສູ້ຂອງຄວາມຂັດແຍ້ງລະຫວ່າງເຮົາກັບສັດຕູ. ຕໍ່ບັນຫາການກວາດລ້າງພວກຕ້ານປະຕິວັດນັ້ນ, ພາຍໃນປະຊາຊົນ ມີຄົນສ່ວນໜຶ່ງກໍ່ມີທັດສະນະຕ່າງແດ່. ມີຄົນສອງປະເພດມີຄວາມເຫັນຕ່າງກັບຄວາມເຫັນຂອງພວກເຮົາ. ຜູ້ມີແນວຄິດຫງ່ຽງຂວາ, ບໍ່ແຍກເຮົາກັບສັດຕູ, ຖືສັດຕູເປັນເຮົາ. ຄົນທີ່ມວນຊົນອັນກວ້າງໃຫຽ່ຖືວ່າເປັນສັດຕູນັ້ນ, ພວກເຂົາເຈົ້າຊ້ຳພັດຖືເປັນເພື່ອນມິດ. ຜູ້ມີແນວຄິດຫງ່ຽງ “ຊ້າຍ” ກໍ່ຂະຫຽາຍຄວາມຂັດແຍ້ງລະຫວ່າງເຮົາກັບສັດຕູໃຫ້ກວ້າງອອກ ຈົນເຖິງຂັ້ນຖືຄວາມ

ຂັດແຍ້ງບາງຢ່າງພາຍໃນປະຊາຊົນວ່າ ເປັນຄວາມຂັດແຍ້ງລະຫວ່າງເຮົາກັບສັດຕູ, ຖືຄົນບາງຄົນຊຶ່ງທີ່ແທ້ບໍ່ແມ່ນຜູ້ຕ້ານປະຕິວັດວ່າເປັນຜູ້ຕ້ານປະຕິວັດ. ທັດສະນະສອງຊະນິດນີ້ລ້ວນແຕ່ຜິດພາດ, ລ້ວນແຕ່ບໍ່ສາມາດແກ້ໄຂບັນຫາການກວາດລ້າງພວກຕ້ານປະຕິວັດຢ່າງຖືກຕ້ອງແລະກໍ່ບໍ່ສາມາດຕີລາຄາວຽກງານກວາດລ້າງພວກຕ້ານປະຕິວັດຂອງພວກເຮົາຢ່າງຖືກຕ້ອງໄດ້.

«ບັນຫາກ່ຽວກັບການແກ້ໄຂຄວາມຂັດແຍ້ງພາຍໃນປະຊາຊົນຢ່າງຖືກຕ້ອງ» (ວັນທີ່ ໒໗-໒-໑໙໕໗)

ຄວາມຂັດແຍ້ງທີ່ມີທາດຕ່າງກັນ, ມີແຕ່ໃຊ້ວິທີທີ່ມີທາດຕ່າງກັນນັ້ນຈຶ່ງສາມາດແກ້ໄຂໄດ້. ຕົວຢ່າງຄື ຄວາມຂັດແຍ້ງລະຫວ່າງຊົນຊັ້ນກຳມາຊີບກັບຊົນຊັ້ນເຈົ້າທຶນ ຕ້ອງແກ້ໄຂດ້ວຍວິທີປະຕິວັດສັງຄົມນິຍົມ; ຄວາມຂັດແຍ້ງລະຫວ່າງມວນມະຫາຊົນກັບລະບອບສັກດີນາ ຕ້ອງແກ້ໄຂດ້ວຍວິທີປະຕິວັດປະຊາທິປະໄຕ; ຄວາມຂັດແຍ້ງລະຫວ່າງເມືອງຂຶ້ນກັບຈັກກະພັດນິຍົມ ຕ້ອງແກ້ໄຂດ້ວຍວິທີສົງຄາມປະຕິວັດຊາດ; ຄວາມຂັດແຍ້ງລະ

ຫວ່າງຊົນຊັ້ນກຳມະກອນກັບຊົນຊັ້ນຊາວນາໃນສັງຄົມສັງຄົມນິຍົມ ຕ້ອງແກ້ໄຂດ້ວຍວິທີເຮັດໃຫ້ກະເສດຕະກຳເປັນແບບຮວມໝູ່ແລະກະເສດຕະກຳເປັນແບບໃຊ້ເຄື່ອງຈັກ; ຄວາມຂັດແຍ້ງພາຍໃນພັກກອມມູນິດ ຕ້ອງແກ້ໄຂດ້ວຍວິທີຕຳນິແລະຕຳນິຕົນເອງ; ຄວາມຂັດແຍ້ງລະຫວ່າງສັງຄົມກັບທຳມະຊາດ ຕ້ອງແກ້ໄຂດ້ວຍວິທີຂະຫຽາຍກຳລັງການຜະລິດ. ...ການໃຊ້ວິທີຕ່າງກັນໄປແກ້ໄຂຄວາມຂັດແຍ້ງທີ່ຕ່າງກັນ ແມ່ນຫຼັກການອັນໜຶ່ງທີ່ນັກລັດທິມາກເລນິນຕ້ອງປະຕິບັດຕາມຢ່າງເຄັ່ງຄັດ.

«ວ່າດ້ວຍຄວາມຂັດແຍ້ງ» (ເດືອນ ໘-໑໙໓໗)

ຄວາມຂັດແຍ້ງລະຫວ່າງເຮົາກັບສັດຕູ ແລະ ຄວາມຂັດແຍ້ງພາຍໃນປະຊາຊົນສອງປະເພດນີ້ມີລັກສະນະຕ່າງກັນ, ວິທີແກ້ໄຂກໍ່ຕ່າງກັນ. ເວົ້າງ່າຍໆກໍ່ຄື ອັນກ່ອນນັ້ນແມ່ນບັນຫາແຍກເຮົາກັບສັດຕູໃຫ້ແຈ້ງ, ອັນລຸນນີ້ແມ່ນບັນຫາແຍກຄວາມຖືກກັບຄວາມຜິດໃຫ້ແຈ້ງ. ແນ່ນອນແລ້ວວ່າ ບັນຫາລະຫວ່າງເຮົາກັບສັດຕູນັ້ນກໍ່ແມ່ນບັນຫາຄວາມຖືກກັບຄວາມຜິດຊະນິດໜຶ່ງ. ຕົວ

ຢ່າງຄື ລະຫວ່າງພວກເຮົາກັບພວກປະຕິການຢູ່ພາຍໃນປະເທດ ແລະນອກປະເທດຄືຈັກກະພັດນິຍົມ ລັດທິສັກດີນາແລະລັດທິທຶນອາດຍາສິດເຫຼົ່ານີ້, ມັນແມ່ນໃຜຖືກໃຜຜິດ, ອັນນີ້ກໍ່ແມ່ນບັນຫາຄວາມຖືກກັບຄວາມຜິດຄືກັນ, ແຕ່ວ່າ ມັນແມ່ນບັນຫາຄວາມຖືກກັບຄວາມຜິດອີກປະເພດໜຶ່ງທີ່ມີລັກສະນະຕ່າງກັບບັນຫາພາຍໃນປະຊາຊົນ.

«ບັນຫາກ່ຽວກັບການແກ້ໄຂຄວາມຂັດແຍ້ງພາຍໃນປະຊາຊົນຢ່າງຖືກຕ້ອງ» (ວັນທີ່ ໒໗-໒-໑໙໕໗)

ບັນຫາໃດທີ່ເປັນລັກສະນະແນວຄິດ, ບັນຫາໃດທີ່ເປັນການໂຕ້ຖຽງກັນພາຍໃນປະຊາຊົນແລ້ວ, ມີແຕ່ແກ້ໄຂດ້ວຍວິທີປະຊາທິປະໄຕ, ມີແຕ່ແກ້ໄຂດ້ວຍວິທີອະພິປາຍກັນ ດ້ວຍວິທີຕຳນິກັນ ດ້ວຍວິທີອົບຮົມລຸລິ່ງ, ຈະແກ້ໄຂດ້ວຍວິທີບີບບັງຄັບຫຼືຂົ່ມໃຫ້ຍອມນັ້ນບໍ່ໄດ້.

«ບັນຫາກ່ຽວກັບການແກ້ໄຂຄວາມຂັດແຍ້ງພາຍໃນປະຊາຊົນຢ່າງຖືກຕ້ອງ» (ວັນທີ່ ໒໗-໒-໑໙໕໗)

ເພື່ອດຳເນີນການຜະລິດ ດຳເນີນການຮ່ຳຮຽນໃຫ້ໄດ້ຜົນ ແລະດຳລົງຊີວິດຢ່າງມີລະບຽບ, ປະຊາຊົນໄດ້ຮຽກຮ້ອງລັດຖະບານ ຜູ້ນຳພາການຜະລິດແລະຜູ້ນຳພາຂອງອົງການວັດທະນະທຳການສຶກສາຂອງຕົນໃຫ້ອອກປະກາດຄຳສັ່ງຕ່າງໆຂອງຝ່າຍບໍລິຫານທີ່ເໝາະສົມແລະມີລັກສະນະບັງຄັບ. ຄັນບໍ່ມີຄຳສັ່ງຝ່າຍບໍລິຫານແນວນີ້ແລ້ວ ກໍ່ບໍ່ມີວິທີໃດຈະຮັກສາລະບຽບສັງຄົມໄວ້ໄດ້, ອັນນີ້ແມ່ນຄວາມຮູ້ທຳມະດາທີ່ໃຜໆກໍ່ເຂົ້າໃຈ. ວິທີນີ້ກັບວິທີອົບຮົມລຸລິ່ງເພື່ອແກ້ໄຂຄວາມຂັດແຍ້ງພາຍໃນປະຊາຊົນນັ້ນ ແມ່ນສອງດ້ານທີ່ຈຸງຊູຍູ້ໜູນກັນ. ການອອກຄຳສັ່ງຝ່າຍບໍລິຫານເພື່ອຈຸດປະສົງຮັກສາລະບຽບສັງຄົມນັ້ນ ກໍ່ຕ້ອງໃຊ້ການອົບຮົມລຸລິ່ງໄປພ້ອມ, ອາໄສແຕ່ອອກຄຳສັ່ງຝ່າຍບໍລິຫານຢ່າງດຽວ, ໃນຫຼາຍສະພາບການກໍ່ຈະດຳເນີນໄປບໍ່ໄດ້.

«ບັນຫາກ່ຽວກັບການແກ້ໄຂຄວາມຂັດແຍ້ງພາຍໃນປະຊາຊົນຢ່າງຖືກຕ້ອງ» (ວັນທີ່ ໒໗-໒-໑໙໕໗)

ຊົນຊັ້ນເຈົ້າທຶນແລະຊົນຊັ້ນເຈົ້າທຶນນ້ອຍ, ຄວາມຮູ້ສຶກນຶກຄິດຂອງພວກເຂົາແນວໃດກໍ່ຕ້ອງສ່ອງແສງອອກມາ, ແນວໃດກໍ່ຕ້ອງໃຊ້ວິທີຕ່າງໆສະແດງຕົວພວກເຂົາເອງຢ່າງດື້ດ້ານໃນບັນຫາການເມືອງແລະບັນຫາແນວຄິດ. ຈະໃຫ້ພວກເຂົາບໍ່ສ່ອງແສງແລະບໍ່ສະແດງຕົວນັ້ນ ແມ່ນເປັນໄປບໍ່ໄດ້. ພວກເຮົາບໍ່ຄວນໃຊ້ວິທີກົດຂີ່ມບໍ່ໃຫ້ພວກເຂົາສະແດງຕົວ, ຄວນໃຫ້ພວກເຂົາສະແດງຕົວ, ພ້ອມກັນນັ້ນ ເວລາພວກເຂົາສະແດງຕົວ ກໍ່ຕ້ອງໂຕ້ຖຽງກັບພວກເຂົາ ແລະຕຳນິຢ່າງເໝາະສົມ. ບໍ່ຕ້ອງສົງໄສຫຍັງອີກ, ພວກເຮົາຕ້ອງຕຳນິແນວຄິດອັນຜິດພາດທຸກຢ່າງທຸກແນວ. ການບໍ່ຕຳນິ, ປະປ່ອຍໃຫ້ແນວຄິດອັນຜິດພາດນອງຖ້ວມໄປທົ່ວທິບ, ປະປ່ອຍໃຫ້ມັນໄປຍຶດຄອງຕະຫຼາດຕາມໃຈ, ແນ່ນອນແມ່ນບໍ່ໄດ້. ມີຄວາມຜິດພາດກໍ່ຕ້ອງຕຳນິວິຈານ, ມີຫຍ້າພິດກໍ່ຕ້ອງດຳເນີນການຕໍ່ສູ້. ແຕ່ວ່າ ການຕຳນິນີ້ບໍ່ຄວນເປັນແບບລັດທິຄຳພີ, ບໍ່ຄວນໃຊ້ວິທີອະພິປັດຊະຍາ, ຄວນພະຍາຍາມໃຊ້ວິທີສັດຈະວິພາກ. ຕ້ອງມີການຈຳແນກແບບ

ວິທະຍາສາດ, ຕ້ອງລຸລົ່ງໃຫ້ເຊື່ອຖືໄດ້ຢ່າງເຕັມທີ່.

«ບັນຫາກ່ຽວກັບການແກ້ໄຂຄວາມຂັດແຍ້ງພາຍໃນປະຊາຊົນຢ່າງຖືກຕ້ອງ» (ວັນທີ່ ໒໗-໒-໑໙໕໗)

ສຳລັບຂໍ້ບົກພ່ອງຂອງປະຊາຊົນນັ້ນຕ້ອງຕຳນິ, ...ແຕ່ຕ້ອງຢືນຢູ່ໃນຫຼັກໝັ້ນຂອງປະຊາຊົນຢ່າງແທ້ຈິງ, ໃຊ້ຄວາມເວົ້າອັນເຕັມໄປດ້ວຍຄວາມອົບອຸ່ນທີ່ປົກປັກຮັກສາປະຊາຊົນແລະອົບຮົມປະຊາຊົນ. ຖ້າຫາກຖືສະຫາຍຄືກັບສັດຕູ ກໍ່ແມ່ນເຮັດໃຫ້ຕົນຢືນຢູ່ໃນຫຼັກໝັ້ນຂອງສັດຕູແລ້ວ.

«ຄຳປາໄສໃນທີ່ຊຸມນຸມສົນທະນາສິລະປະວັນນະຄະດີຢູ່ເມືອງຢ່ານອານ» (ເດືອນ ໔-໑໙໔໘)

ຄວາມຂັດແຍ້ງແລະການຕໍ່ສູ້ນັ້ນແມ່ນສິ່ງທົ່ວໄປແລະສິ່ງສຳບູນ, ແຕ່ວ່າ ຍ້ອນລັກສະນະຂອງຄວາມຂັດແຍ້ງຕ່າງກັນ, ວິທີແກ້ໄຂຄວາມຂັດແຍ້ງ ຄືຮູບການຕໍ່ສູ້ຍ່ອມຕ່າງກັນ. ມີຄວາມຂັດແຍ້ງບາງຢ່າງມີລັກສະນະປະຕິປັກຢ່າງເປີດເຜີຍ, ມີຄວາມ

ຂັດແຍ້ງບາງຢ່າງຊ້ຳບໍ່ເປັນແນວນີ້. ຕາມການຂະຫຽາຍຕົວຕົວຈິງຂອງວັດຖຸເຫດການ, ມີຄວາມຂັດແຍ້ງບາງຢ່າງຊຶ່ງຫົວທີຍັງເປັນລັກສະນະບໍ່ປະຕິປັກ ແລ້ວໄດ້ຂະຫຽາຍກາຍເປັນລັກສະນະປະຕິປັກ; ແລະກໍ່ມີຄວາມຂັດແຍ້ງບາງຢ່າງຊຶ່ງຫົວທີເປັນລັກສະນະປະຕິປັກ ແລ້ວໄດ້ຂະຫຽາຍກາຍເປັນລັກສະນະບໍ່ປະຕິປັກ.

«ວ່າດ້ວຍຄວາມຂັດແຍ້ງ» (ເດືອນ ໘-໑໙໓໗)

ໃນສະພາບການທົ່ວໄປ, ຄວາມຂັດແຍ້ງພາຍໃນປະຊາຊົນບໍ່ແມ່ນລັກສະນະປະຕິປັກ. ແຕ່ວ່າ ຖ້າແກ້ໄຂບໍ່ເໝາະສົມຫຼືຂາດຄວາມລະມັດລະວັງ ມຶນຊາເຜີຕົວ ກໍ່ອາດຈະເກີດເປັນປະຕິປັກ. ໃນປະເທດສັງຄົມນິຍົມ, ຕາມທຳມະດາແລ້ວ ສະພາບການແນວນີ້ພຽງແຕ່ແມ່ນປາກົດການສະເພາະສ່ວນແລະຊົ່ວຄາວທໍ່ນັ້ນ. ອັນນີ້ກໍ່ເພາະວ່າ ປະເທດສັງຄົມນິຍົມໄດ້ລົບລ້າງລະບອບຄົນຂູດຮີດຄົນແລ້ວ ແລະຜົນປະໂຫຽດຂອງປະຊາຊົນ

ໄດ້ເປັນອັນໜຶ່ງອັນດຽວກັນໃນຂັ້ນຕົ້ນຕໍ.

«ບັນຫາກ່ຽວກັບການແກ້ໄຂຄວາມຂັດແຍ້ງພາຍໃນປະຊາຊົນຢ່າງຖືກຕ້ອງ» (ວັນທີ່ ໒໗-໒-໑໙໕໗)

ໃນປະເທດຂອງພວກເຮົາ, ຄວາມຂັດແຍ້ງລະຫວ່າງຊົນຊັ້ນກຳມະກອນກັບຊົນຊັ້ນເຈົ້າທຶນຊາດ ແມ່ນຄວາມຂັດແຍ້ງພາຍໃນປະຊາຊົນ. ການຕໍ່ສູ້ຊົນຊັ້ນລະຫວ່າງຊົນຊັ້ນກຳມະກອນກັບຊົນຊັ້ນເຈົ້າທຶນຊາດ ເວົ້າທົ່ວໄປແລ້ວແມ່ນການຕໍ່ສູ້ຊົນຊັ້ນພາຍໃນປະຊາຊົນ, ອັນນີ້ ກໍ່ເພາະວ່າຊົນຊັ້ນເຈົ້າທຶນຊາດຂອງປະເທດເຮົາມີລັກສະນະສອງດ້ານ. ໃນສະໄໝປະຕິວັດປະຊາທິປະໄຕຊົນຊັ້ນເຈົ້າທຶນ, ຊົນຊັ້ນນີ້ມີທັງດ້ານລັກສະນະປະຕິວັດແລະມີທັງດ້ານລັກສະນະປະນີປະນອມ. ໃນສະໄໝປະຕິວັດສັງຄົມນິຍົມ, ຊົນຊັ້ນນີ້ມີທັງດ້ານຂູດຮີດຊົນຊັ້ນກຳມະກອນເພື່ອຫາຜົນກຳໄລແລະມີທັງດ້ານສະໜັບສະໜູນລັດຖະທຳມະນູນ ຍອມຮັບການດັດແປງເປັນແບບສັງຄົມນິຍົມ. ຊົນຊັ້ນເຈົ້າທຶນຊາດຕ່າງກັບຈັກກະພັດນິຍົມ ຊົນຊັ້ນເຈົ້າທີ່ດິນແລະຊົນຊັ້ນເຈົ້າທຶນ

ອາດຍາສິດ. ລະຫວ່າງຊົນຊັ້ນກຳມະກອນກັບຊົນຊັ້ນເຈົ້າທຶນຊາດມີຄວາມຂັດແຍ້ງລະຫວ່າງການຂູດຮີດ ກັບ ການຖືກຂູດຮີດ ຊຶ່ງທີ່ຈິງແລ້ວມັນແມ່ນຄວາມຂັດແຍ້ງທີ່ເປັນລັກສະນະປະຕິປັກ. ແຕ່ໃນເງື່ອນໄຂຕົວຈິງຂອງປະເທດເຮົາ, ຖ້າຫາກແກ້ໄຂຄວາມຂັດແຍ້ງທີ່ມີລັກສະນະປະຕິປັກກັນລະຫວ່າງສອງຊົນຊັ້ນນີ້ໃຫ້ເໝາະສົມ ກໍ່ສາມາດຈະຜັນປ່ຽນເປັນຄວາມຂັດແຍ້ງທີ່ເປັນລັກສະນະບໍ່ປະຕິປັກ ແລະສາມາດແກ້ໄຂຄວາມຂັດແຍ້ງນີ້ດ້ວຍສັນຕິວິທີໄດ້. ຖ້າພວກເຮົາຫາກແກ້ໄຂບໍ່ເໝາະສົມ, ບໍ່ແມ່ນໃຊ້ນະໂຍບາຍສາມັກຄີຕຳນິອົບຮົມຕໍ່ຊົນຊັ້ນເຈົ້າທຶນຊາດ ຫຼືວ່າຊົນຊັ້ນເຈົ້າທຶນຊາດບໍ່ຮັບນະໂຍບາຍອັນນີ້ຂອງພວກເຮົາແລ້ວ, ຄວາມຂັດແຍ້ງລະຫວ່າງຊົນຊັ້ນກຳມະກອນ ກັບ ຊົນຊັ້ນເຈົ້າທຶນຊາດກໍ່ຈະກາຍເປັນຄວາມຂັດແຍ້ງລະຫວ່າງເຮົາກັບສັດຕູ.

«ບັນຫາກ່ຽວກັບການແກ້ໄຂຄວາມຂັດແຍ້ງພາຍໃນປະຊາຊົນຢ່າງຖືກຕ້ອງ» (ວັນທີ່ ໒໗-໒-໑໙໕໗)

ພວກປະຕິການໃນປະເທດສັງຄົມນິຍົມ ໄດ້ສົມຮູ້ຮ່ວມຄິດກັບພວກຈັກກະພັດນິຍົມ, ສວຍໃຊ້ຄວາມຂັດແຍ້ງພາຍໃນປະຊາຊົນ, ຍຸແຫຍ່ແບ່ງແຍກ, ກໍ່ຄວາມປັ່ນປ່ວນຂຶ້ນ, ຜົປອງຈະເຮັດໃຫ້ກົນອຸບາຍຂອງພວກມັນປາກົດເປັນຈິງຂຶ້ນ. ບົດຮຽນຈາກກໍລະນີຮຸງກາລີນັ້ນ ສົມຄວນໃຫ້ທຸກຄົນເອົາໃຈໃສ່.

«ບັນຫາກ່ຽວກັບການແກ້ໄຂຄວາມຂັດແຍ້ງພາຍໃນປະຊາຊົນຢ່າງຖືກຕ້ອງ» (ວັນທີ່ ໒໗-໒-໑໙໕໗)

໕. ສົງຄາມກັບສັນຕິພາບ

ສົງຄາມ — ຮູບການຕໍ່ສູ້ສູງສຸດຊະນິດໜຶ່ງທີ່ເລີ່ມເກີດຂຶ້ນຕັ້ງແຕ່ມີຊັບສິນບັດສ່ວນຕົວແລະມີຊົນຊັ້ນ, ໃຊ້ເພື່ອແກ້ໄຂຄວາມຂັດແຍ້ງທີ່ຂະຫຍາຍຕົວຮອດຂັ້ນໃດຂັ້ນໜຶ່ງລະຫວ່າງຊົນຊັ້ນກັບຊົນຊັ້ນ ລະຫວ່າງຊົນຊາດກັບຊົນຊາດ ລະຫວ່າງປະເທດກັບປະເທດແລະລະຫວ່າງກຸ່ມການເມືອງກັບກຸ່ມການເມືອງ.

«ບັນ ຫາ ຍຸດ ທະ ສາດ ຂອງ ສົງ ຄາມ ປະ ຕິວັດ ຈີນ»
(ເດືອນ ໑໒-໑໙໓໖)

“ສົງຄາມແມ່ນການສືບຕໍ່ຂອງການເມືອງ”, ເວົ້າຕາມຈຸດນີ້, ສົງຄາມກໍ່ແມ່ນການເມືອງ, ໂຕສົງຄາມເອງກໍ່ແມ່ນການກະທຳທີ່ມີລັກສະນະການເມືອງ, ແຕ່ບູຮານມາ ບໍ່ມີສົງຄາມໃດທີ່ບໍ່ມີລັກສະນະການເມືອງ. ...

ແຕ່ວ່າ ສົງຄາມມີລັກສະນະພິເສດຂອງມັນເອງ, ເວົ້າຕາມຈຸດນີ້, ສົງຄາມບໍ່ແມ່ນທໍ່ກັບການເມືອງທົ່ວໄປ. “ສົງຄາມແມ່ນການສືບຕໍ່ຂອງການເມືອງດ້ວຍວິທີການພິເສດ”. ເມື່ອການເມືອງໄດ້ຂະຫຍາຍຮອດຂັ້ນໃດຂັ້ນໜຶ່ງ ບໍ່ອາດຈະກ້າວໄປໜ້າຄືເກົ່າໄດ້ອີກແລ້ວ, ສົງຄາມກໍ່ລະເບີດຂຶ້ນເພື່ອກວາດລ້າງອຸປະສັກເທິງເສັ້ນທາງການເມືອງ. ...ເມື່ອອຸປະສັກຖືກກວາດລ້າງແລ້ວ, ຈຸດປະສົງການເມືອງໄດ້ບັນລຸແລ້ວ, ສົງຄາມກໍ່ສິ້ນສຸດລົງ. ຄັນອຸປະສັກກວາດລ້າງບໍ່ກ້ຽງ, ສົງຄາມກໍ່ຍັງຈະດຳເນີນຕໍ່ໄປເພື່ອໄປເຖິງຈຸດເປົ້າໝາຍ. ...ດັ່ງນັ້ນ ຈຶ່ງເວົ້າໄດ້ວ່າ ການເມືອງແມ່ນສົງຄາມທີ່ບໍ່ນອງເລືອດ, ສົງຄາມແມ່ນການເມືອງທີ່ນອງເລືອດ.

«ວ່າດ້ວຍສົງຄາມຍືດເຍື້ອຍາວນານ» (ເດືອນ ໕-໑໙໓໘)

ສົງຄາມໃນປະວັດສາດແບ່ງອອກເປັນສອງປະເພດ, ປະເພດໜຶ່ງແມ່ນສົງຄາມເປັນທຳ, ອີກປະເພດໜຶ່ງແມ່ນສົງຄາມອະທຳ. ສົງຄາມທີ່ກ້າວໜ້າທັງໝົດລ້ວນແຕ່ເປັນທຳ, ສົງຄາມທີ່ຂັດຂວາງຄວາມກ້າວໜ້າທັງໝົດລ້ວນແຕ່ອະທຳ. ຊາວພັກກອມມູນິດພວກເຮົາຄັດຄ້ານສົງຄາມທີ່ຂັດຂວາງຄວາມກ້າວໜ້າແລະອະທຳທັງໝົດ, ແຕ່ບໍ່ຄັດຄ້ານສົງຄາມທີ່ກ້າວໜ້າແລະເປັນທຳ. ສຳລັບສົງຄາມປະເພດລຸນ, ຊາວພັກກອມມູນິດພວກເຮົາບໍ່ພຽງແຕ່ບໍ່ຄັດຄ້ານ, ຍັງເຂົ້າຮ່ວມຢ່າງຫ້າວຫັນຊ້ຳ. ສ່ວນສົງຄາມປະເພດກ່ອນ, ຕົວຢ່າງຄື ສົງຄາມໂລກເທື່ອທີໜຶ່ງ, ທັງສອງຝ່າຍລ້ວນແຕ່ສູ້ລົບເພື່ອຜົນປະໂຫຽດຂອງຈັກກະພັດນິຍົມ, ດັ່ງນັ້ນ ຊາວພັກກອມມູນິດທົ່ວໂລກຈຶ່ງຄັດຄ້ານສົງຄາມເທື່ອນັ້ນຢ່າງເດັດດ່ຽວ. ວິທີຄັດຄ້ານນັ້ນ ຄື ກ່ອນສົງຄາມຈະລະເບີດຂຶ້ນ, ຕ້ອງອອກແຮງກັ້ນກາງຈົນສຸດຂີດບໍ່ໃຫ້ມັນລະເບີດຂຶ້ນ; ເມື່ອສົງຄາມລະເບີດຂຶ້ນແລ້ວ, ທະແນນແຕ່ມີຄວາມອາດສາມາດ ກໍ່ໃຊ້ສົງຄາມຄັດຄ້ານສົງຄາມ, ໃຊ້ສົງຄາມເປັນ

ທຳຄັດຄ້ານສົງຄາມອະທຳ.

«ວ່າດ້ວຍສົງຄາມຍືດເຍື້ອຍາວນານ» (ເດືອນ ໕-໑໙໓໘)

ໃນສັງຄົມຈີນນັ້ນ, ການປະຕິວັດແລະສົງຄາມປະຕິວັດເປັນສິ່ງຫຼີກເວັ້ນບໍ່ໄດ້, ບໍ່ມີສິ່ງເຫຼົ່ານີ້ ກໍ່ຈະບໍ່ສາມາດເຮັດໃຫ້ການກ້າວກະໂດດຂອງການຂະຫຍາຍຕົວຂອງສັງຄົມສຳເລັດໄດ້ ແລະຈະບໍ່ສາມາດໂຄ່ນລົ້ມຈີນຊັ້ນປົກຄອງປະຕິການ ແລ້ວເຮັດໃຫ້ປະຊາຊົນຍຶດອຳນາດການປົກຄອງໄດ້.

«ວ່າດ້ວຍຄວາມຂັດແຍ້ງ» (ເດືອນ ໘-໑໙໓໗)

ສົງຄາມປະຕິວັດແມ່ນຢາຕ້ານພິດຊະນິດໜຶ່ງ, ມັນບໍ່ພຽງແຕ່ຈະກຳຈັດພິດຮ້າຍຂອງສັດຕູທີ່ນັ້ນ, ແຕ່ຍັງຈະລ້າງຄວາມເປື້ອນເປິຂອງຕົນເອງອີກ. ສົງຄາມໃດທີ່ເປັນທຳແລະປະຕິວັດ, ກຳລັງຂອງມັນແມ່ນໃຫຍ່ຫຼວງທີ່ສຸດ, ມັນສາມາດດັດແປງວັດຖຸເຫດການຢ່າງຫຼວງຫຼາຍຫຼືໄຂທາງໃຫ້ແກ່ການດັດແປງວັດຖຸເຫດການ. ສົງຄາມລະຫວ່າງຈີນກັບຍີ່ປຸ່ນຈະດັດແປງປະເທດຈີນ

ແລະຍີ່ປຸ່ນສອງປະເທດ; ທະແນນແຕ່ປະເທດຈີນຍຶດໝັ້ນສົງຄາມຕໍ່ຕ້ານແລະຍຶດໝັ້ນແນວໂຮມແລ້ວ ກໍ່ຈະສາມາດເຮັດໃຫ້ຍີ່ປຸ່ນເກົ່າກາຍເປັນຍີ່ປຸ່ນໃໝ່ ແລະເຮັດໃຫ້ປະເທດຈີນເກົ່າກາຍເປັນປະເທດຈີນໃໝ່ໄດ້ຢ່າງແນ່ນອນ, ຄົນແລະວັດຖຸຂອງປະເທດຈີນແລະຂອງຍີ່ປຸ່ນສອງປະເທດ ລ້ວນແຕ່ຈະໄດ້ຮັບການດັດແປງໃນສົງຄາມແລະຫຼັງສົງຄາມເທື່ອນີ້.

«ວ່າດ້ວຍສົງຄາມຍືດເຍື້ອຍາວນານ» (ເດືອນ ໕-໑໙໓໘)

ສະມາຊິກພັກກອມມູນິດທຸກຄົນ ຄວນເຂົ້າໃຈສັດຈະທຳຂໍ້ນີ້: "ປືນພາໃຫ້ເກີດອຳນາດການປົກຄອງ".

«ບັນຫາສົງຄາມແລະຍຸດທະສາດ» (ວັນທີ່ ໗-໑໑-໑໙໓໘)

ໜ້າທີ່ໃຈກາງແລະຮູບການສູງສຸດຂອງການປະຕິວັດແມ່ນຍຶດອຳນາດການປົກຄອງດ້ວຍກຳລັງອາວຸດ, ແມ່ນແກ້ໄຂບັນຫາດ້ວຍສົງຄາມ. ຫຼັກການປະຕິວັດຂອງລັດທິມາກເລນິນອັນນີ້ແມ່ນຖືກຕ້ອງທົ່ວໄປ, ບໍ່ວ່າໃນປະເທດຈີນຫຼືໃນຕ່າງປະເທດ ລ້ວນແຕ່ຖືກຕ້ອງໝົດ.

«ບັນຫາສົງຄາມແລະຍຸດທະສາດ» (ວັນທີ່ ໗-໑໑-໑໙໓໘)

ໃນປະເທດຈີນ, ຄັນພົ້ນຈາກການຕໍ່ສູ້ດ້ວຍກຳລັງອາວຸດແລ້ວ ກໍ່ບໍ່ມີຖານະຂອງຊົນຊັ້ນກຳມາຊີບ, ກໍ່ບໍ່ມີຖານະຂອງປະຊາຊົນ, ກໍ່ບໍ່ມີຖານະຂອງພັກກອມມູນິດ, ກໍ່ບໍ່ມີໄຊຊະນະຂອງການປະຕິວັດ. ການຂະຫຍາຍຕົວ ການສ້າງຄວາມໝັ້ນຄົງແລະການເປັນແບບບອນເຊວິກຂອງພັກເຮົາໃນ ໑໘ ປີມານີ້ ໄດ້ດຳເນີນໃນສົງຄາມປະຕິວັດນັ້ນເອງ, ບໍ່ມີການຕໍ່ສູ້ດ້ວຍກຳລັງອາວຸດ ກໍ່ບໍ່ທ່ອນຈະມີພັກກອມມູນິດຄືຢູ່ມື້ນີ້. ບັນດາສະຫາຍທົ່ວທັງພັກຢ່າລືມບົດຮຽນທີ່ແລກມາດ້ວຍເລືອດນີ້.

«ບົດຖະແຫຼງສະບັບປະຖົມຂອງວາລະສານ "ຊາວພັກກອມມູນິດ"» (ວັນທີ່ ໔-໑໐-໑໙໓໙)

ເມື່ອເບິ່ງຕາມທັດສະນະຂອງລັດທິມາກກ່ຽວກັບທິດສະດີວ່າດ້ວຍລັດ, ກອງທັບແມ່ນສ່ວນປະກອບສຳຄັນຂອງອຳນາດການປົກຄອງຂອງລັດ. ຜູ້ໃດຢາກຍຶດອຳນາດການປົກຄອງຂອງລັດແລະຢາກຮັກສາມັນໄວ້ ຜູ້ນັ້ນກໍ່ຕ້ອງມີກອງທັບອັນໃຫຍ່ໂຕເຂັ້ມແຂງ. ມີຄົນຫົວຂວັນພວກເຮົາວ່າເປັນພວກຖື"ທິດສະດີສົງຄາມເປັນແກ້ວສາລະພັດນຶກ", ຖືກແລ້ວ, ພວກເຮົາເປັນຜູ້ຖືທິດສະດີສົງຄາມປະຕິວັດເປັນແກ້ວສາລະພັດນຶກ, ອັນນີ້ບໍ່ແມ່ນເລື່ອງບໍ່ດີ ແມ່ນເລື່ອງດີ ແມ່ນລັດທິມາກ. ປືນຂອງພັກກອມມູນິດລຸດຊີໄດ້ສ້າງປະເທດສັງຄົມນິຍົມຂຶ້ນປະເທດໜຶ່ງ. ພວກເຮົາຈະສ້າງສາທາລະນະລັດປະຊາທິປະໄຕຂຶ້ນປະເທດໜຶ່ງ. ບົດຮຽນຂອງການຕໍ່ສູ້ຊົນຊັ້ນໃນສະໄໝຈັກກະພັດນິຍົມໄດ້ບອກໃຫ້ພວກເຮົາຮູ້ວ່າ ມີແຕ່ໃຊ້ກຳລັງປືນເທົ່ານັ້ນ, ຊົນຊັ້ນກຳມະກອນແລະມວນຊົນຜູ້ອອກແຮງງານຈຶ່ງສາມາດເອົາຊະນະຊົນຊັ້ນເຈົ້າທຶນແລະເຈົ້າທີ່ດິນທີ່ປະກອບອາວຸດໄດ້; ຕາມຄວາມໝາຍດັ່ງກ່າວ, ພວກເຮົາສາມາດເວົ້າໄດ້ວ່າ ມີແຕ່ໃຊ້ປືນເທົ່ານັ້ນ

ຈຶ່ງສາມາດດັດແປງທົ່ວທັງໂລກໄດ້.

«ບັນຫາສົງຄາມແລະຍຸດທະສາດ» (ວັນທີ່ ໖-໑໑-໑໙໓໘)

ພວກເຮົາເປັນຜູ້ຖືທິດສະດີວ່າດ້ວຍການດັບສູນສົງຄາມ, ພວກເຮົາບໍ່ຕ້ອງການສົງຄາມ; ແຕ່ວ່າ ມີແຕ່ຜ່ານສົງຄາມຈຶ່ງສາມາດດັບສູນສົງຄາມໄດ້, ບໍ່ຕ້ອງການປືນກໍ່ຕ້ອງຈັບປືນຂຶ້ນ.

«ບັນຫາສົງຄາມແລະຍຸດທະສາດ» (ວັນທີ່ ໖-໑໑-໑໙໓໘)

ສົງຄາມ — ອະສຸລະກາຍທີ່ໝູ່ມະນຸດຂ້າຟັນລັນແທງກັນໂຕນີ້, ໃນທີ່ສຸດ, ການຂະຫຍາຍໂຕຂອງສັງຄົມມະນຸດຕ້ອງດັບສູນມັນແລະຈະດັບສູນມັນໃນອະນາຄົດບໍ່ເຫິງນີ້. ແຕ່ວ່າ ວິທີດັບສູນມັນນັ້ນມີແຕ່ວິທີດຽວ ຄືໃຊ້ສົງຄາມຄັດຄ້ານສົງຄາມ, ໃຊ້ສົງຄາມປະຕິວັດຄັດຄ້ານສົງຄາມຕ້ານປະຕິວັດ, ໃຊ້ສົງຄາມປະຕິວັດຊາດຄັດຄ້ານສົງຄາມຕ້ານປະຕິວັດຊາດ, ໃຊ້ສົງຄາມປະຕິວັດ

ຈີນນັ້ນຄັດຄ້ານສົງຄາມຕ້ານປະຕິວັດຈີນນັ້ນ. ...ເມື່ອສັງຄົມມະນຸດກ້າວໜ້າຮອດຂັ້ນດັບສູນຈີນນັ້ນ, ດັບສູນລັດແລ້ວ, ເວລານັ້ນກໍ່ຈະບໍ່ມີສົງຄາມອັນໃດພໍດ, ສົງຄາມຕ້ານປະຕິວັດບໍ່ມີແລ້ວ ສົງຄາມປະຕິວັດກໍ່ບໍ່ມີ, ສົງຄາມອະທຳບໍ່ມີແລ້ວ ສົງຄາມເປັນທຳກໍ່ບໍ່ມີ, ອັນນີ້ກໍ່ແມ່ນຍຸກສັນຕິພາບຖາວອນຂອງມະນຸດນັ້ນເອງ.

ການທີ່ພວກເຮົາຄົ້ນຄວ້າກົດເກນຂອງສົງຄາມປະຕິວັດນັ້ນແມ່ນເລີ່ມຈາກຄວາມປາຖະໜາຂອງພວກເຮົາທີ່ຮຽກຮ້ອງໃຫ້ດັບສູນສົງຄາມທຸກປະເພດ, ອັນນີ້ແມ່ນເສັ້ນຂັ້ນແດນລະຫວ່າງຊາວພັກກອມມູນິດພວກເຮົາກັບຈີນນັ້ນຂູດຮີດທັງປວງ.

«ບັນ ຫາ ຍຸດ ທະ ສາດ ຂອງ ສົງ ຄາມ ປະ ຕິ ວັດ ຈີນ»

(ເດືອນ ໑໔-໑໙໖໗)

ປະເທດເຮົາ ແລະ ບັນດາປະເທດສັງຄົມນິຍົມລ້ວນແຕ່ຕ້ອງການສັນຕິພາບ, ປະຊາຊົນປະເທດຕ່າງໆໃນໂລກກໍ່ລ້ວນແຕ່ຕ້ອງການສັນຕິພາບຄືກັນ. ຜູ້ທີ່ກະຫາຍສົງຄາມແລະບໍ່ຕ້ອງການສັນຕິພາບນັ້ນ ພຽງແຕ່ແມ່ນກຸ່ມເຈົ້າທຶນຜູກຂາດທີ່ອາໄສການ

ລຸກລານເພື່ອລາບລວຍບາງກຸ່ມໃນປະເທດຈັກກະພັດນິຍົມສ່ວນໜ້ອຍນັ້ນ.

«ຄຳປາໄສເປີດກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດເທື່ອທີ່ ໘ ຂອງພັກກອມມູນິດຈີນ» (ວັນທີ່ ໑໕-໙-໑໙໕໗)

ເພື່ອຍາດແຍ່ງໃຫ້ໂລກມີສັນຕິພາບຖາວອນ, ພວກເຮົາຕ້ອງຂະຫຍາຍການຮ່ວມມືກັນຖານມິດ ກັບ ບັນດາປະເທດອ້າຍນ້ອງໃນຄ້າຍສັງຄົມນິຍົມຕື່ມອີກກ້າວໜຶ່ງ, ພ້ອມທັງເພີ່ມທະວີຄວາມສາມັກຄີກັບປະເທດທີ່ຮັກຫອມສັນຕິພາບທັງໝົດ. ພວກເຮົາຕ້ອງພະຍາຍາມສ້າງສາຍສຳພັນທາງການທູດອັນເປັນປົກກະຕິກັບປະເທດທັງໝົດທີ່ຍິນດີຢູ່ຮ່ວມກັນໂດຍສັນຕິກັບພວກເຮົາເທິງພື້ນຖານຕ່າງເຄົາລົບຜືນແຜ່ນດິນອັນຄົບຖ້ວນ ອຳນາດອະທິປະໄຕຂອງກັນ ແລະ ສະເໝີພາບຕ່າງຝ່າຍຕ່າງມີຜົນ. ພວກເຮົາຕ້ອງໃຫ້ຄວາມສະໜັບສະໜູນຢ່າງຂະຫຍັນຫ້າວຫັນແກ່ຂະບວນເຄື່ອນໄຫວເອກະລາດປົດປ່ອຍຊາດ ຂອງບັນດາປະເທດ

ໃນທະວີບອາຊີ ອາຟະລິກາແລະອາເມລິກາລາຕິນ, ພ້ອມທັງຂະບວນເຄື່ອນໄຫວສັນຕິພາບແລະການຕໍ່ສູ້ອັນເປັນທຳຂອງທຸກປະເທດໃນໂລກ.

«ຄຳປາໄສເປີດກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດເທື່ອທີ່ ៥ ຂອງພັກກອມມູນິດຈີນ» (ວັນທີ ໑໕-໗-໑໙៥໗)

ສ່ວນປະເທດຈັກກະພັດນິຍົມ, ພວກເຮົາກໍ່ຕ້ອງສາມັກຄີກັບປະຊາຊົນໃນປະເທດເຫຼົ່ານັ້ນ, ພ້ອມທັງພະຍາຍາມຢູ່ຮ່ວມກັນໂດຍສັນຕິ ແລະຄ້າຂາຍບາງເລັກນ້ອຍກັບປະເທດເຫຼົ່ານັ້ນ, ກັນກາງສົງຄາມທີ່ອາດຈະເກີດຂຶ້ນ, ແຕ່ວ່າ ບໍ່ຄວນມີຄວາມຄິດທີ່ບໍ່ຕິດແທດຄວາມຈິງຢ່າງໃດຢ່າງໜຶ່ງຕໍ່ພວກມັນຢ່າງເດັດຂາດ.

«ບັນຫາກ່ຽວກັບການແກ້ໄຂຄວາມຂັດແຍ້ງພາຍໃນປະຊາຊົນຢ່າງຖືກຕ້ອງ» (ວັນທີ ໒໗-໒-໑໙៥໗)

ພວກເຮົາປາຖະໜາສັນຕິພາບ. ແຕ່ວ່າ ຖ້າຈັກກະພັດນິຍົມຫາກດື້ດ້ານຈະເຮັດສົງຄາມແລ້ວ, ພວກເຮົາກໍ່ຈຳເປັນຕ້ອງຕັດສິນໃຈ, ລົບເສິກແລ້ວຈຶ່ງສ້າງສາໃໝ່. ນີ້ໃດກໍ່ຢ້ານສົງຄາມ, ເມື່ອສົງຄາມມາຮອດແລ້ວ ເຈົ້າຈະມີວິທີໃດ? ເຮົາໄດ້ເວົ້າມາກ່ອນແລ້ວວ່າ ລົມຕາເວັນອອກພັດຖົມລົມຕາເວັນຕົກ, ສົງຄາມບໍ່ເກີດຂຶ້ນໄດ້, ບັດນີ້ ເຮົາໄດ້ອະທິບາຍໃຫ້ແຈ້ງຕື່ມອີກຄືດັ່ງກ່າວກ່ຽວກັບກໍລະນີຖ້າສົງຄາມເກີດຂຶ້ນ, ເມື່ອເປັນແນວນັ້ນ ກໍ່ແມ່ນໄດ້ຄາດຄະເນເຖິງຄວາມອາດຈະເປັນໄປໄດ້ທັງສອງຢ່າງໄວ້ແລ້ວ.

ຄຳປາໄສໃນກອງປະຊຸມພັກກອມມູນິດ ແລະ ພັກກຳມະກອນປະເທດຕ່າງໆຢູ່ໂມສະກູ (ວັນທີ ໑៨-໑໑-໑໙៥໗)

ປັດຈຸບັນນີ້ ຄົນທັງຫຼາຍໃນປະເທດຕ່າງໆທົ່ວໂລກພວມໂຈທະນາກັນວ່າ ສົງຄາມໂລກເທື່ອທີສາມຈະເກີດຂຶ້ນຫຼືບໍ່. ສຳລັບບັນຫານີ້ ພວກເຮົາກໍ່ຕ້ອງມີການກຽມທາງຈິດໃຈແລະຕ້ອງມີການຈຳແນກ. ພວກເຮົາຢຶດໝັ້ນສັນຕິພາບ ຄັດຄ້ານສົງຄາມ. ແຕ່ວ່າ ຖ້າຈັກກະພັດນິຍົມຈະກໍ່ສົງຄາມແທ້ແລ້ວ, ພວກເຮົາກໍ່

ບໍ່ຕ້ອງຢ້ານ. ທ່າທີຂອງພວກເຮົາທີ່ມີຕໍ່ບັນຫານີ້ກໍ່ຄືດຽວກັບທ່າທີທີ່ມີຕໍ່ "ຄວາມວຸ່ນວາຍ" ທຸກຢ່າງຄື ໑.ຄັດຄ້ານ; ໒.ບໍ່ຢ້ານ. ພາຍຫຼັງສົງຄາມໂລກເທື່ອທີໜຶ່ງ ໄດ້ເກີດມີສະຫະພາບໂຊວຽດຊຶ່ງມີພົນລະເມືອງ ໒໐໐ ລ້ານຄົນ. ພາຍຫຼັງສົງຄາມໂລກເທື່ອທີສອງ ໄດ້ເກີດມີຄ້າຍສັງຄົມນິຍົມຊຶ່ງຮວມມີພົນລະເມືອງ ໗໐໐ ລ້ານຄົນ. ຖ້າພວກຈັກກະພັດນິຍົມຈະກໍ່ສົງຄາມໂລກເທື່ອທີສາມຂຶ້ນແທ້ແລ້ວ, ກໍ່ເວົ້າເດັດຂາດໄດ້ວ່າ ຜົນສຸດທ້າຍຂອງມັນກໍ່ຈະມີພົນລະເມືອງຫຼາຍຮ້ອຍລ້ານຄົນອີກຫັນມາທາງຝ່າຍສັງຄົມນິຍົມຢ່າງແນ່ນອນ, ອານາບໍລິເວນຂອງຈັກກະພັດນິຍົມກໍ່ເຫຼືອບໍ່ເທົ່າໃດແລ້ວ, ບາງເທື່ອລະບອບຈັກກະພັດນິຍົມທັງລະບອບກໍ່ອາດຈະພັງທະລາຍໝົດ.

«ບັນຫາກ່ຽວກັບການແກ້ໄຂຄວາມຂັດແຍ້ງພາຍໃນປະຊາຊົນຢ່າງຖືກຕ້ອງ» (ວັນທີ່ ໒໗-໒-໑໙໕໗)

ກໍ່ກວນ, ເສຍໄຊ, ກໍ່ກວນອີກ, ເສຍໄຊອີກ ຈົນວ່າດັບສູນ — ອັນນີ້ແມ່ນໂລຊິກຂອງຈັກກະພັດນິຍົມ ແລະ ພວກປະຕິການທັງໝົດໃນໂລກທີ່ໃຊ້ຕໍ່ພາລະກິດຂອງປະຊາຊົນ, ພວກມັນບໍ່ທ່ອນຈະຝ່າຝືນໂລຊິກນີ້ໄດ້ຢ່າງເດັດຂາດ. ອັນນີ້ແມ່ນກົດເກນອັນໜຶ່ງຂອງລັດທິມາກ. ການທີ່ພວກເຮົາເວົ້າວ່າ "ຈັກກະພັດນິຍົມໂຫດຮ້າຍທີ່ສຸດ" ນັ້ນ ໝາຍຄວາມວ່າ ສັນດານຂອງມັນບໍ່ທ່ອນຈະປ່ຽນແປງໄດ້, ພວກຈັກກະພັດນິຍົມບໍ່ຍອມປະວາງເພັດຊະຄາດຢ່າງເດັດຂາດ, ພວກມັນກໍ່ບໍ່ອາດເປັນພະເຈົ້າໄດ້ຢ່າງເດັດຂາດ, ຈົນຮອດທີ່ພວກມັນດັບສູນ.

ຕໍ່ສູ້, ເສຍໄຊ, ຕໍ່ສູ້ອີກ, ເສຍໄຊອີກ, ຕໍ່ສູ້ອີກ ຈົນວ່າຊະນະ — ອັນນີ້ແມ່ນໂລຊິກຂອງປະຊາຊົນ, ພວກເຂົາເຈົ້າກໍ່ບໍ່ທ່ອນຈະຝ່າຝືນໂລຊິກນີ້ໄດ້ຢ່າງເດັດຂາດ. ອັນນີ້ແມ່ນກົດເກນຂອງລັດທິມາກອີກອັນໜຶ່ງ. ການປະຕິວັດຂອງປະຊາຊົນລຸດຊີເຄີຍເປັນໄປຕາມກົດເກນອັນນີ້ມາແລ້ວ, ການປະຕິວັດຂອງປະຊາຊົນຈີນກໍ່ເປັນໄປຕາມກົດເກນອັນນີ້ຄືກັນ.

«ຖິ້ມຄວາມໃຝ່ຝັນ, ກຽມຕົວຕໍ່ສູ້» (ວັນທີ່ ໑໔-໘-໑໙໔໙)

ພວກເຮົາບໍ່ຄວນລະເຫຼີງສະຕິລະວັງຕົວຢ່າງເດັດຂາດຕໍ່ກົນອຸບາຍແກ້ແຄ້ນອັນປ່ວງບ້າ ຂອງພວກຈັກກະພັດນິຍົມແລະຂອງພວກລູກແຫຼ້ງຕີນມືຂອງມັນຍ້ອນວ່າມີໄຊຊະນະ, ຜູ້ໃດຫາກລະເຫຼີງສະຕິລະວັງຕົວຂໍ້ນີ້ແລ້ວ ຜູ້ນັ້ນກໍ່ຈະຖືກປົດອາວຸດທາງການເມືອງ, ແລ້ວເຮັດໃຫ້ຕົນຕົກຢູ່ໃນຖານະທ່າຮັບ.

«ຄຳປາໄສໃນກອງປະຊຸມກຽມການປະຊຸມສະພາປຶກສາການເມືອງໃໝ່» (ວັນທີ່ ໑໕-໖-໑໙໔໙)

ພວກຈັກກະພັດນິຍົມ ແລະ ພວກປະຕິການຈີນລູກແຫຼ້ງຕີນມືຂອງມັນບໍ່ທ້ອນຈະຍອມຕໍ່ການປະລາໄຊຂອງພວກມັນຢູ່ເທິງແຜ່ນດິນຈີນນີ້. ພວກມັນຍັງຈະສົມຮູ້ຮ່ວມຄິດກັນ ໃຊ້ວິທີຕ່າງໆທີ່ສາມາດໃຊ້ໄດ້ມາຄັດຄ້ານປະຊາຊົນຈີນ. ຕົວຢ່າງຄື ຈັດສົ່ງລູກແຫຼ້ງຕີນມືຂອງພວກມັນພົ້ນເຂົ້າມາພາຍໃນປະເທດຈີນດຳເນີນການແບ່ງແຍກແລະກໍ່ກວນ. ອັນນີ້ເປັນສິ່ງແນ່ນອນ, ພວກມັນບໍ່ທ້ອນຈະຫຼົງລືມວຽກງານອັນນີ້ຢ່າງເດັດຂາດ. ຕົວຢ່າງຄື ສ້ຽນສອນພວກປະຕິການຈີນ ຈົນກະທັ້ງໃຊ້ກຳລັງຂອງພວກມັນເອງ

ເຂົ້າຕື່ມ, ປິດລ້ອມທ່າກຳປັ່ນຂອງປະເທດຈີນ. ຖ້າຫາກຍັງມີຄວາມອາດສາມາດແລ້ວ, ພວກມັນກໍ່ຈະເຮັດແນວນີ້. ອີກຢ່າງໜຶ່ງ ຄົນພວກມັນຍັງຄິດຢາກສ່ຽງໄພສົ່ງທະຫານຈຳນວນໜຶ່ງມາລ່ວງລ້ຳແລະກໍ່ກວນຊາຍແດນຂອງປະເທດຈີນ ກໍ່ບໍ່ແນ່ນວ່າຈະເປັນໄປບໍ່ໄດ້. ທັງໝົດນີ້ ພວກເຮົາລ້ວນແຕ່ຕ້ອງຄາດຄະເນໄວ້ຢ່າງເຕັມທີ່.

«ຄຳປາໄສໃນກອງປະຊຸມກຽມການປະຊຸມສະພາປຶກສາການເມືອງໃໝ່» (ວັນທີ່ ໑໕-໖-໑໙໔໙)

ໂລກພວມກ້າວໜ້າ, ອະນາຄົດແມ່ນສະຫວ່າງແຈ້ງ, ແງ່ຂະຫຍາຍທົ່ວໄປຂອງປະວັດສາດນັ້ນ, ຜູ້ໃດກໍ່ປ່ຽນແປງບໍ່ໄດ້. ພວກເຮົາຄວນໂຄສະນາສະພາບການອັນກ້າວໜ້າ ແລະ ອະນາຄົດອັນສະຫວ່າງແຈ້ງຂອງໂລກຕໍ່ປະຊາຊົນຢູ່ສະເໝີ ເພື່ອເຮັດໃຫ້ປະຊາຊົນມີຄວາມເຊື່ອໝັ້ນຕໍ່ໄຊຊະນະ.

« ກ່ຽວກັບການເຈລະຈາທີ່ເມືອງຈຸງກິງ » (ວັນທີ່ ໑໗-໑໐-໑໙໔໕)

ຜູ້ບັນຊາ ແລະ ພົນທະຫານທັງໝົດໃນກອງທັບປົດປ່ອຍປະຊາຊົນຈະຍ່ອນຍານຈິດໃຈສູ້ລົບຂອງຕົນແມ່ນແຕ່ໜ້ອຍດຽວບໍ່ໄດ້ຢ່າງເດັດຂາດ, ແນວຄິດໃດໆທີ່ຍ່ອນຍານຈິດໃຈສູ້ລົບແລະແນວຄິດໃດໆທີ່ປະໝາດສັດຕູລ້ວນແຕ່ຜິດພາດທັງນັ້ນ.

«ຄຳລາຍງານໃນກອງປະຊຸມເຕັມຄະນະເທື່ອທີ່ ໒ ຂອງຄະນະກຳມະການສູນກາງສະໄໝທີ່ ໗ ຂອງພັກກອມມູນິດຈີນ» (ວັນທີ່ ໕-໓-໑໙໔໙)

໖. ຈັກກະພັດນິຍົມ ແລະພວກປະຕິການທັງໝົດ ລ້ວນແຕ່ແມ່ນເສືອເຈ້ຍ

ພວກປະຕິການທັງໝົດລ້ວນແຕ່ແມ່ນເສືອເຈ້ຍ. ອາດຊົງຂອງພວກປະຕິການນັ້ນ ເບິ່ງຄືເປັນຕາຢ້ານ, ແຕ່ທີ່ແທ້ແລ້ວ ກໍ່ບໍ່ມີກຳລັງພິລຶກອັນໃດດອກ. ເມື່ອສັງເກດບັນຫາດ້ວຍທັດສະນະຍາວໄກແລ້ວ, ກຳລັງອັນໃຫຍ່ໂຕເຂັ້ມແຂງແທ້ຈິງນັ້ນ ບໍ່ແມ່ນຢູ່ນຳພວກປະຕິການ, ແມ່ນຢູ່ນຳປະຊາຊົນ.

«ຄຳໃຫ້ສຳພາດແກ່ນາງແອນນາ ຫຼຸຍ ສະຕຼອງ ຜູ້ສື່ຂ່າວອາເມລິກາ» (ເດືອນ ໘-໑໙໔໖)

ຄືກັບວັດຖຸເຫດການທຸກຢ່າງໃນໂລກ ບໍ່ມີອັນໃດທີ່ບໍ່ມີລັກ

ສະນະສອງດ້ານ (ຄືກົດເກນແຫ່ງຄວາມເປັນເອກະພາບຂອງດ້ານກົງກັນຂ້າມ), ຈັກກະພັດນິຍົມແລະພວກປະຕິການທັງໝົດກໍ່ມີລັກສະນະສອງດ້ານ, ພວກມັນເປັນທັງເສືອແທ້ເປັນທັງເສືອເຈ້ຍ. ໃນປະວັດສາດ, ຊົນຊັ້ນເຈົ້າທາດ ຊົນຊັ້ນເຈົ້າທີ່ດິນສັກດີນາແລະຊົນຊັ້ນເຈົ້າທຶນ, ກ່ອນໄດ້ອຳນາດການປົກຄອງແລະໃນໄລຍະໜຶ່ງພາຍຫຼັງໄດ້ອຳນາດການປົກຄອງແລ້ວ, ພວກມັນມີຊີວິດຊີວາພຶດພື້ນ, ແມ່ນຜູ້ປະຕິວັດ, ແມ່ນຜູ້ກ້າວໜ້າ, ແມ່ນເສືອແທ້. ຕໍ່ຈາກນັ້ນໄລຍະໜຶ່ງ, ເນື່ອງຈາກຝ່າຍກົງກັນຂ້າມຂອງພວກມັນ ຄື ຊົນຊັ້ນຂ້າທາດ ຊົນຊັ້ນຊາວນາແລະຊົນຊັ້ນກຳມາຊີບເຕີບໃຫຍ່ຂື້ນເປັນລຳດັບ, ທັງໄດ້ດຳເນີນການຕໍ່ສູ້ກັບພວກມັນນັບມື້ນັບຮຸນແຮງ, ພວກມັນກໍ່ຄ່ອຍໆຫັນປ່ຽນໄປສູ່ດ້ານກົງກັນຂ້າມ, ກາຍເປັນພວກປະຕິການ, ກາຍເປັນຄົນຈຳພວກຫຼ້າຫຼັງ, ກາຍເປັນເສືອເຈ້ຍ, ໃນທີ່ສຸດກໍ່ຖືກປະຊາຊົນໂຄ່ນລົ້ມຫຼືຈະຖືກປະຊາຊົນໂຄ່ນລົ້ມ. ຊົນຊັ້ນທີ່ປະຕິການ ທີ່ຫຼ້າຫຼັງ ທີ່ເປື່ອຍເຍື່ອຍນັ້ນ ເມື່ອຜະເຊີນກັບການຕໍ່ສູ້ຢ່າງເອົາເປັນເອົາຕາຍຂອງປະຊາຊົນແລ້ວ ກໍ່ມີລັກສະນະສອງດ້ານແນວນີ້ຄືກັນ. ດ້ານໜຶ່ງແມ່ນເສືອແທ້, ກິນຄົນ, ກິນຄົນເປັນລ້ານເປັນໂກດ. ພາລະກິດການຕໍ່ສູ້ຂອງປະຊາຊົນຕົກຢູ່ໃນສະໄໝຫຍຸ້ງຍາກລຳບາກ, ປາກົດມີເສັ້ນທາງອັນຄົດງລ້ຽວງເປັນຈຳນວນຫຼວງຫຼາຍ. ເພື່ອທຳລາຍລ້າງການປົກຄອງຂອງຈັກກະພັດນິຍົມ ລັດທິສັກດີນາແລະລັດທິທຶນອາດຍາສິດທີ່ຢູ່ໃນປະເທດຈີນ, ປະຊາຊົນຈີນໄດ້ໃຊ້ເວລາຕັ້ງຮ້ອຍກວ່າປີ, ເສຍຊີວິດຄົນປະມານຕັ້ງຫຼາຍສິບລ້ານ ຈຶ່ງໄດ້ຮັບໄຊຊະນະໃນປີ ໑໙໔໙. ທ່ານເບິ່ງດູ, ອັນນີ້ບໍ່ແມ່ນເສືອເປັນ ເສືອເຫຼັກ ເສືອແທ້ບໍ່? ແຕ່ວ່າໃນທີ່ສຸດ, ພວກມັນກໍ່ໄດ້ຫັນປ່ຽນເປັນເສືອເຈ້ຍ ເສືອຕາຍ ເສືອເຕົ້າຫູ້. ອັນນີ້ແມ່ນເລື່ອງຈິງໃນປະວັດສາດ. ຄົນທັງຫຼາຍບໍ່ແມ່ນໄດ້ເຫັນໄດ້ຍິນເລື່ອງເຫຼົ່ານີ້ແລ້ວຫວາ? ເປັນພັນເປັນໝື່ນ! ເປັນພັນເປັນໝື່ນແທ້ໃດ! ສະນັ້ນ ເມື່ອເບິ່ງດ້ານທາດແທ້, ເບິ່ງດ້ານຍາວນານ, ເບິ່ງດ້ານຍຸດທະສາດ, ຕ້ອງຖືຈັກກະພັດນິຍົມແລະພວກປະຕິການທັງໝົດເປັນເສືອເຈ້ຍຕາມຄວາມຈິງ. ຕ້ອງ

ສ້າງແນວຄິດຍຸດທະສາດຂອງພວກເຮົາຈາກຂໍ້ນີ້. ອີກດ້ານໜຶ່ງ ພວກມັນກໍ່ແມ່ນເສືອເປັນ ເສືອຫຼັກ ເສືອແທ້, ພວກມັນກິນຄົນໄດ້. ຕ້ອງສ້າງແນວຄິດຍຸດໂທບາຍແລະແນວຄິດຍຸດທະວິທີຂອງພວກເຮົາຈາກຂໍ້ນີ້.

ຄຳປາໄສໃນກອງປະຊຸມກົມການເມືອງສູນກາງພັກ
ກອມມູນິດຈີນຢູ່ເມືອງອູ່ຊາງ (ວັນທີ່ ໑-໑໒-໑໙໕໘)

ເຮົາເວົ້າວ່າ ພວກປະຕິການທັງໝົດທີ່ໄດ້ຊື່ວ່າໃຫຽ່ໂຕເຂັ້ມແຂງນັ້ນ ລ້ວນແຕ່ແມ່ນເສືອເຈັ້ຽທໍ່ນັ້ນ. ສາຍເຫດແມ່ນຍ້ອນພວກມັນຫ່າງເຫີນຈາກປະຊາຊົນ. ທ່ານເບິ່ງດູ, ຮິດແລແມ່ນເສືອເຈັ້ຽຫຼືບໍ່? ຮິດແລບໍ່ແມ່ນຖືກໂຄ່ນລົ້ມແລ້ວຫວາ? ເຮົາກໍ່ເຄີຍວ່າພະເຈົ້າຊາແມ່ນເສືອເຈັ້ຽ, ເຈົ້າຊີວິດຈີນແມ່ນເສືອເຈັ້ຽ, ຈັກກະພັດນິຍົມຍີ່ປຸ່ນແມ່ນເສືອເຈັ້ຽ, ທ່ານເບິ່ງດູ, ພວກມັນໄດ້ລົ້ມລົງໝົດແລ້ວ. ຈັກກະພັດນິຍົມອາເມລິກາບໍ່ທັນລົ້ມ, ຍັງມີລູກລະເບີດປະລະມານູ. ເຮົາເຫັນວ່າມັນຕ້ອງລົ້ມແລະກໍ່

ແມ່ນເສືອເຈັ້ຽຄືກັນ.

ຄຳປາໄສໃນກອງປະຊຸມພັກກອມມູນິດ ແລະ ພັກກຳມະກອນປະເທດຕ່າງໆຢູ່ໂມສະກູ (ວັນທີ່ ໑໘-໑໑-໑໙໕໗)

“ຍົກກ້ອນຫີນຂຶ້ນທັບຕີນຕົນເອງ”, ຄວາມນີ້ແມ່ນສຸພາສິດທີ່ຄົນຈີນເອົາມາປຽບທຽບໃສ່ການປະພຶດຂອງຄົນໂງ່ຈ້າບາງຈຳພວກ. ພວກປະຕິການໃນປະເທດຕ່າງໆກໍ່ແມ່ນຄົນໂງ່ຈ້າແນວນີ້ຈຳພວກໜຶ່ງ. ການບີບຄັ້ນທຳຮ້າຍຕ່າງໆທີ່ພວກມັນໄດ້ເຮັດຕໍ່ປະຊາຊົນຜູ້ປະຕິວັດນັ້ນ, ຜົນສຸດທ້າຍ, ມີແຕ່ຊຸກຍູ້ໃຫ້ການປະຕິວັດຂອງປະຊາຊົນແຜ່ຂະຫຽາຍແລະດຸເດືອດຍິ່ງຂຶ້ນທໍ່ນັ້ນ. ການບີບຄັ້ນທຳຮ້າຍຕ່າງໆຂອງພະເຈົ້າຊາແລະຂອງຈຽງໄຄເຊັກທີ່ເຮັດຕໍ່ປະຊາຊົນຜູ້ປະຕິວັດນັ້ນ ບໍ່ແມ່ນໄດ້ມີບົດບາດຊຸກຍູ້ການປະຕິວັດລຸດຊີອັນຍິ່ງໃຫຽ່ແລະການປະຕິວັດຈີນອັນຍິ່ງ

ໃຫຽ່ໃຫ້ກ້າວໜ້າໄປແລ້ວຫວາ?

«ຄຳປາໄສໃນກອງປະຊຸມສະພາໂຊວຽດສູງສຸດແຫ່ງສະຫະພາບໂຊວຽດເພື່ອສະເຫຼີມສະຫຼອງການປະຕິວັດສັງຄົມນິຍົມເດືອນຕຸລາທີ່ຍິ່ງໃຫຽ່ຄົບຮອບ ໔໐ ປີ» (ວັນທີ່ ໗-໑໑-໑໙໕໗)

໙ ປີມານີ້, ຈັກກະພັດນິຍົມອາເມລິກາໄດ້ຍຶດຄອງເກາະໄຕ້ຫວັນດິນແດນຂອງປະເທດເຮົາ, ກ່ອນນີ້ບໍ່ເຫິງພວກມັນກໍ່ໄດ້ສົ່ງກອງກຳລັງປະກອບອາວຸດໄປຍຶດຄອງປະເທດລີບັງອີກ. ອາເມລິກາໄດ້ສ້າງຖານທັບຕັ້ງຫຼາຍຮ້ຽບ່ອນຢູ່ຫຼາຍປະເທດໃນໂລກ. ເກາະໄຕ້ຫວັນດິນແດນຈີນ ປະເທດລີບັງແລະຖານທັບທັງໝົດຂອງອາເມລິກາທີ່ຢູ່ຕ່າງປະເທດນັ້ນ ລ້ວນແຕ່ແມ່ນບ້ອງຮັດຄໍຈັກກະພັດນິຍົມອາເມລິກາ. ບໍ່ແມ່ນຜູ້ໃດອື່ນ, ແມ່ນຄົນອາເມລິກາເອງເປັນຜູ້ເຮັດບ້ອງແລະສຸບໃສ່ຄໍຂອງຕົນ ແລ້ວຍື່ນເຊືອກອີກສັ້ນໜຶ່ງໃຫ້ປະຊາຊົນຈີນ ປະຊາຊົນໃນບັນດາປະເທດອາລາບ ແລະ ປະຊາຊົນຜູ້ຮັກຫອມສັນຕິພາບຄັດຄ້ານການລຸກ

ລານທັງໝົດໃນທົ່ວໂລກ. ອາເມລິກາຜູ້ລຸກລານຢູ່ໃນດິນແດນເຫຼົ່ານີ້ເຫິງທໍ່ໃດ, ບ້ອງທີ່ຮັດຄໍມັນກໍ່ຍິ່ງແໜ້ນເຂົ້ານຳທໍ່ນັ້ນ.

ຄຳປາໄສໃນກອງປະຊຸມກິດຈະການຂອງລັດຂັ້ນສູງສຸດ (ວັນທີ່ ໕-໙-໑໙໕໘)

ອາຍຸຂອງພວກຈັກກະພັດນິຍົມບໍ່ຍືນປານໃດແລ້ວ, ເພາະວ່າພວກມັນເຮັດແຕ່ເລື່ອງຊົ່ວ, ສະເພາະແຕ່ຄ້ຳຊູພວກປະຕິການທີ່ຕ້ານປະຊາຊົນໃນປະເທດຕ່າງໆ, ຍຶດເອົາເມືອງຂຶ້ນ ເຄິ່ງເມືອງຂຶ້ນແລະຖານທັບເປັນຈຳນວນຫຼວງຫຼາຍ, ເອົາສົງຄາມປະລະມານູນາບຂູ່ສັນຕິພາບ. ເມື່ອເປັນແນວນີ້ແລ້ວ, ພວກມັນກໍ່ບັງຄັບໃຫ້ປະຊາຊົນທົ່ວໂລກ ໙໐ ສ່ວນຮ້ຽຂຶ້ນໄປພາກັນລຸກຂຶ້ນຫຼືພວມຈະລຸກຂຶ້ນຫຸ້ມໂຈມຕີພວກມັນ. ແຕ່ວ່າ ປັດຈຸບັນນີ້ພວກຈັກກະພັດນິຍົມຍັງມີຊີວິດຢູ່, ພວກມັນຍັງຄົງໃຊ້ອຳນາດປ່າເຖື່ອນໄປທົ່ວທະວີບອາຊີ ອາຟະລິກາແລະອາເມລິກາລາຕິນ. ໃນໂລກຕາເວັນຕົກ ພວກມັນກໍ່ຍັງຄົງກົດຂີ່ປວງປະຊາຊົນໃນປະເທດຂອງມັນເອງຢູ່. ສະພາບການນີ້ຕ້ອງປ່ຽນແປງ. ການ

ທີ່ຈະເຮັດໃຫ້ການລຸກລານ ແລະ ການກົດຂີ່ຂອງຈັກກະພັດນິຍົມສຳຄັນແມ່ນຂອງຈັກກະພັດນິຍົມອາເມລິກາສິ້ນສຸດລົງນັ້ນ ແມ່ນພາລະໜ້າທີ່ຂອງປະຊາຊົນທົ່ວໂລກ.

ຄຳໃຫ້ສຳພາດແກ່ຜູ້ສື່ຂ່າວຂອງສຳນັກຂ່າວຊິນຮວາ
(ວັນທີ່ ໒໙-໙-໑໙໕໘)

ຈັກກະພັດນິຍົມອາເມລິກາໃຊ້ອຳນາດປ່າເຖື່ອນທົ່ວທິບທົ່ວແດນ, ຕັ້ງຕົວມັນເອງຢູ່ໃນຖານະເປັນສັດຕູກັບປະຊາຊົນທົ່ວໂລກ, ໄດ້ເຮັດໃຫ້ມັນເອງນັບມື້ນັບໂດດດ່ຽວ. ລູກລະເບີດປະລະມານູ ລູກລະເບີດອີໂດຼແຊນທີ່ຢູ່ໃນກຳມືຂອງຈັກກະພັດນິຍົມອາເມລິການັ້ນ, ບໍ່ສາມາດນາບຂູ່ຜູ້ຄົນທີ່ບໍ່ຍອມເປັນຂ້ອຍຂ້າໃຫ້ຍອມໄດ້ດອກ. ກະແສແຫ່ງຄວາມຄຽດແຄ້ນຂອງປະຊາຊົນທົ່ວໂລກທີ່ຄັດຄ້ານອາເມລິກາຜູ້ລຸກລານນັ້ນ ບໍ່ມີສິ່ງໃດຂັດຂວາງໄວ້ໄດ້. ການຕໍ່ສູ້ຂອງປະຊາຊົນທົ່ວໂລກທີ່ຄັດຄ້ານຈັກກະພັດນິຍົມອາເມລິກາແລະລູກແຫຼ້ງຕີນມືຂອງມັນນັ້ນ ຈະ

ຕ້ອງໄດ້ຮັບໄຊຊະນະອັນຍິ່ງໃຫຍ່ກວ່າເກົ່າຢ່າງແນ່ນອນ.

«ຖ້ອຍຖະແຫຼງສະໜັບສະໜູນການຕໍ່ສູ້ອັນເປັນທຳທີ່ຮັກຊາດຕ້ານອາເມລິກາຂອງປະຊາຊົນປານາມາ»
(ວັນທີ່ ໑໒-໑-໑໙໖໔)

ຖ້າກຸ່ມເຈົ້າທຶນຜູກຂາດຂອງປະເທດອາເມລິກາຫາກຍຶດໝັ້ນປະຕິບັດນະໂຍບາຍລຸກລານ ແລະ ນະໂຍບາຍສົງຄາມຂອງມັນແລ້ວ, ແນ່ນອນ ຕ້ອງຖືກປະຊາຊົນທົ່ວໂລກລົງໂທດແຂວນຄໍປະຫານຊີວິດໃນມື້ໃດມື້ໜຶ່ງ. ລູກມືຮ້າຍກາດຕົວອື່ນໆຂອງອາເມລິກາກໍ່ຈະຕ້ອງເປັນແນວນີ້ຄືກັນ.

ຄຳປາໄສໃນກອງປະຊຸມກິດຈະການຂອງລັດຂັ້ນສູງສຸດ (ວັນທີ່ ໘-໙-໑໙໕໘)

ເພື່ອຕໍ່ສູ້ກັບສັດຕູ, ໃນເວລາຍາວນານໄລຍະໜຶ່ງ, ພວກເຮົາໄດ້ມີຮູບສຳນຶກອັນໜຶ່ງເກີດຂຶ້ນ, ໝາຍຄວາມວ່າ ໃນດ້ານຍຸດທະສາດ ພວກເຮົາຕ້ອງດູໝິ່ນສັດຕູທັງໝົດ, ໃນດ້ານຍຸດທະວິທີ ພວກເຮົາຕ້ອງບໍ່ປະໝາດສັດຕູທັງໝົດ. ອັນນີ້ກໍ່ໝາຍຄວາມ

ວ່າ ໃນສ່ວນທັງໝົດ ແນວໃດພວກເຮົາກໍ່ຕ້ອງດູໝິ່ນມັນ, ໃນບັນຫາຕົວຈິງແຕ່ລະບັນຫານັ້ນ ແນວໃດພວກເຮົາກໍ່ຕ້ອງບໍ່ປະໝາດມັນ. ຖ້າບໍ່ດູໝິ່ນສັດຕູໃນສ່ວນທັງໝົດແລ້ວ, ພວກເຮົາກໍ່ຈະຜິດພາດທາງລັດທິສວຍໂອກາດ. ທ່ານມາກແລະທ່ານອັງແກນພຽງແຕ່ສອງຄົນທໍ່ນັ້ນ, ຄາວນັ້ນທ່ານທັງສອງກໍ່ເວົ້າວ່າ ທຶນນິຍົມໃນໂລກຕ້ອງຖືກໂຄ່ນລົ້ມ. ແຕ່ວ່າ ໃນບັນຫາຕົວຈິງ, ໃນບັນຫາສັດຕູແຕ່ລະໂຕນັ້ນ, ຖ້າພວກເຮົາປະໝາດມັນແລ້ວ, ພວກເຮົາກໍ່ຈະຜິດພາດທາງລັດທິສ່ຽງໄພ. ການລົບເລວມີແຕ່ລົບເປັນບັ້ນໆ, ການດັບສູນສັດຕູມີແຕ່ດັບສູນເປັນສ່ວນໆ. ໂຮງງານນັ້ນມີແຕ່ສ້າງເປັນໂຮງໆ, ຊາວນາໄຖນາມີແຕ່ໄຖເປັນຮ່ອງໆ, ຈົນວ່າການກິນເຂົ້າກໍ່ເປັນແນວນີ້. ໃນດ້ານຍຸດທະສາດ ພວກເຮົາດູໝິ່ນການກິນເຂົ້າ: ເຂົ້າຄາບນີ້, ພວກເຮົາສາມາດກິນໝົດໄດ້. ແຕ່ວ່າ ເວລາກິນແທ້ນັ້ນ, ຊ້ຳພັດກິນເປັນຄຳໆ, ເຈົ້າບໍ່ສາມາດກືນກິນອາຫານທັງພາໃຫ້ໝົດຄາວດຽວໄດ້. ອັນນີ້ເອີ້ນວ່າແກ້ໄຂເທື່ອລະເລື່ອງ, ຢູ່ໃນຕຳລາ

ການທະຫານເພິ່ນເອີ້ນວ່າຕີໃຫ້ແຕກເທື່ອລະສ່ວນ.

ຄຳປາໄສໃນກອງປະຊຸມພັກກອມມູນິດ ແລະ ພັກກຳມະກອນປະເທດຕ່າງໆຢູ່ໂມສະກູ (ວັນທີ່ ໑໘-໑໑-໑໙໕໗)

ເຮົາເຫັນວ່າ ສະຖານະການຂອງໂລກໃນປັດຈຸບັນໄດ້ຮອດຈຸດຫົວລ້ຽວຫົວຕໍ່ອັນໃໝ່ແລ້ວ. ປັດຈຸບັນນີ້ ໃນໂລກມີລົມສອງສາຍ ຄື ລົມຕາເວັນອອກແລະລົມຕາເວັນຕົກ. ສຸພາສິດຈີນເວົ້າວ່າ:“ຄັນບໍ່ແມ່ນລົມຕາເວັນອອກພັດຖົມລົມຕາເວັນຕົກ ກໍ່ແມ່ນລົມຕາເວັນຕົກພັດຖົມລົມຕາເວັນອອກ.” ເຮົາເຫັນວ່າຈຸດພິເສດຂອງສະຖານະການໃນສະເພາະໜ້ານີ້ ແມ່ນລົມຕາເວັນອອກພັດຖົມລົມຕາເວັນຕົກ, ກໍ່ໝາຍຄວາມວ່າ ກຳລັງສັງຄົມນິຍົມມີທ່າດີລື່ນກາຍກຳລັງຈັກກະພັດນິຍົມຢ່າງເດັດຂາດ.

ຄຳປາໄສໃນກອງປະຊຸມພັກກອມມູນິດ ແລະ ພັກກຳມະກອນປະເທດຕ່າງໆຢູ່ໂມສະກູ (ວັນທີ່ ໑໘-໑໑-໑໙໕໗)

ກ. ກ້າຕໍ່ສູ້ ກ້າເອົາຊະນະ

ປະຊາຊົນທົ່ວໂລກຈົ່ງສາມັກຄີກັນເຂົ້າ, ໂຈມຕີອາເມລິກາຜູ້ລຸກລານແລະລູກແຫຼ້ງຕີນມືທັງໝົດຂອງມັນໃຫ້ປະລາໄຊໄປ! ປະຊາຊົນທົ່ວໂລກຕ້ອງມີນ້ຳໃຈກ້າຫານ, ກ້າສູ້ລົບ, ບໍ່ຢ້ານຄວາມລຳບາກ, ຄົນໜ້າບຸກຂຶ້ນຄົນຫຼັງກ້າວຕາມ, ເມື່ອເປັນດັ່ງນີ້ແລ້ວ ໝົດທົ່ວໂລກກໍ່ຈະເປັນຂອງປະຊາຊົນຢ່າງແນ່ນອນ. ພວກຜີສາງມານຮ້າຍທັງໝົດກໍ່ຈະຖືກດັບສູນຢ່າງຮາບຄາບ.

«ຄຳຖະແຫຼງການສະໜັບສະໜູນປະຊາຊົນກົງໂກ (ເລໂອໂປນວິນ)ຄັດຄ້ານການລຸກລານຂອງອາເມລິກາ» (ວັນທີ່ ໒໘-໑໑-໑໙໖໔)

ໂດຍອີງຕາມວິທະຍາສາດລັດທິມາກເລນິນ, ພັກກອມມູນິດຈີນໄດ້ຄາດຄະເນສະຖານະການຂອງໂລກ ແລະ ພາຍໃນປະເທດຢ່າງມີສະຕິແຈ່ມແຈ້ງ. ຮູ້ດີວ່າ ການບຸກໂຈມຕີຂອງພວກປະຕິການທັງໝົດພາຍໃນແລະນອກປະເທດນັ້ນ, ບໍ່ພຽງແຕ່ຈຳຕ້ອງຕີໃຫ້ປະລາໄຊ, ທັງສາມາດຕີໃຫ້ປະລາໄຊໄດ້ດ້ວຍ. ເມື່ອທ້ອງຟ້າມີເມກດຳກຸ້ມກ້ອຢູ່ນັ້ນ, ພວກເຮົາກໍ່ຊີ້ອອກວ່າ ອັນນີ້ເປັນພຽງແຕ່ປາກົດການຊົ່ວຄາວ, ຄວາມມືດມົວຈະມະຫັບມະຫາຍໄປ, ແສງອະລຸນກໍ່ຈະມາເຖິງ.

«ສະຖານະການປັດຈຸບັນແລະພາລະໜ້າທີ່ຂອງພວກເຮົາ» (ວັນທີ່ ໒໕-໑໒-໑໙໔໗)

ໃນປະວັດສາດມະນຸດ, ອິດທິພົນປະຕິການໃດໆທີ່ນັບຈະມຸດມອດ ຍ່ອມຕ້ອງດີ້ນຮົນຊົນສູ້ກັບອິດທິພົນປະຕິວັດເປັນຂັ້ນສຸດທ້າຍ, ແຕ່ມີຜູ້ປະຕິວັດຈຳນວນໜຶ່ງມັກຫຼົງໃຫຼໄປຊົ່ວໄລຍະໜຶ່ງຍ້ອນປາກົດການແຂງນອກໂຄ່ງໃນອັນນີ້, ເບິ່ງບໍ່ເຫັນທາດແທ້ທີ່ສັດຕູນັບຈະດັບສູນ, ຕົນເອງນັບຈະຊະນະ.

«ຈຸດຫັນລ້ຽວຫັວຕໍ່ຂອງສົງຄາມໂລກເທື່ອທີສອງ» (ວັນທີ່ ໑໒-໑໐-໑໙໔໒)

ຖ້າພວກມັນຢາກຕີກໍ່ດັບສູນພວກມັນໃຫ້ຮາບຄາບ. ເລື່ອງມັນກໍ່ເປັນແນວນີ້, ມັນມາບຸກ, ພວກເຮົາດັບສູນມັນ, ມັນກໍ່ສ່ວາງໃຈແລ້ວ. ດັບສູນໜ້ອຍໜຶ່ງ ກໍ່ສ່ວາງໃຈໜ້ອຍໜຶ່ງ; ດັບສູນຫຼາຍ ກໍ່ສ່ວາງໃຈຫຼາຍ; ດັບສູນຮາບຄາບ ກໍ່ສ່ວາງໃຈສຸດຂີດ. ບັນຫາຂອງປະເທດຈີນສັບສົນຢູ່, ສະໝອງຂອງພວກເຮົາກໍ່ຕ້ອງສັບສົນແດ່. ພວກມັນຕີມາແລ້ວ, ພວກເຮົາກໍ່ຕີ, ຕີເພື່ອຍາດແຍ່ງເອົາສັນຕິພາບ.

« ກ່ຽວກັບການເຈລະຈາທີ່ເມືອງຈຸງກິງ » (ວັນທີ່ ໑໗-໑໐-໑໙໔໕)

ຖ້າມີໃຜມາລ່ວງລ້ຳ, ທະແນນແຕ່ພໍຕີໄດ້, ແນ່ນອນ ພັກເຮົາກໍ່ຕ້ອງດັບສູນມັນຢ່າງເດັດດ່ຽວ ເຖິງຖອງ ຮາບຄາບ ແລະໝົດກ້ຽງໂດຍຢືນຢູ່ໃນຫຼັກພື້ນປ້ອງກັນຕົວ (ຢ່າຕີຢ່າງງ່າຍດາຍ, ຕີແລ້ວຕ້ອງໃຫ້ຊະນະ), ຢ່າໄດ້ເສຽຂວັນຍ້ອນທ່າທາງຂຶງຂ້າງຮຸນແຮງຂອງພວກປະຕິການເປັນອັນຂາດ.

« ໜັງສືແຈ້ງການຂອງສູນກາງພັກກອມມູນິດຈີນ ກ່ຽວກັບການດຳເນີນການເຈລະຈາໂດຍສັນຕິກັບພັກກົກມິນຕັງ » (ວັນທີ່ ໒໗-໕-໑໙໔໕)

ຕາມຄວາມປາຖະໜາຂອງພວກເຮົາ, ແມ່ນແຕ່ນິ້ວດຽວພວກເຮົາກໍ່ບໍ່ຢາກຕີ. ແຕ່ຖ້າວ່າ ສະຖານະການບັງຄັບໃຫ້ພວກເຮົາຈຳໃຈຕ້ອງຕີ, ພວກເຮົາກໍ່ສາມາດຕີຈົນເຖິງທີ່ສຸດ.

«ຄຳໃຫ້ສຳພາດແກ່ນາງແອນນາ ຫຼຸຍ ສະຕຼອງ ຕູ້ສື່ຂ່າວອາເມລິກາ» (ເດືອນ ໕-໑໙໔໗)

ພວກເຮົາຕ້ອງການສັນຕິພາບ, ແຕ່ວ່າ ຕາບໃດຈັກກະພັດນິຍົມອາເມລິກາຫາກບໍ່ປະລະຄວາມຮຽກຮ້ອງຕ້ອງການອັນຈອງຫອງໄຮ້ເຫດຜົນ ແລະກົນອຸບາຍຂະຫຽາຍການລຸກລານຂອງມັນແລ້ວ, ຕາບນັ້ນປະຊາຊົນຈີນ ກໍ່ມີແຕ່ຕັດສິນໃຈພ້ອມກັບປະຊາຊົນເກົາຫຼີສູ້ລົບຕໍ່ໄປ. ອັນນີ້ບໍ່ແມ່ນຍ້ອນວ່າພວກເຮົາມັກສົງຄາມ, ພວກເຮົາຍິນດີຢຸດລົບທັນທີ, ບັນຫາທີ່ຄ້າງຄາຢູ່ນັ້ນ

ຄປແກ້ໄຂກັນໃນພາຍໜ້າ. ແຕ່ວ່າ ຈັກກະພັດນິຍົມອາເມລິກາບໍ່ຍອມເຮັດແນວນີ້, ຊັ້ນກໍ່ດີແລ້ວ, ກໍ່ຕີຕໍ່ໄປ, ຈັກກະພັດນິຍົມອາເມລິກາຢາກຕີທໍ່ໃດປີ, ພວກເຮົາກໍ່ກຽມພ້ອມທີ່ຈະຕີກັບມັນທໍ່ນັ້ນປີ, ຕີຈົນຮອດຈັກກະພັດນິຍົມອາເມລິກາຍອມເຊົາມື, ຕີຈົນຮອດປະຊາຊົນຈີນ ແລະ ປະຊາຊົນເກົາຫຼີໄດ້ຮັບໄຊຊະນະອັນສົມບູນ.

ຄຳປາໄສໃນກອງປະຊຸມເທື່ອທີ່ ໔ ຂອງຄະນະກຳມະການທົ່ວປະເທດສະໄໝທີ່ ໑ ຂອງສະພາປຶກສາການເມືອງປະຊາຊົນຈີນ (ວັນທີ່ ໗-໒-໑໙໕໓)

ພວກເຮົາຕ້ອງກຳຈັດແນວຄິດ ທີ່ອ່ອນແອໄຮ້ຄວາມສາມາດທາງຜິດຢູ່ພາຍໃນຂອງພວກເຮົາເອງ. ທັດສະນະທາງຜິດທີ່ຄາດຄະເນກຳລັງຂອງສັດຕູສູງເກີນໄປ ແລະຄາດຄະເນກຳລັງຂອງປະຊາຊົນຕ່ຳເກີນໄປນັ້ນ ລ້ວນແຕ່ຜິດພາດ.

«ສະຖານະການປັດຈຸບັນແລະພາລະໜ້າທີ່ຂອງພວກເຮົາ» (ວັນທີ່ ໒໕-໑໒-໑໙໔໗)

ປະຊາຊົນທີ່ຖືກກົດຂີ່ ແລະ ປະຊາຊາດທີ່ຖືກກົດຂີ່ຈະເອົາການປົດປ່ອຍຂອງຕົນຝາກໄວ້ກັບ “ຄວາມມີສະຕິຮູ້ຜິດຖືກຊົ່ວດີ” ຂອງພວກຈັກກະພັດນິຍົມ ແລະ ລູກແຫຼ້ງຕົນມືຂອງມັນບໍ່ໄດ້ຢ່າງເດັດຂາດ, ມີແຕ່ເພີ່ມທະວີຄວາມສາມັກຄີໃຫ້ເຂັ້ມແຂງແລະຢຶດໝັ້ນຕໍ່ສູ້ທໍ່ນັ້ນ ຈຶ່ງສາມາດໄດ້ຮັບໄຊຊະນະ.

«ຄຳຖະແຫຼງການຄັດຄ້ານອາເມລິກາ — ກຸ່ມໂງດິນຢ້ຽມລຸກລານແລະເຂັ່ນຂ້າປະຊາຊົນພາກໃຕ້ຫວຽດນາມ» (ວັນທີ່ ໒໙-໘-໑໙໖໓)

ບໍ່ວ່າເສິກກາງເມືອງທີ່ມີລັກສະນະທົ່ວປະເທດຈະລະເບີດຂຶ້ນມື້ໃດກໍ່ຕາມ, ພວກເຮົາລ້ວນແຕ່ຕ້ອງກຽມພ້ອມໃຫ້ດີ. ຖ້າວ່າໄວແດ່, ເຊົ້າມື້ອື່ນຈະຕີໂລດ, ພວກເຮົາກໍ່ໄດ້ກຽມພ້ອມຢູ່. ອັນນີ້ແມ່ນຂໍ້ທີ່ໜຶ່ງ. ສະຖານະການຂອງໂລກແລະພາຍໃນປະເທດປັດຈຸບັນອາດຈຳກັດໃຫ້ເສິກກາງເມືອງຢູ່ໃນຂອບເຂດພາກສ່ວນຊົ່ວຄາວ ແລະເສິກກາງເມືອງອາດເປັນສົງຄາມທີ່ມີ

ລັກສະນະທ້ອງຖິ່ນບາງບ່ອນຊົ່ວຄາວ. ອັນນີ້ແມ່ນຂໍ້ທີ່ສອງ. ຂໍ້ທີ່ໜຶ່ງພວກເຮົາກຽມພ້ອມຢູ່, ຂໍ້ທີ່ສອງກໍ່ເປັນແນວນັ້ນມາແຕ່ດົນແລ້ວ. ຮວມຄວາມວ່າ ພວກເຮົາຕ້ອງມີການກຽມພ້ອມ. ເມື່ອມີການກຽມພ້ອມແລ້ວ ກໍ່ສາມາດສູ້ກັບສະພາບການອັນສັບສົນຕ່າງໆໄດ້ຢ່າງເໝາະສົມ.

«ສະຖານະການພາຍຫຼັງໄດ້ໄຊຊະນະໃນສົງຄາມຕໍ່ຕ້ານຍີ່ປຸ່ນແລະເຂັມທິດຂອງພວກເຮົາ» (ວັນທີ່ ໑໓-໘-໑໙໔໕)

໘. ສົງຄາມປະຊາຊົນ

ສົງຄາມປະຕິວັດແມ່ນສົງຄາມຂອງມວນຊົນ, ມີແຕ່ລະດົມມວນຊົນທໍ່ນັ້ນ ຈຶ່ງສາມາດດຳເນີນສົງຄາມໄດ້, ມີແຕ່ອາໄສມວນຊົນທໍ່ນັ້ນ ຈຶ່ງສາມາດດຳເນີນສົງຄາມໄດ້.

«ເອົາໃຈໃສ່ຊີວິດການເປັນຢູ່ຂອງມວນຊົນ ສົນໃຈນຳວິທີເຮັດວຽກ» (ວັນທີ່ ໒໗-໑-໑໙໓໔)

ກຳແພງເພັດອັນແທ້ຈິງແມ່ນຫຍັງ? ແມ່ນມວນຊົນ, ແມ່ນມວນຊົນເປັນລ້ານເປັນໂກດທີ່ຈິງໃຈສະໜັບສະໜຸນການປະຕິວັດ. ອັນນີ້ແມ່ນກຳແພງເພັດອັນແທ້ຈິງ, ບໍ່ມີກຳລັງໃດຈະຕີແຕກ ແລະຕີບໍ່ແຕກຢ່າງເດັດຂາດ. ພວກຕ້ານປະຕິວັດຕີພວກເຮົາບໍ່ແຕກ, ພວກເຮົາຊ້ຳພັດຕີພວກຕ້ານປະຕິວັດໃຫ້

ແຕກໄດ້. ເມື່ອສານັກຄືນອນຈີນເປັນລ້ານເປັນໂກດໃຫ້ຢູ່ອ້ອມຂ້າງລັດຖະບານປະຕິວັດ ແລະຂະຫຽາຍສົງຄາມປະຕິວັດຂອງພວກເຮົາແລ້ວ, ພວກເຮົາກໍ່ຈະສາມາດດັບສູນພວກຕ້ານປະຕິວັດທັງໝົດ, ພວກເຮົາກໍ່ຈະສາມາດຍຶດໄດ້ທົ່ວທັງປະເທດຈີນ.

«ເອົາໃຈໃສ່ຊີວິດການເປັນຢູ່ຂອງມວນຊົນ ສົນໃຈນຳວິທີເຮັດວຽກ» (ວັນທີ່ ໒໗-໑-໑໙໓໔)

ບໍ່ເກີດອັນກວ້າງເລິກທີ່ສຸດຂອງກຳລັງອັນຍິ່ງໃຫຍ່ແຫ່ງສົງຄາມ ແມ່ນຢູ່ໃນປວງປະຊາຊົນ. ການທີ່ຍີ່ປຸ່ນກ້າຂົ່ມເຫັງພວກເຮົານັ້ນ, ສາຍເຫດສຳຄັນກໍ່ແມ່ນປວງປະຊາຊົນຈີນຍັງຢູ່ໃນພາວະບໍ່ມີການຈັດຕັ້ງ. ເມື່ອແກ້ໄຂຂໍ້ບົກພ່ອງນີ້ແລ້ວ ກໍ່ຈະເຮັດໃຫ້ຍີ່ປຸ່ນຜູ້ລຸກລານຕົກຢູ່ຕໍ່ໜ້າປະຊາຊົນຂອງພວກເຮົາທີ່ລຸກຂຶ້ນແລ້ວເປັນຮ້ອຍລ້ານ, ເຮັດໃຫ້ມັນຄືກັບກະທິງໂຕໜຶ່ງທີ່ບຸກເຂົ້າວົງກອງໄຟ, ພວກເຮົາແຜດໃສ່ບາດໜຶ່ງ ກໍ່ຈະເຮັດໃຫ້

ມັນຕື່ນສັກຄະໂຍງບາດໃຫຍ່, ກະທິງໂຕນີ້ກໍ່ຈະຖືກໄຟໄໝ້ຕາຍຢ່າງແນ່ນອນ.

«ວ່າດ້ວຍສົງຄາມຍືດເຍື້ອຍາວນານ» (ເດືອນ ໕-໑໙໓໘)

ພວກຈັກກະພັດນິຍົມຂົ່ມເຫັງພວກເຮົາເຖິງຂະໜາດນີ້, ອັນນີ້ແມ່ນສິ່ງຈຳເປັນຕ້ອງຕັ້ງໜ້າສູ້. ພວກເຮົາບໍ່ພຽງແຕ່ຕ້ອງມີກອງທັບຫຼວງອັນໃຫຍ່ໂຕເຂັ້ມແຂງເທົ່ານັ້ນ, ຍັງຕ້ອງສ້າງຕັ້ງກອງພົນທະຫານລາດເປັນການໃຫຍ່. ເມື່ອເປັນແນວນີ້ແລ້ວ, ເວລາຈັກກະພັດນິຍົມລຸກລານປະເທດເຮົາ ກໍ່ຈະເຮັດໃຫ້ພວກມັນຍ້າຍບາດຕີນບາດໜຶ່ງກໍ່ຍາກ.

ຄຳໃຫ້ສຳພາດແກ່ຜູ້ສື່ຂ່າວຂອງສຳນັກຂ່າວຊິນຮວາ (ວັນທີ່ ໒໙-໙-໑໙໔໘)

ເມື່ອສັງເກດຕາມທັດສະນະຂອງທົ່ວທັງສົງຄາມປະຕິວັດແລ້ວ, ສົງຄາມກອງຫຼອນຂອງປະຊາຊົນກັບກອງທັບແດງກຳລັງ

ຫຼວງນັ້ນ ຕ່າງປະກອບກັນເປັນແຂນຊ້າຍແຂນຂວາ, ມີແຕ່ກອງທັບແດງກຳລັງຫຼວງ ແຕ່ບໍ່ມີສົງຄາມກອງຫຼອນຂອງປະຊາຊົນ ກໍ່ຄືກັບນາຍພົນແຂນດຽວ. ເວົ້າເປັນຕົວຈິງ, ໂດຍສະເພາະເວົ້າໃນດ້ານສູ້ລົບແລ້ວ, ເງື່ອນໄຂປະຊາຊົນໃນເຂດທີ່ໝັ້ນກໍ່ແມ່ນມີປະຊາຊົນທີ່ໄດ້ປະກອບອາວຸດແລ້ວນັ້ນເອງ. ສິ່ງທີ່ສັດຕູຖືເປັນທີ່ຢ້ານກົວນັ້ນ ສຳຄັນກໍ່ແມ່ນຂໍ້ນີ້.

«ບັນ ຫາ ຍຸດ ທະ ສາດ ຂອງ ສົງ ຄາມ ປະ ຕິ ວັດ ຈີນ»

(ເດືອນ ໑໒-໑໙໓໖)

ສິ່ງທີ່ຕັດສິນໄຊຊະນະຫຼືເສຽໄຊຂອງສົງຄາມ ສຳຄັນແມ່ນບັນດາເງື່ອນໄຂການທະຫານ ການເມືອງ ເສດຖະກິດແລະທຳມະຊາດຂອງສອງຝ່າຍທີ່ສູ້ລົບກັນ, ຂໍ້ນີ້ບໍ່ເປັນບັນຫາ. ບໍ່ພຽງແຕ່ທໍ່ນີ້, ຍັງຕັດສິນດ້ວຍຄວາມສາມາດໃນການຊີ້ນຳທາງໃນຕົວຂອງສອງຝ່າຍທີ່ສູ້ລົບກັນ. ນັກການທະຫານບໍ່ອາດຫວັງເອົາໄຊຊະນະໃນສົງຄາມໂດຍລື່ນກາຍຂອບເຂດທີ່ເງື່ອນໄຂວັດຖຸອຳນວຍໃຫ້ໄດ້, ແຕ່ວ່າ ນັກການທະຫານສາມາດແລະຕ້ອງຍາດ

ເອົາໄຊຊະນະໃນສົງຄາມຢູ່ໃນຂອບເຂດທີ່ເງື່ອນໄຂວັດຖຸອຳນວຍໃຫ້. ເວທີການເຄື່ອນໄຫວຂອງນັກການທະຫານນັ້ນສ້າງຢູ່ເທິງເງື່ອນໄຂວັດຖຸນອກຕົວ, ແຕ່ວ່າ ນັກການທະຫານອີງໃສ່ເວທີນີ້, ສາມາດກຳກັບໃຫ້ສະແດງລະຄອນທີ່ມີຊີວິດຊີວາອົງອາດສະຫງ່າຜ່າເຜີຍຫຼາຍບົດຫຼາຍເລື່ອງໄດ້.

«ບັນ ຫາ ຍຸດ ທະ ສາດ ຂອງ ສົງ ຄາມ ປະ ຕິ ວັດ ຈີນ»

(ເດືອນ ໑໒-໑໙໓໖)

ຈຸດປະສົງຂອງສົງຄາມບໍ່ແມ່ນອັນໃດອື່ນ, ແມ່ນ"ຮັກສາຕົນເອງ, ດັບສູນສັດຕູ" (ການດັບສູນສັດຕູແມ່ນປົດອາວຸດຂອງສັດຕູ ໝາຍຄວາມວ່າ "ຕັດຮອນກຳລັງຕ້ານທານຂອງສັດຕູ", ບໍ່ແມ່ນດັບສູນຕົວຄົງສັດຕູໃຫ້ໝົດ). ສົງຄາມໃນສະໄໝບູຮານໃຊ້ຫອກໃຊ້ເຂນ: ຫອກໃຊ້ສຳລັບບຸກໂຈມຕີ ເພື່ອດັບສູນສັດຕູ; ເຂນໃຊ້ສຳລັບປ້ອງກັນ ເພື່ອຮັກສາຕົນເອງ. ຈົນຮອດອາວຸດໃນຊູ່ມື້ນີ້, ຍັງຄົງແມ່ນການສືບຕໍ່ຂອງສອງອັນນີ້. ເຮືອບິນຖິ້ມລະເບີດ ປືນກົນ ປືນໃຫຍ່ຍິງໄກແລະອາຍພິດແມ່ນການຂະຫຍາຍ

ຕົວຂອງຫອກ; ບ່ອນກຳບັງປ້ອງກັນໄພທາງອາກາດ ໝວກເຫຼັກ ປ້ອນຊີມັງ ໜ້າກາກປ້ອງກັນອາຍພິດແມ່ນການຂະຫຍາຍຕົວຂອງເຂນ. ລົດຕັງແມ່ນອາວຸດແບບໃໝ່ທີ່ຮວມຫອກກັບເຂນເຂົ້າກັນ. ການບຸກໂຈມຕີ ແມ່ນວິທີການສຳຄັນໃນການດັບສູນສັດຕູ, ແຕ່ການປ້ອງກັນກໍ່ປະບໍ່ໄດ້. ການບຸກໂຈມຕີແມ່ນເພື່ອດັບສູນສັດຕູໂດຍກົງ, ພ້ອມກັນນັ້ນ ກໍ່ແມ່ນເພື່ອຮັກສາຕົນເອງ, ເພາະວ່າ ຖ້າບໍ່ດັບສູນສັດຕູ, ຕົນເອງກໍ່ຈະຖືກດັບສູນ. ການປ້ອງກັນ ແມ່ນເພື່ອຮັກສາຕົນເອງໂດຍກົງ, ທັງແມ່ນວິທີການອັນໜຶ່ງ ໃນການຊ່ວຍບຸກໂຈມຕີຫຼືກຽມຫັນເຂົ້າສູ່ການບຸກໂຈມຕີ. ການຖອຍ ຢູ່ໃນປະເພດການປ້ອງກັນ, ແມ່ນການສືບຕໍ່ຂອງການປ້ອງກັນ; ສ່ວນການໄລ່ໂຈມຕີນັ້ນ ກໍ່ແມ່ນການສືບຕໍ່ຂອງການບຸກໂຈມຕີ. ຄວນຊີ້ໃຫ້ເຫັນວ່າ ໃນຈຸດປະສົງຂອງສົງຄາມນັ້ນ, ການດັບສູນສັດຕູແມ່ນສິ່ງສຳຄັນ, ການຮັກສາຕົນເອງແມ່ນສິ່ງສຳຮອງ, ເພາະວ່າ ມີແຕ່ດັບສູນສັດຕູເປັນຈຳນວນຫຼວງຫຼາຍທີ່ນັ້ນ ຈຶ່ງສາມາດຮັກສາຕົນເອງໄດ້ຢ່າງ

ບັງເກີດຜົນ. ດ້ວຍເຫດນີ້ ການບຸກໂຈມຕີຈຶ່ງເປັນວິທີການສຳຄັນໃນການດັບສູນສັດຕູນັ້ນ ຈຶ່ງແມ່ນສິ່ງສຳຄັນ, ສ່ວນການປ້ອງກັນ ຊຶ່ງເປັນວິທີການປະກອບຊ່ວຍໃນການດັບສູນສັດຕູແລະເປັນວິທີການອັນໜຶ່ງໃນການຮັກສາຕົນເອງນັ້ນ ແມ່ນສິ່ງສຳຮອງ. ໃນສະພາບຕົວຈິງຂອງສົງຄາມ, ແມ່ນວ່າໃນຫຼາຍເວລາຖືເອົາການປ້ອງກັນເປັນສຳຄັນ ແລະໃນເວລາອື່ນຖືເອົາການບຸກໂຈມຕີເປັນສຳຄັນກໍ່ຕາມ, ແຕ່ເມື່ອເບິ່ງທົ່ວທັງຂະບວນສົງຄາມແລ້ວ, ການບຸກໂຈມຕີຍັງຄົງແມ່ນສິ່ງສຳຄັນ.

«ວ່າດ້ວຍສົງຄາມຍືດເຍື້ອຍາວນານ» (ເດືອນ ໕-໑໙໓໘)

ບັນດາຫຼັກການທີ່ຊີ້ນຳການເຄື່ອນໄຫວດ້ານການທະຫານລ້ວນແຕ່ອີງຕາມຫຼັກການພື້ນຖານອັນໜຶ່ງ ຄື: ຮັກສາກຳລັງຂອງຕົນ, ດັບສູນກຳລັງຂອງສັດຕູຈົນສຸດຄວາມສາມາດ. ... ແລ້ວການສົ່ງເສີມໃຫ້ເສຍສະຫຼະຢ່າງກ້າຫານໃນສົງຄາມນັ້ນ ຈະອະທິບາຍແນວໃດ? ສົງຄາມແຕ່ລະເທື່ອລ້ວນແຕ່ຕ້ອງໃຊ້ແທນ

ຄ່າ, ບາງເທື່ອກໍ່ແມ່ນຄ່າແພງທີ່ສຸດ, ອັນນີ້ບໍ່ຂັດກັບ "ການຮັກສາຕົນເອງ" ແລ້ວຫວາ? ຄວາມຈິງບໍ່ຂັດກັນຈັກໜ້ອຍ, ເວົ້າໃຫ້ຖືກຕ້ອງກວ່ານີ້ແມ່ນ ທັງກົງກັນຂ້າມທັງປະກອບກັນ. ເພາະວ່າ ການເສຍສະຫຼະແນວນີ້, ບໍ່ພຽງແຕ່ແມ່ນຄວາມຈຳເປັນເພື່ອດັບສູນສັດຕູທໍ່ນັ້ນ, ຍັງແມ່ນຄວາມຈຳເປັນເພື່ອຮັກສາຕົນເອງ — "ການບໍ່ຮັກສາ" (ການເສຍສະຫຼະຫຼືການໃຊ້ຄ່າ) ທີ່ເປັນພາກສ່ວນແລະຊົ່ວຄາວນັ້ນ ແມ່ນຄວາມຈຳເປັນເພື່ອຮັກສາສ່ວນທັງໝົດໄວ້ໃຫ້ຖາວອນ. ເທິງຫຼັກການພື້ນຖານນີ້, ໄດ້ເກີດຫຼັກການທີ່ຊີ້ນຳການເຄື່ອນໄຫວທາງທະຫານທັງໝົດຂື້ນຫຼາຍຫຼັກການ, ນັບແຕ່ຫຼັກການຍິງ (ການກຳບັງຕົວກັບການຂະຫຍາຍກຳລັງໄຟ, ກຳບັງຕົວເພື່ອຮັກສາຕົວ, ຂະຫຍາຍກຳລັງໄຟເພື່ອດັບສູນສັດຕູ), ຈົນເຖິງຫຼັກການຍຸດທະສາດນັ້ນ ລ້ວນແຕ່ປະຕິບັດຕາມຈິດໃຈຂອງຫຼັກການພື້ນຖານນີ້. ຫຼັກການດ້ານເຕັກນິກ ດ້ານຍຸດທະວິທີ ດ້ານບັນລົບແລະດ້ານຍຸດທະສາດທັງໝົດ ລ້ວນແຕ່ແມ່ນເງື່ອນໄຂໃນເວລາປະຕິບັດຫຼັກການພື້ນຖານ

ນີ້. ຫຼັກການຮັກສາຕົນເອງແລະດັບສູນສັດຕູແມ່ນຫຼັກອີງຂອງຫຼັກການທະຫານທັງໝົດ.

«ບັນຫາຍຸດທະສາດຂອງສົງຄາມກອງຫຼອນຕໍ່ຕ້ານຍີ່ປຸ່ນ» (ເດືອນ ໕-໑໙໓໘)

ຫຼັກການທະຫານຂອງພວກເຮົາແມ່ນ: (໑) ຕີສັດຕູທີ່ກະແຈກກະຈາຍແລະໂດດດ່ຽວກ່ອນ, ຕີສັດຕູທີ່ຮວມໝູ່ແລະໃຫຍ່ໂຕເຂັ້ມແຂງທີຫຼັງ. (໒) ຍຶດເອົາຕົວເມືອງນ້ອຍ ຕົວເມືອງສ່ຳກາງແລະຊົນນະບົດອັນກວ້າງໃຫຍ່ກ່ອນ, ຍຶດເອົາຕົວເມືອງໃຫຍ່ທີຫຼັງ. (໓) ເອົາການທຳລາຍລ້າງກຳລັງດົບຂອງສັດຕູເປັນເປົ້າໝາຍສຳຄັນ, ບໍ່ແມ່ນເອົາການຮັກສາຫຼືຍຶດເອົາຕົວເມືອງແລະທີ່ດິນເປັນເປົ້າໝາຍສຳຄັນ. ການຮັກສາແລະຍຶດເອົາຕົວເມືອງແລະທີ່ດິນ ແມ່ນຜົນຂອງການທຳລາຍລ້າງກຳລັງດົບຂອງສັດຕູ, ມັກຈະຕ້ອງຍາດກັນຫຼາຍຫຼົບຫຼາຍຕ່າວຈິ່ງສາມາດຮັກສາຫຼືຍຶດໄດ້ໃນທີ່ສຸດ. (໔) ສູ້ລົບແຕ່ລະເທື່ອຕ້ອງໂຮມ

ກຳລັງທະຫານທີ່ເໜືອກວ່າຢ່າງເດັດຂາດ (ສອງຕໍ່ ສາມຕໍ່ ສີ່ຕໍ່ ບາງເທື່ອຈົນກະທັ້ງຮອດຫ້າຕໍ່ຫົກຕໍ່ຂອງກຳລັງທະຫານສັດຕູ), ປິດລ້ອມສັດຕູທັງສີ່ດ້ານ, ພະຍາຍາມທຳລາຍລ້າງໃຫ້ໝົດກ້ຽງ ບໍ່ໃຫ້ລອດຕາໜ່າງໄປໄດ້. ໃນກໍລະນີພິເສດ, ຕ້ອງໃຊ້ວິທີໂຈມຕີສັດຕູແບບທຳລາຍລ້າງ, ຄື ສຸມກຳລັງທັງໝົດໂຈມຕີດ້ານໜ້າ ແລະປີກໜຶ່ງຫຼືສອງປີກຂອງສັດຕູ, ໃຫ້ບັນລຸເຖິງຈຸດປະສົງໃນການທຳລາຍລ້າງສ່ວນໜຶ່ງຂອງມັນ ແລະຕີອີກສ່ວນໜຶ່ງຂອງມັນໃຫ້ແຕກ ເພື່ອເຮັດໃຫ້ກອງທັບຂອງພວກເຮົາສາມາດຍົກຍ້າຍກຳລັງທະຫານໄດ້ຢ່າງວ່ອງໄວໄປໂຈມຕີທຳລາຍລ້າງທະຫານສັດຕູສ່ວນອື່ນ. ພະຍາຍາມຫຼີກເວັ້ນການຕີແບບເປືອງກຳລັງທີ່ໄດ້ບໍ່ທໍ່ເສັຽຫຼືໄດ້ກັບເສັຽທໍ່ກັນ. ເມື່ອເປັນແນວນີ້ແລ້ວ, ໃນສ່ວນທັງໝົດ, ພວກເຮົາຢູ່ໃນທ່າອ່ອນ (ເວົ້າດ້ານປະລິມານ), ແຕ່ວ່າ ໃນແຕ່ລະພາກສ່ວນ, ໃນແຕ່ລະບັ້ນລົບຕົວຈິງ, ພວກເຮົາຢູ່ໃນທ່າແຮງຢ່າງເດັດຂາດ. ຂໍ້ນີ້ກໍ່ຈະຮັບປະກັນໄຊຊະນະໃນບັ້ນລົບ. ຕາມການເຄື່ອນຍ້າຍຂອງເວລາ, ພວກເຮົາກໍ່ຈະ

ຫັນປ່ຽນເປັນຝ່າຍມີທ່າແຮງໃນສ່ວນທັງໝົດ, ຈົນຮອດທຳລາຍລ້າງສັດຕູທັງໝົດ. (໕) ບໍ່ລົບເລວໂດຍບໍ່ມີການກະກຽມ, ບໍ່ລົບເລວໂດຍບໍ່ແນ່ໃຈວ່າຈະຊະນະ, ການສູ້ລົບແຕ່ລະເທື່ອຕ້ອງພະຍາຍາມໃຫ້ມີການກະກຽມ, ພະຍາຍາມໃຫ້ມີຄວາມແນ່ໃຈຕໍ່ໄຊຊະນະພາຍໃຕ້ການຊັ່ງຊາເງື່ອນໄຂລະຫວ່າງເຮົາກັບສັດຕູ. (໖) ສົ່ງເສີມທ່າທຳນອງສູ້ລົບກ້າຫານ ບໍ່ຢ້ານເສັຽສະຫຼະ ບໍ່ຢ້ານອິດເມື່ອຍແລະສູ້ລົບລຽນຕິດ (ຄືລົບເລວຕິດໆກັນຫຼາຍບັ້ນໃນເວລາອັນສັ້ນໂດຍບໍ່ພັກຜ່ອນ). (໗) ພະຍາຍາມອອກແຮງທຳລາຍລ້າງສັດຕູໃນເວລາເຄື່ອນທີ່. ພ້ອມກັນນັ້ນກໍ່ເອົາໃຈໃສ່ຍຸດທະວິທີໂຈມຕີທີ່ຕັ້ງ, ຍຶດເອົາຈຸດທີ່ໝັ້ນແລະຕົວເມືອງຂອງສັດຕູ. (໘) ສຳລັບບັນຫາບຸກຕີຕົວເມືອງ, ບັນດາຈຸດທີ່ໝັ້ນ ແລະ ຕົວເມືອງທີ່ມີກຳລັງປ້ອງກັນຂອງສັດຕູອ່ອນນັ້ນ ຕ້ອງຍຶດເອົາເດັດຂາດ. ບັນດາຈຸດທີ່ໝັ້ນແລະຕົວເມືອງທີ່ມີກຳລັງປ້ອງກັນຂອງສັດຕູປານກາງ ແລະສະພາບແວດລ້ອມກໍ່ອຳນວຍໃຫ້ເຂົ້າຍຶດ ກໍ່ສວຍໂອກາດຍຶດເອົາ. ບັນດາ

ຈຸດທີ່ພົ້ນ ແລະ ຕົວເມືອງທີ່ມີກຳລັງປ້ອງກັນຂອງສັດຕູເຂັ້ມແຂງແໜ້ນແກ່ນນັ້ນ ກໍ່ລໍຖ້າເງື່ອນໄຂສຸກງອມແລ້ວຈິ່ງຍຶດເອົາ. (໙) ເອົາອາວຸດທັງໝົດທີ່ຍຶດໄດ້ ແລະ ຄົນສ່ວນຫຼາຍຂອງສັດຕູທີ່ຖືກຈັບເປັນຊະເລີຍເສີກນັ້ນ ມາເພີ່ມຕື່ມໃຫ້ຕົນເອງ. ທີ່ມາຂອງກຳລັງຄົນກຳລັງວັດຖຸຂອງກອງທັບເຮົາ ສຳຄັນແມ່ນຢູ່ທີ່ແນວໜ້າ. (໑໐) ຊ່າງໃຊ້ເວລາເປົ່າຫວ່າງລະຫວ່າງສອງບັ້ນລົບເພື່ອພັກຜ່ອນແລະປັບປຸງອົບຮົມກອງທະຫານ. ເວລາພັກຜ່ອນແລະປັບປຸງອົບຮົມ, ໂດຍທົ່ວໄປແລ້ວ ບໍ່ຄວນເຫິງໂພດ, ພະຍາຍາມສຸດຄວາມສາມາດເຮັດໃຫ້ສັດຕູບໍ່ມີເວລາພັກເອົາແຮງ. ທີ່ເວົ້າມານີ້ແມ່ນວິທີສຳຄັນທີ່ກອງທັບປົດປ່ອຍປະຊາຊົນຜາບແພ້ຈຽງໄຄເຊັກ. ວິທີເຫຼົ່ານີ້ໄດ້ເກີດຂຶ້ນໃນການຫຼໍ່ຫຼອມຂອງກອງທັບປົດປ່ອຍປະຊາຊົນສູ້ລົບກັບສັດຕູທັງໃນແລະນອກປະເທດເປັນເວລາເຫິງນານ ແລະເໝາະສົມກັບສະພາບການສະເພາະໜ້າຂອງພວກເຮົາທຸກປະການ. ...ຍຸດທະສາດແລະຍຸດທະວິທີຂອງພວກເຮົາສ້າງຕັ້ງຢູ່ເທິງພື້ນຖານສົງຄາມປະຊາ

ຊົນອັນນີ້, ກອງທັບໃດໆທີ່ຕ້ານປະຊາຊົນລ້ວນແຕ່ບໍ່ສາມາດໃຊ້ຍຸດທະສາດແລະຍຸດທະວິທີຂອງພວກເຮົາໄດ້.

«ສະຖານະການປັດຈຸບັນແລະພາລະໜ້າທີ່ຂອງພວກເຮົາ» (ວັນທີ່ ໒໕-໑໒-໑໙໔໗)

ມີທ່າແຮງແຕ່ບໍ່ມີການກະກຽມ ກໍ່ບໍ່ແມ່ນທ່າແຮງອັນແທ້ຈິງ, ກໍ່ບໍ່ເປັນເຈົ້າການ. ເມື່ອເຂົ້າໃຈຂໍ້ນີ້ແລ້ວ, ກອງທັບທີ່ຢູ່ໃນທ່າອ່ອນແຕ່ມີການກະກຽມ ກໍ່ມັກຈະສາມາດໂຈມຕີສັດຕູຢ່າງບໍ່ໃຫ້ຮູ້ເນື້ອຄິງແລະຜາບແພ້ຜູ້ຢູ່ໃນທ່າແຮງໄດ້.

«ວ່າດ້ວຍສົງຄາມຍືດເຍື້ອຍາວນານ» (ເດືອນ ໕-໑໙໓໘)

ໝ. ກອງທັບປະຊາຊົນ

ເມື່ອບໍ່ມີກອງທັບຂອງປະຊາຊົນ, ປະຊາຊົນກໍ່ບໍ່ມີຫຽັງໝົດ.

«ວ່າດ້ວຍລັດຖະບານປະສົມ» (ວັນທີ່ ໒໔-໔-໑໙໔໕)

ການທີ່ກອງທັບນີ້ມີກຳລັງ ກໍ່ຍ້ອນວ່າຜູ້ທີ່ເຂົ້າຮ່ວມກອງທັບນີ້ທຸກຄົນ ລ້ວນແຕ່ມີວິໄນຕື່ນຕົວ; ພວກເຂົາເຈົ້າເຕົ້າໂຮມກັນແລະສູ້ລົບ ບໍ່ແມ່ນເພື່ອຮັບໃຊ້ຜົນປະໂຫຽດສ່ວນຕົວຂອງຄົນສ່ວນໜ້ຽຫຼືກຸ່ມຄັບແຄບ, ແມ່ນເພື່ອຜົນປະໂຫຽດຂອງປວງປະຊາຊົນອັນກວ້າງໃຫ່ຽ ເພື່ອຜົນປະໂຫຽດທົ່ວທັງຊາດ. ວັດຖຸປະສົງແຕ່ອັນດຽວຂອງກອງທັບນີ້ແມ່ນຢືນຢູ່ນຳປະຊາຊົນຈີນຢ່າງໜຽວແໜ້ນແລະຮັບໃຊ້ປະຊາຊົນຈີນຢ່າງສຸດອົກສຸດໃຈ.

«ວ່າດ້ວຍລັດຖະບານປະສົມ» (ວັນທີ່ ໒໔-໔-໑໙໔໕)

ກອງທັບແດງຂອງຈີນແມ່ນກຸ່ມປະກອບອາວຸດທີ່ປະຕິບັດພາລະໜ້າທີ່ການເມືອງຂອງການປະຕິວັດ. ໂດຍສະເພາະໃນປັດຈຸບັນນີ້, ກອງທັບແດງບໍ່ແມ່ນເອົາແຕ່ລົບເລວແນວດຽວຢ່າງເດັດຂາດ, ນອກຈາກລົບເລວດັບສູນກຳລັງທະຫານຂອງສັດຕູແລ້ວ ຍັງຕ້ອງຫາບແບກໜ້າທີ່ອັນສຳຄັນຫຼາຍປະການ ເປັນຕົ້ນແມ່ນ ໂຄສະນາມວນຊົນ ຈັດຕັ້ງມວນຊົນ ປະກອບອາວຸດໃຫ້ມວນຊົນ ຊ່ຽເຫຼືອມວນຊົນສ້າງຕັ້ງອຳນາດການປົກຄອງປະຕິວັດຕະຫຼອດຈົນສ້າງຕັ້ງອົງການຈັດຕັ້ງຂອງພັກກອມມູນິດ. ການລົບເລວຂອງກອງທັບແດງ ບໍ່ແມ່ນລົບເລວເພື່ອລົບເລວແຕ່ຢ່າງດຽວ ແມ່ນລົບເລວເພື່ອໂຄສະນາມວນຊົນ ຈັດຕັ້ງມວນຊົນ ປະກອບອາວຸດໃຫ້ມວນຊົນ ທັງຊ່ຽເຫຼືອມວນຊົນກໍ່ສ້າງອຳນາດການປົກຄອງປະຕິວັດ, ຖ້າຫ່າງເຫີນຈາກເປົ້າໝາຍໂຄສະນາມວນຊົນ ຈັດຕັ້ງມວນຊົນ ປະກອບອາວຸດໃຫ້ມວນຊົນ ແລະ ຊ່ຽເຫຼືອມວນຊົນກໍ່ສ້າງອຳນາດການປົກຄອງປະຕິວັດເຫຼົ່ານີ້ແລ້ວ, ການລົບເລວກໍ່ໝົດຄວາມໝາຍແລະການ

ຄົງຕົວຢູ່ຂອງກອງທັບແດງກໍ່ໝົດຄວາມໝາຍ.

«ກ່ຽວກັບການແກ້ໄຂດັດແປງແນວຄິດທີ່ຜິດພາຍໃນພັກ» (ເດືອນ ໑໒-໑໙໒໙)

ກອງທັບປົດປ່ອຍປະຊາຊົນຍາມໃດກໍ່ແມ່ນກອງສູ້ລົບ. ເຖິງວ່າຫຼັງຈາກທົ່ວປະເທດໄດ້ຮັບໄຊຊະນະແລ້ວ, ໃນໄລຍະປະວັດສາດທີ່ບໍ່ທັນດັບສູນຊົນຊັ້ນໃນປະເທດ ແລະ ຍັງມີລະບອບຈັກກະພັດນິຍົມຢູ່ໃນໂລກ, ກອງທັບຂອງພວກເຮົາຍັງແມ່ນກອງສູ້ລົບຢູ່. ສຳລັບຂໍ້ນີ້ບໍ່ຄວນມີຄວາມເຂົ້າໃຈຜິດແລະຄວາມຫວັ່ນໄຫວຄອນແຄນແຕ່ປະການໃດ.

«ຄຳລາຍງານໃນກອງປະຊຸມເຕັມຄະນະເທື່ອທີ່ ໒ ຂອງຄະນະກຳມະການສູນກາງສະໄໝທີ່ ໗ ຂອງພັກກອມມູນິດຈີນ» (ວັນທີ່ ໕-໓-໑໙໔໙)

ພວກເຮົາມີກອງທັບສູ້ລົບ, ທັງມີກອງທັບອອກແຮງງານ. ກອງທັບສູ້ລົບນັ້ນ, ພວກເຮົາມີກອງທັບສາຍທີ່ ໘ ແລະກອງທັບ

ທີ່ ໔ ໃໝ່; ກອງທັບນີ້ກໍ່ຕ້ອງໃຊ້ຕາງສອງກອງ, ດ້ານໜຶ່ງລົບເລວ, ດ້ານໜຶ່ງເຮັດການຜະລິດ. ເມື່ອພວກເຮົາມີກອງທັບສອງກອງນີ້ ແລະ ກອງທັບຂອງພວກເຮົາມີຄວາມສາມາດສອງດ້ານນີ້ ປະກອບກັບຄວາມສາມາດໃນການເຮັດວຽກຂົນຂວາຍມວນຊົນຕື່ມ, ແນວນີ້ແລ້ວ ພວກເຮົາກໍ່ສາມາດຜ່ານຜ່າຄວາມຫຍຸ້ງຍາກແລະຕີຈັກກະພັດນິຍົມຍີ່ປຸ່ນໃຫ້ລົ້ມທະລາຍໄດ້.

«ຈົ່ງຈັດຕັ້ງກັນຂຶ້ນ» (ວັນທີ່ ໒໙-໑໑-໑໙໔໓)

ການປ້ອງກັນປະເທດຂອງພວກເຮົາຈະໄດ້ຮັບການປັບປຸງໃຫ້ໝັ້ນຄົງ, ບໍ່ຍອມໃຫ້ພວກຈັກກະພັດນິຍົມໃດໆມາລຸກລານດິນແດນປະເທດເຮົາອີກ. ກຳລັງປະກອບອາວຸດປະຊາຊົນຂອງພວກເຮົາຈຳຕ້ອງຮັກສາໄວ້ ແລະ ຂະຫຍາຍຕົວເທິງພື້ນຖານຂອງກອງທັບປົດປ່ອຍປະຊາຊົນທີ່ອົງອາດກ້າຫານ ແລະ ໄດ້ຜ່ານການທົດສອບມາແລ້ວ. ພວກເຮົາບໍ່ພຽງແຕ່ຈະມີກອງທັບບົກທີ່ເຂັ້ມແຂງທໍ່ນັ້ນ, ຍັງຈະມີກອງທັບອາກາດທີ່ເຂັ້ມແຂງແລະ

ກອງທັບເຮືອທີ່ເຂັ້ມແຂງອີກ.

ຄຳປາໄສເປີດປະຊຸມໃນກອງປະຊຸມເຕັມຄະນະສະໄໝທີ່ ໑ ຂອງສະພາປຶກສາການເມືອງປະຊາຊົນຈີນ

(ວັນທີ່ ໒໑-໙-໑໙໔໙)

ຫຼັກການຂອງພວກເຮົາແມ່ນພັກບັນຊາປືນ, ບໍ່ຍອມໃຫ້ປືນບັນຊາພັກຢ່າງເດັດຂາດ.

«ບັນຫາສົງຄາມແລະຍຸດທະສາດ» (ວັນທີ່ ໖-໑໑-໑໙໓໘)

ພະນັກງານ ແລະ ນັກລົບທົ່ວກອງທັບເຮົາຕ້ອງຈື່ໃຫ້ຄັກທຸກເມື່ອທຸກຍາມວ່າ ພວກເຮົາແມ່ນກອງທັບປົດປ່ອຍປະຊາຊົນທີ່ຍິ່ງໃຫຍ່, ແມ່ນຖັນແຖວທີ່ພັກກອມມູນິດຈີນອັນຍິ່ງໃຫຍ່ເປັນຜູ້ນຳພາ. ທະແນນແຕ່ພວກເຮົາປະຕິບັດຕາມຄຳຊີ້ແຈງຂອງພັກທຸກເມື່ອທຸກຍາມ, ພວກເຮົາກໍ່ຈະຊະນະຢ່າງແນ່ນອນ.

« ຖະແຫຼງການຂອງກອງທັບປົດປ່ອຍປະຊາຊົນຈີນ »

(ເດືອນ ໑໐-໑໙໔໗)

໑໐. ການນຳຂອງຄະນະກຳມະການພັກ

ລະບອບຄະນະກຳມະການພັກແມ່ນລະບອບສຳຄັນຂອງພັກທີ່ຮັບປະກັນການນຳພາຮວມໝູ່ ປ້ອງກັນບໍ່ໃຫ້ເໝົາວຽກແຕ່ຜູ້ດຽວ. ຕາມການສຳຫຼວດໃນມໍ່ໆນີ້, ມີອົງການນຳພາບາງອົງການ (ແມ່ນອນ ບໍ່ແມ່ນທັງໝົດ) ມີນິດໄສເຄີຍຊິນໃນການເໝົາວຽກແຕ່ຜູ້ດຽວແລະແກ້ໄຂບັນຫາສຳຄັນແຕ່ຜູ້ດຽວຢູ່ຢ່າງໜັກ. ການແກ້ໄຂບັນຫາສຳຄັນບໍ່ແມ່ນຕົກລົງໂດຍກອງປະຊຸມຄະນະກຳມະການພັກ, ແມ່ນຕົກລົງໂດຍຜູ້ດຽວ, ທໍ່ກັບວ່າກຳມະການຂອງຄະນະກຳມະການພັກແຕ່ງຕັ້ງໄວ້ລ້າໆ. ເລື່ອງທີ່ມີຄວາມເຫັນແຕກຕ່າງກັນລະຫວ່າງກຳມະການດ້ວຍກັນ ກໍ່ບໍ່ມີທາງແກ້ໄຂໃຫ້ຕົກໄດ້, ທັງປ່ອຍໃຫ້ຄວາມແຕກຕ່າງກັນເຫຼົ່ານີ້ຄ້າງຄາຢູ່

ເຫິງນານກໍ່ບໍ່ແກ້ໄຂ. ຄວາມເປັນເອກະພາບລະຫວ່າງກຳມະການໃນຄະນະກຳມະການພັກນັ້ນ ພຽງແຕ່ເປັນຮູບຊື່ໆ, ບໍ່ແມ່ນຄວາມເປັນເອກະພາບທາງທາດແທ້. ສະພາບແນວນີ້ຕ້ອງປ່ຽນແປງ. ຕໍ່ນີ້ໄປ, ນັບແຕ່ສາຂາສູນກາງພັກປະຈຳພາກຮອດຄະນະກຳມະການພັກປະຈຳທ້ອງຖິ່ນ, ນັບແຕ່ຄະນະກຳມະການພັກແນວໜ້າຮອດຄະນະກຳມະການພັກກອງພົນນ້ອຍ ແລະ ພາກທະຫານ (ສາຂາຄະນະກຳມະການການທະຫານປະຕິວັດຂອງພັກຫຼືໜ່ວຍນຳພາຂອງພັກ) ຄະນະນຳຂອງພັກປະຈຳອົງການລັດຖະບານ ຄະນະນຳຂອງພັກປະຈຳອົງການຈັດຕັ້ງຂອງປວງປະຊາຊົນ ຄະນະນຳຂອງພັກປະຈຳສຳນັກຂ່າວສານແລະສຳນັກໜັງສືພິມ ລ້ວນແຕ່ຕ້ອງສ້າງຕັ້ງລະບອບການປະຊຸມຄະນະກຳມະການພັກທີ່ສົມບູນຂຶ້ນ, ທຸກບັນຫາສຳຄັນ (ແນ່ນອນບໍ່ແມ່ນບັນຫາເລັກໆນ້ອຍໆທີ່ບໍ່ສຳຄັນຫຼືບັນຫາທີ່ຜ່ານກອງປະຊຸມອະພິປາຍແກ້ຕົກແລ້ວ ພຽງແຕ່ຄອຍຖ້າຈະປະຕິບັດ) ລ້ວນແຕ່ຕ້ອງມອບໃຫ້ຄະນະກຳມະການອະພິປາຍກັນ, ໃຫ້ກຳມະການທີ່ເຂົ້າປະຊຸມນັ້ນ

ອອກຄວາມເຫັນກັນຢ່າງເຕັມທີ່ແລະຕົກລົງກັນຢ່າງຄັກແນ່, ແລ້ວແບ່ງກັນໄປປະຕິບັດ. ...ຄະນະກຳມະການຍັງຕ້ອງແບ່ງເປັນສອງປະເພດຄື ຄະນະກຳມະການປະຈຳແລະຄະນະກຳມະການເຕັມຄະນະ, ຈະສັບປົນຄົນເລກັນບໍ່ໄດ້. ນອກຈາກນີ້, ຍັງຕ້ອງເອົາໃຈໃສ່ການນຳພາຮວມໝູ່ກັບການຮັບຜິດຊອບໂດຍບຸກຄົນ, ສອງດ້ານນີ້ຈະໜັກດ້ານໜຶ່ງ ຖິ້ມດ້ານໜຶ່ງບໍ່ໄດ້. ສຳລັບກອງທະຫານ ເວລາສູ້ລົບແລະເວລາສະພາບຕ້ອງການ, ຜູ້ເປັນຫົວໜ້າມີສິດແກ້ໄຂໃຫ້ທັນການ.

«ກ່ຽວກັບການປັບປຸງລະບອບຄະນະກຳມະການພັກ ໃຫ້ສົມບູນ» (ວັນທີ່ ໒໐-໙-໑໙໔໘)

ເລຂາຂອງຄະນະກຳມະການພັກຕ້ອງຊ່າງເປັນ "ຫົວໜ້າໝູ່". ຄະນະກຳມະການຂອງພັກມີ ໑໐-໒໐ ຄົນກໍ່ປຽບຄືທະຫານໝູ່ໜຶ່ງໃນກອງທັບ, ເລຂາປຽບຄື "ຫົວໜ້າໝູ່". ຢາກຈະນຳພາທະຫານໝູ່ນີ້ໃຫ້ດີ, ແນ່ນອນ ບໍ່ແມ່ນຂອງງ່າຍ. ປັດຈຸບັນນີ້ ບັນດາສາຂາສູນກາງພັກປະຈຳພາກແລະກົ່ງສາຂາ

ສູນກາງພັກປະຈຳພາກ ລ້ວນແຕ່ໄດ້ນຳພາເຂດແດນກວ້າງຂວາງຫຼາຍ, ທາບແບກພາລະໜ້າທີ່ໜັກຫຼາຍ. ວຽກງານນຳພາບໍ່ພຽງແຕ່ຕ້ອງກຳນົດເຂັມທິດນະໂຍບາຍເທົ່ານັ້ນ, ຍັງຕ້ອງຈັດວາງວິທີເຮັດວຽກອັນຖືກຕ້ອງອີກດ້ວຍ. ເມື່ອມີເຂັມທິດນະໂຍບາຍອັນຖືກຕ້ອງແລ້ວ, ຖ້າຫາກເລີນເລີ່ເປີຕົວຕໍ່ວິທີເຮັດວຽກ ກໍ່ຈະເກີດບັນຫາຂຶ້ນອີກ. ຄະນະກຳມະການພັກຈະເຮັດໜ້າທີ່ນຳພາຂອງຕົນໃຫ້ສຳເລັດ ກໍ່ຕ້ອງອາໄສໝົດທັງຄະນະກຳມະການພັກ ຄື "ຄົນທັງໝູ່" ນີ້, ສົ່ງເສີມບົດບາດຂອງພວກເຂົາເຈົ້າຢ່າງເຕັມທີ່. ຄົນເລຂາຢາກເປັນ "ຫົວໜ້າໝູ່" ໃຫ້ໄດ້ດີ ກໍ່ຄວນຮ່ຳຮຽນແລະຄົ້ນຄວ້າໃຫ້ດີ. ເລຂາແລະຮອງເລຂາຖ້າບໍ່ເອົາໃຈໃສ່ເຮັດວຽກງານໂຄສະນາ ແລະ ວຽກງານຈັດຕັ້ງ"ຄົນທັງໝູ່"ຂອງຕົນ ບໍ່ຊ່າງແກ້ໄຂການພົວພັນລະຫວ່າງໂຕເອງກັບກຳມະການ ບໍ່ໄປຄົ້ນຄວ້າວ່າຈະເຮັດແນວໃດໃຫ້ການປະຊຸມໄດ້ຜົນດີແລ້ວ, ຈະບັນຊາ "ຄົນທັງໝູ່" ນີ້ໃຫ້ດີໄດ້ກໍ່ຍາກຫຼາຍ. ຖ້າການກະທຳຂອງ "ຄົນທັງໝູ່" ນີ້ບໍ່ພ້ອມພຽງກັນ

ແລ້ວ ກໍ່ຢ່າຫວັງຈະນຳພາຄົນເປັນລ້ານເປັນໂກດໄປສູ້ລົບແລະໄປສ້າງສາໄດ້. ທຳມະດາແລ້ວ ການພົວພັນລະຫວ່າງເລຂາກັບກຳມະການນັ້ນແມ່ນສ່ວນໜ້ອຍຂຶ້ນກັບສ່ວນຫຼາຍ, ອັນນີ້ຕ່າງກັນກັບການພົວພັນລະຫວ່າງຫົວໜ້າໝູ່ກັບນັກລົບ. ທີ່ເວົ້າມານີ້ພຽງແຕ່ເປັນການປຽບທຽບເທົ່ານັ້ນ.

«ວິທີເຮັດວຽກຂອງຄະນະກຳມະການພັກ» (ວັນທີ ໑໓-໓-໑໙໔໙)

ຕ້ອງເອົາບັນຫາມາແບຢູ່ເທິງໂຕະ. ບໍ່ພຽງແຕ່"ຫົວໜ້າໝູ່"ຕ້ອງເຮັດແນວນີ້, ກຳມະການກໍ່ຕ້ອງເຮັດແນວນີ້. ຢ່າໂຈທະນາລັບຫຼັງ. ເມື່ອມີບັນຫາແລ້ວກໍ່ເປີດປະຊຸມ ເອົາມາແບເທິງໂຕະອະພິປາຍກັນ ກຳນົດອອກຈັກ ໔-໓ ຂໍ້, ບັນຫາກໍ່ແກ້ໄຂຕົກໄດ້. ເມື່ອມີບັນຫາເກີດຂຶ້ນແຕ່ບໍ່ເອົາມາແບເທິງໂຕະ ກໍ່ຈະບໍ່ໄດ້ຮັບການແກ້ໄຂເປັນເວລາເຫິງນານ, ຈົນກະທັ້ງແກ່ຍາວໄປຫຼາຍປີ. "ຫົວໜ້າໝູ່" ກັບກຳມະການຍັງຕ້ອງເຂົ້າໃຈກັນ. ຄວາມເຂົ້າໃຈກັນ ຄວາມຊ່ວຍເຫຼືອກັນແລະຄວາມມີໄມຕີຈິດຕໍ່ກັນລະຫວ່າງ

ເລຂາກັບກຳມະການ ລະຫວ່າງສູນກາງພັກກັບບັນດາສາຂາສູນກາງພັກປະຈຳພາກ ແລະລະຫວ່າງບັນດາສາຂາສູນກາງພັກປະຈຳພາກກັບຄະນະກຳມະການພັກເຂດນັ້ນ ສຳຄັນກວ່າອັນໃດໝົດ.

«ວິທີເຮັດວຽກຂອງຄະນະກຳມະການພັກ» (ວັນທີ ໑໓-໓-໑໙໔໙)

"ແຈ້ງຂ່າວຕໍ່ກັນ". ໝາຍຄວາມວ່າ ລະຫວ່າງບັນດາກຳມະການຂອງຄະນະກຳມະການພັກດ້ວຍກັນຕ້ອງແຈ້ງ ແລະແລກປ່ຽນສະພາບການທີ່ຕົນຮູ້ນັ້ນໃຫ້ກັນ. ອັນນີ້ມີຄວາມສຳຄັນຫຼາຍໃນການເຮັດໃຫ້ມີຄວາມເວົ້າຮ່ວມກັນ. ມີບາງຄົນບໍ່ເຮັດແນວນີ້, ຊ້ຳເຮັດຄືກັບທີ່ເຫຼົາຈື້ເວົ້າວ່າ: "ໝາເຫົ່າໄກ່ຂັນຍັງນັບຮອດ, ຄົນພັດບໍ່ຊອດຫາກັນຈົນວັນຕາຍ", ຜົນສຸດທ້າຍກໍ່ຂາດຄວາມເວົ້າຮ່ວມກັນລະຫວ່າງກັນເອງ.

«ວິທີເຮັດວຽກຂອງຄະນະກຳມະການພັກ» (ວັນທີ ໑໓-໓-໑໙໔໙)

ສິ່ງທີ່ບໍ່ຮູ້ແລະບໍ່ເຂົ້າໃຈຕ້ອງຖາມຂັ້ນລຸ່ມ, ຢ່າສະແດງຄວາມເຫັນດີນຳຫຼືຄັດຄ້ານຢ່າງງ່າຍດາຍ. ...ສິ່ງໃດທີ່ພວກເຮົາບໍ່ຮູ້ ຢ່າຕີເຮັດວ່າຮູ້ຢ່າງເດັດຂາດ, ຕ້ອງ "ຖາມຂັ້ນລຸ່ມຢ່າງບໍ່ຢ້ານອາຍ", ຕ້ອງຊ່າງຫ່ຽງຫູຟັງຄວາມເຫັນຂອງພະນັກງານຂັ້ນລຸ່ມ. ເປັນລູກສິດກ່ອນ ແລ້ວຈຶ່ງເປັນຄູທີຫຼັງ; ຂໍຮຽນນຳພະນັກງານຂັ້ນລຸ່ມກ່ອນ ແລ້ວຈຶ່ງອອກຄຳສັ່ງທີຫຼັງ. ...ຄວາມເວົ້າຂອງພະນັກງານຂັ້ນລຸ່ມ ມີທັງສ່ວນຖືກແລະບໍ່ຖືກ, ຟັງແລ້ວຕ້ອງຈຳແນກແຍກໃຈ້. ສຳລັບຄວາມເຫັນຖືກນັ້ນ ຕ້ອງຟັງແລະເຮັດຕາມດ້ວຍ. ...ສ່ວນຄວາມເຫັນຜິດພາດທີ່ມາຈາກຂັ້ນລຸ່ມນັ້ນກໍ່ຕ້ອງຟັງ, ບໍ່ຟັງຈັກດີ້ແມ່ນບໍ່ຖືກ; ແຕ່ວ່າ ຟັງແລ້ວຫາກບໍ່ເຮັດຕາມແລະຍັງຕ້ອງຕຳນິອີກດ້ວຍ.

«ວິທີເຮັດວຽກຂອງຄະນະກຳມະການພັກ» (ວັນທີ ໑໓-໓-໑໙໔໙)

ຮຽນ "ດີດເປຽໂນ" ໃຫ້ເປັນ. ການດີດເປຽໂນນັ້ນຕ້ອງຕີງທັງສິບນີ້ວ, ບາງນີ້ວຕີງບາງນີ້ວບໍ່ຕີງແມ່ນບໍ່ໄດ້. ແຕ່ວ່າ ຂິ່ມ

ລົງພ້ອມກັນທັງສິບນິ້ວ ກໍ່ບໍ່ເປັນທຳນອງ. ຢາກຈະໃຫ້ເກີດເປັນດົນຕີທີ່ມ່ວນ, ສິບນິ້ວນັ້ນຕ້ອງຕີງໃຫ້ມີຈັງຫວະແລະປະສານກັນ. ຄະນະກຳມະການພັກຕ້ອງກຳວຽກງານໃຈກາງໃຫ້ແໜ້ນ, ທັງຕ້ອງຂະຫຍາຍວຽກງານດ້ານອື່ນ ທີ່ຢູ່ອ້ອມຂ້າງວຽກງານໃຈກາງໄປພ້ອມ. ປັດຈຸບັນນີ້ ພວກເຮົາໄດ້ກຳກັບວຽກງານຫຼາຍດ້ານ, ວຽກງານທ້ອງຖິ່ນຕ່າງໆ ວຽກງານກອງທັບຕ່າງໆແລະວຽກງານໃນພະແນກການຕ່າງໆນັ້ນ ລ້ວນແຕ່ຕ້ອງເອົາໃຈໃສ່ໃຫ້ທົ່ວເຖິງ, ຈະເອົາໃຈໃສ່ແຕ່ບັນຫາສ່ວນໜຶ່ງ ແລ້ວປະສ່ວນອື່ນເສຍບໍ່ໄດ້. ບ່ອນໃດມີບັນຫາແລ້ວ ກໍ່ຕ້ອງດີດເນັ້ນລົງບ່ອນນັ້ນ, ວິທີນີ້ພວກເຮົາຕ້ອງຮຽນໃຫ້ເປັນຢ່າງເດັດຂາດ. ເປຽໂນນັ້ນ, ມີບາງຄົນດີດເກັ່ງ, ມີບາງຄົນດີດບໍ່ເກັ່ງ, ທຳນອງເພງທີ່ຄົນສອງປະເພດນີ້ດີດອອກມານັ້ນຫຼຸດລິ່ນກັນຫຼາຍ. ສະຫາຍໃນກຳມະການພັກຕ້ອງຮຽນ "ດີດເປຽໂນ" ໃຫ້ເກັ່ງ.

«ວິທີເຮັດວຽກຂອງຄະນະກຳມະການພັກ» (ວັນທີ ໑໓-໓-໑໙໔໙)

ຕ້ອງ "ກຳແໜ້ນ". ໝາຍຄວາມວ່າ ສຳລັບວຽກງານສຳຄັນນັ້ນ, ຄະນະກຳມະການພັກບໍ່ພຽງແຕ່ຕ້ອງ"ກຳ"ແທ້, ຍັງຕ້ອງ "ກຳແໜ້ນ" ແທ້ອີກດ້ວຍ. ບໍ່ວ່າສິ່ງໃດໝົດ, ມີແຕ່ກຳໃຫ້ແໜ້ນແທ້ໆ, ບໍ່ຍານມີຈັກໜັປຈຶ່ງສາມາດກຳຢູ່. ກຳແຕ່ບໍ່ແໜ້ນ ກໍ່ທໍ່ກັບບໍ່ກຳ. ແບແຕ່ຝ່າມື, ແນ່ນອນກຳຫຍັງກໍ່ບໍ່ຢູ່. ເຖິງວ່າກຳມືເຂົ້າແລ້ວ, ແຕ່ກຳບໍ່ແໜ້ນ, ເບິ່ງໄປຄືວ່າກຳ, ແຕ່ກໍ່ກຳຫຍັງບໍ່ຢູ່. ສະຫາຍພວກເຮົາບາງຄົນ ກໍ່ກຳວຽກງານສຳຄັນ, ແຕ່ກຳຫາກບໍ່ແໜ້ນ, ດັ່ງນັ້ນ ວຽກງານຈຶ່ງຍັງບໍ່ສາມາດເຮັດໄດ້ດີ. ບໍ່ກຳກໍ່ບໍ່ໄດ້, ກຳຫາກບໍ່ແໜ້ນກໍ່ບໍ່ໄດ້ຄືກັນ.

«ວິທີເຮັດວຽກຂອງຄະນະກຳມະການພັກ» (ວັນທີ ໑໓-໓-໑໙໔໙)

ໃນໃຈມີ "ຕົວເລກ". ໝາຍຄວາມວ່າ ສຳລັບສະພາບການແລະບັນຫານັ້ນ, ແນວໃດກໍ່ຕ້ອງເອົາໃຈໃສ່ດ້ານປະລິມານຂອງມັນ, ຕ້ອງມີການຈຳແນກປະລິມານພື້ນຖານ. ຄຸນະພາບໃດໆກໍ່ຕາມ ລ້ວນແຕ່ສະແດງເປັນປະລິມານອັນແນ່ນອນ, ບໍ່ມີ

ປະລິມານແລ້ວ ກໍ່ບໍ່ມີຄຸນະພາບ. ສະຫາຍພວກເຮົາຫຼາຍຄົນຈົນຮອດດຽວນີ້ຍັງບໍ່ຮູ້ຈັກເອົາໃຈໃສ່ດ້ານປະລິມານຂອງວັດຖຸເຫດການ, ບໍ່ຮູ້ຈັກເອົາໃຈໃສ່ການຄຳນວນຂັ້ນພື້ນຖານແລະອັດຕາສ່ວນຮັປທີ່ສຳຄັນ, ບໍ່ຮູ້ຈັກເອົາໃຈໃສ່ຂອບເຂດປະລິມານທີ່ກຳນົດຄຸນະພາບຂອງວັດຖຸເຫດການ, ທຸກສິ່ງທຸກຢ່າງລ້ວນແຕ່ບໍ່ມີ "ຕົວເລກ" ຢູ່ໃນໃຈ, ຜົນສຸດທ້າຍກໍ່ບໍ່ອາດຈະບໍ່ຜິດພາດ.

«ວິທີເຮັດວຽກຂອງຄະນະກຳມະການພັກ» (ວັນທີ່ ໑໓-໓-໑໙໔໙)

"ປະກາດສະຫງົບໃຈລາສະດອນ". ຈະເປີດປະຊຸມຕ້ອງມີການບອກເລົ່າກ່ອນ, ຄືກັບອອກປະກາດສະຫງົບໃຈລາສະດອນເພື່ອໃຫ້ທຸກຄົນຮູ້ວ່າຈະອະພິປາຍບັນຫາຫຽັງ, ຈະແກ້ໄຂບັນຫາຫຽັງ, ພ້ອມທັງມີການກຽມໄວ້ກ່ອນ. ມີບາງທ້ອງຖິ່ນເປີດປະຊຸມພະນັກງານ, ກ່ອນປະຊຸມບໍ່ໄດ້ກຽມຄຳລາຍງານແລະຮ່າງມະຕິໄວ້ກ່ອນ, ຈົນວ່າຜູ້ເຂົ້າຮ່ວມປະຊຸມມາຮອດແລ້ວຈິ່ງຮີບເຮັດຢ່າງມະລຸບມະລ້ອຍ ຄືກັບ "ຂຸນທານມ້າເສິກມາພ້ອມໜ້າ,

ເຂົ້າປາຫຽ້າເນື້ອຍັງບໍ່ທັນກຽມ", ແນວນີ້ແມ່ນບໍ່ດີ. ຖ້າບໍ່ມີການກຽມ ກໍ່ຢ່າຟ້າວເປີດປະຊຸມ.

«ວິທີເຮັດວຽກຂອງຄະນະກຳມະການພັກ» (ວັນທີ່ ໑໓-໓-໑໙໔໙)

"ກອງທະຫານຕ້ອງແກ່ນກ້າ ອົງການຕ້ອງກະທັດຮັດ".ການເວົ້າອາປາໄສ ການປາຖະກະຖາ ການແຕ່ງບົດຄວາມແລະການຮ່າງມະຕິ ລ້ວນແຕ່ຕ້ອງກະທັດຮັດຈັດແຈ້ງ. ການປະຊຸມກໍ່ຢ່າໃຫ້ຍືດຍາວເກີນໄປ.

«ວິທີເຮັດວຽກຂອງຄະນະກຳມະການພັກ» (ວັນທີ່ ໑໓-໓-໑໙໔໙)

ເອົາໃຈໃສ່ສາມັກຄີກັບສະຫາຍ ທີ່ມີຄວາມເຫັນແຕກຕ່າງກັບຕົນເພື່ອເຮັດວຽກນຳກັນ. ບໍ່ວ່າຢູ່ທ້ອງຖິ່ນຫຼືຢູ່ກອງທະຫານລ້ວນແຕ່ຄວນເອົາໃຈໃສ່ຂໍ້ນີ້. ຕໍ່ບຸກຄົນນອກພັກກໍ່ຄືກັນ. ພວກເຮົາລ້ວນແຕ່ຈາກທຸກທິນທຸກແຫ່ງມາເຕົ້າໂຮມກັນ, ພວກເຮົາ

ບໍ່ພຽງແຕ່ຕ້ອງຊ່າງສາມັກຄີກັບສະຫາຍທີ່ມີຄວາມເຫັນຄືກັບຕົນ ຍັງຕ້ອງຊ່າງສາມັກຄີກັບສະຫາຍທີ່ມີຄວາມເຫັນແຕກຕ່າງກັບຕົນເພື່ອເຮັດວຽກນຳກັນ.

«ວິທີເຮັດວຽກຂອງຄະນະກຳມະການພັກ» (ວັນທີ່ ໑໓-໓-໑໙໔໙)

ພະຍາຍາມລະເວັ້ນຄວາມອວດອົ່ງທະນົງຕົວ. ອັນນີ້ແມ່ນບັນຫາຫຼັກການບັນຫາໜຶ່ງສຳລັບຜູ້ນຳພາ ແລະກໍ່ແມ່ນເງື່ອນໄຂສຳຄັນອັນໜຶ່ງໃນການຮັກສາຄວາມສາມັກຄີ. ເຖິງວ່າຄົນທີ່ບໍ່ເຄີຍຜິດໜັກ ແລະມີຜົນສຳເລັດຢ່າງຫຼວງຫຼາຍໃນວຽກງານແລ້ວກໍ່ຕາມ, ກໍ່ຢ່າອວດອົ່ງທະນົງຕົວ.

«ວິທີເຮັດວຽກຂອງຄະນະກຳມະການພັກ» (ວັນທີ່ ໑໓-໓-໑໙໔໙)

ຂີດເສັ້ນແບ່ງສອງຊະນິດໃຫ້ແຈ້ງ. ກ່ອນອື່ນ, ແມ່ນປະຕິວັດຫຼືຕ້ານປະຕິວັດ? ແມ່ນເມືອງຢຽນອານຫຼືເມືອງຊີອານ? ມີ

ບາງຄົນບໍ່ຮູ້ຈັກວ່າຈະຕ້ອງຂີດເສັ້ນແບ່ງນີ້ໃຫ້ແຈ້ງ. ຕົວຢ່າງຄື ເມື່ອພວກເຂົາເຈົ້າຄັດຄ້ານລັດທິອາດຍາສິດ, ກໍ່ເວົ້າຄືກັບວ່າ ເມືອງຢຽນອານ "ບໍ່ມີອັນດີຈັກດີ", ບໍ່ເອົາລັດທິອາດຍາສິດໃນເມືອງຢຽນອານ ກັບ ລັດທິອາດຍາສິດໃນເມືອງຊີອານມາປຽບທຽບແລະຈຳແນກເບິ່ງ. ອັນນີ້ແມ່ນຜິດພາດໃນຂັ້ນຕົ້ນຕໍ. ອັນທີ່ສອງ, ໃນຖັນແຖວປະຕິວັດ, ຕ້ອງຂີດເສັ້ນແບ່ງລະຫວ່າງຖືກກັບຜິດແລະລະຫວ່າງຜົນງານກັບຂໍ້ບົກພ່ອງໃຫ້ແຈ້ງ, ແລ້ວຍັງຕ້ອງຮູ້ແຈ້ງອີກວ່າ ໃນສິ່ງເຫຼົ່ານີ້ ອັນໃດເປັນສິ່ງສຳຄັນ, ອັນໃດເປັນສິ່ງສຳຮອງ, ຕົວຢ່າງຄື ຜົນງານແມ່ນສາມສ່ວນຫຼືເຈັດສ່ວນແທ້? ເວົ້າໜ້ອຍໄປກໍ່ບໍ່ໄດ້, ເວົ້າຫຼາຍໄປກໍ່ບໍ່ໄດ້. ວຽກງານຂອງຄົນຜູ້ໜຶ່ງໄດ້ຜົນງານສາມສ່ວນຜິດພາດເຈັດສ່ວນ ຫຼືວ່າໄດ້ຜົນງານເຈັດສ່ວນຜິດພາດສາມສ່ວນ, ຕ້ອງມີການຕີລາຄາໃນຂັ້ນພື້ນຖານ. ຖ້າວ່າ ມີຜົນງານເຈັດສ່ວນແລ້ວ ກໍ່ຄວນຮັບຮູ້ວຽກງານຂອງພວກເຂົາເຈົ້າໃນຂັ້ນພື້ນຖານ. ຖ້າຜົນງານເປັນສ່ວນສຳຄັນຊ້ຳພັດເວົ້າວ່າຄວາມຜິດພາດເປັນສ່ວນສຳຄັນ ກໍ່

ຜິດພາດ. ເວລາພວກເຮົາສັງເກດບັນຫານັ້ນ ແນວໃດກໍ່ຢ່າລືມຂີດເສັ້ນແບ່ງສອງຊະນິດນີ້ໃຫ້ແຈ້ງ ຄື: ເສັ້ນແບ່ງລະຫວ່າງປະຕິວັດກັບຕ້ານປະຕິວັດແລະເສັ້ນແບ່ງລະຫວ່າງຜົນງານ ກັບຂໍ້ບົກພ່ອງ. ເມື່ອຈື່ຈຳເສັ້ນແບ່ງສອງເສັ້ນນີ້ແລ້ວ ວຽກງານກໍ່ເຮັດໄດ້ສະດວກ, ຖ້າບໍ່ດັ່ງນັ້ນ ກໍ່ຈະເຮັດໃຫ້ຄຸນລັກສະນະຂອງບັນຫາສັບປົນຄົນເລກັນ. ທຳມະດາແລ້ວ ເມື່ອຢາກຂີດເສັ້ນແບ່ງໃຫ້ແຈ້ງ ກໍ່ຕ້ອງຜ່ານການຄົ້ນຄວ້າແລະການຈຳແນກຢ່າງລະອຽດຖີ່ຖ້ວນ. ຕໍ່ທຸກຄົນແລະທຸກເລື່ອງ, ພວກເຮົາລ້ວນແຕ່ຄວນໃຊ້ທ່າທີຈຳແນກຄົ້ນຄວ້າທັງນັ້ນ.

«ວິທີເຮັດວຽກຂອງຄະນະກຳມະການພັກ» (ວັນທີ່ ໑໓-໓-໑໙໔໙)

ໃນດ້ານການຈັດຕັ້ງ, ໃຫ້ດຳເນີນຊີວິດປະຊາທິປະໄຕພາຍໃຕ້ການຊີ້ນຳຮວມສູນຢ່າງເຄັ່ງຄັດຕາມແນວທາງດັ່ງນີ້:

໑. ອົງການນຳພາຂອງພັກຕ້ອງມີແນວທາງຊີ້ນຳຖືກຕ້ອງ, ເມື່ອພົບບັນຫາຕ້ອງມີວິທີແກ້ ເພື່ອສ້າງໃຈກາງການນຳພາຂຶ້ນ.

໒. ອົງການຂັ້ນເທິງຕ້ອງຮູ້ແຈ້ງສະພາບອົງການຂັ້ນລຸ່ມແລະສະພາບຊີວິດການເປັນຢູ່ຂອງມວນຊົນ ເພື່ອໃຫ້ເປັນພື້ນຖານພາວະວິໄສຂອງການຊີ້ນຳອັນຖືກຕ້ອງ.

໓. ເມື່ອແກ້ໄຂບັນຫາ, ອົງການຂອງພັກທຸກຂັ້ນບໍ່ຄວນເຮັດຢ່າງມັກງ່າຍ. ເມື່ອເປັນມະຕິແລ້ວກໍ່ຕ້ອງປະຕິບັດຢ່າງເດັດດ່ຽວ.

໔. ມະຕິຂອງອົງການຂັ້ນເທິງ, ອັນໃດທີ່ອ່າວສຳຄັນແດ່ຕ້ອງເຜີຍແຜ່ໃຫ້ຮອດອົງການຂັ້ນລຸ່ມ ແລະ ມວນສະມາຊິກພັກຢ່າງໄວວາ. ...

໕. ອົງການຂັ້ນລຸ່ມຂອງພັກ ແລະ ມວນສະມາຊິກພັກຕ້ອງອະທິບາຍຄຳຊີ້ແຈງຂອງອົງການຂັ້ນເທິງຢ່າງລະອຽດຖີ່ຖ້ວນເພື່ອໃຫ້ເຂົ້າໃຈຄວາມໝາຍຂອງຄຳຊີ້ແຈງຢ່າງເຖິງຖອງ ທັງກຳນົດວິທີປະຕິບັດຄຳຊີ້ແຈງນັ້ນພ້ອມ.

«ກ່ຽວກັບການແກ້ໄຂດັດແປງແນວຄິດທີ່ຜິດພາຍໃນພັກ» (ເດືອນ ໑໒-໑໙໒໙)

໑໑. ແນວທາງມວນຊົນ

ປະຊາຊົນ, ມີແຕ່ປະຊາຊົນເທົ່ານັ້ນ ຈຶ່ງແມ່ນແມ່ແຮງສ້າງປະວັດສາດໂລກ.

«ວ່າດ້ວຍລັດຖະບານປະສົມ» (ວັນທີ ໒໔-໔-໑໙໔໕)

ມວນຊົນແມ່ນວິລະຊົນທີ່ແທ້ຈິງ, ສ່ວນໂຕພວກເຮົາຊ້ຳແມ່ນຜູ້ອ່ອນຮູ້ເປັນຕາໜ້າຫົວສະເພີ, ບໍ່ເຂົ້າໃຈຂໍ້ນີ້ແລ້ວ ກໍ່ບໍ່ສາມາດໄດ້ຄວາມຮູ້ຂັ້ນຕົ້ນ.

«ຄຳນຳແລະຄຳຕໍ່ທ້າຍຂອງບົດຄວາມເລື່ອງ "ການສຳຫຼວດຊົນນະບົດ"» (ເດືອນ ມ.໔-໑໙໔໑)

ປວງປະຊາຊົນມີກຳລັງປະດິດສ້າງທີ່ບໍ່ສຸດສິ້ນ. ພວກເຂົາເຈົ້າສາມາດຈັດຕັ້ງກັນຂຶ້ນ, ຍົກທັບໄປສູ່ທຸກບ່ອນແລະທຸກ

ພະແນກການທີ່ສາມາດໃຊ້ກຳລັງຂອງຕົນໄດ້, ຍົກທັບໄປສູ່ທາງເລິກແລະທາງກ້ວາງຂອງການຜະລິດ, ເພື່ອສ້າງການສະຫວັດດີການໃຫ້ແກ່ຕົນເອງນັບມື້ນັບຫຼາຍຂຶ້ນ.

ໝາຍເຫດໃນບົດຄວາມເລື່ອງ «ແຮງງານທີ່ເຫຼືອໃຊ້ຫາທາງອອກໄດ້ແລ້ວ» (ປີ ໑໙໕໕)

ຄວາມຈະເລີນຂຶ້ນຂອງຂະບວນເຄື່ອນໄຫວຂອງຊາວນາໃນປັດຈຸບັນແມ່ນບັນຫາໃຫຍ່ທີ່ສຸດ. ໃນໄລຍະເວລາອັນສັ້ນໆ ຈະມີຊາວນາຫຼາຍຮ້ອຍລ້ານຄົນລຸກຂຶ້ນຈາກແຂວງຕ່າງໆທາງພາກກາງ ພາກໃຕ້ແລະພາກເໜືອຂອງປະເທດຈີນດ້ວຍທີທ່າປານພ້າຝົນລົມແດງ ອ່ອງໄອຮຸນແຮງພິລຶກ, ບໍ່ວ່າກຳລັງໃຫຍ່ປານໃດກໍ່ຈະກີດເຕັງມັນບໍ່ຢູ່. ພວກເຂົາເຈົ້າຈະບຸກທຳລາຍຊີກໂສ້ຂື່ຄາທັງໝົດທີ່ຜູກມັດຮັດຕົວພວກເຂົາເຈົ້າ ແລ້ວແລ່ນໄປຫາທາງປົດປ່ອຍຢ່າງອ່ອງໄອ. ຈັກກະພັດນິຍົມ ຂຸນເສິກ ພວກສໍ້ລາດບັງຫຼວງ ເຈົ້າຖິ່ນຊົ່ວຊ້າແລະອາດຍາອັນທະພານທັງໝົດ ຈະຖືກພວກເຂົາເຈົ້າກວາດເຂົ້າຂຸມຝັງສົບໝົດ. ທຸກພັກຝ່າຍທີ່

ປະຕິວັດ, ບັນດາສະຫາຍທີ່ປະຕິວັດ ລ້ວນແຕ່ຈະຖືກກວດສອບຢູ່ຕໍ່ໜ້າພວກເຂົາເຈົ້າເພື່ອໃຫ້ພວກເຂົາເຈົ້າຕັດສິນວ່າ ຈະຮັບເອົາຫຼືປະຖິ້ມ. ເຈົ້າຈະຢືນຢູ່ທາງໜ້າພວກເຂົາເຈົ້ານຳພາພວກເຂົາເຈົ້າ? ຫຼືຈະຢືນຢູ່ທາງຫຼັງພວກເຂົາເຈົ້າຊີ້ຕີນຊີ້ມືຕຳນິພວກເຂົາເຈົ້າ? ຫຼືຢືນຢູ່ຝ່າຍກົງກັນຂ້າມກັບພວກເຂົາເຈົ້າຄັດຄ້ານພວກເຂົາເຈົ້າ? ໓ ປະການນີ້, ຊາວຈີນທຸກຄົນກໍ່ລ້ວນແຕ່ມີສິດເສລີເລືອກເອົາ, ແຕ່ວ່າ ສະຖານະການຈະບັງຄັບໃຫ້ເຈົ້າເລືອກເອົາໂດຍດ່ວນທີ່ນັ້ນແລ້ວ.

«ລາຍງານການສຳຫຼວດຂະບວນເຄື່ອນໄຫວຂອງ
ຊາວນາແຂວງຫູໜານ» (ເດືອນ ໓-໑໙໒໗)

ປັດຈຸບັນນີ້ ກະແສສູງຂອງການເປັນແບບສະຫະກອນອັນເປັນການປະຕິວັດດັດແປງທາງສັງຄົມຢູ່ຊົນນະບົດ ໄດ້ປາກົດຂຶ້ນໃນບາງທ້ອງຖິ່ນແລ້ວ ແລະກໍ່ຈະປາກົດຂຶ້ນທົ່ວປະເທດໃນໄວໆນີ້. ອັນນີ້ແມ່ນການເຄື່ອນໄຫວປະຕິວັດສັງຄົມນິຍົມຢ່າງຂະໜາດໃຫຽ່ຂອງພົນລະເມືອງໃນຊົນນະບົດກວ່າ ໕໐໐ ລ້ານ

ຄົນອັນມີຄວາມໝາຍສາກົນທີ່ຍິ່ງໃຫຽ່ທີ່ສຸດ. ພວກເຮົາຕ້ອງໄປນຳພາການເຄື່ອນໄຫວນີ້ຢ່າງຫ້າວຫັນ ຢ່າງມີຄວາມເຮັ່ງຮ້ອນແລະຢ່າງມີແຜນການ, ບໍ່ແມ່ນໃຊ້ວິທີຕ່າງໆໄປດຶງໃຫ້ມັນຖອຍຫຼັງ. ການເກີດຄວາມພັ້ງພາດຂຶ້ນບາງຢ່າງໃນການເຄື່ອນໄຫວນັ້ນແມ່ນຫຼີກເວັ້ນບໍ່ໄດ້, ອັນນີ້ເປັນສິ່ງທີ່ສາມາດເຂົ້າໃຈໄດ້ແລະແກ້ໄຂດັດແປງກໍ່ບໍ່ຍາກ. ສຳລັບຂໍ້ບົກພ່ອງຫຼືຄວາມຜິດພາດທີ່ມີຢູ່ໃນໝູ່ພະນັກງານແລະຊາວນານັ້ນ, ທະແນນແຕ່ພວກເຮົາໄປຊ່ວຍເຫຼືອພວກເຂົາເຈົ້າຢ່າງຂະຫຽັນຫ້າວຫັນ ກໍ່ສາມາດຜ່ານຜ່າຫຼືແກ້ໄຂດັດແປງໄດ້.

«ບັນຫາກ່ຽວກັບການຈັດຕັ້ງກະເສດຕະກຳໃຫ້ເປັນ
ແບບສະຫະກອນ» (ວັນທີ່ ໓໑-໗-໑໙໕໕)

ໃນມວນຊົນໄດ້ມີຄວາມຂະຫຽັນຫ້າວຫັນແບບສັງຄົມນິຍົມອັນລົ້ນເຫຼືອທີ່ສຸດແຝງຢູ່. ໃນສະໄໝປະຕິວັດ, ຄົນທີ່ຮູ້ແຕ່ຢ່າງໄປຕາມລະບຽບປົກກະຕິນັ້ນ ບໍ່ເຫັນຄວາມຂະຫຽັນຫ້າວຫັນ

ຊະນິດນີ້ຈັກດີ້. ພວກເຂົາເຈົ້າເປັນຄົນຕາບອດ, ສິ່ງທີ່ປາກົດຢູ່ຕໍ່ໜ້າພວກເຂົາເຈົ້າແມ່ນມືດມົນໝົດ. ບາງເທື່ອພວກເຂົາເຈົ້າເຮັດຈົນເຖິງຂັ້ນປີ້ນຖືກເປັນຜິດ, ປີ້ນຂາວເປັນດຳ. ຄົນປະເພດນີ້ພວກເຮົາໄດ້ພົບເຫັນຍັງແມ່ນໜ້ອຍຫວາ? ຄົນທີ່ຮູ້ແຕ່ຢ່າງໄປຕາມລະບຽບປົກກະຕິເຫຼົ່ານີ້ ມັກຕິລາຄາຄວາມຂະຫຍັນຫ້າວຫັນຂອງປະຊາຊົນຕ່ຳໂພດ. ພໍມີສິ່ງໃໝ່ໆປາກົດຂຶ້ນ, ພວກເຂົາເຈົ້າມັກຈະບໍ່ເຫັນດີນຳ, ຫົວທີຄັດຄ້ານສາກ່ອນ. ຕໍ່ມາກໍ່ຍອມແລະຕຳນິຕົນເອງເລັກນ້ອຍ. ພໍມີສິ່ງໃໝ່ອີກສິ່ງໜຶ່ງປາກົດຂຶ້ນ, ພວກເຂົາເຈົ້າກໍ່ຈະເຮັດຊ້ຳຕາມທ່າທີສອງຊະນິດນີ້ອີກເທື່ອໜຶ່ງ. ຕໍ່ມາສິ່ງໃໝ່ໆຊະນິດອື່ນໆປາກົດຂຶ້ນ, ພວກເຂົາເຈົ້າກໍ່ປະຕິບັດຕາມແບບນີ້ທັງນັ້ນ. ຄົນປະເພດນີ້ມັກຕົກຢູ່ໃນທ່າຮັບເລື້ອຍໆ, ໃນຍາມຫົວລ້ຽວຫົວຕໍ່ກໍ່ມັກຢຸດຢູ່ບໍ່ກ້າວ, ມັກຕ້ອງການໃຫ້ຜູ້ອື່ນຟາດຫຼັງແຮງໆບາດໜຶ່ງ ຈຶ່ງຍອມກ້າວໄປໜ້າບາດໜຶ່ງ.

ໝາຍເຫດໃນບົດຄວາມເລື່ອງ «ຕາແສງນີ້ໃນສອງປີກໍ່ໄດ້ຈັດຕັ້ງເປັນແບບສະຫະກອນແລ້ວ» (ປີ ໑໙໕໕)

ໃນ ໔໐ ກວ່າປີມານີ້, ພັກເຮົາເຮັດວຽກຂົນຂວາຍມວນຊົນຊູ່ມື້, ໃນ ໑໐ ກວ່າປີມານີ້, ໄດ້ເວົ້າຮອດແນວທາງມວນຊົນຊູ່ມື້. ແຕ່ໃດມາ ພວກເຮົາມີຄວາມເຫັນວ່າ ການປະຕິວັດຕ້ອງອາໄສປວງປະຊາຊົນ, ໝົດທຸກຄົນລົງມືເຮັດ, ຄັດຄ້ານການອາໄສແຕ່ຄົນສ່ວນໜ້ອຍອອກຄຳສັ່ງ. ແຕ່ວ່າ ໃນວຽກງານຂອງສະຫາຍຈຳນວນໜຶ່ງ ຍັງບໍ່ສາມາດປະຕິບັດແນວທາງມວນຊົນ, ພວກເຂົາເຈົ້າຍັງຄົງອາໄສແຕ່ຄົນຈຳນວນໜ້ອຍເຮັດວຽກຢ່າງງຽບເຫງົາເປົ່າປ່ຽວ. ສາຍເຫດອັນໜຶ່ງກໍ່ແມ່ນ ເມື່ອພວກເຂົາເຈົ້າເຮັດວຽກອັນໃດອັນໜຶ່ງ, ມັກບໍ່ຍອມອະທິບາຍແກ່ຜູ້ທີ່ຢູ່ໃຕ້ການນຳພາໃຫ້ແຈ້ງ, ບໍ່ຮູ້ຈັກສົ່ງເສີມຄວາມຂະຫຍັນຫ້າວຫັນແລະກຳລັງປະດິດສ້າງຂອງຜູ້ທີ່ຢູ່ໃຕ້ການນຳພາ. ທາງໃນຕົວ, ພວກເຂົາເຈົ້າກໍ່ຢາກໃຫ້ໝົດທຸກຄົນລົງມືເຮັດ, ແຕ່ບໍ່ໃຫ້ຄົນທັງຫຼາຍຮູ້ວ່າ ວຽກທີ່ຈະເຮັດນັ້ນແມ່ນວຽກແນວໃດ, ຄວນເຮັດແນວໃດ, ເມື່ອເປັນແນວນີ້ແລ້ວ, ຄົນທັງຫຼາຍຈະລົງມືເຮັດໄດ້ແນວໃດ ແລະຈະເຮັດວຽກໃຫ້ດີໄດ້ແນວໃດ? ຢາກແກ້

ໄຂບັນຫານີ້, ແນ່ນອນ ໂດຍຮາກຖານແລ້ວ ຕ້ອງດຳເນີນການອົບຮົມທາງແນວຄິດກ່ຽວກັບແນວທາງມວນຊົນ, ພ້ອມກັນນັ້ນກໍ່ຕ້ອງສອນວິທີຕົວຈິງຫຼາຍຢ່າງໃຫ້ແກ່ບັນດາສະຫາຍ.

«ສົນທະນາກັບພະນັກງານກອງບັນນາທິການໜັງສືພິມຈິນສຸຍລາຍວັນ» (ວັນທີ່ ໒-໔-໑໙໔໘)

ບົດຮຽນໃນ ໒໔ ປີໄດ້ບອກໃຫ້ພວກເຮົາຮູ້ວ່າ ພາລະໜ້າທີ່ ນະໂຍບາຍແລະທ່າທ່ວງເຮັດວຽກໃດໆທີ່ຖືກຕ້ອງນັ້ນ ລ້ວນແຕ່ສອດຄ້ອງກັບຄວາມຮຽກຮ້ອງຕ້ອງການຂອງມວນຊົນໃນເວລານັ້ນແລະໃນບ່ອນນັ້ນ, ລ້ວນແຕ່ພົວພັນກັບມວນຊົນ; ພາລະໜ້າທີ່ ນະໂຍບາຍແລະທ່າທ່ວງເຮັດວຽກໃດໆທີ່ຜິດພາດນັ້ນ ລ້ວນແຕ່ບໍ່ສອດຄ້ອງກັບຄວາມຮຽກຮ້ອງຕ້ອງການຂອງມວນຊົນໃນເວລານັ້ນແລະໃນບ່ອນນັ້ນ, ລ້ວນແຕ່ຫ່າງເຫີນຈາກມວນຊົນ. ການທີ່ວ່າພະຍາດລັດທິຄຳພີ ລັດທິບົດຮຽນ ລັດທິຄຳສັ່ງ ລັດທິລໍຕາມ ລັດທິພັກພວກ ລັດທິອາດຍາສິດແລະທ່າທີເຮັດວຽກແບບອອດອ້ອງທະນົງຕົວເຫຼົ່ານີ້ບໍ່ດີແທ້ໆ,

ຕ້ອງປະນັນຖິ້ມຢ່າງແນ່ນອນ, ຖ້າຜູ້ໃດຕິດພະຍາດຊະນິດນີ້ແລ້ວ ແນວໃດກໍ່ຕ້ອງແກ້ໄຂນັ້ນ ກໍ່ຍ້ອນວ່າພະຍາດເຫຼົ່ານີ້ພາໃຫ້ຫ່າງເຫີນມວນຊົນ.

«ວ່າດ້ວຍລັດຖະບານປະສົມ» (ວັນທີ່ ໒໔-໔-໑໙໔໕)

ຢາກພົວພັນກັບມວນຊົນ ກໍ່ຕ້ອງເຮັດຕາມຄວາມຕ້ອງການແລະຄວາມສະໝັກໃຈຂອງມວນຊົນ. ວຽກງານທັງໝົດທີ່ເຮັດເພື່ອມວນຊົນລ້ວນແຕ່ຕ້ອງເລີ່ມຈາກຄວາມຕ້ອງການຂອງມວນຊົນ, ບໍ່ແມ່ນເລີ່ມຈາກຄວາມປາຖະໜາອັນດີງາມໃດໆຂອງສ່ວນບຸກຄົນ. ມີຫຼາຍເທື່ອ, ທາງນອກຕົວ ເຖິງວ່າມວນຊົນໄດ້ມີຄວາມຕ້ອງການປະຕິວັດດັດແປງອັນໃດອັນໜຶ່ງ, ແຕ່ດ້ານໃນຕົວຂອງພວກເຂົາເຈົ້າຍັງບໍ່ທັນມີຄວາມຕື່ນຕົວແນວນີ້, ມວນຊົນຍັງບໍ່ທັນຕັດສິນໃຈ, ຍັງບໍ່ຍິນດີດຳເນີນການປະຕິວັດດັດແປງ, ພວກເຮົາກໍ່ຕ້ອງຄອຖ້າຢ່າງອົດທົນ; ຈົນຮອດພວກເຮົາໄດ້ເຮັດວຽກຂົນຂວາຍແລ້ວ, ມວນຊົນສ່ວນຫຼາຍໄດ້ມີຄວາມຕື່ນຕົວ ມີຄວາມຕັດສິນໃຈແລະສະໝັກໃຈດຳເນີນການປະຕິວັດ

ດັດແປງແລ້ວ. ຈຶ່ງຄ່ອຍດຳເນີນການປະຕິວັດດັດແປງແນວນີ້, ຖ້າບໍ່ເຮັດດັ່ງນັ້ນ ກໍ່ຈະຫ່າງເຫີນຈາກມວນຊົນ. ວຽກງານອັນໃດທີ່ຕ້ອງການໃຫ້ມວນຊົນເຂົ້າຮ່ວມນັ້ນ, ຖ້າບໍ່ມີຄວາມຕື່ນຕົວແລະຄວາມສະໝັກໃຈຂອງມວນຊົນ ກໍ່ຈະເປັນພຽງແຕ່ຮູບແບບຊື່ໆແລ້ວປະລາໄຊ. ...ຢູ່ນີ້ມີຫຼັກການສອງຂໍ້: ຂໍ້ໜຶ່ງແມ່ນຄວາມຕ້ອງການໃນພາກຕົວຈິງຂອງມວນຊົນ, ບໍ່ແມ່ນຄວາມຕ້ອງການທີ່ເກີດຈາກຄວາມໃຝ່ຝັນໃນສະໝອງຂອງພວກເຮົາ; ອີກຂໍ້ໜຶ່ງແມ່ນຄວາມສະໝັກໃຈຂອງມວນຊົນ, ໃຫ້ມວນຊົນຕັດສິນໃຈເອງ, ບໍ່ແມ່ນພວກເຮົາຕັດສິນໃຈແທນມວນຊົນ.

«ແນວໂຮມໃນວຽກງານວັດທະນະທຳ» (ວັນທີ ໓໐-໑໐-໑໙໔໔)

ກອງປະຊຸມໃຫຍ່ຜູ້ແທນຂອງພວກເຮົາຕ້ອງຮຽກຮ້ອງໃຫ້ທົ່ວພັກຍົກສະຕິລະວັງຕົວໃຫ້ສູງ, ເອົາໃຈໃສ່ສະຫາຍທຸກຄົນທີ່ຢູ່ໃນທຸກຕັ່ອງວຽກງານ, ຢ່າໃຫ້ເຂົາເຈົ້າຫ່າງເຫີນຈາກມວນຊົນ.

ຕ້ອງອົບຮົມສະຫາຍທຸກຄົນໃຫ້ຮັກແພງປວງປະຊາຊົນ, ຕັ້ງອົກຕັ້ງໃຈຫ່ຽງຫູຟັງສຽງຮຽກຮ້ອງຂອງມວນຊົນ; ເມື່ອໄປຮອດບ່ອນໃດ ກໍ່ໃຫ້ສະໜິດຕິດແທດເປັນປຶກແຜ່ນດຽວກັບມວນຊົນໃນບ່ອນນັ້ນ, ບໍ່ແມ່ນຕີຕົວຢູ່ເໜືອມວນຊົນ, ຕ້ອງເຂົ້າເລິກໃນໝູ່ມວນຊົນ; ອີງຕາມລະດັບຕື່ນຕົວຂອງມວນຊົນ ໄປປຸກລຸກແລະຍົກຄວາມຕື່ນຕົວຂອງມວນຊົນໃຫ້ສູງຂຶ້ນ, ຊ່ອຍເຫຼືອມວນຊົນຈັດຕັ້ງກັນຂຶ້ນເທື່ອລະກ້າວ ພາຍໃຕ້ຫຼັກການທີ່ມວນຊົນສະໝັກໃຈແທ້ໆ ແລ້ວຂະຫຍາຍການຕໍ່ສູ້ອັນຈຳເປັນທຸກຢ່າງເທື່ອລະກ້າວຕາມສະພາບແວດລ້ອມພາຍໃນແລະພາຍນອກໃນເວລານັ້ນແລະໃນບ່ອນນັ້ນອຳນວຍໃຫ້.

«ວ່າດ້ວຍລັດຖະບານປະສົມ» (ວັນທີ ໒໔-໔-໑໙໔໕)

ໃນເມື່ອມວນຊົນຍັງບໍ່ທັນຕື່ນຕົວ, ພວກເຮົາຈະບຸກຕີ, ນັ້ນແມ່ນລັດທິສ່ຽງໄພ. ເລື່ອງທີ່ມວນຊົນບໍ່ຍິນດີເຮັດ, ພວກເຮົາຂືນຈະນຳພາພວກເຂົາເຈົ້າໄປເຮັດ, ຜົນສຸດທ້າຍຍ່ອມປະລາໄຊຢ່າງແນ່ນອນ. ເມື່ອມວນຊົນຮຽກຮ້ອງໃຫ້ກ້າວໄປໜ້າ, ພວກ

ເຮົາບໍ່ກ້າວໄປ, ອັນນັ້ນແມ່ນລັດທິສວຍໂອກາດທາງຂວາ.

«ສົນທະນາກັບພະນັກງານກອງບັນນາທິການໜັງສືພິມຈິນສຸຍລາຍວັນ» (ວັນທີ່ ໒-໔-໑໙໔໘)

ໃນທຸກວຽກງານ, ລັດທິຄຳສັ່ງແມ່ນຜິດພາດ, ເພາະວ່າມັນໄດ້ເກີນກາຍລະດັບຕື່ນຕົວຂອງມວນຊົນ, ຝ່າຝືນຫຼັກການສະໝັກໃຈຂອງມວນຊົນ, ເປັນພະຍາດໃຈຮ້ອນ. ສະຫາຍພວກເຮົາຢ່ານຶກວ່າ ສິ່ງທີ່ຕົນເອງເຂົ້າໃຈແລ້ວນັ້ນ, ມວນຊົນອັນກວ້າງໃຫຍ່ກໍ່ເຂົ້າໃຈຄືກັບຕົນໝົດ. ມວນຊົນເຂົ້າໃຈຫຼືບໍ່ແລະຍິນດີໄປເຮັດຫຼືບໍ່, ຕ້ອງໄປສຳຫຼວດກວດກາຢູ່ໃນມວນຊົນຈິ່ງຈະຮູ້ໄດ້. ຖ້າພວກເຮົາເຮັດແນວນີ້ ກໍ່ຈະຫຼີກເວັ້ນລັດທິຄຳສັ່ງໄດ້. ໃນທຸກວຽກງານ, ລັດທິລປຕາມກໍ່ຜິດພາດຄືກັນ, ເພາະວ່າມັນຫຼ້າຫຼັງກວ່າລະດັບຄວາມຕື່ນຕົວຂອງມວນຊົນ, ຝ່າຝືນຫຼັກການທີ່ນຳພາມວນຊົນກ້າວໜ້າໄປອີກກ້າວໜຶ່ງ, ເປັນພະຍາດຫຼ້າຊ້າ. ສະຫາຍພວກເຮົາຢ່ານຶກວ່າ ສິ່ງທີ່ຕົນເອງຍັງບໍ່ທັນເຂົ້າໃຈນັ້ນ, ມວນຊົນກໍ່ບໍ່ເຂົ້າໃຈຫຍັງຈັກດີ້. ມີຫຼາຍເທື່ອ,

ມວນຊົນອັນກວ້າງໃຫຍ່ໄດ້ແລ່ນໄປໜ້າພວກເຮົາແລ້ວ, ຕ້ອງການກ້າວໄປໜ້າຢ່າງຮີບດ່ວນອີກກ້າວໜຶ່ງ, ແຕ່ສະຫາຍພວກເຮົາບໍ່ສາມາດເປັນຜູ້ນຳພາຂອງມວນຊົນອັນກວ້າງໃຫຍ່, ຊ້ຳພັດສ່ອງແສງຄວາມເຫັນຂອງພວກຫຼ້າຫຼັງສ່ວນໜຶ່ງ, ທັງເຂົ້າໃຈຜິດວ່າ ຄວາມເຫັນຂອງພວກຫຼ້າຫຼັງນີ້ເປັນຄວາມເຫັນຂອງມວນຊົນອັນກວ້າງໃຫຍ່, ເລີຍກາຍເປັນຫາງຂອງພວກຫຼ້າຫຼັງ.

«ວ່າດ້ວຍລັດຖະບານປະສົມ» (ວັນທີ່ ໒໔-໔-໑໙໔໕)

ຮວບຮວມຂຶ້ນມາຈາກມວນຊົນ ແລ້ວເອົາໄປຢຶດໝັ້ນປະຕິບັດໃນໝູ່ມວນຊົນ ເພື່ອປະກອບຂຶ້ນເປັນຄວາມເຫັນນຳພາອັນຖືກຕ້ອງ, ອັນນີ້ແມ່ນວິທີນຳພາຂັ້ນພື້ນຖານ.

« ບັນຫາບາງຂໍ້ກ່ຽວກັບວິທີນຳພາ » (ວັນທີ່ ໑-໖-໑໙໔໓)

ໃນວຽກງານຕົວຈິງທັງໝົດຂອງພັກເຮົາ, ການນຳພາໃດໆທີ່ຖືກຕ້ອງ ຕ້ອງມາຈາກມວນຊົນ ແລ້ວໄປສູ່ມວນຊົນ. ອັນນີ້ກໍ່ໝາຍຄວາມວ່າ ເອົາຄວາມເຫັນຂອງມວນຊົນ (ຄວາມເຫັນ

ທີ່ກະແຈກກະຈາຍບໍ່ເປັນລະບົບ) ຮວບຮວມຂຶ້ນມາ (ຜ່ານການຄົ້ນຄວ້າໃຫ້ກາຍເປັນຄວາມເຫັນທີ່ຮວມສູນ ແລະ ເປັນລະບົບ) ແລ້ວນຳໄປໂຄສະນາອະທິບາຍໃນໝູ່ມວນຊົນ, ໃຫ້ກາຍເປັນຄວາມເຫັນຂອງມວນຊົນ, ໃຫ້ມວນຊົນຍຶດໝັ້ນປະຕິບັດຕໍ່ໄປ, ໃຫ້ປາກົດຂຶ້ນໃນການກະທຳ, ທັງທົດສອບຄວາມຄິດຄວາມເຫັນເຫຼົ່ານີ້ໃນການກະທຳຂອງມວນຊົນວ່າຖືກຕ້ອງຫຼືບໍ່. ແລ້ວຮວບຮວມຂຶ້ນມາຈາກມວນຊົນອີກ, ນຳໄປຍຶດໝັ້ນປະຕິບັດໃນໝູ່ມວນຊົນອີກຕໍ່ໄປ. ໝຸນວຽນແນວນີ້ຢ່າງບໍ່ສິ້ນສຸດ. ແຕ່ລະເທື່ອແຮ່ງຈະຖືກຕ້ອງ ແຮ່ງຈະມີຊີວິດຊີວາແລະແຮ່ງຈະອຸດົມສົມບູນຂຶ້ນກວ່າເກົ່າ. ອັນນີ້ແມ່ນທິດສະດີວ່າດ້ວຍການຮັບຮູ້ຂອງລັດທິມາກ.

«ບັນຫາບາງຂໍ້ກ່ຽວກັບວິທີນຳພາ» (ວັນທີ່ ໑-໖-໑໙໔໓)

ພວກເຮົາຄວນເຂົ້າໄປສູ່ມວນຊົນ, ຮ່ຳຮຽນນຳມວນຊົນ, ຮວບຮວມບົດຮຽນຂອງພວກເຂົາເຈົ້າໃຫ້ກາຍເປັນຫຼັກເຫດຜົນ

ແລະວິທີການທີ່ມີລະບຽບທີ່ດີກວ່າ, ແລ້ວບອກເລົ່າ(ໂຄສະນາ) ມວນຊົນອີກ, ທັງຮຽກຮ້ອງໃຫ້ມວນຊົນປະຕິບັດຕາມ, ແກ້ໄຂບັນຫາຂອງມວນຊົນ, ເຮັດໃຫ້ມວນຊົນໄດ້ຮັບການປົດປ່ອຍແລະຄວາມຜາສຸກ.

«ຈົ່ງຈັດຕັ້ງກັນຂຶ້ນ» (ວັນທີ່ ໒໙-໑໑-໑໙໔໓)

ໃນອົງການນຳພາບາງບ່ອນຂອງພວກເຮົາ, ມີບາງຄົນເຫັນວ່າ ນະໂຍບາຍຂອງພັກມີແຕ່ຜູ້ນຳພາຮູ້ກໍ່ເປັນພໍ, ບໍ່ຈຳເປັນຕ້ອງໃຫ້ມວນຊົນຮູ້. ອັນນີ້ແມ່ນສາຍເຫດຕົ້ນຕໍອັນໜຶ່ງທີ່ເຮັດໃຫ້ວຽກງານບາງຢ່າງຂອງພວກເຮົາບໍ່ສາມາດເຮັດໄດ້ດີ.

«ສົນທະນາກັບພະນັກງານກອງບັນນາທິການໜັງສືພິມຈິນສຸຍລາຍວັນ» (ວັນທີ່ ໒-໔-໑໙໔໘)

ໃນຂະບວນເຄື່ອນໄຫວໃດໆຂອງມວນຊົນນັ້ນ, ມວນຊົນທີ່ຂະຫຽນຫ້າວຫັນສະໜັບສະໜູນມີທີ່ໃດ ທີ່ຄັດຄ້ານມີທີ່ໃດ ທີ່ຢູ່ໃນພາວະເຄິ່ງໆກາງໆມີທີ່ໃດ, ເຫຼົ່ານີ້ລ້ວນແຕ່ຕ້ອງມີການສຳຫຼວດຂັ້ນພື້ນຖານແລະການຈຳແນກຂັ້ນພື້ນຖານ, ຈະຕັດສິນບັນຫາ

ຢ່າງບໍ່ມີຫຼັກຖານອ້າງອີງຢ່າງໃນຕົວບໍ່ໄດ້.

«ວິທີເຮັດວຽກຂອງຄະນະກຳມະການພັກ» (ວັນທີ ໑໓-໓-໑໙໔໙)

ບ່ອນໃດມີມວນຊົນ, ບ່ອນນັ້ນໂດຍທົ່ວໄປຕ້ອງມີຄົນ ໓ ປະເພດ ຄື ພວກທີ່ຂະຫຍັນຫ້າວຫັນພໍຄວນ ພວກທີ່ຢູ່ໃນພາວະເຄິ່ງກາງໆແລະພວກທີ່ຫຼ້າຫຼັງພໍຄວນ. ດັ່ງນັ້ນ ຜູ້ນຳພາຕ້ອງຊ່າງສາມັກຄີພວກທີ່ຂະຫຍັນຫ້າວຫັນສ່ວນໜ້ອຍ ເພື່ອເປັນຫຼັກແຫຼ່ງຂອງການນຳພາ, ທັງອາໄສຫຼັກແຫຼ່ງເຫຼົ່ານີ້ໄປຍົກລະດັບພວກເຄິ່ງກາງໆໃຫ້ສູງຂຶ້ນແລະຍາດແຍ່ງເອົາພວກຫຼ້າຫຼັງ.

«ບັນຫາບາງຂໍ້ກ່ຽວກັບວິທີນຳພາ» (ວັນທີ ໑-໖-໑໙໔໓)

ການຊ່າງເຮັດໃຫ້ນະໂຍບາຍຂອງພັກກາຍເປັນການກະທຳຂອງມວນຊົນ, ການຊ່າງເຮັດໃຫ້ທຸກການເຄື່ອນໄຫວແລະທຸກການຕໍ່ສູ້ຂອງພວກເຮົາ, ບໍ່ພຽງແຕ່ພະນັກງານນຳພາເຂົ້າໃຈ, ມວນຊົນອັນກວ້າງໃຫຍ່ກໍ່ສາມາດເຂົ້າໃຈແລະກຳໄດ້, ອັນນີ້

ແມ່ນສິລະປະການນຳຂອງລັດທິມາກເລນິນປະການໜຶ່ງ. ວຽກງານຂອງພວກເຮົາຈະຜິດພາດຫຼືບໍ່, ເສັ້ນແບ່ງກໍ່ຢູ່ບ່ອນນີ້.

«ສົນທະນາກັບພະນັກງານກອງບັນນາທິການໜັງສືພິມຈິນສຸຍລາຍວັນ» (ວັນທີ ໒-໔-໑໙໔໘)

ມີແຕ່ຄວາມຂະຫຍັນຫ້າວຫັນຂອງຫຼັກແຫຼ່ງນຳພາ, ບໍ່ມີຄວາມຂະຫຍັນຫ້າວຫັນຂອງມວນຊົນອັນກວ້າງໃຫຍ່ມາປະສານເຂົ້ານຳ ກໍ່ຈະກາຍເປັນການຂຸ້ນວຽກລ້າໆຂອງຄົນສ່ວນໜ້ອຍ. ແຕ່ຖ້າມີແຕ່ຄວາມຂະຫຍັນຫ້າວຫັນຂອງມວນຊົນອັນກວ້າງໃຫຍ່, ຫາກບໍ່ມີຫຼັກແຫຼ່ງນຳພາທີ່ແຂງແຮງໄປຈັດຕັ້ງຄວາມຂະຫຍັນຫ້າວຫັນຂອງມວນຊົນຢ່າງເໝາະສົມ, ຄວາມຂະຫຍັນຫ້າວຫັນຂອງມວນຊົນກໍ່ບໍ່ສາມາດຄົງຕົວໄດ້ເຫິງ, ທັງບໍ່ສາມາດໄປສູ່ທິດທາງອັນຖືກຕ້ອງ ແລະ ບໍ່ສາມາດຍົກຂຶ້ນຮອດລະດັບສູງໄດ້.

«ບັນຫາບາງຂໍ້ກ່ຽວກັບວິທີນຳພາ» (ວັນທີ ໑-໖-໑໙໔໓)

ການຜະລິດຂອງມວນຊົນ, ຜົນປະໂຫຽດຂອງມວນຊົນ, ບົດຮຽນຂອງມວນຊົນ, ຈິດໃຈອາລົມຂອງມວນຊົນ, ເຫຼົ່ານີ້ ລ້ວນແຕ່ແມ່ນສິ່ງທີ່ບັນດາພະນັກງານນຳພາຄວນເອົາໃຈໃສ່ທຸກເວລາ.

ຄຳຂວັນທີ່ຂຽນເພື່ອງານວາງສະແດງຜະລິດຜົນ ຂອງອົງການທີ່ຂຶ້ນກັບສູນກາງພັກ ແລະ ອົງການທີ່ຂຶ້ນກັບຄະນະກຳມະການທະຫານຂອງສູນກາງພັກທີ່ລົງໃນ «ໜັງສືພິມປົດປ່ອຍວັນ» ທີ່ຍຽນອານ ສະບັບວັນທີ່ ໒໔-໑໑-໑໙໔໓

ພວກເຮົາຄວນເອົາໃຈໃສ່ບັນຫາຊີວິດການເປັນຢູ່ຂອງມວນຊົນຢ່າງເລິກຊຶ້ງ, ນັບແຕ່ບັນຫາທີ່ດິນ ການອອກແຮງງານຈົນຮອດບັນຫາຟືນ ເຂົ້າ ນ້ຳມັນແລະເກືອ. ...ບັນຫາທັງໝົດໃນຊີວິດການເປັນຢູ່ຂອງມວນຊົນເຫຼົ່ານີ້ ລ້ວນແຕ່ຄວນເອົາເຂົ້າໃນວາລະປຶກສາວຽກງານປະຈຳວັນຂອງຕົນ. ຄວນອະພິປາຍ ຄວນຕົກລົງ ຄວນປະຕິບັດແລະຄວນສຳຫຼວດກວດກາ.

ຕ້ອງເຮັດໃຫ້ມວນຊົນອັນກວ້າງໃຫຽ່ເຂົ້າໃຈວ່າ ພວກເຮົາແມ່ນຕົວແທນຜົນປະໂຫຽດຂອງພວກເຂົາເຈົ້າ, ແມ່ນຫາຍໃຈຮ່ວມກັນກັບພວກເຂົາເຈົ້າ. ຕ້ອງເຮັດໃຫ້ພວກເຂົາເຈົ້າເລີ່ມຕົ້ນຈາກວຽກງານເຫຼົ່ານີ້ ແລ້ວໄປເຂົ້າໃຈພາລະໜ້າທີ່ອັນສູງກວ່າເກົ່າທີ່ພວກເຮົາວາງອອກ ຄື ພາລະໜ້າທີ່ສົງຄາມປະຕິວັດ, ສະໜັບສະໜຸນການປະຕິວັດ, ຊຸກຍູ້ໃຫ້ການປະຕິວັດຂະຫຽາຍໄປທົ່ວປະເທດ, ຮັບເອົາຄຳຮຽກຮ້ອງທາງການເມືອງຂອງພວກເຮົາ ແລະຕໍ່ສູ້ຈົນເຖິງທີ່ສຸດເພື່ອໄຊຊະນະຂອງການປະຕິວັດ.

«ເອົາໃຈໃສ່ຊີວິດການເປັນຢູ່ຂອງມວນຊົນ ສົນໃຈນຳວິທີເຮັດວຽກ» (ວັນທີ່ ໒໗-໑-໑໙໓໔)

໑໘. ວຽກງານການເມືອງ

ເວລານັ້ນ (ໝາຍເຖິງສະໄໝສົງຄາມປະຕິວັດພາຍໃນປະເທດເທື່ອທີ່ໜຶ່ງຫວ່າງປີ ໑໙໒໔-໑໙໒໗ — ຜູ້ລຽບລຽງ) ໃນກອງທັບໄດ້ຕັ້ງຜູ້ແທນພັກແລະພະແນກການເມືອງຂຶ້ນ, ລະບອບດັ່ງນີ້ບໍ່ເຄີຍມີໃນປະວັດສາດຂອງຈີນ, ອາໄສລະບອບນີ້ ຈຶ່ງເຮັດໃຫ້ໂສມໜ້າຂອງກອງທັບປ່ຽນແປງໃໝ່. ກອງທັບແດງພາຍຫຼັງປີ ໑໙໒໗ ຈົນຮອດກອງທັບສາຍທີ່ ໕ ໃນຊຸ່ມນີ້ກໍ່ໄດ້ສືບຕໍ່ລະບອບແບບນີ້ທັງໄດ້ຂະຫຍາຍມັນອອກ.

«ຄຳໃຫ້ສຳພາດແກ່ເຈມ ເບີຕຼານ ຕູ້ສື່ຂ່າວອັງກິດ»
(ວັນທີ່ ໒໕-໑໐-໑໙໓໗)

ກອງທັບປົດປ່ອຍປະຊາຊົນໄດ້ສ້າງວຽກງານການເມືອງປະຕິວັດອັນເຂັ້ມແຂງຂອງຕົນຂຶ້ນເທິງພື້ນຖານສົງຄາມປະຊາຊົນ

ແລະເທິງພື້ນຖານບັນດາຫຼັກການຕ່າງໆ ເຊັ່ນ ຄວາມສາມັກຄີເປັນອັນໜຶ່ງອັນດຽວກັນລະຫວ່າງກອງທັບກັບປະຊາຊົນ ຄວາມສາມັກຄີເປັນອັນໜຶ່ງອັນດຽວກັນລະຫວ່າງຜູ້ບັນຊາກັບພົນທະຫານ ຕະຫຼອດຈົນຫຼັກການຜັນແຍກທະຫານສັດຕູໃຫ້ແຕກສະຫຼາຍ, ວຽກງານການເມືອງນີ້ແມ່ນປັດໃຈສຳຄັນຍິ່ງທີ່ພວກເຮົາເອົາຊະນະສັດຕູ.

«ສະຖານະການປັດຈຸບັນແລະພາລະໜ້າທີ່ຂອງພວກ
ເຮົາ» (ວັນທີ່ ໒໕-໑໒-໑໙໔໗)

ກອງທັບນີ້ໄດ້ສ້າງວຽກງານການເມືອງເປັນລະບົບທີ່ຈຳເປັນສຳລັບສົງຄາມປະຊາຊົນໃຫ້ເປັນຮູບເປັນຮ່າງຂຶ້ນ, ພາລະໜ້າທີ່ຂອງມັນແມ່ນຕໍ່ສູ້ເພື່ອສາມັກຄີກອງທັບເຮົາ, ສາມັກຄີກອງທັບເພື່ອນມິດ, ສາມັກຄີປະຊາຊົນ, ຜັນແຍກທະຫານສັດຕູໃຫ້ແຕກສະຫຼາຍ ແລະຮັບປະກັນໃຫ້ການສູ້ລົບຊະນະ.

«ວ່າດ້ວຍລັດຖະບານປະສົມ» (ວັນທີ່ ໒໔-໔-໑໙໔໕)

ວຽກງານການເມືອງແມ່ນຊີວິດຂອງວຽກງານເສດຖະກິດ

ທັງໝົດ. ໃນໄລຍະທີ່ລະບອບເສດຖະກິດສັງຄົມເກີດການປະຕິວັດປ່ຽນແປງໃນຂັ້ນຕົ້ນຕໍ ຍິ່ງເປັນແນວນີ້.

ພາຍເຫດໃນບົດຄວາມເລື່ອງ «ບົດຮຽນອັນໜັກໜ່ວງ» (ປີ ໑໙໒໘)

ການທີ່ກອງທັບແດງສາມາດບາກບັ່ນສູ້ລົບຢ່າງທໍລະຫົດແລະບໍ່ແຕກກະຈັດກະຈາຍນັ້ນ, ສາຍເຫດສຳຄັນອັນໜຶ່ງແມ່ນຍ້ອນ "ສ້າງໜ່ວຍພັກຢູ່ໃນກອງຮ້ປ".

«ການຕໍ່ສູ້ຢູ່ຈິ່ງກັງຊານ» (ວັນທີ ໒໕-໑໑-໑໙໒໘)

ຫຼັກການພື້ນຖານຂອງວຽກງານການເມືອງຂອງກອງທັບສາຍທີ່ ໘ ມີ ໓ ຂໍ້ຄື: ໑. ຫຼັກການຄວາມເປັນອັນໜຶ່ງອັນດຽວກັນລະຫວ່າງພະນັກງານກັບນັກລົບ, ໝາຍຄວາມວ່າ ພາຍໃນກອງທັບຕ້ອງກວາດລ້າງລັດທິສັກດີນາ, ລົບລ້າງລະບອບດ່າຕີ, ສ້າງວິໄນຕື່ນຕົວ, ໃຫ້ມີຊີວິດຮ່ວມທຸກຮ່ວມສຸກນຳກັນ, ດັ່ງນັ້ນ ທົ່ວກອງທັບຈຶ່ງສາມັກຄີເປັນອັນໜຶ່ງອັນດຽວກັນ. ໒. ຫຼັກການຄວາມເປັນອັນໜຶ່ງອັນດຽວກັນລະຫວ່າງທະຫານກັບ

ປະຊາຊົນ, ໝາຍຄວາມວ່າ ວິໄນຕໍ່ປວງປະຊາຊົນທີ່ບໍ່ລະເມີດຜົນປະໂຫຍດປວງປະຊາຊົນຈັກເມັດ, ໂຄສະນາ ຈັດຕັ້ງແລະປະກອບອາວຸດໃຫ້ປວງປະຊາຊົນ, ລົດຜ່ອນການຫາບແບກທາງເສດຖະກິດຂອງປວງປະຊາຊົນ, ໂຈມຕີພວກທໍລະຍົດຂາຍຊາດທີ່ເປັນໄພຕໍ່ກອງທັບແລະປະຊາຊົນ, ດັ່ງນັ້ນ ກອງທັບຈຶ່ງສາມັກຄີເປັນອັນໜຶ່ງອັນດຽວກັນກັບປະຊາຊົນ ແລະ ໄດ້ຮັບຄວາມຊົມເຊີຍຈາກປະຊາຊົນທົ່ວທຸກແຫ່ງ. ໓. ຫຼັກການປັນແຍກທະຫານສັດຕູໃຫ້ແຕກສະຫຼາຍ ແລະ ການອະໄພໂທດໃຫ້ຊະເລີຍເສິກ. ການທີ່ພວກເຮົາໄດ້ຮັບໄຊຊະນະນັ້ນ ບໍ່ພຽງແຕ່ອາໄສການສູ້ລົບຂອງທະຫານເຮົາທໍ່ນັ້ນ, ຍັງອາໄສການແຕກສະຫຼາຍຂອງທະຫານສັດຕູອີກດ້ວຍ.

«ຄຳໃຫ້ສຳພາດແກ່ເຈມ ເບີຕຣານ ຕູ້ສື່ຂ່າວອັງກິດ» (ວັນທີ ໒໕-໑໐-໑໙໓໗)

ກອງທັບຂອງພວກເຮົາຕ້ອງປະຕິບັດຕາມຫຼັກການອັນຖືກຕ້ອງໃນດ້ານການພົວພັນລະຫວ່າງກອງທັບກັບປະຊາຊົນ ລະ

ຫວ່າງກອງທັບກັບຝ່າຍປົກຄອງ ລະຫວ່າງກອງທັບກັບພັກ ລະຫວ່າງພະນັກງານກັບນັກລົບ ລະຫວ່າງອົງການການທະຫານກັບອົງການການເມືອງ ແລະລະຫວ່າງພະນັກງານດ້ວຍກັນ, ບໍ່ໃຫ້ເປັນພະຍາດລັດທິຂຸນເສິກຢ່າງເດັດຂາດ. ພະນັກງານຕ້ອງຖະໜອມຮັກແພງນັກລົບ, ຈະເພີກເສີຍບໍ່ເອົາໃຈໃສ່, ຈະໃຊ້ການລົງໂທດທໍລະມານຮ່າງກາຍບໍ່ໄດ້; ກອງທັບຕ້ອງຖະໜອມຮັກແພງປະຊາຊົນ, ຈະເຮັດຄວາມເສຽຫາຍແກ່ຜົນປະໂຫຽດຂອງປະຊາຊົນບໍ່ໄດ້; ກອງທັບຕ້ອງເຄົາລົບນັບຖືລັດຖະບານ, ເຄົາລົບນັບຖືພັກ, ຈະຕັ້ງຕົວເປັນອິດສະລະບໍ່ໄດ້.

«ຈົ່ງຈັດຕັ້ງກັນຂຶ້ນ» (ວັນທີ່ ໒໙-໑໑-໑໙໔໓)

ຕໍ່ທະຫານສັດຕູ ທະຫານຫຸ່ນແລະທະຫານຕ້ານກອມມູນິດທີ່ຖືກຈັບເປັນຊະເລີຍນັ້ນ, ນອກຈາກຜູ້ທີ່ນອນຊິນຄຽດຊັງທີ່ສຸດບໍ່ຂ້າບໍ່ໄດ້ ທັງໄດ້ຮັບອະນຸຍາດຈາກຂັ້ນເທິງແລ້ວ, ຄວນໃຊ້ນະໂຍບາຍປ່ອຍຕົວໝົດ. ໃນພູ່ຊະເລີຍເສິກນັ້ນ ຕ້ອງຍາດແຍ່ງພວກຄົນຫຼວງຫຼາຍທີ່ຖືກບັງຄັບໃຫ້ເຂົ້າຮ່ວມກອງທະຫານປະຕິ

ການແລະຕົວເຂົາມີລັກສະນະປະຕິວັດບໍ່ຫຼາຍກໍ່ໜ້ອຍ ໃຫ້ມາຮັບໃຊ້ກອງທັບເຮົາ, ນອກນັ້ນ ກໍ່ປ່ອຍຕົວໄປໝົດ; ຖ້າເຂົາມາລົບອີກ, ກໍ່ຈັບອີກແລ້ວປ່ອຍອີກ; ບໍ່ຂົ່ມເຫັງບັງບຽດພວກເຂົາ, ບໍ່ຄົ້ນເອົາຊັບສິ່ງຂອງພວກເຂົາ, ບໍ່ບັງຄັບໃຫ້ພວກເຂົາສາລະພາບ, ໃຊ້ທ່າທີຈິງໃຈອ່ອນໂຍນຕໍ່ພວກເຂົາຄືກັນໝົດ. ບໍ່ວ່າພວກເຂົາປະຕິການປານໃດກໍ່ຕາມ ລ້ວນແຕ່ໃຊ້ນະໂຍບາຍນີ້. ນະໂຍບາຍນີ້ມີຜົນທີ່ສຸດໃນການເຮັດໃຫ້ຄ້າຍປະຕິການຢູ່ໂດດດ່ຽວ.

«ວ່າດ້ວຍນະໂຍບາຍ» (ວັນທີ່ ໒໕-໑໒-໑໙໔໐)

ອາວຸດແມ່ນປັດໃຈສຳຄັນໃນສົງຄາມ, ແຕ່ບໍ່ແມ່ນປັດໃຈຊີ້ຂາດ, ປັດໃຈຊີ້ຂາດແມ່ນຄົນ, ບໍ່ແມ່ນວັດຖຸ. ການຊັ່ງຊາກຳລັງບໍ່ພຽງແຕ່ຊັ່ງຊາກຳລັງການທະຫານ ແລະ ກຳລັງເສດຖະກິດ, ແຕ່ຍັງຕ້ອງຊັ່ງຊາກຳລັງຄົນແລະນ້ຳໃຈຄົນນຳ. ກຳລັງການທະຫານແລະກຳລັງເສດຖະກິດແມ່ນຄົນເປັນຜູ້ກຳ.

«ວ່າດ້ວຍສົງຄາມຍືດເຍື້ອຍາວນານ» (ເດືອນ ໕-໑໙໓໘)

ລູກລະເບີດປະລະມານູແມ່ນເສືອເຈັ້ຽຕົວໜຶ່ງທີ່ພວກປະຕິການອາເມລິກາໃຊ້ຂູ່ຄົນ, ເບິ່ງຮູບຊົງເປັນຕາຢ້ານ, ທີ່ແທ້ແລ້ວ ບໍ່ເປັນຕາຢ້ານ. ແນ່ນອນ ລູກລະເບີດປະລະມານູແມ່ນອາວຸດຂ້າຄົນຢ່າງຫຼວງຫຼາຍຊະນິດໜຶ່ງ. ແຕ່ສິ່ງທີ່ຕັດສິນຊີ້ຂາດວ່າຈະຊະນະຫຼືເສຽໄຊໃນສົງຄາມນັ້ນ ແມ່ນປະຊາຊົນ, ບໍ່ແມ່ນອາວຸດແບບໃໝ່ຈັກຢ່າງສອງຢ່າງ.

«ຄຳໃຫ້ສຳພາດແກ່ນາງແອນນາ ຫຼຸຍ ສະຕຼອງ ຕູ້ສື່ຂ່າວອາເມລິກາ» (ເດືອນ ໘-໑໙໔໖)

ພື້ນຖານຂອງກອງທັບແມ່ນນັກລົບ, ຄົນບໍ່ມີຈິດໃຈການເມືອງທີ່ກ້າວໜ້າຊຶມຊາບເຂົ້າໃນກອງທັບແລະບໍ່ມີວຽກງານການເມືອງທີ່ກ້າວໜ້າໄປດຳເນີນການຊຶມຊາບນີ້ແລ້ວ ກໍ່ບໍ່ສາມາດບັນລຸເຖິງຄວາມເປັນອັນໜຶ່ງອັນດຽວກັນອັນແທ້ຈິງ ລະຫວ່າງພະນັກງານກັບນັກລົບ, ກໍ່ບໍ່ສາມາດເຊີດຊູຄວາມຫ້າວຫັນໃນສົງຄາມຕໍ່ຕ້ານຂອງພະນັກງານ ແລະ ນັກລົບໃຫ້ຂຶ້ນສູ່ລະດັບສູງສຸດ, ເຕັກນິກແລະຍຸດທະວິທີທັງໝົດກໍ່ບໍ່ອາດຈະມີພື້ນຖານອັນດີທີ່ສຸດ

ເພື່ອໄປສົ່ງເສີມປະສິດທິພາບອັນຄວນມີຂອງມັນໄດ້.

«ວ່າດ້ວຍສົງຄາມຍືດເຍືອຍາວນານ» (ເດືອນ ໕-໑໙໓໘)

ທັດສະນະເອົາແຕ່ການທະຫານຢ່າງດຽວໄດ້ຂະຫຍາຍຕົວຫຼາຍທີ່ສຸດໃນໝູ່ສະຫາຍສ່ວນໜຶ່ງຂອງກອງທັບແດງ. ມັນສະແດງອອກດັ່ງນີ້ຄື:

(໑) ຖືວ່າການທະຫານ ກັບ ການເມືອງສອງສິ່ງນີ້ຂັດກັນ, ບໍ່ຮັບຮູ້ວ່າການທະຫານພຽງແຕ່ແມ່ນເຄື່ອງມືອັນໜຶ່ງ ເພື່ອເຮັດພາລະໜ້າທີ່ການເມືອງໃຫ້ສຳເລັດ. ການທີ່ບາງຄົນເຖິງກັບເວົ້າວ່າ "ເມື່ອການທະຫານດີ, ການເມືອງກໍ່ຍ່ອມດີນຳ, ເມື່ອການທະຫານບໍ່ດີ, ການເມືອງກໍ່ບໍ່ທ່ອນຊິດີໄດ້" ນັ້ນ ກໍ່ຍິ່ງເປັນການຖືວ່າການທະຫານນຳພາການເມືອງ.

....

«ກ່ຽວກັບການແກ້ໄຂດັດແປງແນວຄິດທີ່ຜິດພາຍໃນພັກ» (ເດືອນ ໑໒-໑໙໒໙)

ການກຳການອົບຮົມແນວຄິດ ແມ່ນຕໍ່ອງໃຈກາງທີ່ສາມັກຄີທົ່ວພັກດຳເນີນການຕໍ່ສູ້ດ້ານການເມືອງທີ່ຍິ່ງໃຫຍ່. ຖ້າບໍ່ແກ້ພາລະໜ້າທີ່ນີ້ໃຫ້ຕົກ, ພາລະໜ້າທີ່ການເມືອງທັງໝົດຂອງພັກກໍ່ບໍ່ສາມາດສຳເລັດໄດ້.

«ວ່າດ້ວຍລັດຖະບານປະສົມ» (ວັນທີ່ ໒໔-໔-໑໙໔໕)

ຫວ່າງມ່ໆນີ້ ວຽກງານແນວຄິດແລະການເມືອງໃນໝູ່ນັກຮຽນຮູ້ແລະນັກຮຽນນັກສຶກສາໜຸ່ມໄດ້ລົດຜ່ອນອ່ອນລົງ, ປາກົດມີຄວາມຜິດເຂວບາງຢ່າງ. ໃນສາຍຕາຂອງຄົນຈຳນວນໜຶ່ງ, ຄືກັບວ່າການເມືອງກໍ່ດີ ອະນາຄົດຂອງປະເທດຊາດກໍ່ດີ ອຸດົມຄະຕິຂອງມະນຸດກໍ່ດີ ລ້ວນແຕ່ບໍ່ຈຳເປັນເອົາໃຈໃສ່. ຄືກັບວ່າລັດທິມາກເປັນສິ່ງທີ່ນິຍົມກັນມາຄາວໜຶ່ງ, ດຽວນີ້ບໍ່ນິຍົມກັນປານໃດແລ້ວ. ແນໃສ່ສະພາບດັ່ງກ່າວ, ປັດຈຸບັນນີ້ ຕ້ອງເພີ່ມທະວີວຽກງານແນວຄິດແລະການເມືອງໃຫ້ເຂັ້ມແຂງ. ບໍ່ວ່ານັກຮຽນຮູ້ຫຼືນັກຮຽນນັກສຶກສາໜຸ່ມ ລ້ວນແຕ່ຄວນພະຍາຍາມຮ່ຳຮຽນ. ນອກຈາກຮ່ຳຮຽນວິຊາສະເພາະແລ້ວ, ໃນດ້ານ

ແນວຄິດຕ້ອງມີຄວາມກ້າວໜ້າ, ໃນດ້ານການເມືອງກໍ່ຕ້ອງມີຄວາມກ້າວໜ້າ, ດັ່ງນັ້ນ ກໍ່ຕ້ອງຮ່ຳຮຽນລັດທິມາກ ຮ່ຳຮຽນສະຖານະການແລະການເມືອງ. ບໍ່ມີທັດສະນະການເມືອງອັນຖືກຕ້ອງ ກໍ່ທໍ່ກັບບໍ່ມີວິນຍານ. ...ສຳລັບວຽກງານແນວຄິດແລະການເມືອງນັ້ນ, ທຸກພະແນກການລ້ວນແຕ່ຕ້ອງຮັບຜິດຊອບ. ພັກກອມມູນິດຄວນກຳກັບ, ຄະນະຊາວໜຸ່ມຄວນກຳກັບ, ກະຊວງທະບວງກົມທີ່ຮັບຜິດຊອບໂດຍກົງຄວນກຳກັບ, ຫົວໜ້າໂຮງຮຽນແລະບັນດາຄູສອນຍິ່ງຄວນກຳກັບ.

«ບັນຫາກ່ຽວກັບການແກ້ໄຂຄວາມຂັດແຍ້ງພາຍໃນ
ປະຊາຊົນຢ່າງຖືກຕ້ອງ» (ວັນທີ່ ໒໗-໒-໑໙໕໗)

ເມື່ອໄດ້ຜ່ານການອົບຮົມການເມືອງແລ້ວ, ນັກລົບກອງທັບແດງລ້ວນແຕ່ມີຄວາມຕື່ນຕົວທາງຊົນຊັ້ນ, ລ້ວນແຕ່ມີຄວາມຮູ້ທົ່ວໄປ ເຊັ່ນ ການແບ່ງປັນທີ່ດິນ ການສ້າງຕັ້ງອຳນາດການປົກຄອງແລະການປະກອບອາວຸດໃຫ້ກຳມະກອນຊາວນາ ຯລຯ,

ລ້ວນແຕ່ຮູ້ວ່າ ສູ້ລົບແມ່ນເພື່ອຕົນເອງແລະເພື່ອຊົນຊັ້ນກຳມະກອນຊາວນາ. ດັ່ງນັ້ນ ໃນການຕໍ່ສູ້ອັນທໍລະຫົດ, ພວກເຂົາເຈົ້າຈຶ່ງບໍ່ຈົ່ມບໍ່ວ່າສັງ. ໃນກອງຮ້ອຍ, ກອງພັນ, ກອງພັນໃຫຍ່ ລ້ວນແຕ່ມີຄະນະກຳມະການນັກລົບ ເປັນຕົວແທນຜົນປະໂຫຍດຂອງນັກລົບ, ທັງເຮັດວຽກງານການເມືອງແລະວຽກງານຂົນຂວາຍປວງປະຊາຊົນ.

«ການຕໍ່ສູ້ຢູ່ຈີງກັງຊານ» (ວັນທີ ໒໕-໑໑-໑໙໒໘)

ເນື່ອງຈາກການເຄື່ອນໄຫວເລົ່າທຸກ (ເລົ່າຄວາມທຸກທີ່ສັງຄົມເກົ່າແລະພວກປະຕິການເຮັດໃຫ້ປະຊາຊົນຜູ້ອອກແຮງງານ) ແລະ ໓ ສຳຫຼວດ (ສຳຫຼວດຊົນຊັ້ນ ສຳຫຼວດວຽກງານ ແລະ ສຳຫຼວດນ້ຳໃຈສູ້ລົບ) ໄດ້ດຳເນີນຢ່າງຖືກຕ້ອງ, ຈຶ່ງໄດ້ຍົກລະດັບຄວາມຕື່ນຕົວຂອງບັນດາຜູ້ບັນຊາ ແລະ ພົນທະຫານທົ່ວກອງທັບໃຫ້ສູງຂຶ້ນຢ່າງຫຼວງຫຼາຍໃນການສູ້ລົບເພື່ອປົດປ່ອຍມວນຊົນຜູ້

ອອກແຮງງານທີ່ຖືກຂູດຮີດ ເພື່ອການປະຕິວັດລະບອບທີ່ດິນໃນທົ່ວປະເທດແລະເພື່ອດັບສູນພວກໂຈນຈຽງໄຄເຊັກລັດດູຮອນຂອງປະຊາຊົນ, ພ້ອມກັນນັ້ນ ກໍ່ໄດ້ເຮັດໃຫ້ຄວາມສາມັກຄີທີ່ແໜ້ນແກ່ນເຂັ້ນແຂງໃນໝູ່ຜູ້ບັນຊາແລະພົນທະຫານທັງໝົດທີ່ຢູ່ໃຕ້ການນຳພາຂອງພັກກອມມູນິດນັ້ນເພີ່ມທະວີຍິ່ງຂຶ້ນຢ່າງໃຫຍ່ຫຼວງ. ຢູ່ເທິງພື້ນຖານນີ້, ຄວາມປອດໃສຂອງກອງທະຫານກໍ່ໄດ້ຍົກໃຫ້ສູງຂຶ້ນແລ້ວ, ວິໄນກໍ່ໄດ້ຮັບການປັບປຸງແລ້ວ, ການເຄື່ອນໄຫວຝຶກແອບທະຫານທີ່ມີລັກສະນະມວນຊົນໄດ້ແຜ່ຂະຫຍາຍແລ້ວ, ປະຊາທິປະໄຕ ໓ ດ້ານ ຄື ການເມືອງ ເສດຖະກິດແລະການທະຫານທີ່ດຳເນີນຢູ່ໃນກອງທະຫານຢ່າງມີການນຳພາ ຢ່າງມີລະບຽບໂດຍສົມບູນນັ້ນ ກໍ່ໄດ້ຮັບການເຊີດຊູສົ່ງເສີມແລ້ວ. ດັ່ງນັ້ນ ຈຶ່ງໄດ້ເຮັດໃຫ້ກອງທະຫານເປັນຈິດໜຶ່ງໃຈດຽວກັນ, ໝົດທຸກຄົນຄົ້ນຄິດຫາວິທີ, ໝົດທຸກຄົນອອກເຫື່ອເຫແຮງ, ບໍ່ຢ້ານເສຍສະຫຼະ, ຜ່ານຜ່າຄວາມຫຍຸ້ງຍາກລຳບາກທາງເງື່ອນໄຂວັດຖຸ, ຮ່ວມກັນຂະຫຍາຍອານຸພາບ

ແລະນ້ຳໃຈກ້າຫານ, ອີງອາດຂ້າສັດຕູ. ກອງທັບແບບນີ້, ບໍ່ມີໃຜຈະສູ້ໄດ້ໃນໂລກນີ້.

«ວິຈານໄຊຊະນະໃຫ່ຽຢູ່ພາກຕາເວັນຕົກສຽງເໜືອ ແລະວ່າດ້ວຍການເຄື່ອນໄຫວປັບປຸງກອງທະຫານແບບໃໝ່ຂອງກອງທັບປົດປ່ຽ» (ວັນທີ່ ໗-໓-໑໙໔໘)

ໃນບໍ່ເທົ່າໃດເດືອນມານີ້, ກອງທັບປົດປ່ຽປະຊາຊົນເກືອບໝົດທຸກກອງລ້ວນແຕ່ໄດ້ໃຊ້ເວລາຫວ່າງຂອງສົງຄາມ ດຳເນີນການປັບປຸງອົບຮົມຢ່າງຂະໜາດໃຫ່ຽ. ການປັບປຸງອົບຮົມຊະນິດນີ້ໄດ້ດຳເນີນຕາມວິທີປະຊາທິປະໄຕຢ່າງມີການນຳພາ ຢ່າງມີລະບຽບໂດຍສົມບູນ. ດ້ວຍເຫດນີ້ ໄດ້ເຊີດຊູຄວາມຫ້າວຫັນປະຕິວັດຂອງມວນຊົນຜູ້ບັນຊາ ແລະ ພົນທະຫານອັນກວ້າງໃຫ່ຽ, ໄດ້ເຮັດໃຫ້ພວກເຂົາເຈົ້າເຂົ້າໃຈຈຸດປະສົງຂອງສົງຄາມຢ່າງຄັກແນ່, ໄດ້ລົບລ້າງທ່າຫ່ຽງອັນບໍ່ຖືກຕ້ອງໃນດ້ານແນວຄິດແລະປາກົດການທີ່ບໍ່ດີບາງຢ່າງທີ່ມີຢູ່ໃນກອງທັບ, ໄດ້ອົບຮົມພະນັກງານແລະນັກລົບ, ໄດ້ຍົກກຳລັງສູ້ລົບໃຫ້ສູງຂຶ້ນຢ່າງຫຼວງຫຼາຍ.

ແຕ່ນີ້ເມືອໜ້າ ຍັງຈະຕ້ອງດຳເນີນການເຄື່ອນໄຫວປັບປຸງກອງທັບແບບປະຊາທິປະໄຕທີ່ມີລັກສະນະມວນຊົນແລະແບບໃໝ່ນີ້ຕໍ່ໄປ.

«ຄຳປາໄສ ໃນກອງປະຊຸມພະນັກງານໃນເຂດປົດປ່ຽ ຊານຊີ—ສຸຍຢວນ» (ວັນທີ່ ໑-໔-໑໙໔໘)

ເຂັມທິດການສຶກສາຂອງມະຫາວິທະຍາໄລການທະຫານການເມືອງຕໍ່ຕ້ານຍີ່ປຸ່ນຄື: ທິດທາງການເມືອງທີ່ໜຽວແໜ້ນຖືກຕ້ອງ, ທ່າທຳນອງເຮັດວຽກທີ່ຄ່ຽນຄົມທົນຍາກ, ຍຸດທະສາດຍຸດທະວິທີທີ່ມີໄຫວພິກຄ່ອງແຄ້ວ. ໓ ປະການນີ້ແມ່ນສິ່ງທີ່ຂາດບໍ່ໄດ້ໃນການອົບຮົມສ້າງທະຫານປະຕິວັດຕໍ່ຕ້ານຍີ່ປຸ່ນ. ພະນັກງານ ຄູສອນແລະນັກຮຽນໃນມະຫາວິທະຍາໄລການທະຫານການເມືອງຕໍ່ຕ້ານຍີ່ປຸ່ນລ້ວນແຕ່ສອນແລະຮ່ຳຮຽນຕາມ ໓ ຂໍ້ນີ້.

«ຖືກສັດຕູຄັດຄ້ານແມ່ນເລື່ອງດີ ບໍ່ແມ່ນເລື່ອງບໍ່ດີ» (ວັນທີ່ ໒໖-໕-໑໙໓໙)

ແຕ່ໃດໆມາ ຊາດເຮົາມີທ່າທຳນອງຕໍ່ສູ້ຢ່າງທໍລະຫົດອົດທົນ; ພວກເຮົາຕ້ອງເຊີດຊູສົ່ງເສີມທ່າທຳນອງນີ້. ...ແຕ່ໃດໆມາ ພັກກອມມູນິດຍິ່ງສົ່ງເສີມທິດທາງການເມືອງທີ່ໜຽວແໜ້ນຖືກຕ້ອງ, ...ທິດທາງການເມືອງທີ່ໜຽວແໜ້ນຖືກຕ້ອງນີ້ບໍ່ອາດຫ່າງເຫີນອອກຈາກທ່າທຳນອງການເຮັດວຽກທີ່ຕໍ່ສູ້ຢ່າງທໍລະຫົດອົດທົນນັ້ນໄດ້, ຄົນບໍ່ມີທິດທາງການເມືອງທີ່ໜຽວແໜ້ນຖືກຕ້ອງແລ້ວ ກໍ່ບໍ່ສາມາດເຊີດຊູທ່າທຳນອງການເຮັດວຽກທີ່ຕໍ່ສູ້ຢ່າງທໍລະຫົດອົດທົນ; ຄົນບໍ່ມີທ່າທຳນອງການເຮັດວຽກທີ່ຕໍ່ສູ້ຢ່າງທໍລະຫົດອົດທົນແລ້ວ ກໍ່ບໍ່ສາມາດປະຕິບັດທິດທາງການເມືອງທີ່ໜຽວແໜ້ນຖືກຕ້ອງນັ້ນໄດ້.

«ຄຳປາໄສໃນກອງປະຊຸມໃຫຍ່ສະຫຼອງວັນກຳມະກອນສາກົນທີ່ຢຽນອານ» (ວັນທີ່ ໑-໕-໑໙໓໙)

ສາມັກຄີ, ຮີບຮ້ອນ, ເຄັ່ງຂຶມ, ເບີກບານ.

ຄະຕິປະຈຳໂຮງຮຽນທີ່ໃຫ້ໄວ້ແກ່ "ມະຫາວິທະຍາໄລການທະຫານການເມືອງຕໍ່ຕ້ານຍີ່ປຸ່ນ"

ໃນໂລກນີ້ຢ້ານແຕ່ຄຳວ່າ"ເອົາຈິງເອົາຈັງ", ພັກກອມມູນິດນີ້ແຫຼະແມ່ນ"ເອົາຈິງເອົາຈັງ"ທີ່ສຸດ.

ຄຳສົນທະນາໃນໂອກາດພົບນັກສຶກສາແລະນັກສຶກສາຝຶກພາກປະຕິບັດຂອງຈີນໃນຕ່າງປະເທດທີ່ໂມສະກູ (ວັນທີ່ ໑໗-໑໑-໑໙໕໗)

໑໓. ການພົວພັນ ລະຫວ່າງພະນັກງານກັບນັກລົບ

ແຕ່ໃດມາ ກອງທັບຂອງພວກເຮົາກໍ່ມີເຂັມທິດສອງຂໍ້ຄື: ໑. ຕໍ່ສັດຕູຕ້ອງເດັດຂາດ, ຕ້ອງກົດຂີ່ມັນ, ຕ້ອງດັບສູນມັນ; ໒. ຕໍ່ຄົນເຮົາເອງ ຕໍ່ປະຊາຊົນ ຕໍ່ສະຫາຍ ຕໍ່ພະນັກງານແລະຕໍ່ຜູ້ຢູ່ໃຕ້ບັງຄັບບັນຊາ, ຕ້ອງກົມກຽວອົບອຸ່ນ, ຕ້ອງສະໝານສາມັກຄີ.

ສຸນທອນພົດໃນໂອກາດສູນກາງພັກຕ້ອນຮັບຜູ້ແທນທີ່ເປັນຕົວຢ່າງໃນການຮ່ຳຮຽນຂອງກອງທັບໃຫ່ງປະຈຳແນວຫຼັງ (ວັນທີ ໑໕-໙-໑໙໔໘)

ພວກເຮົາລ້ວນແຕ່ມາຈາກທຸກທິນທຸກແຫ່ງ ເຕົ້າໂຮມຢູ່ບ່ອນດຽວກັນ, ເພື່ອເປົ້າໝາຍການປະຕິວັດຮ່ວມກັນ. ...ພະ

ນັກງານຂອງພວກເຮົາຕ້ອງເອົາໃຈໃສ່ນັກລົບທຸກຄົນ, ຜູ້ທີ່ຢູ່ໃນຖັນແຖວການປະຕິວັດທຸກຄົນລ້ວນແຕ່ຕ້ອງເອົາໃຈໃສ່ກັນ, ຖະໜອມຮັກແພງກັນແລະຊ່ວຍເຫຼືອກັນ.

«ຮັບໃຊ້ປະຊາຊົນ» (ວັນທີ ໕-໙-໑໙໔໘)

ຢູ່ພາຍໃນກອງທະຫານທຸກກອງ ຄວນຈັດໃຫ້ມີການເຄື່ອນໄຫວສະໜັບສະໜູນພະນັກງານແລະຮັກແພງນັກລົບ, ຮຽກຮ້ອງໃຫ້ພະນັກງານຖະໜອມຮັກແພງນັກລົບ, ພ້ອມທັງຮຽກຮ້ອງໃຫ້ນັກລົບສະໜັບສະໜູນພະນັກງານ, ເມື່ອເຫັນຂໍ້ບົກພ່ອງແລະຄວາມຜິດພາດຂອງກັນແລະກັນ ຕ້ອງເວົ້າກັນຢ່າງເປີດເຜີຍແລະແກ້ໄຂກັນຢ່າງໄວວາ, ເຮັດແນວນີ້ກໍ່ສາມາດບັນລຸເຖິງຈຸດປະສົງສາມັກຄີພາຍໃນໄດ້ຢ່າງດີ.

«ພາລະໜ້າທີ່ໃນ ປີ ໑໙໔໙» (ວັນທີ ໑໔-໑໒-໑໙໔໘)

ມີຫຼາຍຄົນເຫັນວ່າ ຄວາມພົວພັນລະຫວ່າງພະນັກງານກັບນັກລົບແລະຄວາມພົວພັນລະຫວ່າງທະຫານກັບປະຊາຊົນຈັດການບໍ່ໄດ້ດີນັ້ນ ແມ່ນຍ້ອນວິທີການບໍ່ຖືກຕ້ອງ, ເຮົາໄດ້ບອກ

ພວກເຂົາເຈົ້າສະເໜີວ່າ ອັນນີ້ແມ່ນຍ້ອນບັນຫາທ່າທີພື້ນຖານ (ຫຼືວັດຖຸປະສົງພື້ນຖານ), ທ່າທີນີ້ແມ່ນການເຄົາລົບນັກລົບແລະເຄົາລົບປະຊາຊົນ. ເລີ່ມຈາກທ່າທີນີ້ແລ້ວ ຈຶ່ງມີນະໂຍບາຍ ວິທີການແລະຮູບວິທີຕ່າງໆ. ເມື່ອຫ່າງເຫີນຈາກທ່າທີນີ້ແລ້ວ, ນະໂຍບາຍ ວິທີການແລະຮູບວິທີນັ້ນ ກໍ່ຈະຜິດຢ່າງແນ່ນອນ, ຄວາມພົວພັນລະຫວ່າງພະນັກງານກັບນັກລົບແລະທະຫານກັບປະຊາຊົນນັ້ນ ກໍ່ຈະຈັດການບໍ່ໄດ້ດີຢ່າງເດັດຂາດ. ຫຼັກການໃຫຍ່ສາມປະການຂອງວຽກງານການເມືອງໃນກອງທັບຄື: ໑. ພະນັກງານກັບນັກລົບເປັນອັນໜຶ່ງອັນດຽວກັນ, ໒. ທະຫານກັບປະຊາຊົນເປັນອັນໜຶ່ງອັນດຽວກັນ, ໓. ການຜັນແຍກໃຫ້ທະຫານສັດຕູແຕກສະຫຼາຍ. ການທີ່ຈະປະຕິບັດຫຼັກການດັ່ງກ່າວໃຫ້ໄດ້ຜົນ ລ້ວນແຕ່ຕ້ອງເລີ່ມຈາກທ່າທີພື້ນຖານດັ່ງນີ້ຄື ຕ້ອງເຄົາລົບນັກລົບ ເຄົາລົບປະຊາຊົນແລະເຄົາລົບກຽດມະນຸດຂອງຊະເລີຍເສິກທີ່ໄດ້ວາງອາວຸດແລ້ວ. ຜູ້ທີ່ເຫັນວ່າບໍ່ແມ່ນບັນຫາທ່າທີພື້ນຖານ ຫາກແມ່ນບັນຫາເຕັກນິກນັ້ນ, ແມ່ນຄິດຜິດແທ້ໆ, ຄວນດັດແປງແກ້ໄຂເສຍຈຶ່ງຖືກຕ້ອງ.

«ວ່າດ້ວຍສົງຄາມຍືດເຍື້ອຍາວນານ» (ເດືອນ ໕-໑໙໓໘)

ໃນເວລາເຮັດວຽກຢູ່ໃນໝູ່ປະຊາຊົນຜູ້ອອກແຮງງານນັ້ນ, ຊາວພັກກອມມູນິດຕ້ອງໃຊ້ວິທີອົບຮົມລຸລິ່ງແບບປະຊາທິປະໄຕ, ບໍ່ໃຫ້ໃຊ້ທ່າທີລັດທິຄຳສັ່ງແລະວິທີບີບບັງຄັບຢ່າງເດັດຂາດ. ພັກກອມມູນິດຈີນປະຕິບັດຕາມຫຼັກການລັດທິມາກເລນິນນີ້ຢ່າງຊື່ສັດ.

«ບັນຫາກ່ຽວກັບການແກ້ໄຂຄວາມຂັດແຍ້ງພາຍໃນປະຊາຊົນຢ່າງຖືກຕ້ອງ» (ວັນທີ່ ໒໗-໒-໑໙໕໗)

ສະຫາຍຂອງພວກເຮົາເດັດຂາດຕ້ອງເຂົ້າໃຈວ່າ ວຽກງານດັດແປງແນວຄິດແມ່ນວຽກງານທີ່ກິນເວລາເຫິງ ຕ້ອງມີຄວາມອົດທົນແລະລະອຽດປະໜີດ, ບໍ່ຄວນຫວັງວ່າເຂົ້າສອນເທື່ອໜຶ່ງສອງເທື່ອ, ປະຊຸມເທື່ອໜຶ່ງສອງເທື່ອແລ້ວ ກໍ່ສາມາດປ່ຽນແປງຄວາມຮູ້ສຶກນຶກຄິດຂອງຄົນອື່ນທີ່ເປັນຮູບເປັນຮ່າງຂຶ້ນໃນ

ຊີວິດທີ່ຜ່ານມາຫຼາຍສິບປີນັ້ນໄດ້. ຈະໃຫ້ເຂົາຍອມ, ມີແຕ່ລຸລິ່ງໃຫ້ຍອມ ບໍ່ຄວນບີບໃຫ້ຍອມ. ຜົນຂອງການບີບໃຫ້ຍອມນັ້ນ ມັກຈະແມ່ນບີບແລ້ວຫາກບໍ່ຍອມ. ໃຊ້ກຳລັງບີບໃຫ້ເຂົາຍອມນັ້ນບໍ່ໄດ້ດອກ. ວິທີນີ້ເຮັດຕໍ່ສັດຕູແມ່ນໃຊ້ໄດ້, ແຕ່ເຮັດຕໍ່ສະຫາຍແລະຕໍ່ເພື່ອນມິດແລ້ວ ແມ່ນໃຊ້ບໍ່ໄດ້ຢ່າງເດັດຂາດ.

«ຄຳປາໄສໃນກອງປະຊຸມວຽກງານໂຄສະນາທົ່ວປະເທດຂອງພັກກອມມູນິດຈີນ» (ວັນທີ່ ໑໔-໓-໑໙໕໗)

ຕ້ອງແຍກເຮົາກັບສັດຕູໃຫ້ແຈ້ງ, ຈະຢືນຢູ່ເທິງຫຼັກພື້ນທີ່ເປັນປະຕິປັກກັນແລະໃຊ້ທ່າທີທີ່ເຮັດຕໍ່ສັດຕູມາເຮັດຕໍ່ສະຫາຍນັ້ນບໍ່ໄດ້. ຕ້ອງເວົ້າຈາດ້ວຍທ່າທີອັນເຕັມໄປດ້ວຍຄວາມອົບອຸ່ນເພື່ອຮັກສາພາລະກິດປະຊາຊົນແລະຍົກຄວາມຕື່ນຕົວຂອງປະຊາຊົນໃຫ້ສູງຂຶ້ນ, ຈະເວົ້າຈາດ້ວຍທ່າທີທົວຂວັນແລະໂຈມຕີນັ້ນບໍ່ໄດ້.

«ຄຳປາໄສໃນກອງປະຊຸມວຽກງານໂຄສະນາທົ່ວປະເທດຂອງພັກກອມມູນິດຈີນ» (ວັນທີ່ ໑໔-໓-໑໙໕໗)

໑໔. ການພົວພັນ ລະຫວ່າງທະຫານກັບປະຊາຊົນ

ກອງທັບຕ້ອງສະໜິດຕິດແທດເປັນປຶກແຜ່ນດຽວກັບປວງປະຊາຊົນ, ເຮັດໃຫ້ກອງທັບໃນສາຍຕາຂອງປວງປະຊາຊົນເຫັນເປັນກອງທັບຂອງຕົນເອງ, ກອງທັບນີ້ກໍ່ຈະບໍ່ມີໃຜສູ້ໄດ້ໃນໂລກນີ້, ...

«ວ່າດ້ວຍສົງຄາມຍືດເຍື້ອຍາວນານ» (ເດືອນ ໕-໑໙໓໘)

ຄວນໃຫ້ສະຫາຍທຸກຄົນເຂົ້າໃຈວ່າ ທະແນນແຕ່ພວກເຮົາອາໄສປະຊາຊົນ, ເຊື່ອໝັ້ນຢ່າງເດັດຂາດວ່າ ກຳລັງປະດິດສ້າງຂອງປວງປະຊາຊົນນັ້ນບໍ່ມີທີ່ສິ້ນສຸດ, ດັ່ງນັ້ນ ຈຶ່ງເຊື່ອຖືປະຊາຊົນ ແລະສະໜິດຕິດແທດເປັນປຶກແຜ່ນດຽວກັບປະຊາຊົນ, ແນວນີ້ແລ້ວ, ຄວາມຍາກລຳບາກໃດໆກໍ່ສາມາດຜ່ານຜ່າໄດ້,

ສັດຕູຕົວໃດກໍ່ບໍ່ອາດກົດຂີ່ພວກເຮົາລົງໄດ້, ແຕ່ພັດຈະຖືກພວກເຮົາກົດຂີ່ລົງຊ້ຳ.

«ວ່າດ້ວຍລັດຖະບານປະສົມ» (ວັນທີ່ ໒໔-໔-໑໙໔໕)

ສະຫາຍພວກເຮົາບໍ່ວ່າໄປຮອດບ່ອນໃດ ລ້ວນແຕ່ຕ້ອງພົວພັນກັບມວນຊົນໃຫ້ດີ, ຕ້ອງເອົາໃຈໃສ່ມວນຊົນ, ຊ່ວຍພວກເຂົາເຈົ້າແກ້ໄຂຄວາມຫຍຸ້ງຍາກລຳບາກ. ສາມັກຄີປະຊາຊົນອັນກວ້າງໃຫຍ່, ສາມັກຄີໄດ້ຍິ່ງຫຼາຍກໍ່ຍິ່ງດີ.

« ກ່ຽວກັບການເຈລະຈາທີ່ເມືອງຈຸງກິງ » (ວັນທີ່ ໑໗-໑໐-໑໙໔໕)

ຢູ່ໃນເຂດປົດປ່ອຍ, ດ້ານໜຶ່ງ ກອງທັບຄວນປະຕິບັດວຽກງານສະໜັບສະໜູນຝ່າຍປົກຄອງແລະຮັກແພງປະຊາຊົນ, ດ້ານໜຶ່ງອີກ ລັດຖະບານປະຊາທິປະໄຕຄວນນຳພາປະຊາຊົນປະຕິບັດວຽກງານສະໜັບສະໜູນທະຫານແລະເບິ່ງແຍງຄອບຄົວທະຫານຕໍ່ຕ້ານຍີ່ປຸ່ນ, ປັບປຸງຄວາມພົວພັນລະຫວ່າງທະຫານກັບປະຊາຊົນໃຫ້ດີຍິ່ງຂຶ້ນ.

«ວ່າດ້ວຍລັດຖະບານປະສົມ» (ວັນທີ່ ໒໔-໔-໑໙໔໕)

ພາຍໃນກອງທັບຄວນແກ້ໄຂບັນຫາທາງແນວຄິດຂອງຜູ້ບັນຊາແລະພົນທະຫານທຸກຄົນ, ເຮັດໃຫ້ພວກເຂົາເຈົ້າເຂົ້າໃຈຢ່າງເຖິງຖອງເຖິງຄວາມສຳຄັນຂອງການສະໜັບສະໜູນຝ່າຍປົກຄອງແລະຮັກແພງປະຊາຊົນ. ທະແນນແຕ່ຝ່າຍກອງທັບເຮັດໄດ້ດີ, ຄວາມພົວພັນທີ່ທ້ອງຖິ່ນມີຕໍ່ກອງທັບນັ້ນ, ແນ່ນອນ ກໍ່ຈະໄດ້ຮັບການປັບປຸງໃຫ້ດີຂຶ້ນນຳ.

«ເຂັມທິດຂອງວຽກງານເຂດປົດປ່ອຍໃນ ປີ ໑໙໔໖»
(ວັນທີ່ ໑໕-໑໒-໑໙໔໕)

ໃນການເຄື່ອນໄຫວ "ສະໜັບສະໜູນຝ່າຍປົກຄອງແລະຮັກແພງປະຊາຊົນ" ແລະ "ສະໜັບສະໜູນກອງທັບແລະເບິ່ງແຍງຄອບຄົວທະຫານຕໍ່ຕ້ານຍີ່ປຸ່ນ"ນັ້ນ, ຝ່າຍກອງທັບ ຝ່າຍພັກແລະຝ່າຍປົກຄອງຕ້ອງສຳຫຼວດກວດກາຂໍ້ບົກພ່ອງ ແລະ ຄວາມຜິດພາດຂອງຝ່າຍຕົນທີ່ເກີດຂຶ້ນໃນປີ ໑໙໔໕ ຢ່າງເຖິງຖອງແລະຕ້ອງແກ້ໃຫ້ຕົກຢ່າງເດັດດ່ຽວໃນປີ ໑໙໔໖. ແຕ່ນີ້ໄປ, ຄັນຮອດເດືອນຈຽງທຸກປີແລ້ວ ຄວນຈັດໃຫ້ມີການເຄື່ອນໄຫວຊະ

ນິດນີ້ໂດຍທົ່ວເຖິງ, ຄວນດຳເນີນການອ່ານປະກາດຂໍ້ສັນຍາ “ສະໜັບສະໜຸນຝ່າຍປົກຄອງແລະຮັກແພງປະຊາຊົນ” ແລະຂໍ້ສັນຍາ “ສະໜັບສະໜຸນກອງທັບແລະເບິ່ງແຍງຄອບຄົວທະຫານຕໍ່ຕ້ານຍີ່ປຸ່ນ” ຫຼາຍຕໍ່ຫຼາຍເທື່ອ, ເອົາຂໍ້ບົກພ່ອງແລະຄວາມຜິດພາດທີ່ໄດ້ເກີດຂຶ້ນໃນບັນດາເຂດທີ່ພົ້ນກ່ຽວກັບເລື່ອງທີ່ຝ່າຍກອງທັບໜີບເຕັງຂົ່ມເຫັງຝ່າຍພັກຝ່າຍປົກຄອງຝ່າຍປະຊາຊົນ ແລະເລື່ອງທີ່ຝ່າຍພັກຝ່າຍປົກຄອງຝ່າຍປະຊາຊົນເອົາໃຈໃສ່ຝ່າຍກອງທັບບໍ່ພຽງພໍນັ້ນ ມາດຳເນີນການຕຳນິຕົນເອງຢ່າງເປີດເຜີຍ ແລະ ມີລັກສະນະມວນຊົນຫຼາຍຕໍ່ຫຼາຍເທື່ອ (ແຕ່ລະຝ່າຍຕຳນິແຕ່ຕົນເອງ, ບໍ່ຕຳນິຝ່າຍກົງກັນຂ້າມ), ແລ້ວແກ້ໄຂໃຫ້ເຖິງຖອງ.

«ຂະຫຍາຍການເຄື່ອນໄຫວຫຼຸດຄ່າເຊົ່າ ເພີ່ມພູນຜະລິດຜົນ ສະໜັບສະໜຸນອົງການປົກຄອງແລະຮັກແພງປະຊາຊົນໃນເຂດທີ່ພົ້ນ» (ວັນທີ ໑-໑໐-໑໙໔໓)

໑໕. ປະຊາທິປະໄຕໃຫຍ່ ໓ ປະການ

ໃນກອງທັບຄວນປະຕິບັດແບບປະຊາທິປະໄຕອັນມີຂອບເຂດຈຳກັດແນ່ນອນ, ທີ່ສຳຄັນແມ່ນລົບລ້າງລະບອບດ່າຕີແບບລັດທິສັກດິນາ ແລະ ໃຫ້ພະນັກງານກັບນັກລົບມີຊີວິດຮ່ວມທຸກຮ່ວມສຸກນຳກັນ. ເມື່ອເຮັດແນວນີ້ ກໍ່ຈະບັນລຸເຖິງຈຸດປະສົງທີ່ໃຫ້ພະນັກງານກັບນັກລົບເປັນອັນໜຶ່ງອັນດຽວກັນ, ກອງທັບກໍ່ຈະເພີ່ມທະວີກຳລັງສູ້ລົບຂຶ້ນຢ່າງໃຫຍ່ຫຼວງທີ່ສຸດ ແລະກໍ່ຈະບໍ່ຕ້ອງວິຕົກວ່າ ຈະບໍ່ສາມາດສູ້ຍັນກັບສົງຄາມອັນຍາວນານໂຫດຮ້າຍທາລຸນໄດ້.

«ວ່າດ້ວຍສົງຄາມຍືດເຍື້ອຍາວນານ» (ເດືອນ ໕-໑໙໓໘)

ການທີ່ກອງທັບແດງມີຊີວິດດ້ານວັດຖຸອັດຕະຄັດຂັດສົນເຖິງ

ປານນີ້ ແລະສູ້ລົບຫຼາຍເຖິງປານນີ້, ແຕ່ກໍ່ສາມາດດຳລົງຊົງຕົວຢູ່ໄດ້ນັ້ນ, ນອກຈາກບົດບາດຂອງພັກແລ້ວ ກໍ່ແມ່ນອາໄສການປະຕິບັດລັດທິປະຊາທິປະໄຕພາຍໃນກອງທັບ. ພະນັກງານບໍ່ຕີນັກລົບ, ພະນັກງານແລະນັກລົບໄດ້ຮັບຄວາມສະເໝີພາບ, ນັກລົບມີສິດເສລີພາບໃນການປະຊຸມແລະປາກເວົ້າ, ລົບລ້າງພິທີການຈຸກຈິກ, ເສດຖະກິດເປີດເຜີຍ. ...ຢູ່ປະເທດຈີນບໍ່ສະເພາະແຕ່ປະຊາຊົນຕ້ອງການລັດທິປະຊາທິປະໄຕ, ກອງທັບກໍ່ຕ້ອງການລັດທິປະຊາທິປະໄຕຄືກັນ. ລະບອບລັດທິປະຊາທິປະໄຕພາຍໃນກອງທັບ ຈະເປັນອາວຸດສຳຄັນອັນໜຶ່ງໃນການທຳລາຍຄວາມເປັນກອງທັບຮັບຈ້າງແບບສັກດີນາ.

«ການຕໍ່ສູ້ຢູ່ຈິງກັງຊານ» (ວັນທີ່ ໒໕-໑໑-໑໙໒໘)

ເຂັມທິດຂອງວຽກງານການເມືອງພາຍໃນກອງທະຫານແມ່ນລະດົມມວນນັກລົບ ຜູ້ບັນຊາແລະຜູ້ປະຕິບັດງານທັງໝົດຢ່າງເຕັມທີ່, ຜ່ານການເຄື່ອນໄຫວປະຊາທິປະໄຕໃຕ້ການນຳຮວມສູນ ເພື່ອບັນລຸເຖິງຈຸດປະສົງ ໓ ປະການໃຫຍ່ຄື ຄວາມ

ສາມັກຄີໃນລະດັບສູງທາງການເມືອງ ການປັບປຸງຊີວິດການເປັນຢູ່ໃຫ້ດີຂຶ້ນ ແລະການຍົກລະດັບເຕັກນິກແລະຍຸດທະວິທີທາງການທະຫານໃຫ້ສູງຂຶ້ນ. ໓ ສຳຫຼວດແລະ ໓ ປັບປຸງທີ່ດຳເນີນຢ່າງຟົດຟື້ນຢູ່ໃນກອງທະຫານເຮົາສະເພາະໜ້ານີ້ ແມ່ນໃຊ້ວິທີປະຊາທິປະໄຕທາງການເມືອງແລະທາງເສດຖະກິດໄປບັນລຸເຖິງຈຸດປະສົງສອງປະການກ່ອນນັ້ນເອງ.

ກ່ຽວກັບປະຊາທິປະໄຕທາງເສດຖະກິດນັ້ນ ຕ້ອງໃຫ້ຜູ້ຕາງໜ້າທີ່ນັກລົບຄັດເລືອກຂຶ້ນມີສິດຊ່ອຍເຫຼືອ (ບໍ່ແມ່ນລື່ນກາຍ) ຜູ້ບັງຄັບໃນກອງຮ້ອຍກຳກັບການລ້ຽງດູແລະອາຫານການກິນຂອງກອງຮ້ອຍ.

ກ່ຽວກັບປະຊາທິປະໄຕທາງການທະຫານນັ້ນ, ໃນເວລາຝຶກແອບທະຫານ ຕ້ອງປະຕິບັດໃຫ້ພະນັກງານກັບນັກລົບສອນຊຶ່ງກັນແລະກັນ, ນັກລົບກັບນັກລົບສອນຊຶ່ງກັນແລະກັນ; ໃນຍາມສູ້ລົບ ຕ້ອງໃຫ້ກອງຮ້ອຍມີການເປີດປະຊຸມໃຫຍ່ຫຼືນ້ອຍຕ່າງໆຢູ່ສະໜາມລົບ. ພາຍໃຕ້ການຊີ້ນຳຂອງຜູ້ບັງຄັບໃນກອງຮ້ອຍ,

ລະດົມມວນນັກລົບອະພິປາຍວ່າ ຈະຕີເອົາທີ່ໝັ້ນຂອງສັດຕູແນວໃດ ແລະສຳເລັດໜ້າທີ່ສູ້ລົບແນວໃດ. ໃນເວລາສູ້ລົບລຽນຕິດຫຼາຍມື້ນັ້ນ, ຄວນປະຊຸມແບບນີ້ຫຼາຍເທື່ອ. ປະຊາທິປະໄຕທາງການທະຫານນີ້ ໄດ້ນຳເອົາໄປປະຕິບັດໃນ "ບັ້ນລົບພານຫຼົງ" ຢູ່ທາງພາກເໜືອ ແຂວງສ່ານຊີແລະໃນ"ບັ້ນລົບຊືເຈັຽຈວງ"ເຂດແດນຕໍ່ແດນແຂວງຊານຊີ—ຊາຮາ—ເຫີເປ ແລະໄດ້ຮັບຜົນຢ່າງໃຫຍ່ຫຼວງທີ່ສຸດແລ້ວ. ທັງນີ້ ກໍ່ໄດ້ຢັ້ງຢືນໃຫ້ເຫັນວ່າມີແຕ່ຜົນດີ, ບໍ່ມີຜົນຮ້າຍຈັກດີ້.

« ການເຄື່ອນໄຫວປະຊາທິປະໄຕພາຍໃນກອງທັບ »

(ວັນທີ່ ໓໐-໑-໑໙໔໘)

ພັກກອມມູນິດຈີນທີ່ຢູ່ຕໍ່ໜ້າການຕໍ່ສູ້ອັນຍິ່ງໃຫຍ່ໄດ້ຮຽກຮ້ອງໃຫ້ອົງການນຳພາທົ່ວພັກ ສະມາຊິກແລະພະນັກງານທົ່ວທັງພັກ, ສົ່ງເສີມຄວາມຂະຫຍັນຫ້າວຫັນຂອງຕົນຢ່າງເຕັມທີ່ ຈຶ່ງສາມາດໄດ້ຮັບໄຊຊະນະ. ອັນທີ່ວ່າການສົ່ງເສີມຄວາມຂະຫຍັນຫ້າວຫັນນັ້ນ ຕ້ອງສະແດງອອກເປັນຕົວຈິງໃນດ້ານຄວາມສາມາດປະດິດ

ສ້າງ, ຈິດໃຈຮັບຜິດຊອບ, ຄວາມຫ້າວຫັນໃນວຽກງານ, ກ້າແລະຊ່າງສະເໜີບັນຫາ ອອກຄວາມຄິດຄວາມເຫັນແລະຕຳນິຂໍ້ບົກພ່ອງ, ຕະຫຼອດຈົນສະແດງອອກໃນດ້ານບົດບາດກວດກາຄວບຄຸມອົງການນຳພາແລະພະນັກງານຜູ້ນຳພາໂດຍເລີ່ມຈາກທັດສະນະຖະໜອມຮັກແພງຂອງອົງການນຳພາ ພະນັກງານແລະສະມາຊິກພັກ. ຄັນບໍ່ມີສິ່ງເຫຼົ່ານີ້ແລ້ວ, ອັນທີ່ວ່າຄວາມຂະຫຍັນຫ້າວຫັນນັ້ນ ກໍ່ຈະເປັນເລື່ອງເປົ່າດາຍ. ແຕ່ການສົ່ງເສີມຄວາມຂະຫຍັນຫ້າວຫັນເຫຼົ່ານີ້ ຕ້ອງອາໄສຄວາມເປັນແບບປະຊາທິປະໄຕຂອງຊີວິດພາຍໃນພັກ. ຖ້າພາຍໃນພັກຂາດຊີວິດປະຊາທິປະໄຕ ກໍ່ບໍ່ສາມາດບັນລຸເຖິງຈຸດປະສົງໃນການສົ່ງເສີມຄວາມຂະຫຍັນຫ້າວຫັນໄດ້. ການສ້າງພະນັກງານຜູ້ມີຄວາມສາມາດເປັນຈຳນວນຫຼວງຫຼາຍນັ້ນ ຈະເປັນໄປໄດ້ກໍ່ມີແຕ່ສ້າງຂຶ້ນຢູ່ໃນຊີວິດປະຊາທິປະໄຕ.

« ຖານະຂອງພັກກອມມູນິດຈີນໃນສົງຄາມຊາດ »

(ເດືອນ ໑໐-໑໙໓໘)

ບໍ່ວ່າຜູ້ໃດກໍ່ຕາມ, ທະແນນແຕ່ບໍ່ແມ່ນພວກປໍລະປັກ, ບໍ່ແມ່ນໂຈມຕີດ້ວຍເຈຕະນາຮ້າຍ ກໍ່ຄວນໃຫ້ເວົ້າໄດ້ໝົດທຸກຄົນ; ເວົ້າຜິດແລ້ວກໍ່ບໍ່ເປັນຫຍັງ. ຜູ້ນຳພາທຸກຂັ້ນມີໜ້າທີ່ຮັບຟັງຄວາມເວົ້າຂອງຜູ້ອື່ນ. ປະຕິບັດຫຼັກການສອງຂໍ້ຄື: (໑)ເມື່ອຮູ້ກໍ່ເວົ້າ, ເມື່ອເວົ້າກໍ່ໃຫ້ສຸດຄວາມ; (໒)ຜູ້ເວົ້າບໍ່ມີໂທດ, ຜູ້ຟັງຄວນລະເວັ້ນ. ຖ້າບໍ່ມີຂໍ້ທີ່ວ່າ "ຜູ້ເວົ້າບໍ່ມີໂທດ" ແລະເປັນແນວນັ້ນແທ້, ບໍ່ແມ່ນປອມແລ້ວ ກໍ່ບໍ່ສາມາດໄດ້ຮັບຜົນໃນຂໍ້ທີ່ວ່າ "ເມື່ອຮູ້ກໍ່ເວົ້າ, ເມື່ອເວົ້າກໍ່ໃຫ້ສຸດຄວາມ".

«ພາລະໜ້າທີ່ໃນ ປີ ໑໙໔໕» (ວັນທີ່ ໑໕-໑໒-໑໙໔໔)

ຢູ່ພາຍໃນພັກຕ້ອງດຳເນີນການອົບຮົມກ່ຽວກັບຊີວິດປະຊາທິປະໄຕ ເພື່ອເຮັດໃຫ້ສະມາຊິກພັກຮູ້ວ່າຊີວິດປະຊາທິປະໄຕແມ່ນຫຍັງ, ຮູ້ວ່າການພົວພັນລະຫວ່າງລະບອບປະຊາທິປະໄຕກັບລະບອບຮວມສູນແມ່ນຫຍັງ ແລະຈະປະຕິບັດລະບອບປະຊາທິປະໄຕຮວມສູນແນວໃດ. ເຮັດແນວນີ້ຈຶ່ງສາມາດເຮັດໄດ້ດັ່ງນີ້: ດ້ານໜຶ່ງ ເຮັດໃຫ້ຊີວິດປະຊາທິປະໄຕພາຍໃນພັກ

ຂະຫຍາຍກວ້າງຢ່າງແທ້ຈິງ; ອີກດ້ານໜຶ່ງ ບໍ່ເຖິງກັບໄປຮອດຂັ້ນປະຊາທິປະໄຕກາຍຂອບເຂດ, ໄປຮອດຂັ້ນລັດທິເສລີຕາມໃຈມັກທີ່ທຳລາຍວິໄນ.

« ຖານະຂອງພັກກອມມູນິດຈີນໃນສົງຄາມຊາດ »

(ເດືອນ ໑໐-໑໙໓໘)

ບໍ່ວ່າຢູ່ໃນກອງທັບຫຼືຢູ່ໃນອົງການທ້ອງຖິ່ນ, ປະຊາທິປະໄຕພາຍໃນພັກລ້ວນແຕ່ແມ່ນເພື່ອເສີມສ້າງວິໄນໃຫ້ໝັ້ນຄົງແລະເພີ່ມທະວີກຳລັງສູ້ລົບໃຫ້ເຂັ້ມແຂງ, ແຕ່ບໍ່ແມ່ນບັ່ນທອນວິໄນແລະກຳລັງສູ້ລົບໃຫ້ອ່ອນລົງ.

« ຖານະຂອງພັກກອມມູນິດຈີນໃນສົງຄາມຊາດ »

(ເດືອນ ໑໐-໑໙໓໘)

ຂຸດກົ່ນຮາກເຫງົ້າປະຊາທິປະໄຕກາຍຂອບເຂດໂດຍທາງທິດສະດີ. ກ່ອນອື່ນໝົດ ຕ້ອງຊີ້ໃຫ້ເຫັນວ່າອັນຕະລາຍຂອງປະຊາທິປະໄຕກາຍຂອບເຂດນັ້ນ ຢູ່ທີ່ມັນກໍ່ຄວາມເສຍຫາຍຫຼື

ຮອດຂັ້ນທຳລາຍອົງການຈັດຕັ້ງຂອງພັກຈີນພິດ, ບັ່ນທອນຫຼື ຮອດຂັ້ນດັບສູນກຳລັງສູ້ລົບຂອງພັກຈີນພິດ, ເຮັດໃຫ້ພັກບໍ່ ສາມາດທາບແບກໜ້າທີ່ຕໍ່ສູ້ໄດ້ ຈົນເປັນເຫດພາໃຫ້ການປະຕິ ວັດປະລາໄຊຍ້ອນ. ຖັດມາ ຕ້ອງຊີ້ໃຫ້ເຫັນວ່າບ່ອນເກີດຂອງ ປະຊາທິປະໄຕກາຍຂອບເຂດນັ້ນຢູ່ທີ່ລັກສະນະເສລີຊະຊາຍ ຂອງຊົນຊັ້ນເຈົ້າທຶນນ້ອຍ. ເມື່ອນຳເອົາລັກສະນະເສລີຊະຊາຍ ຊະນິດນີ້ເຂົ້າມາພາຍໃນພັກແລ້ວ ກໍ່ກາຍເປັນແນວຄິດຂອງປະ ຊາທິປະໄຕກາຍຂອບເຂດໃນດ້ານການເມືອງແລະການຈັດຕັ້ງ. ແນວຄິດຊະນິດນີ້ເຂົ້າກັນກັບພາລະໜ້າທີ່ຕໍ່ສູ້ຂອງຊົນຊັ້ນກຳມາ ຊີບບໍ່ໄດ້ຢ່າງເດັດຂາດ.

«ກ່ຽວກັບການແກ້ໄຂດັດແປງແນວຄິດທີ່ຜິດພາຍໃນ ພັກ» (ເດືອນ ໑໒-໑໙໒໙)

໑໖. ການໃຫ້ການສຶກສາ ແລະຝຶກແອບອົບຣົມ

ເຂັມທິດການສຶກສາຂອງພວກເຮົາ ຄວນໃຫ້ຜູ້ຮັບການ ສຶກສາໄດ້ຈະເລີນທັງໃນດ້ານຈະລິຍະສຶກສາ ພຸດທິສຶກສາແລະ ພະລະສຶກສາ, ກາຍເປັນຜູ້ອອກແຮງງານທີ່ມີຄວາມຕື່ນຕົວທາງ ສັງຄົມນິຍົມແລະມີວັດທະນະທຳ.

«ບັນຫາກ່ຽວກັບການແກ້ໄຂຄວາມຂັດແຍ້ງພາຍໃນ ປະຊາຊົນຢ່າງຖືກຕ້ອງ» (ວັນທີ່ ໒໗-໒-໑໙໕໗)

ສຳລັບການອົບຣົມພະນັກງານປະຈຳການແລະການອົບຣົມ ໃນໂຮງຮຽນພະນັກງານນັ້ນ ຄວນກຳນົດເຂັມທິດທີ່ຖືການຄົ້ນ ຄວ້າບັນຫາຕົວຈິງໃນການປະຕິວັດຈີນເປັນໃຈກາງແລະຖືຫຼັກ

ການພື້ນຖານຂອງລັດທິມາກເລນິນເປັນສິ່ງຊີ້ນຳ, ຍຸບເລີກວິທີ ຄົ້ນຄວ້າລັດທິມາກເລນິນຢ່າງຍຸດໜຶ້ງແລະໂດດດ່ຽວ.

«ດັດແປງການຮ່ຳຮຽນຂອງພວກເຮົາ» (ເດືອນ ໕-໑໙໔໑)

ສຳລັບໂຮງຮຽນການທະຫານແຫ່ງໜຶ່ງ, ບັນຫາສຳຄັນທີ່ສຸດ ແມ່ນການເລືອກຫົວໜ້າໂຮງຮຽນ ຄູສອນແລະການວາງເຂັມ ທິດການສຶກສາ.

«ບັນ ຫາ ຍຸດ ທະ ສາດ ຂອງ ສົງ ຄາມ ປະ ຕິວັດ ຈີນ» (ເດືອນ ໑໒-໑໙໓໖)

ໂຮງຮຽນທີ່ມີຄົນຈຳນວນຮ້ອຍແຫ່ງໜຶ່ງ, ຖ້າບໍ່ມີຫຼັກແຫຼ່ງນຳ ພາຫຼາຍຄົນຮອດສິບກວ່າຄົນທີ່ຂະຫຍັນຫ້າວຫັນທີ່ສຸດ ສັດຊື່ທ່ຽງ ທີ່ສຸດແລະມີໄຫວພິກດີທີ່ສຸດຊຶ່ງເປັນຮູບເປັນຮ່າງຂຶ້ນຕາມສະ ພາບຕົວຈິງ (ບໍ່ແມ່ນປະສົມຮ່ວມໂຮມກັນຕາມອາດ) ໃນພູ່ຄູ

ສອນ ພະນັກງານແລະນັກຮຽນແລ້ວ, ໂຮງຮຽນນີ້ຈະຈັດການ ບໍ່ໄດ້ດີຢ່າງແນ່ນອນ.

« ບັນຫາບາງຂໍ້ກ່ຽວກັບວິທີນຳພາ » (ວັນທີ່ ໑-໖-໑໙໔໓)

ບັນດາພະນັກງານແລະນັກລົບໃນທົ່ວກອງທັບຂອງພວກເຮົາ ຕ້ອງຍົກລະດັບສີລະປະການທະຫານໃຫ້ສູງ, ຕ້ອງບຸກໜ້າຢ່າງ ອົງອາດກ້າຫານໃນສົງຄາມທີ່ຈະຊະນະແນ່ນອນ, ດັບສູນສັດຕູ ທັງໝົດຢ່າງເດັດດ່ຽວ ເຖິງຖອງ ຮາບຄາບແລະໝົດກ້ຽງ.

« ຖະແຫຼງການຂອງກອງທັບປົດປ່ອຍປະຊາຊົນຈີນ » (ເດືອນ ໑໐-໑໙໔໗)

ໃນແຜນການປັບປຸງອົບຮົມໜຶ່ງປີທີ່ເລີ່ມຕົ້ນໃນສະເພາະໜ້າ ນີ້, ການປັບປຸງອົບຮົມການທະຫານແລະການປັບປຸງອົບຮົມ ການເມືອງຄວນມີນ້ຳໜັກທ່ຽມກັນ ແລະເຮັດໃຫ້ວຽກສອງດ້ານນີ້ ປະສານເຂົ້າກັນ. ໃນເມື່ອເລີ່ມການປັບປຸງອົບຮົມນັ້ນ ຍັງຄວນ

ໜັກໄປໃນດ້ານການເມືອງແລະໜັກໄປໃນການປັບປຸງການພົວພັນລະຫວ່າງພະນັກງານກັບນັກລົບໃຫ້ດີຂຶ້ນ, ເພີ່ມທະວີຄວາມສາມັກຄີພາຍໃນ, ປຸກລະດົມຄວາມຂະຫຍັນຫ້າວຫັນໃນລະດັບສູງຂອງພະນັກງານແລະມວນນັກລົບ, ການປັບປຸງອົບຮົມດ້ານການທະຫານຈຶ່ງປະຕິບັດໄດ້ງ່າຍແລະມີຜົນຍິ່ງຂຶ້ນ.

«ພາລະໜ້າທີ່ໃນ ປີ ໑໙໔໕» (ວັນທີ ໑໕-໑໒-໑໙໔໔)

ວິທີຝຶກແອບທະຫານ ຄວນເປີດການເຄື່ອນໄຫວຝຶກແອບທະຫານທີ່ມີລັກສະນະມວນຊົນ ຄື ພະນັກງານສອນນັກລົບ ນັກລົບສອນພະນັກງານແລະນັກລົບສອນນັກລົບ.

«ເຂັມທິດຂອງວຽກງານເຂດປົດປ່ອຍ ປີ ໑໙໔໗»
(ວັນທີ ໑໕-໑໒-໑໙໔໕)

ຄຳຂວັນໃນການຝຶກແອບທະຫານຂອງພວກເຮົາແມ່ນ: "ພະນັກງານສອນນັກລົບ, ນັກລົບສອນພະນັກງານ, ນັກລົບສອນນັກລົບ." ບັນດານັກລົບມີບົດຮຽນຕົວຈິງໃນການລົບເລວຫຼາຍ

ທີ່ສຸດ. ຜູ້ເປັນພະນັກງານຕ້ອງຮຽນນຳນັກລົບ, ເຮັດໃຫ້ບົດຮຽນຂອງຜູ້ອື່ນກາຍເປັນຂອງຕົນ ແລ້ວຄວາມສາມາດຂອງເຂົາເຈົ້າກໍ່ຈະມີຫຼາຍຂຶ້ນ.

«ລົມທະນາກັບພະນັກງານກອງບັນນາທິການໜັງສືພິມຈິນສຸຍລາຍວັນ» (ວັນທີ ໖-໔-໑໙໔໕)

ລາຍການຝຶກແອບທະຫານ, ຍັງແມ່ນຖືການຍົກລະດັບເຕັກນິກການຍິງປືນ ແທງກະບີ່ ຄວ່າງໝາກແຕກມີເປັນສຳຄັນ, ຖືການຍົກລະດັບຍຸດທະວິທີເປັນສຳຮອງ, ໂດຍສະເພາະໃຫ້ໜັກໄປໃນການຝຶກແອບລົບກາງຄືນ.

«ເຂັມທິດຂອງວຽກງານເຂດປົດປ່ອຍ ປີ ໑໙໔໗»
(ວັນທີ ໑໕-໑໒-໑໙໔໕)

໑໗. ຮັບໃຊ້ປະຊາຊົນ

ພວກເຮົາຄວນຖ່ອມຕົວ, ສຸຂຸມຮອບຄອບ, ລະເວັ້ນຄວາມທະນົງຕົວ, ລະເວັ້ນຄວາມຮ້ອນຮົນ, ຮັບໃຊ້ປະຊາຊົນຈີນຢ່າງສຸດອົກສຸດໃຈ, ...

«ຊະຕາກຳສອງຊະນິດຂອງປະເທດຈີນ» (ວັນທີ່ ໒໓-໔-໑໙໔໕)

ຮັບໃຊ້ປະຊາຊົນຢ່າງສຸດອົກສຸດໃຈ, ຍາມໃດກໍ່ບໍ່ຫ່າງເຫີນຈາກມວນຊົນ; ທຸກສິ່ງທຸກຢ່າງເລີ່ມຈາກຜົນປະໂຫຽດຂອງປະຊາຊົນ, ບໍ່ແມ່ນເລີ່ມຈາກຜົນປະໂຫຽດຂອງສ່ວນຕົວຫຼືຂອງກຸ່ມນ້ອຍ; ການຮັບຜິດຊອບຕໍ່ປະຊາຊົນກັບການຮັບຜິດຊອບຕໍ່ອົງການນຳພາຂອງພັກເປັນອັນໜຶ່ງອັນດຽວກັນ; ສິ່ງເຫຼົ່ານີ້

ແມ່ນຈຸດເລີ່ມຕົ້ນຂອງພວກເຮົາ.

«ວ່າດ້ວຍລັດຖະບານປະສົມ» (ວັນທີ່ ໒໔-໔-໑໙໔໕)

ອົງການຂອງລັດປະຕິບັດລະບອບປະຊາທິປະໄຕຮວມສູນ, ອົງການຂອງລັດຕ້ອງອາໄສປວງປະຊາຊົນ, ພະນັກງານຂອງອົງການຂອງລັດຕ້ອງຮັບໃຊ້ປະຊາຊົນ.

«ບັນຫາກ່ຽວກັບການແກ້ໄຂຄວາມຂັດແຍ້ງພາຍໃນປະຊາຊົນຢ່າງຖືກຕ້ອງ» (ວັນທີ່ ໒໗-໒-໑໙໕໗)

ນ້ຳໃຈທີ່ບໍ່ຫາຜົນປະໂຫຽດໃຫ້ແກ່ຕົນຈັກເມັດ ມີແຕ່ຫາຜົນປະໂຫຽດໃຫ້ແກ່ຜູ້ອື່ນຂອງສະຫາຍເບທູນ ໄດ້ສະແດງໃຫ້ເຫັນຢູ່ທີ່ສະຫາຍມີຄວາມຮັບຜິດຊອບທີ່ສຸດຕໍ່ວຽກງານ, ມີນ້ຳໃຈຮັກແພງທີ່ສຸດຕໍ່ບັນດາສະຫາຍຕໍ່ປະຊາຊົນ. ສະມາຊິກພັກກອມມູນິດທຸກຄົນລ້ວນແຕ່ຕ້ອງຮຽນເອົາແບບຢ່າງສະຫາຍເບທູນ.

....

ພວກເຮົາທັງຫຼາຍຕ້ອງຮຽນເອົານ້ຳໃຈທີ່ບໍ່ເຫັນແກ່ຕົວຈັກ

ເນັດຂອງສະຫາຍ. ເລີ່ມຈາກຈຸດນີ້ແລ້ວ ກໍ່ສາມາດກາຍເປັນຜູ້ທີ່ມີປະໂຫຽດຕໍ່ປະຊາຊົນຫຼາຍທີ່ສຸດ. ຄວາມສາມາດຂອງຄົນຜູ້ໜຶ່ງມີຫຼາຍມີໜ້ຽ, ແຕ່ເມື່ອມີນ້ຳໃຈດັ່ງນີ້ແລ້ວ ກໍ່ເປັນຜູ້ສູງສົ່ງ ຜູ້ທີ່ບໍລິສຸດ ຜູ້ທີ່ມີສິນທຳ ຜູ້ທີ່ພົ້ນຈາກລົດນິຍົມອັນຕ່ຳຕ້ຽຖ່ຽຊານແລະເປັນຜູ້ທີ່ມີປະໂຫຽດຕໍ່ປະຊາຊົນ.

«ລະນຶກເຖິງນໍແມນ ເບທູນ» (ວັນທີ່ ໒໑-໑໒-໑໙໓໙)

ພັກກອມມູນິດຂອງພວກເຮົາແລະກອງທັບສາຍທີ່ ໘ ກອງທັບທີ່ ໔ ໃໝ່ຊຶ່ງນຳພາໂດຍພັກກອມມູນິດນັ້ນ ແມ່ນຖັນແຖວປະຕິວັດ. ຖັນແຖວຂອງພວກເຮົານີ້ສຸມຈິດສຸມໃຈເພື່ອປົດປ່ຽປະຊາຊົນ, ເຮັດວຽກເພື່ອຜົນປະໂຫຽດຂອງປະຊາຊົນຢ່າງເຖິງຖອງ.

«ຮັບໃຊ້ປະຊາຊົນ» (ວັນທີ່ ໘-໙-໑໙໔໔)

ພະນັກງານຂອງພວກເຮົາໝົດທຸກຄົນ ບໍ່ວ່າມີຕຳແໜ່ງສູງຫຼືຕ່ຳ ລ້ວນແຕ່ເປັນຜູ້ຮັບໃຊ້ຂອງປະຊາຊົນ, ວຽກງານທຸກ

ຢ່າງທີ່ພວກເຮົາເຮັດນັ້ນ ລ້ວນແຕ່ແມ່ນຮັບໃຊ້ປະຊາຊົນ, ພວກເຮົາມີສິ່ງບໍ່ດີອັນໃດແດ່ທີ່ຍັງເສຽດາຍບໍ່ຢາກປະຖິ້ມ?

«ພາລະໜ້າທີ່ໃນ ປີ ໑໙໔໕» (ວັນທີ່ ໑໕-໑໒-໑໙໔໔)

ໜ້າທີ່ຂອງພວກເຮົາແມ່ນຮັບຜິດຊອບຕໍ່ປະຊາຊົນ. ທຸກຄວາມເວົ້າ ທຸກການກະທຳ ທຸກນະໂຍບາຍລ້ວນແຕ່ຕ້ອງສອດຄ້ອງກັບຜົນປະໂຫຽດຂອງປະຊາຊົນ, ຖ້າມີຄວາມຜິດພາດແລ້ວ, ຕ້ອງດັດແປງແກ້ໄຂຢ່າງແນ່ນອນ, ອັນນີ້ເອີ້ນວ່າ ຮັບຜິດຊອບຕໍ່ປະຊາຊົນ.

«ສະຖານະການພາຍຫຼັງໄດ້ໄຊຊະນະໃນສົງຄາມຕໍ່ຕ້ານຍີ່ປຸ່ນແລະເຂັມທິດຂອງພວກເຮົາ» (ວັນທີ່ ໑໓-໘-໑໙໔໕)

ເມື່ອຕໍ່ສູ້ກໍ່ຍ່ອມມີການເສຽສະຫຼະ, ເລື່ອງຄົນຕາຍນັ້ນເກີດຂຶ້ນເລື້ອຍໆ. ແຕ່ເມື່ອພວກເຮົາຄຶດເຖິງຜົນປະໂຫຽດຂອງປະຊາຊົນ, ຄຶດເຖິງຄວາມເດືອດຮ້ອນຂອງປະຊາຊົນສ່ວນຫຼາຍ

ແລ້ວ, ພວກເຮົາຕາຍເພື່ອປະຊາຊົນ ກໍ່ເປັນການຕາຍທີ່ສົມກຽດ. ແຕ່ວ່າ ພວກເຮົາຄວນເຮັດໃຫ້ການເສຍສະຫຼະອັນບໍ່ຈຳເປັນນັ້ນລົດໜ້ອຍລົງຕາມທີ່ຈະເຮັດໄດ້.

«ຮັບໃຊ້ປະຊາຊົນ» (ວັນທີ່ ໘-໙-໑໙໔໔)

ຄົນເຮົາຍ່ອມຈະຕ້ອງຕາຍ, ແຕ່ການຕາຍນັ້ນມີຄວາມໝາຍຕ່າງກັນ. ໃນສະໄໝບູຮານຂອງຈີນມີນັກວັນນະຄະດີຜູ້ໜຶ່ງຊື່ວ່າ ຊືຜ່າຊຽນເຄີຍເວົ້າວ່າ: "ຄົນເຮົາຍ່ອມຈະຕ້ອງຕາຍ, ການຕາຍນັ້ນຫຼືວ່າໜັກກວ່າພູໄທ້ຊານ ຫຼືວ່າເບົາກວ່າຂົນນົກ." ຕາຍເພື່ອຜົນປະໂຫຍດຂອງປະຊາຊົນ ກໍ່ໜັກກວ່າພູໄທ້ຊານ; ອອກແຮງຮັບໃຊ້ພວກຟັດຊິດ ຕາຍເພື່ອຜູ້ຂູດຮີດແລະຜູ້ກົດຂີ່ປະຊາຊົນນັ້ນ ກໍ່ເບົາກວ່າຂົນນົກ.

«ຮັບໃຊ້ປະຊາຊົນ» (ວັນທີ່ ໘-໙-໑໙໔໔)

໑໕. ລັດທິຮັກຊາດແລະລັດທິສາກົນ

ສະມາຊິກພັກກອມມູນິດທີ່ເປັນນັກລັດທິສາກົນ ຈະເປັນນັກລັດທິຮັກຊາດໄປພ້ອມກັນໄດ້ຫຼືບໍ່? ພວກເຮົາເຫັນວ່າ ບໍ່ພຽງແຕ່ເປັນໄດ້ ຫາກຍັງຄວນເປັນອີກດ້ວຍ. ການກຳນົດເນື້ອໃນຕົວຈິງຂອງລັດທິຮັກຊາດນັ້ນ ຕ້ອງເບິ່ງວ່າເງື່ອນໄຂປະວັດສາດເປັນແນວໃດ. ມີ "ລັດທິຮັກຊາດ" ຂອງຍີ່ປຸ່ນຜູ້ລຸກລານແລະຂອງຮິດແລ, ມີລັດທິຮັກຊາດຂອງພວກເຮົາ. ຕໍ່ອັນທີ່ເອີ້ນວ່າ "ລັດທິຮັກຊາດ" ຂອງຍີ່ປຸ່ນຜູ້ລຸກລານແລະຂອງຮິດແລນັ້ນ, ສະມາຊິກພັກກອມມູນິດຕ້ອງຄັດຄ້ານຢ່າງເດັດດ່ຽວ. ຊາວພັກກອມມູນິດຍີ່ປຸ່ນ ແລະ ຊາວພັກກອມມູນິດເຢຍລະມັນລ້ວນແຕ່ແມ່ນພວກລັດທິປະລາໄຊໃນສົງຄາມທີ່ປະເທດຂອງພວກເຂົາເຈົ້າກໍ່ຂຶ້ນ. ການໃຊ້ທຸກວິທີມາເຮັດໃຫ້ສົງຄາມທີ່ຍີ່ປຸ່ນຜູ້ລຸກລານ

ແລະຮິດແລກໍ່ຂຶ້ນນັ້ນປະລາໄຊ ແມ່ນສອດຄ້ອງກັບຜົນປະໂຫຍດຂອງປະຊາຊົນຍີ່ປຸ່ນແລະປະຊາຊົນເຢຍລະມັນ; ປະລາໄຊຍິ່ງເຖິງຖອງກໍ່ຍິ່ງດີ. ...ອັນນີ້ກໍ່ຍ້ອນວ່າສົງຄາມທີ່ຍີ່ປຸ່ນຜູ້ລຸກລານແລະຮິດແລກໍ່ຂຶ້ນນັ້ນ ບໍ່ພຽງແຕ່ກໍ່ຄວາມເສຍຫາຍໃຫ້ແກ່ປະຊາຊົນໃນໂລກທໍ່ນັ້ນ, ຍັງກໍ່ຄວາມເສຍຫາຍໃຫ້ແກ່ປະຊາຊົນພາຍໃນປະເທດຂອງພວກມັນອີກດ້ວຍ. ສະພາບຂອງຈີນຊ້ຳພັດຕ່າງກັນ, ປະເທດຈີນແມ່ນປະເທດທີ່ຖືກລຸກລານ. ດັ່ງນັ້ນຊາວພັກກອມມູນິດຈີນ ຕ້ອງເອົາລັດທິຮັກຊາດກັບລັດທິສາກົນປະສານເຂົ້າກັນ. ພວກເຮົາແມ່ນນັກລັດທິສາກົນ ທັງແມ່ນນັກລັດທິຮັກຊາດອີກດ້ວຍ, ຄຳຂວັນຂອງພວກເຮົາແມ່ນສູ້ລົບເພື່ອຕ້ານຜູ້ລຸກລານປ້ອງກັນປະເທດຊາດ. ສຳລັບພວກເຮົາ, ລັດທິປະລາໄຊແມ່ນໂທດກຳ, ການຍາດແຍ່ງເອົາໄຊຊະນະໃນການຕໍ່ຕ້ານຍີ່ປຸ່ນນັ້ນ ແມ່ນໜ້າທີ່ທີ່ບໍ່ຄວນຊຸກໄສໃຫ້ຜູ້ອື່ນ. ເພາະວ່າມີແຕ່ສູ້ລົບເພື່ອປ້ອງກັນປະເທດຊາດທໍ່ນັ້ນ ຈຶ່ງສາມາດຜາບແພ້ຜູ້ລຸກລານ ແລະເຮັດໃຫ້ຊາດໄດ້ຮັບການປົດປ່ອຍ. ມີແຕ່ຊາດໄດ້

ຮັບການປົດປ່ອຍທໍ່ນັ້ນ ຈຶ່ງຈະມີຄວາມອາດສາມາດເຮັດໃຫ້ຊົນຊັ້ນກຳມາຊີບແລະປະຊາຊົນຜູ້ອອກແຮງງານໄດ້ຮັບການປົດປ່ອຍ. ປະເທດຈີນໄດ້ຮັບໄຊຊະນະແລ້ວ, ພວກຈັກກະພັດນິຍົມທີ່ລຸກລານປະເທດຈີນນັ້ນຖືກໂຄ່ນລົ້ມແລ້ວ, ກໍ່ເປັນການຊ່ວຍເຫຼືອປະຊາຊົນປະເທດຕ່າງໆໄປພ້ອມ. ດັ່ງນັ້ນ ລັດທິຮັກຊາດກໍ່ແມ່ນການປະຕິບັດຕົວຈິງຂອງລັດທິສາກົນໃນສົງຄາມປົດປ່ອຍຊາດ.

« ຖານະຂອງພັກກອມມູນິດຈີນໃນສົງຄາມຊາດ »

(ເດືອນ ໑໐-໑໙໓໘)

ຊາວຕ່າງປະເທດຜູ້ໜຶ່ງຖືເອົາພາລະກິດປົດປ່ອຍຂອງປະຊາຊົນຈີນເປັນພາລະກິດຂອງຕົນໂດຍບໍ່ມີຈຸດປະສົງຫາຜົນປະໂຫຍດໃຫ້ແກ່ຕົນຈັກເມັດ, ອັນນີ້ແມ່ນນ້ຳໃຈຫຍັງ? ອັນນີ້ແມ່ນນ້ຳໃຈສາກົນນິຍົມ, ອັນນີ້ແມ່ນນ້ຳໃຈລັດທິກອມມູນິດ, ສະມາຊິກພັກກອມມູນິດຈີນທຸກຄົນຕ້ອງຮຽນເອົານ້ຳໃຈດັ່ງກ່າວ

ນີ້. ...ພວກເຮົາຕ້ອງຮ່ວມສຳພັນກັບຊົນຊັ້ນກຳມາຊີບໃນປະເທດທຶນນິຍົມທັງໝົດ, ຕ້ອງຮ່ວມສຳພັນກັບຊົນຊັ້ນກຳມາຊີບໃນປະເທດຍີ່ປຸ່ນ ອັງກິດ ອາເມລິກາ ເຢຍລະມັນ ອິຕາລີແລະໃນປະເທດທຶນນິຍົມທັງໝົດ ຈຶ່ງສາມາດໂຄ່ນລົ້ມຈັກກະພັດນິຍົມ, ປົດປ່ອຍຊາດແລະປະຊາຊົນຂອງພວກເຮົາ, ປົດປ່ອຍປະຊາຊາດແລະປະຊາຊົນໃນໂລກໄດ້. ອັນນີ້ແຫຼະແມ່ນລັດທິສາກົນຂອງພວກເຮົາ, ອັນນີ້ແຫຼະແມ່ນລັດທິສາກົນທີ່ພວກເຮົາໃຊ້ມາຄັດຄ້ານລັດທິຊາດນິຍົມຄັບແຄບ ແລະ ລັດທິຮັກຊາດຄັບແຄບ.

«ລະນຶກເຖິງນໍແມນ ເບທູນ» (ວັນທີ່ ໔໑-໑໒-໑໙໓໙)

ການທີ່ປະຊາຊົນຜູ້ຖືກກົດຂີ່ຈະຍາດແຍ່ງການປົດປ່ອຍໄດ້ຢ່າງເຖິງຄອງນັ້ນ, ກ່ອນອື່ນ ແມ່ນອາໄສການຕໍ່ສູ້ຂອງຕົນເອງ, ຖັດມາຈຶ່ງແມ່ນການຊ່ວຍເຫຼືອທາງສາກົນ. ປະຊາຊົນທີ່ໄດ້ຮັບໄຊຊະນະໃນການປະຕິວັດແລ້ວ ຄວນຊ່ວຍເຫຼືອການຕໍ່ສູ້ຂອງປະຊາຊົນທີ່ພວມຍາດແຍ່ງເອົາການປົດປ່ອຍ, ອັນນີ້ແມ່ນໜ້າທີ່ສາກົນນິຍົມຂອງພວກເຮົາ.

ສົນທະນາໃນໂອກາດຕ້ອນຮັບການເຂົ້າພົບຂອງເພື່ອນອາຟະລິກາ (ວັນທີ່ ໘-໘-໑໙໖໓)

ປະເທດສັງຄົມນິຍົມແມ່ນປະເທດແບບໃໝ່ແທ້ໆ, ແມ່ນປະເທດທີ່ໄດ້ໂຄ່ນລົ້ມຊົນຊັ້ນຂູດຮີດ ແລະປະຊາຊົນຜູ້ອອກແຮງງານໄດ້ກຳອຳນາດແລ້ວ. ຫຼັກການເປັນເອກະພາບກັນລະຫວ່າງລັດທິສາກົນກັບລັດທິຮັກຊາດ ພວມໄດ້ຮັບການປະຕິບັດຢູ່ໃນການພົວພັນຊຶ່ງກັນແລະກັນລະຫວ່າງປະເທດເຫຼົ່ານັ້ນ. ຜົນປະໂຫຍດຮ່ວມກັນແລະອຸດົມຄະຕິຮ່ວມກັນໄດ້ເຮັດໃຫ້ພວກເຮົາເຊື່ອມສຳພັນກັນເຂົ້າຢ່າງສະໜິດແໜ້ນ.

«ຄຳປາໄສໃນກອງປະຊຸມສະພາໂຊວຽດສູງສຸດແຫ່ງສະຫະພາບໂຊວຽດເພື່ອສະເຫຼີມສະຫຼອງການປະຕິວັດສັງຄົມນິຍົມເດືອນຕຸລາທີ່ຍິ່ງໃຫຍ່ຄົບຮອບ ໔໐ ປີ» (ວັນທີ່ ໗-໑໑-໑໙໕໗)

ປະຊາຊົນບັນດາປະເທດໃນຄ້າຍສັງຄົມນິຍົມຕ້ອງຮ່ວມສຳພັນກັນເຂົ້າ, ປະຊາຊົນໃນບັນດາປະເທດອາຊີ ອາຟະລິກາ ແລະອາເມລິກາລາຕິນຕ້ອງຮ່ວມສຳພັນກັນເຂົ້າ, ປະຊາຊົນທຸກທະວີບໃນທົ່ວໂລກຕ້ອງຮ່ວມສຳພັນກັນເຂົ້າ, ບັນດາປະເທດທີ່ຮັກຫອມສັນຕິພາບທັງໝົດຕ້ອງຮ່ວມສຳພັນກັນເຂົ້າ, ບັນດາປະເທດທີ່ຖືກອາເມລິກາລຸກລານ ຄວບຄຸມ ແຊກແຊງແລະຂົ່ມເຫັງທັງໝົດຕ້ອງຮ່ວມສຳພັນກັນເຂົ້າ, ຜູກສຳພັນເປັນແນວໂຮມອັນກວ້າງຂວາງທີ່ສຸດ, ຄັດຄ້ານນະໂຍບາຍລຸກລານແລະນະໂຍບາຍສົງຄາມຂອງຈັກກະພັດນິຍົມອາເມລິກາ, ປົກປັກຮັກສາສັນຕິພາບຂອງໂລກ.

«ຖະແຫຼງສະໜັບສະໜຸນການຕໍ່ສູ້ອັນເປັນທຳທີ່ຮັກຊາດຕ້ານອາເມລິກາຂອງປະຊາຊົນປານາມາ»
(ວັນທີ່ ໑໒-໑-໑໙໖໔)

ວັດຖຸເຫດການຍ່ອມຂະຫຍາຍຕົວເລື້ອຍໆ. ຈາກການ

ປະຕິວັດປີ ໑໙໑໑ ຄື ການປະຕິວັດຊິນໄຮ້ ມາຮອດປີນີ້, ໄດ້ພຽງແຕ່ ໔໕ ປີທໍ່ນັ້ນ, ໃບໜ້າຂອງປະເທດຈີນໄດ້ປ່ຽນໄປໝົດແລ້ວ. ອີກ ໔໕ ປີ, ຄື ປີ ໒໐໐໑ ຊຶ່ງແມ່ນເວລາກ້າວເຂົ້າສູ່ສະຕະວັດທີ່ ໒໑, ໃບໜ້າຂອງປະເທດຈີນແຮ່ງຊິປ່ຽນໃຫຍ່. ປະເທດຈີນຈະກາຍເປັນປະເທດອຸດສາຫະກຳສັງຄົມນິຍົມອັນໃຫຍ່ໂຕເຂັ້ມແຂງປະເທດໜຶ່ງ. ປະເທດຈີນຕ້ອງເປັນແນວນີ້. ຍ້ອນວ່າປະເທດຈີນເປັນປະເທດທີ່ມີເນື້ອດິນ ໙ ລ້ານ ໖ ແສນກິໂລແມັດມົນທົນແລະມີພົນລະເມືອງ ໖໐໐ ລ້ານຄົນ, ປະເທດຈີນຄວນມີການອຸທິດໃຫ້ແກ່ມະນຸດຊາດຫຼາຍກວ່ານີ້. ແຕ່ວ່າ ໃນໄລຍະເວລາຍາວນານທີ່ຜ່ານມາ, ການອຸທິດນີ້ໜ້ອຍໂພດ. ອັນນີ້ເຮັດໃຫ້ພວກເຮົາຮູ້ສຶກລະອາຍໃຈ.

ແຕ່ວ່າ ຕ້ອງຖ່ອມຕົວ. ບໍ່ພຽງແຕ່ໃນປັດຈຸບັນຄວນເປັນແນວນີ້, ພາຍຫຼັງ ໔໕ ປີເມືອໜ້າ ກໍ່ຄວນເປັນແນວນີ້, ຄວນເປັນແນວນີ້ຕະຫຼອດການ. ໃນດ້ານການໄປມາຫາສູ່ກັນລະຫວ່າງຊາດນັ້ນ, ຊາວຈີນຕ້ອງດັບສູນລັດທິມະຫາປະເທດຢ່າງ

ເດັດດ່ຽວ ເຖິງຖອງ ຮາບຄາບແລະໝົດກ້ຽງ.

«ລະນຶກເຖິງທ່ານຊຸນຍັດເຊັນ» (ເດືອນ ໑໑-໑໙໕໖)

ພວກເຮົາຈະມີທ່າທີລັດທິມະຫາປະເທດທີ່ອວດອີ່ງຈອງຫອງບໍ່ໄດ້ຢ່າງເດັດຂາດ, ບໍ່ຄວນອວດອີ່ງທະນົງຕົວຍ້ອນໄຊຊະນະໃນການປະຕິວັດ ແລະ ຍ້ອນໄດ້ຮັບຜົນສຳເລັດບາງເລັກບາງນ້ອຍໃນທາງດ້ານການສ້າງສາ. ປະເທດບໍ່ວ່າໃຫຍ່ຫຼືນ້ອຍ ຕ່າງກໍ່ມີຈຸດດີຈຸດອ່ອນ.

«ຄຳປາໄສເປີດກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດເທື່ອທີ່ ໘ ຂອງພັກກອມມູນິດຈີນ» (ວັນທີ່ ໑໕-໙-໑໙໕໖)

໑໙. ລັດທິວິລະຊົນປະຕິວັດ

ກອງທັບນີ້ມີນ້ຳໃຈບຸກໜ້າບໍ່ຖອຍ, ກອງທັບນີ້ຈະຂົ່ມສັດຕູລົງໃຫ້ໝົດ, ບໍ່ຖຸເຂົ່າຍອມສັດຕູຢ່າງເດັດຂາດ. ບໍ່ວ່າຢູ່ໃນສະພາບລຳບາກຍາກແຄ້ນແນວໃດກໍ່ຕາມ, ທະແນມແຕ່ຍັງເຫຼືອຄົນຜູ້ດຽວ, ຄົນຜູ້ນີ້ກໍ່ຈະສູ້ລົບຕໍ່ໄປ.

«ວ່າດ້ວຍລັດຖະບານປະສົມ» (ວັນທີ່ ໒໔-໔-໑໙໔໕)

ສົ່ງເສີມທ່າທຳນອງສູ້ລົບກ້າຫານ ບໍ່ຢ້ານເສັຽສະຫຼະ ບໍ່ຢ້ານອິດເມື່ອຍແລະສູ້ລົບລຽນຕິດ (ຄື ລົບເລື້ອຕິດໆກັນຫຼາຍບັ້ນໃນເວລາອັນສັ້ນໂດຍບໍ່ພັກຜ່ອນ).

«ສະຖານະການປັດຈຸບັນແລະພາລະໜ້າທີ່ຂອງພວກເຮົາ» (ວັນທີ່ ໒໕-໑໒-໑໙໔໗)

ເພື່ອຜົນປະໂຫຍດຂອງປະຊາຊົນ, ວິລະຊົນຜູ້ເສຍຊີວິດນັບເປັນພັນເປັນໝື່ນໄດ້ສະຫຼະຊີວິດຢ່າງອົງອາດກ້າຫານກ່ອນພວກເຮົາແລ້ວ, ຂໍໃຫ້ພວກເຮົາຈົ່ງຍົກຄັນທຸງຂອງພວກເຂົາເຈົ້າໃຫ້ສູງ ມຸ່ງໜ້າກ້າວໄປຕາມຮອຍເລືອດຂອງພວກເຂົາເຈົ້າເທີ້ນ!

«ວ່າດ້ວຍລັດຖະບານປະສົມ» (ວັນທີ ໒໔-໔-໑໙໔໕)

ຕັດສິນໃຈເດັດຂາດ, ບໍ່ຢ້ານເສຍສະຫຼະ, ແສນຍາກຕ້ອງຜ່ານຜ່າ, ໄປຍາດເອົາໄຊຊະນະ.

«ພໍ່ເຖົ້າໂງ່ຍ້າຍພູ» (ວັນທີ ໑໑-໖-໑໙໔໕)

... ໃນຍາມຫົວລ້ຽວຫົວຕໍ່ທີ່ສົງຄາມປາບຂຸນເສິກພາກເໜືອພວມຂະຫຍາຍໄປໜ້ານັ້ນ, ແນວໂຮມແຫ່ງຊາດທີ່ປະກອບດ້ວຍພັກກອມມູນິດ ພັກກົກມິນຕັງແລະປະຊາຊົນທຸກວົງການອັນເປັນຕົວແທນພາລະກິດປົດປ່ອຍປະຊາຊົນຈີນ ພ້ອມທັງທຸກນະໂຍບາຍປະຕິວັດຂອງແນວໂຮມນີ້ ໄດ້ຖືກນະໂຍບາຍ"ສະສາງພັກ"ແລະ

ນະໂຍບາຍເຂັ່ນຂ້າທີ່ເປັນການທໍລະຍົດແລະຕ້ານປະຊາຊົນຂອງທາງການກົກມິນຕັງທຳລາຍໄປໝົດແລ້ວ. ...ແຕ່ນັ້ນມາສົງຄາມກາງເມືອງໄດ້ເຂົ້າແທນຄວາມສາມັກຄີ, ການຜະເດັດການໄດ້ເຂົ້າແທນປະຊາທິປະໄຕ, ປະເທດຈີນທີ່ມືດມົນໄດ້ເຂົ້າແທນປະເທດຈີນທີ່ແຈ້ງສະຫວ່າງ. ແຕ່ວ່າ ພັກກອມມູນິດຈີນແລະປະຊາຊົນຈີນບໍ່ໄດ້ຖືກຂົ່ມຂູ່ລົງ, ບໍ່ໄດ້ຖືກປາບລົງ, ບໍ່ໄດ້ຖືກຂ້າໝົດກ້ຽງ. ພວກເຂົາເຈົ້າໄດ້ລຸກຂຶ້ນ ເຊັດຮອຍເລືອດຕາມຄີງໃຫ້ກ້ຽງ ມ້ຽນຄາບໝູ່ສະຫາຍລຽບລ້ອຍແລ້ວ, ພວກເຂົາເຈົ້າກໍ່ສູ້ລົບຕໍ່ໄປ. ພວກເຂົາເຈົ້າໄດ້ຍົກຄັນທຸງປະຕິວັດຜືນໃຫຍ່ໃຫ້ສູງ, ດຳເນີນການຕໍ່ຕ້ານດ້ວຍກຳລັງອາວຸດ, ແລະໃນເຂດແດນອັນກວ້າງໃຫຍ່ຂອງປະເທດຈີນ, ພວກເຂົາເຈົ້າໄດ້ຈັດຕັ້ງລັດຖະບານປະຊາຊົນຂຶ້ນ, ດຳເນີນການປະຕິວັດລະບອບທີ່ດິນ, ສ້າງຕັ້ງກອງທັບຂອງປະຊາຊົນ—ກອງທັບແດງຂອງຈີນ, ໄດ້ຮັກສາແລະຂະຫຍາຍກຳລັງປະຕິວັດຂອງປະຊາຊົນຈີນອອກໄປ.

«ວ່າດ້ວຍລັດຖະບານປະສົມ» (ວັນທີ ໒໔-໔-໑໙໔໕)

ພວກສະຫາຍມີຈຸດດີຫຼາຍປະການ, ມີຄຸນງາມຄວາມດີໃຫຍ່ຫຼວງ, ແຕ່ພວກສະຫາຍຈົ່ງຈື່ຈຳໃຫ້ຄັກ, ຢ່າອວດອົ່ງທະນົງຕົວ. ພວກສະຫາຍໄດ້ຮັບຄວາມເຄົາລົບນັບຖືຈາກຄົນທັງຫຼາຍນັ້ນກໍ່ສົມຢູ່, ແຕ່ກໍ່ຈະພາໃຫ້ເກີດຄວາມອວດອົ່ງທະນົງຕົວໄດ້ງ່າຍ. ຖ້າພວກສະຫາຍອວດອົ່ງທະນົງຕົວ, ບໍ່ຖ່ອມຕົວ, ບໍ່ມານະພະຍາຍາມອີກ, ບໍ່ນັບຖືຜູ້ອື່ນ, ບໍ່ນັບຖືພະນັກງານ, ບໍ່ນັບຖືມວນຊົນແລ້ວ, ພວກສະຫາຍກໍ່ຈະເປັນວິລະຊົນແລະເປັນຕົວຢ່າງບໍ່ໄດ້ອີກແລ້ວ. ແຕ່ກ່ອນກໍ່ເຄີຍມີຄົນປະເພດນີ້ຈຳນວນໜຶ່ງມາແລ້ວ, ຫວັງວ່າພວກສະຫາຍຄົງຈະບໍ່ເອົາຢ່າງພວກເຂົາເຈົ້າ.

« ຕ້ອງຮ່ຳຮຽນເຮັດວຽກງານເສດຖະກິດໃຫ້ເປັນ »
(ວັນທີ ໑໐-໑-໑໙໔໕)

ໃນການຕໍ່ສູ້ດັບສູນສັດຕູ, ໃນການຕໍ່ສູ້ຟື້ນຟູແລະຂະຫຍາຍການຜະລິດທາງອຸດສາຫະກຳແລະກະເສດຕະກຳ, ພວກສະຫາຍໄດ້ຜ່ານຜ່າຄວາມຫຍຸ້ງຍາກລຳບາກຫຼາຍປະການ ໄດ້ສະແດງ

ຄວາມກ້າຫານ ສະຕິປັນຍາແລະຄວາມຂະຫຍັນຫ້າວຫັນຢ່າງໃຫຍ່ຫຼວງທີ່ສຸດ. ພວກສະຫາຍແມ່ນບຸກຄົນທີ່ເປັນຕົວຢ່າງຂອງທົ່ວທັງຊາດຈີນ, ແມ່ນຫຼັກແຫຼ່ງທີ່ຊຸກຍູ້ພາລະກິດປະຊາຊົນທຸກດ້ານໃຫ້ກ້າວໜ້າມີໄຊ, ແມ່ນເສົາຄ້ຳທີ່ໄວ້ໃຈໄດ້ຂອງລັດຖະບານປະຊາຊົນ ແລະແມ່ນຂົວທີ່ລັດຖະບານປະຊາຊົນເຊື່ອມສຳພັນກັບມວນຊົນອັນກວ້າງໃຫຍ່.

ຄຳອວຍພອນໃນນາມສູນກາງພັກກອມມູນິດຈີນກ່າວຢູ່ກອງປະຊຸມຜູ້ແທນວິລະຊົນສູ້ລົບແລະຜູ້ອອກແຮງງານຕົວຢ່າງທົ່ວປະເທດ(ວັນທີ ໒໕-໙-໑໙໕໐)

ຊາດຈີນພວກເຮົາມີນ້ຳໃຈຫ້າວຫັນສູ້ລົບນອງເລືອດກັບສັດຕູຂອງຕົນຈົນເຖິງທີ່ສຸດ. ມີຄວາມຕັດສິນໃຈກູ້ເອົາດິນແດນແລະກຽດຂອງຊາດຄືນມາເທິງພື້ນຖານເພິ່ງກຳລັງຕົນເອງ, ມີຄວາມສາມາດຕັ້ງຕົວຢູ່ໃນໝູ່ປະຊາຊາດຂອງໂລກໄດ້.

«ວ່າດ້ວຍຍຸດໂທບາຍຄັດຄ້ານຈັກກະພັດນິຍົມຍີ່ປຸ່ນ»
(ວັນທີ ໒໗-໑໒-໑໙໓໕)

໒໐. ການສ້າງປະເທດ ດ້ວຍຄວາມໝັ່ນພຽນແລະມັດທະຍັດ

ຕ້ອງເຮັດໃຫ້ພະນັກງານທັງໝົດແລະປະຊາຊົນທັງໝົດຄຶດຢູ່ເລື້ອຍໆວ່າ ປະເທດຂອງພວກເຮົາແມ່ນປະເທດສັງຄົມນິຍົມທີ່ໃຫຍ່ໂຕ, ແຕ່ກໍ່ແມ່ນປະເທດທຸກຍາກທີ່ເສດຖະກິດຫຼ້າຫຼັງ, ອັນນີ້ແມ່ນຄວາມຂັດແຍ້ງທີ່ໃຫຍ່ຫຼາຍ. ການທີ່ຈະເຮັດໃຫ້ປະເທດເຮົາຮັ່ງມີເຂັ້ມແຂງຂຶ້ນນັ້ນ ຕ້ອງໃຊ້ເວລາຫຼາຍສິບປີຕໍ່ສູ້ຢ່າງທໍລະຫົດອົດທົນ, ໃນນັ້ນຮວມມີການປະຕິບັດເຂັມທິດສ້າງປະເທດດ້ວຍຄວາມໝັ່ນພຽນແລະມັດທະຍັດທີ່ເຂັ້ມງວດໃນການປະຢັດແລະຄັດຄ້ານການຟູມເຟືອຍ.

«ບັນຫາກ່ຽວກັບການແກ້ໄຂຄວາມຂັດແຍ້ງພາຍໃນ
ປະຊາຊົນຢ່າງຖືກຕ້ອງ» (ວັນທີ່ ໒໗-໒-໑໙໕໗)

ຕ້ອງບໍລິຫານໂຮງງານ ບໍລິຫານຮ້ານຄ້າ ບໍລິຫານກິດຈະການຂອງລັດ ແລະຂອງສະຫະກອນທັງໝົດດ້ວຍຄວາມໝັ່ນພຽນແລະມັດທະຍັດ, ຕ້ອງບໍລິຫານກິດຈະການອື່ນໆທັງໝົດດ້ວຍຄວາມໝັ່ນພຽນແລະມັດທະຍັດ, ວຽກງານທຸກຢ່າງລ້ວນແຕ່ຕ້ອງປະຕິບັດຫຼັກການໝັ່ນພຽນແລະມັດທະຍັດ. ອັນນີ້ກໍ່ແມ່ນຫຼັກການປະຢັດ, ການປະຢັດແມ່ນຫຼັກການພື້ນຖານອັນໜຶ່ງຂອງເສດຖະກິດສັງຄົມນິຍົມ. ປະເທດຈີນແມ່ນປະເທດໃຫຍ່ປະເທດໜຶ່ງ, ແຕ່ວ່າ ປັດຈຸບັນນີ້ຍັງທຸກຍາກຫຼາຍ, ຕ້ອງໃຊ້ເວລາຫຼາຍສິບປີ ຈຶ່ງຈະເຮັດໃຫ້ປະເທດຈີນຮັ່ງມີຂຶ້ນໄດ້. ຫຼັງຈາກຫຼາຍສິບປີນັ້ນແລ້ວ ກໍ່ຍັງຕ້ອງປະຕິບັດຫຼັກການໝັ່ນພຽນແລະມັດທະຍັດຄືກັນ, ແຕ່ພາຍໃນຫຼາຍສິບປີສະເພາະໜ້ານີ້, ຄື ພາຍໃນໄລຍະສະເພາະໜ້າທີ່ດຳເນີນແຜນການ ໕ ປີຫຼາຍເທື່ອນັ້ນ ແຮ່ງຕ້ອງສົ່ງເສີມຄວາມໝັ່ນພຽນແລະມັດທະຍັດເປັນພິເສດ, ແຮ່ງຕ້ອງເອົາໃຈໃສ່ການປະຢັດເປັນພິເສດ.

ພາຍເຫດໃນບົດຄວາມເລື່ອງ «ບໍລິຫານສະຫະກອນ
ດ້ວຍຄວາມໝັ່ນພຽນແລະມັດທະຍັດ» (ປີ ໑໙໕໕)

ບໍ່ວ່າບ່ອນໃດກໍ່ຕ້ອງທະນຸຖະໜອມກຳລັງຄົນ ແລະ ກຳລັງວັດຖຸຢ່າງສຸດຂີດ, ຈະເຫັນແຕ່ຊົ່ວໄລຍະໜຶ່ງ ແລ້ວໃຊ້ຈ່າຍຊະຊາຍຟູມເຟືອຍນັ້ນບໍ່ໄດ້ຢ່າງເດັດຂາດ. ບໍ່ວ່າບ່ອນໃດກໍ່ຕາມ, ນັບແຕ່ປີທີ່ເລີ່ມເຮັດວຽກ ກໍ່ຕ້ອງຄຳນວນເຖິງຫຼາຍໆປີຂ້າງໜ້າ ຄຳນວນເຖິງການຍືດພົ້ນເຮັດສົງຄາມໄລຍະເຫິງນານ ຄຳນວນເຖິງການຕ່າວໂຈມຕີ ແລະຄຳນວນເຖິງການສ້າງສາພາຍຫຼັງທີ່ໄດ້ຂັບໄລ່ພວກສັດຕູອອກໄປແລ້ວ. ດ້ານໜຶ່ງບໍ່ໃຊ້ຈ່າຍຊະຊາຍຟູມເຟືອຍຢ່າງເດັດຂາດ, ອີກດ້ານໜຶ່ງພະຍາຍາມຂະຫຽາຍການຜະລິດ. ແຕ່ກ່ອນມີບາງບ່ອນຂາດການກະຍາວນານ, ທັງບໍ່ໄດ້ເອົາໃຈໃສ່ການປະຢັດກຳລັງຄົນແລະກຳລັງວັດຖຸ, ທັງບໍ່ໄດ້ເອົາໃຈໃສ່ການຂະຫຽາຍການຜະລິດ, ດັ່ງນັ້ນຈຶ່ງໄດ້ເສຽຫາຍຢ່າງໃຫຽ່ຫຼວງ. ເມື່ອໄດ້ຮັບບົດຮຽນນີ້ແລ້ວ ກໍ່ຕ້ອງເອົາໃຈໃສ່ແຕ່ບັດນີ້ໄປ.

« ຕ້ອງຮ່ຳຮຽນເຮັດວຽກງານເສດຖະກິດໃຫ້ເປັນ »
(ວັນທີ່ ໑໐-໑-໑໙໔໕)

ເພື່ອຟື້ນຟູແລະຂະຫຽາຍການຜະລິດດ້ານກະເສດຕະກຳແລະການຜະລິດດ້ານອຸດສາຫະກຳໃນຕົວເມືອງຢ່າງວ່ອງໄວ, ໃນການຕໍ່ສູ້ດັບສູນລະບອບສັກດີນານັ້ນ, ຕ້ອງພະຍາຍາມສຸດຄວາມສາມາດໃນການເອົາໃຈໃສ່ຮັກສາປັດໄຈການຜະລິດແລະປັດໄຈການຄອງຊີບທັງໝົດທີ່ໃຊ້ໄດ້ໄວ້ໃຫ້ຫຼາຍເທົ່າທີ່ຈະຫຼາຍໄດ້, ຕ້ອງໃຊ້ວິທີການຄັດຄ້ານຄົນທີ່ທຳລາຍ ຫຼື ໃຊ້ປັດໄຈການຜະລິດແລະປັດໄຈການຄອງຊີບຟູມເຟືອຍຢ່າງເດັດດ່ຽວ, ຄັດຄ້ານການກິນຍິກກິນໃຫຽ່, ຕ້ອງເອົາໃຈໃສ່ການປະຢັດ.

«ຄຳປາໄສ ໃນກອງປະຊຸມພະນັກງານໃນເຂດປົດປ່ອຍ
ຊານຊີ—ສຸຍຢວນ» (ວັນທີ່ ໑-໔-໑໙໔໘)

ການໃຊ້ຈ່າຍດ້ານການຄັງ ຄວນອີງຕາມເຂັມທິດປະຢັດ. ຄວນເຮັດໃຫ້ບັນດາພະນັກງານຝ່າຍປົກຄອງເຂົ້າໃຈແຈ້ງວ່າການສໍ້ລາດບັງຫຼວງແລະການຟູມເຟືອຍມີໂທດໜັກທີ່ສຸດ. ແຕ່ກ່ອນການຕໍ່ສູ້ຄັດຄ້ານການສໍ້ລາດບັງຫຼວງ ແລະ ການຟູມເຟືອຍໄດ້ຮັບຜົນສ່ວນໜຶ່ງແລ້ວ, ຕໍ່ໄປຍັງຄວນໃຊ້ຄວາມພະຍາຍາມ

ອີກ. ຫຼັກການຂອງລະບຽບການບັນຊີຂອງພວກເຮົາ ແມ່ນປະຢັດເງິນແຕ່ລະອັດເພື່ອສົງຄາມແລະພາລະກິດປະຕິວັດ, ເພື່ອການສ້າງສາເສດຖະກິດຂອງພວກເຮົາ.

« ນະໂຍບາຍເສດຖະກິດຂອງພວກເຮົາ » (ວັນທີ່ ໒໓-໑-໑໙໓໔)

ດຽວນີ້ ໃນໝູ່ພະນັກງານຂອງພວກເຮົາຈຳນວນຫຼາຍໄດ້ເກີດມີທ່າທ່ຽງອັນຕະລາຍຊະນິດໜຶ່ງ ຄື ບໍ່ຍອມຮ່ວມທຸກຮ່ວມສຸກກັບມວນຊົນ, ມັກຮ່ຳໄຮນຳແຕ່ຊື່ສຽງຜົນປະໂຫຍດສ່ວນຕົວ, ອັນນີ້ບໍ່ດີທີ່ສຸດ. ໃນຂະບວນເຄື່ອນໄຫວເພີ່ມພູນການຜະລິດແລະປະຢັດນັ້ນ, ພວກເຮົາຮຽກຮ້ອງໃຫ້ປັບປຸງອົງການໃຫ້ກະທັດຮັດແລະຍ້າຍພະນັກງານລົງໄປຂັ້ນລຸ່ມ ເພື່ອໃຫ້ພະນັກງານຈຳນວນຫຼາຍພໍຄວນກັບຄືນໄປເຮັດການຜະລິດ, ອັນນີ້ແມ່ນວິທີອັນໜຶ່ງໃນການກຳຈັດທ່າທ່ຽງອັນຕະລາຍດັ່ງກ່າວ.

«ບັນຫາກ່ຽວກັບການແກ້ໄຂຄວາມຂັດແຍ້ງພາຍໃນປະຊາຊົນຢ່າງຖືກຕ້ອງ» (ວັນທີ່ ໒໗-໒-໑໙໕໗)

ການທີ່ກອງທັບເຮັດການຜະລິດເພື່ອລ້ຽງຕົນເອງນັ້ນ ບໍ່ພຽງແຕ່ໄດ້ປັບປຸງຊີວິດການເປັນຢູ່ໃຫ້ດີຂຶ້ນ, ລົດຜ່ອນການແບກຫາບຂອງປະຊາຊົນແລະທັງສາມາດຂະຫຍາຍກອງທັບໄດ້ທໍ່ນັ້ນ, ຍັງໄດ້ນຳຜົນສຳຮອງອັນຫຼວງຫຼາຍມາໃຫ້ທັນທີ. ຜົນສຳຮອງເຫຼົ່ານີ້ຄື: (໑) ໄດ້ປັບປຸງການພົວພັນລະຫວ່າງພະນັກງານກັບນັກລົບໃຫ້ດີຂຶ້ນ. ເມື່ອພະນັກງານແລະນັກລົບອອກແຮງເຮັດການຜະລິດນຳກັນແລ້ວ ກໍ່ສະໜິດສະໜົມກັນຄືອ້າຍຄືນ້ອງ. (໒) ໄດ້ເພີ່ມທະວີທັດສະນະອອກແຮງງານ. ...ຕັ້ງແຕ່ດຳເນີນການຜະລິດເພື່ອລ້ຽງຕົນເອງເປັນຕົ້ນມາ, ທັດສະນະອອກແຮງງານໄດ້ເພີ່ມທະວີຂຶ້ນແລ້ວ, ນິດໄສຂອງພວກຂີ້ຄ້ານໂລເລກໍ່ໄດ້ດັດແປງແລ້ວ. (໓) ໄດ້ເພີ່ມທະວີສະຕິວິໄນ. ປະຕິບັດວິໄນອອກແຮງງານໃນການຜະລິດນັ້ນ ບໍ່ພຽງແຕ່ບໍ່ໄດ້ລົດຢ່ອນວິໄນການສູ້ລົບແລະວິໄນຊີວິດທະຫານທໍ່ນັ້ນ, ກົງກັນຂ້າມຍັງໄດ້ເຮັດ

ໃຫ້ມັນເພີ່ມທະວີຂຶ້ນ. (໔) ໄດ້ປັບປຸງການພົວພັນລະຫວ່າງກອງທັບກັບປະຊາຊົນໃຫ້ດີຂຶ້ນ. ເມື່ອກອງທະຫານມີ "ວຽກບ້ານການເຮືອນ" ຂອງຕົນແລ້ວ, ເລື່ອງລ່ວງລະເມີດທຳລາຍຊັບສິນຂອງປະຊາຊົນກໍ່ໜ້ອຍລົງຫຼືບໍ່ມີເລີຍ. ໃນລະຫວ່າງການຜະລິດ, ກອງທັບກັບປະຊາຊົນແລກປ່ຽນແຮງງານແລະຊ່ວຍເຫຼືອກັນ, ຍິ່ງເພີ່ມທະວີການພົວພັນຖານມິດລະຫວ່າງພວກເຂົາເຈົ້າໃຫ້ແໜ້ນໜາ. (໕) ເລື່ອງທີ່ກອງທັບຈົ່ມວ່າໃຫ້ຝ່າຍປົກຄອງກໍ່ຈະໜ້ອຍລົງ, ການພົວພັນລະຫວ່າງກອງທັບກັບຝ່າຍປົກຄອງກໍ່ດີຂຶ້ນ. (໖) ໄດ້ຊຸກຍູ້ຂະບວນເຄື່ອນໄຫວການຜະລິດຂະໜາດໃຫຍ່ຂອງປະຊາຊົນ. ເມື່ອກອງທັບດຳເນີນການຜະລິດແລ້ວ, ການດຳເນີນການຜະລິດຂອງອົງການແຮ່ງມີຄວາມຈຳເປັນແລະແຮ່ງຫ້າວຫັນກວ່າເກົ່າ; ຂະບວນເຄື່ອນໄຫວເພີ່ມພູນການຜະລິດຢ່າງທົ່ວເຖິງຂອງປະຊາຊົນທັງປວງນັ້ນ, ແນ່ນອນ ກໍ່ແຮ່ງມີຄວາມຈຳເປັນແລະກໍ່ແຮ່ງຫ້າວຫັນກວ່າເກົ່າ.

> «ວ່າດ້ວຍການເພີ່ມພູນຜະລິດຕະພັນທາກຸ້ມຕົນເອງໃນກອງທັບແລະວ່າດ້ວຍຄວາມສຳຄັນຂອງການເຄື່ອນໄຫວໃຫຍ່ທັງສອງຄື ການປັບປຸງທ່າທຳນອງແລະການເພີ່ມພູນຜະລິດຕະພັນ» (ວັນທີ ໒໗-໔-໑໙໔໕)

ມີຄົນເວົ້າວ່າ ເມື່ອກອງທະຫານດຳເນີນການຜະລິດແລ້ວກໍ່ບໍ່ສາມາດສູ້ລົບແລະຝຶກແອບໄດ້; ເມື່ອອົງການດຳເນີນການຜະລິດແລ້ວ ກໍ່ບໍ່ສາມາດເຮັດວຽກໄດ້. ຄວາມເວົ້າແນວນີ້ບໍ່ຖືກ. ຫວ່າງບໍ່ທໍ່ໃດປີມານີ້ ກອງທະຫານປະຈຳເຂດແດນຕໍ່ແດນຂອງພວກເຮົາໄດ້ດຳເນີນການຜະລິດຢ່າງຂະໜາດໃຫຍ່, ໄດ້ມຸ່ງອຸ່ນກິນອີ່ມ, ພ້ອມກັນນັ້ນ ກໍ່ໄດ້ດຳເນີນການຝຶກແອບທະຫານ, ທັງມີການຮ່ຳຮຽນການເມືອງແລະວັດທະນະທຳອີກດ້ວຍ, ສິ່ງເຫຼົ່ານີ້ ລ້ວນແຕ່ມີຜົນງານຫຼາຍກວ່າເກົ່າ, ຄວາມສາມັກຄີພາຍໃນກອງທັບ ແລະຄວາມສາມັກຄີລະຫວ່າງກອງທັບກັບປະຊາຊົນກໍ່ຍິ່ງດີກວ່າເກົ່າ. ປີທີ່ແລ້ວທັງປີ ຢູ່ແນວໜ້າໄດ້

ດຳເນີນຂະບວນເຄື່ອນໄຫວການຜະລິດຢ່າງຂະໜາດໃຫຍ່, ແຕ່ໃນເວລາດຽວກັນ ໃນດ້ານການສູ້ລົບກໍ່ໄດ້ຮັບຜົນຢ່າງໃຫຍ່ຫຼວງ, ທັງໄດ້ເລີ່ມເປີດຂະບວນເຄື່ອນໄຫວຝຶກແອບທະຫານຢ່າງທົ່ວເຖິງອີກດ້ວຍ. ຍ້ອນວ່າອົງການໄດ້ດຳເນີນການຜະລິດ, ຊີວິດການເປັນຢູ່ຂອງພະນັກງານກໍ່ໄດ້ຮັບການປັບປຸງ, ການເຮັດວຽກກໍ່ຍິ່ງອຸ່ນອຽນ ຍິ່ງມີປະສິດທິພາບ, ທັງເຂດແດນຕໍ່ແດນແລະແນວໜ້າກໍ່ເປັນແນວນີ້ໝົດ.

« ຕ້ອງຮ່ຳຮຽນເຮັດວຽກການເສດຖະກິດໃຫ້ເປັນ »
(ວັນທີ ໑໐-໑-໑໙໔໕)

໒໑. ເພິ່ງກຳລັງຕົນເອງ ຕໍ່ສູ້ຢ່າງທຳລະຫົດອົດທົນ

ເຂັມທິດຂອງພວກເຮົາຕ້ອງວາງຢູ່ເທິງຈຸດພື້ນຖານອັນໃດ? ວາງຢູ່ເທິງຈຸດພື້ນຖານຂອງກຳລັງຕົນເອງ, ເອີ້ນວ່າເພິ່ງກຳລັງຕົນເອງ. ພວກເຮົາບໍ່ໄດ້ໂດດດ່ຽວ, ບັນດາປະເທດແລະປະຊາຊົນທັງໝົດໃນທົ່ວໂລກທີ່ຄັດຄ້ານຈັກກະພັດນິຍົມ ລ້ວນແຕ່ແມ່ນເພື່ອນມິດຂອງພວກເຮົາ. ແຕ່ວ່າ ພວກເຮົາເນັ້ນໜັກການເພິ່ງກຳລັງຕົນເອງ, ພວກເຮົາສາມາດອາໄສກຳລັງທີ່ຕົນເອງຈັດຕັ້ງຂຶ້ນ ຕາບແພ້ພວກປະຕິການທັງໝົດພາຍໃນແລະນອກປະເທດໄດ້.

«ສະຖານະການພາຍຫຼັງໄດ້ໄຊຊະນະໃນສົງຄາມຕໍ່ຕ້ານຍີ່ປຸ່ນແລະເຂັມທິດຂອງພວກເຮົາ» (ວັນທີ ໑໓-໘-໑໙໔໕)

ພວກເຮົາຍຶດຖືການເພິ່ງກຳລັງຕົນເອງ. ພວກເຮົາຫວັງໃຫ້ມີການຊ່ວຍເຫຼືອຈາກຕ່າງປະເທດ, ແຕ່ວ່າ ພວກເຮົາຈະເອື່ອຍອີງມັນບໍ່ໄດ້, ພວກເຮົາອາໄສຄວາມມານະພະຍາຍາມຂອງຕົນເອງ, ອາໄສກຳລັງປະດິດສ້າງຂອງທະຫານແລະປະຊາຊົນທັງມວນ.

« ຕ້ອງຮ່ຳຮຽນເຮັດວຽກງານເສດຖະກິດໃຫ້ເປັນ »
(ວັນທີ່ ໑໐-໑-໑໙໔໕)

ການຍາດແຍ່ງໄດ້ໄຊຊະນະໃນທົ່ວປະເທດນັ້ນ ພຽງແຕ່ແມ່ນບາດກ້າວທຳອິດຂອງການເຄື່ອນທັບທາງໄກໝື່ນລີ້ທີ່ນັ້ນ. ... ການປະຕິວັດຂອງຈີນແມ່ນການປະຕິວັດທີ່ຍິ່ງໃຫຍ່, ແຕ່ວ່າ ເສັ້ນທາງເດີນໃນພາຍຫຼັງການປະຕິວັດແຮ່ງຍາວ, ວຽກງານແຮ່ງຍິ່ງໃຫຍ່ ແຮ່ງລຳບາກ. ກ່ຽວກັບຂໍ້ນີ້ ຕ້ອງອະທິບາຍຕໍ່ພາຍໃນພັກໃຫ້ຈະແຈ້ງແຕ່ດຽວນີ້, ຕ້ອງເຮັດໃຫ້ບັນດາສະຫາຍສືບຕໍ່ຮັກສາທ່າທຳນອງທີ່ຖ່ອມຕົວ ສຸຂຸມຮອບຄອບ ບໍ່ອວດອີງທະນົງຕົວ ບໍ່ຮ້ອນບໍ່ຮົນ ແລະສືບຕໍ່ຮັກສາທ່າທຳນອງຕໍ່ສູ້ຢ່າງທໍລະຫົດອົດທົນ.

«ຄຳລາຍງານໃນກອງປະຊຸມເຕັມຄະນະເທື່ອທີ່ ໒ ຂອງຄະນະກຳມະການສູນກາງສະໄໝທີ່ ໗ ຂອງພັກກອມມູນິດຈີນ» (ວັນທີ່ ໕-໓-໑໙໔໙)

ບັນດາຄວາມຄິດຈິດໃຈທີ່ຫວັງອາໄສຄວາມສະດວກທີ່ເກີດຂຶ້ນຢ່າງບໍ່ນຶກບໍ່ຝັນແລະເອົາຊະນະຍ້ອນໂຊກບັງເອີນ ໂດຍບໍ່ຜ່ານການຕໍ່ສູ້ຢ່າງທໍລະຫົດອົດທົນແລະການຖອກເລືອດເຫື່ອຂອງຕົນເອງທີ່ມີຢູ່ໃນໝູ່ພະນັກງານນັ້ນ ຕ້ອງປັດກວາດໃຫ້ໝົດກ້ຽງ.

«ສ້າງຕັ້ງເຂດທີ່ໝັ້ນພາກຕາເວັນອອກສຽງເໜືອອັນໝັ້ນຄົງ» (ວັນທີ່ ໒໘-໑໒-໑໙໔໕)

ພວກເຮົາຄວນເອົາສະພາບການກ້າວໜ້າແລະອະນາຄົດອັນແຈ້ງສະຫວ່າງຂອງໂລກ ໂຄສະນາຕໍ່ປະຊາຊົນເລື້ອຍໆ,

ເຮັດໃຫ້ປະຊາຊົນມີຄວາມໝັ້ນໃຈໃນໄຊຊະນະ. ພ້ອມກັນນັ້ນ ພວກເຮົາຍັງຕ້ອງບອກໃຫ້ປະຊາຊົນແລະບັນດາສະຫາຍຮູ້ວ່າ ຫົນທາງແມ່ນຄົດລ້ຽວ. ຕາມຫົນທາງຂອງການປະຕິວັດຍັງມີອຸປະສັກຂັດຂວາງຫຼາຍ, ຍັງມີຄວາມຫຍຸ້ງຍາກຫຼາຍ. ກອງປະຊຸມໃຫຍ່ຜູ້ແທນພັກເທື່ອທີ ໗ ຂອງພວກເຮົາໄດ້ຄາດຄະເນຄວາມຫຍຸ້ງຍາກຫຼາຍປະການ, ພວກເຮົາແໜງວ່າຄາດຄິດຄວາມຫຍຸ້ງຍາກໃຫ້ຫຼາຍແດ່ຈັກໜ່ອຍດີກວ່າ. ມີສະຫາຍບາງຄົນບໍ່ຍອມຄຶດເຖິງຄວາມຫຍຸ້ງຍາກໃຫ້ຫຼາຍ. ແຕ່ວ່າ ຄວາມຫຍຸ້ງຍາກນັ້ນມີຢູ່ແທ້, ມີທໍ່ໃດກໍ່ຕ້ອງຮັບຮູ້ທໍ່ນັ້ນ, ຈະໃຊ້"ລັດທິບໍ່ຮັບຮູ້"ບໍ່ໄດ້. ພວກເຮົາຕ້ອງຮັບຮູ້ຄວາມຫຍຸ້ງຍາກ, ຈຳແນກຄວາມຫຍຸ້ງຍາກແລະຕໍ່ສູ້ກັບຄວາມຫຍຸ້ງຍາກ. ໃນໂລກນີ້ບໍ່ມີຫົນທາງຊື່ ຕ້ອງກຽມຫຽວຫົນທາງຄົດ, ຢ່ານັກງ່າຍເອົາສະດວກ. ຢ່າໄປຄຶດຝັນວ່າ ເຊົ້າມື້ໃດມື້ໜຶ່ງ ພວກປະຕິການທັງປວງຈະຄຸເຂົ່າລົງໝົດ. ຮວມຄວາມວ່າ ອະນາຄົດນັ້ນແຈ້ງສະຫວ່າງ, ຫົນທາງນັ້ນຄົດລ້ຽວ. ຕໍ່ໜ້າພວກເຮົາຍັງມີຄວາມຫຍຸ້ງຍາກຫຼາຍ,

ບໍ່ຄວນເບິ່ງຂ້າມ. ເມື່ອພວກເຮົາແລະປະຊາຊົນທຸກທົ່ວໜ້າສາມັກຄີກັນເຂົ້າ ມານະພະຍາຍາມນຳກັນ, ແນວໃດກໍ່ສາມາດຜ່ານຜ່າຄວາມຫຍຸ້ງຍາກຮ້ອຍແປດພັນປະການແລະບັນລຸເຖິງຈຸດປະສົງແຫ່ງໄຊຊະນະໄດ້.

« ກ່ຽວກັບການເຈລະຈາທີ່ເມືອງຈຸງກິງ » (ວັນທີ ໑໗-໑໐-໑໙໔໕)

ຜູ້ໃດຫາກເຫັນແຕ່ດ້ານສະຫວ່າງແຈ້ງ ບໍ່ເຫັນດ້ານຫຍຸ້ງຍາກ, ຜູ້ນັ້ນກໍ່ບໍ່ສາມາດດຳເນີນການຕໍ່ສູ້ເພື່ອເຮັດໃຫ້ພາລະໜ້າທີ່ຂອງພັກປາກົດເປັນຈິງໄດ້.

«ວ່າດ້ວຍລັດຖະບານປະສົມ» (ວັນທີ ໔໔-໔-໑໙໔໕)

ຊັບສົມບັດໃນສັງຄົມແມ່ນກຳມະກອນ ຊາວນາແລະນັກຮຽນຮູ້ຜູ້ອອກແຮງງານເປັນຜູ້ສ້າງຂຶ້ນເອງ. ທະແນນແຕ່ຄົນເຫຼົ່ານີ້ໄດ້ກຳຊະຕາກຳຂອງຕົນ ແລະມີແນວທາງລັດທິມາກເລນິນ ທັງໃຊ້ທ່າທີຂະຫຍັນຫ້າວຫັນໄປແກ້ໄຂບັນຫາ ບໍ່ແມ່ນ

ຫຼີບຫຼີກບັນຫາແລ້ວ. ຄວາມຫຽຸ້ງຍາກໃດໆໃນໂລກມະນຸດກໍ່ຍ່ອມສາມາດແກ້ໄຂໄດ້.

ໝາຍເຫດໃນບົດຄວາມເລື່ອງ «ເລຂາພັກລົງມືເອງ, ທົ່ວທັງພັກບໍລິຫານສະຫະກອນ» (ປີ ໑໙໕໕)

ສະຫາຍທົ່ວທັງພັກລ້ວນແຕ່ຕ້ອງຄາດຄະເນເຖິງຄວາມຫຽຸ້ງຍາກໃຫ້ພຽງພໍແລະກຽມໃຊ້ກຳລັງໃຈອັນເດັດດ່ຽວບໍ່ທໍ້ຖອຍ ເພື່ອຜ່ານຜ່າຄວາມຫຽຸ້ງຍາກທຸກປະການຢ່າງມີແຜນການ. ຢູ່ຕໍ່ໜ້າອິດທິພົນປະຕິການແລະຢູ່ຕໍ່ໜ້າພວກເຮົາຕ່າງກໍ່ມີຄວາມຫຽຸ້ງຍາກທັງນັ້ນ. ແຕ່ຄວາມຫຽຸ້ງຍາກຂອງອິດທິພົນປະຕິການນັ້ນບໍ່ສາມາດຜ່ານຜ່າໄດ້, ເພາະວ່າ ພວກມັນແມ່ນອິດທິພົນທີ່ມໍ່ຈະຕາຍແລະບໍ່ມີອະນາຄົດ. ສ່ວນຄວາມຫຽຸ້ງຍາກຂອງພວກເຮົານັ້ນສາມາດຜ່ານຜ່າໄດ້, ເພາະວ່າ ພວກເຮົາແມ່ນອິດທິພົນຈະເລີນໃໝ່ແລະມີອະນາຄົດແຈ້ງສະຫວ່າງ.

« ຕ້ອນຮັບກະແສສູງອັນໃໝ່ຂອງການປະຕິວັດຈີນ »

(ວັນທີ່ ໑-໒-໑໙໔໗)

ໃນຍາມຫຽຸ້ງຍາກລຳບາກ, ສະຫາຍຂອງພວກເຮົາຕ້ອງມອງເຫັນຜົນງານ, ຕ້ອງມອງເຫັນແສງສະຫວ່າງ, ຕ້ອງຍົກນ້ຳໃຈກ້າຫານຂອງພວກເຮົາໃຫ້ສູງຂຶ້ນ.

«ຮັບໃຊ້ປະຊາຊົນ» (ວັນທີ່ ໘-໙-໑໙໔໔)

ການຈະເລີນເຕີບໃຫຽ່ຂອງວັດຖຸເຫດການທີ່ເກີດໃໝ່ໃດໆລ້ວນແຕ່ຕ້ອງຜ່ານຄວາມຍາກລຳບາກຄົດລ້ຽວ. ຢູ່ໃນພາລະກິດສັງຄົມນິຍົມ, ແນວຄິດທີ່ຫວັງຈະໄດ້ຜົນສຳເລັດຢ່າງງ່າຍດາຍແລະສະດວກສະບາຍຕະຫຼອດທາງ ໂດຍບໍ່ຕ້ອງຜ່ານຄວາມຍາກລຳບາກຄົດລ້ຽວ ແລະບໍ່ທຸ່ມເຫື່ອເທແຮງພະຍາຍາມຢ່າງສຸດຂີດນັ້ນ ພຽງແຕ່ແມ່ນຄວາມໃຝ່ຝັນທໍ່ນັ້ນ.

«ບັນຫາກ່ຽວກັບການແກ້ໄຂຄວາມຂັດແຍ້ງພາຍໃນປະຊາຊົນຢ່າງຖືກຕ້ອງ» (ວັນທີ່ ໒໗-໒-໑໙໕໗)

ໃນການຕໍ່ສູ້ປະຕິວັດ, ມີບາງຄາວເງື່ອນໄຂຫຽຸ້ງຍາກຫຼາຍກວ່າເງື່ອນໄຂສະດວກ, ຄາວນັ້ນ ຄວາມຫຽຸ້ງຍາກແມ່ນດ້ານ

ສຳຄັນຂອງຄວາມຂັດແຍ້ງ, ·ຄວາມສະດວກແມ່ນດ້ານສຳຮອງຂອງຄວາມຂັດແຍ້ງ. ແຕ່ຍ້ອນຄວາມພະຍາຍາມຂອງຊາວພັກປະຕິວັດ ກໍ່ສາມາດຜ່ານຜ່າຄວາມຫຍຸ້ງຍາກເທື່ອລະກ້າວ, ເປີດພາວະການໃໝ່ອັນສະດວກ ແລ້ວພາວະການອັນຫຍຸ້ງຍາກກໍ່ປະບ່ອນໃຫ້ພາວະການອັນສະດວກເຂົ້າແທນ.

«ວ່າດ້ວຍຄວາມຂັດແຍ້ງ» (ເດືອນ ໘-໑໙໓໗)

ວຽກງານແມ່ນຫຍັງ, ວຽກງານກໍ່ແມ່ນການຕໍ່ສູ້. ບ່ອນເຫຼົ່ານັ້ນມີຄວາມຫຍຸ້ງຍາກ ມີບັນຫາ ຕ້ອງການໃຫ້ພວກເຮົາໄປແກ້ໄຂ. ພວກເຮົາໄປເຮັດວຽກ ໄປຕໍ່ສູ້ ແມ່ນເພື່ອແກ້ໄຂຄວາມຫຍຸ້ງຍາກ. ບ່ອນທີ່ຍິ່ງຫຍຸ້ງຍາກກໍ່ຍິ່ງຕ້ອງໄປ, ເຮັດຈັ່ງຊີຈຶ່ງແມ່ນສະຫາຍທີ່ດີ.

« ກ່ຽວກັບການເຈລະຈາທີ່ເມືອງຈຸງກິງ » (ວັນທີ ໑໗-໑໐-໑໙໔໕)

ໃນສະໄໝບູຮານຂອງຈີນມີນິທານອຸປະມາເລື່ອງໜຶ່ງ ຊື່ວ່າ "ພໍ່ເຖົ້າໂງ່ຍ້າຍພູ". ໃນນິທານເວົ້າວ່າ ໃນສະໄໝບູຮານມີພໍ່ເຖົ້າ

ຜູ້ໜຶ່ງ ຢູ່ພາກເໜືອຂອງຈີນ ຊື່ວ່າພໍ່ເຖົ້າໂງ່ພູເໜືອ. ຢູ່ເບື້ອງໃຕ້ໜ້າເຮືອນລາວມີພູໃຫຍ່ສອງໜ່ວຍຂວາງທາງຢູ່, ໜ່ວຍໜຶ່ງຊື່ພູໄທຫາງ, ອີກໜ່ວຍໜຶ່ງຊື່ພູຫວາງອູ. ພໍ່ເຖົ້າໂງ່ຕັດສິນໃຈນຳພາພວກລູກຂອງລາວເອົາຈົກໄປຂຸດພູໃຫຍ່ສອງໜ່ວຍນີ້ຖິ້ມ. ມີພໍ່ເຖົ້າຜູ້ໜຶ່ງອີກ ຊື່ວ່າພໍ່ເຖົ້າສະຫຼາດ ເມື່ອເຫັນແລ້ວກໍ່ເລີຍຫົວຂວັນແລະເວົ້າວ່າ ພວກເຈົ້າເຮັດແນວນີ້ຈັ່ງແມ່ນໂງ່ອີ່ຫຼີ, ພໍ່ລູກສູເຈົ້າບໍ່ທໍ່ໃດຄົນຈະຂຸດພູໃຫຍ່ສອງໜ່ວຍນີ້ຖິ້ມບໍ່ທ່ອນເຮັດໄດ້ຈັກເທື່ອ. ພໍ່ເຖົ້າໂງ່ເລີຍຕອບວ່າ: ຂ້ອຍຕາຍແລ້ວຍັງມີລູກ, ລູກຕາຍແລ້ວຍັງມີຫຼານ, ລູກຫຼານເຫຼັນຫຼອນແມ່ນບໍ່ສຸດຈັກເທື່ອ. ພູສອງໜ່ວຍນີ້ ເຖິງວ່າຈະສູງຫຼາຍກໍ່ຕາມ, ມັນບໍ່ທ່ອນຈະສູງຂຶ້ນຕື່ມອີກ, ຂຸດໜ້ອຍໜຶ່ງກໍ່ນ້ອຍໄປໜ້ອຍໜຶ່ງ, ເປັນຫຍັງຈະຂຸດໃຫ້ພຽງບໍ່ໄດ້? ພໍ່ເຖົ້າໂງ່ເມື່ອຕີໂຕ້ແນວຄິດຜິດພາດຂອງພໍ່ເຖົ້າສະຫຼາດແລ້ວ ກໍ່ບໍ່ຫວັ່ນບໍ່ໄຫວຈັກເມັດ, ຄົງຂຸດພູຢູ່ບໍ່ຢຸດບໍ່ເຊົາຈັກມື້. ເລື່ອງນີ້ໄດ້ສະເທືອນໃຈພະອິນ, ພະອິນກໍ່ແຕ່ງເທວະດາ ໒ ອົງລົງມາແບກເອົາພູສອງໜ່ວຍນັ້ນໄປ. ປັດຈຸບັນນີ້

ກໍ່ມີພູໃຫຍ່ສອງໜ່ວຍເຕັ້ງທັບປະຊາຊົນຈີນ, ໜ່ວຍໜຶ່ງເອີ້ນວ່າ ຈັກກະພັດນິຍົມ ອີກໜ່ວຍໜຶ່ງເອີ້ນວ່າລັດທິສັກດີນາ. ພັກກອມມູນິດຈີນໄດ້ຕັດສິນໃຈຈະຂຸດພູສອງໜ່ວຍນີ້ຖິ້ມແຕ່ເທິງແລ້ວ. ພວກເຮົາຕ້ອງຍຶດໝັ້ນຕໍ່ໄປຢ່າງແນ່ນອນ, ແນວໃດກໍ່ຕ້ອງເຮັດວຽກບໍ່ຢຸດບໍ່ເຊົາ, ແລ້ວພວກເຮົາກໍ່ສາມາດເຮັດໃຫ້ພະອິນສະເທືອນໃຈໄດ້ຄືກັນ. ແຕ່ພະອິນນີ້ບໍ່ແມ່ນຜູ້ອື່ນ, ແມ່ນມວນມະຫາຊົນທົ່ວປະເທດຈີນນັ້ນເອງ, ເມື່ອມວນມະຫາຊົນທົ່ວປະເທດພ້ອມກັນລຸກຂຶ້ນມາຂຸດພູສອງໜ່ວຍນີ້ຮ່ວມກັບພວກເຮົາ, ເປັນຫຍັງຈະຂຸດໃຫ້ພຽງບໍ່ໄດ້?

«ພໍ່ເຖົ້າໂງ່ຍ້າຍພູ» (ວັນທີ ໑໑-໖-໑໙໔໕)

໔໔. ວິທີຄິດແລະວິທີເຮັດວຽກ

ປະວັດສາດຂອງມະນຸດຊາດແມ່ນປະວັດສາດທີ່ຂະຫຍາຍຕົວຈາກອານາຈັກຈຳຕ້ອງເປັນໄປ, ສູ່ອານາຈັກເສລີຢ່າງບໍ່ຂາດໄລຍະ. ປະວັດສາດນີ້ບໍ່ຫ່ອນຈະສິ້ນສຸດຈັກເທື່ອ. ໃນສັງຄົມທີ່ມີຊົນຊັ້ນ, ການຕໍ່ສູ້ຊົນຊັ້ນບໍ່ຫ່ອນຈະສິ້ນສຸດ. ໃນສັງຄົມທີ່ບໍ່ມີຊົນຊັ້ນ, ການຕໍ່ສູ້ລະຫວ່າງໃໝ່ກັບເກົ່າ ລະຫວ່າງຖືກກັບຜິດບໍ່ຫ່ອນຈະສິ້ນສຸດຈັກເທື່ອ. ໃນຂອບເຂດການຕໍ່ສູ້ການຜະລິດແລະການທົດລອງວິທະຍາສາດ, ມະນຸດຊາດຍ່ອມຂະຫຍາຍໄປຢ່າງບໍ່ຂາດໄລຍະ, ໂລກທຳມະຊາດກໍ່ຍ່ອມຂະຫຍາຍໄປຢ່າງບໍ່ຂາດໄລຍະ, ບໍ່ຫ່ອນຈະຢຸດໜິ້ງຢູ່ໃນລະດັບໃດລະດັບໜຶ່ງຈັກເທື່ອ. ດ້ວຍເຫດນັ້ນ ມະນຸດຊາດຍ່ອມຈະຕ້ອງສະຫຼຸບບົດຮຽນຢ່າງບໍ່ຢຸດບໍ່ເຊົາ, ມີການຄົ້ນພົບ ມີການປະດິດ ມີການສ້າງ

ແລະນິການກ້າວໜ້າ. ທັດສະນະທີ່ຢຸດໜິ້ງ ທັດສະນະທີ່ເຫັນແຕ່ແງ່ໂລກ ທັດສະນະທີ່ເຮັດຫຍັງກໍ່ບໍ່ໄດ້ ແລະທັດສະນະອອດອິ່ງພໍໃຈໃນຕົວເອງນັ້ນ ລ້ວນແຕ່ຜິດພາດ. ທີ່ວ່າຜິດພາດນັ້ນ, ຍ້ອນວ່າທັດສະນະເຫຼົ່ານີ້ ບໍ່ສອດຄ້ອງກັບຄວາມເປັນຈິງທາງປະວັດສາດການຂະຫຍາຍຕົວຂອງສັງຄົມມະນຸດຊາດປະມານໜຶ່ງລ້ານປີມາ, ທັງບໍ່ສອດຄ້ອງກັບຄວາມເປັນຈິງທາງປະວັດສາດຂອງໂລກທຳມະຊາດຕາມທີ່ພວກເຮົາໄດ້ຮູ້ມາໃນຊູ່ມື້ນີ້(ຕົວຢ່າງຄື ໂລກທຳມະຊາດທີ່ໄດ້ສ່ອງແສງຈາກປະວັດລະບົບຈັກກະວານ ປະວັດໜ່ວຍໂລກ ປະວັດຊີວະຊາດ ແລະປະວັດວິທະຍາສາດທຳມະຊາດຂະແໜງອື່ນໆ).

ຄັດຈາກ «ລາຍງານວຽກງານລັດຖະບານຂອງນາຍົກລັດຖະມົນຕີໂຈວເອິນໄລ ໃນກອງປະຊຸມເທື່ອທີ່ ໑ ແຫ່ງສະພາຜູ້ແທນປະຊາຊົນທົ່ວປະເທດສະໄໝທີ່ ໓» (ວັນທີ່ ໒໑,໒໒-໑໒-໑໙໖໔)

ວິທະຍາສາດທຳມະຊາດແມ່ນອາວຸດຊະນິດໜຶ່ງຂອງຄົນທັງຫຼາຍສຳລັບຍາດເອົາເສລີພາບ. ເພື່ອຈະໄດ້ຮັບເສລີພາບໃນສັງຄົມ, ຄົນເຮົາກໍ່ຕ້ອງໃຊ້ວິທະຍາສາດສັງຄົມໄປຊອກຮູ້ສັງຄົມ, ດັດແປງສັງຄົມແລະດຳເນີນການປະຕິວັດສັງຄົມ. ເພື່ອຈະໄດ້ຮັບເສລີພາບໃນໂລກທຳມະຊາດ, ຄົນເຮົາກໍ່ຕ້ອງໃຊ້ວິທະຍາສາດທຳມະຊາດໄປຊອກຮູ້ທຳມະຊາດ, ຜາບແພ້ທຳມະຊາດແລະດັດແປງທຳມະຊາດ ຈຶ່ງຈະໄດ້ຮັບເສລີພາບຈາກທຳມະຊາດ.

ຄຳປາໄສໃນກອງປະຊຸມເປີດສະມາຄົມຄົ້ນຄວ້າວິທະຍາສາດທຳມະຊາດແຫ່ງເຂດແດນຕໍ່ແດນ (ວັນທີ່ ໕-໒-໑໙໔໐)

ທິດສະດີວັດຖຸນິຍົມສັດຈະວິພາກແຫ່ງປັດຊະຍາລັດທິມາກມີຈຸດພິເສດອັນຈະແຈ້ງທີ່ສຸດສອງຂໍ້: ຂໍ້ໜຶ່ງ ແມ່ນລັກສະນະຊົນຊັ້ນຂອງມັນ ຊຶ່ງໄດ້ປະກາດຢ່າງເປີດເຜີຍວ່າທິດສະດີວັດຖຸນິຍົມສັດຈະວິພາກຮັບໃຊ້ຊົນຊັ້ນກຳມາຊີບ; ອີກຂໍ້ໜຶ່ງ ແມ່ນລັກ

ສະນະພາກປະຕິບັດຂອງມັນ ຊຶ່ງເນັ້ນໜັກເຖິງຄວາມພົວພັນທີ່ທິດສະດີອີງໃສ່ພາກປະຕິບັດ, ທິດສະດີເອົາພາກປະຕິບັດເປັນພື້ນຖານ, ທັງໄດ້ຫັນມາຮັບໃຊ້ພາກປະຕິບັດ.

«ວ່າດ້ວຍພາກປະຕິບັດ» (ເດືອນ ໗-໑໙໓໗)

ປັດຊະຍາຂອງລັດທິມາກຖືວ່າ ບັນຫາສຳຄັນທີ່ສຸດບໍ່ແມ່ນຢູ່ທີ່ເຂົ້າໃຈກົດເກນຂອງໂລກນອກຕົວ, ແລ້ວສາມາດອະທິບາຍໂລກໄດ້, ແຕ່ຢູ່ທີ່ເອົາຄວາມຮັບຮູ້ກ່ຽວກັບກົດເກນນອກຕົວນີ້ໄປດັດແປງໂລກຢ່າງຂະຫຍັນຂັນແຂງ.

«ວ່າດ້ວຍພາກປະຕິບັດ» (ເດືອນ ໗-໑໙໓໗)

ແນວຄິດອັນຖືກຕ້ອງຂອງຄົນມາແຕ່ໃສ? ແມ່ນຕົກມາແຕ່ຟ້າບໍ່? ບໍ່ແມ່ນ. ແມ່ນມີຢູ່ໃນສະໝອງຂອງຕົນແຕ່ເດີມມາບໍ່? ບໍ່ແມ່ນ. ແນວຄິດອັນຖືກຕ້ອງຂອງຄົນ ມີແຕ່ມາຈາກພາກປະຕິບັດທາງສັງຄົມ, ມີແຕ່ມາຈາກພາກປະຕິບັດທາງສັງຄົມ ມ

ປະການ ຄື ການຕໍ່ສູ້ການຜະລິດ ການຕໍ່ສູ້ຊົນຊັ້ນແລະການທົດລອງວິທະຍາສາດ.

«ແນວຄິດອັນຖືກຕ້ອງຂອງຄົນມາແຕ່ໃສ?» (ເດືອນ ໕-໑໙໖໓)

ການດຳລົງຢູ່ທາງສັງຄົມຂອງຄົນເຮົາ ກຳນົດແນວຄິດຂອງຄົນເຮົາ. ເມື່ອແນວຄິດອັນຖືກຕ້ອງທີ່ເປັນຕົວແທນຊົນຊັ້ນກ້າວໜ້າຖືກມວນຊົນກຳໄດ້ແລ້ວ ກໍ່ຈະກາຍເປັນກຳລັງວັດຖຸທີ່ດັດແປງສັງຄົມແລະດັດແປງໂລກ.

«ແນວຄິດອັນຖືກຕ້ອງຂອງຄົນມາແຕ່ໃສ?» (ເດືອນ ໕-໑໙໖໓)

ໃນພາກປະຕິບັດທາງສັງຄົມ, ຄົນທັງຫຼາຍດຳເນີນການຕໍ່ສູ້ຕ່າງໆ ໄດ້ມີບົດຮຽນອັນສົມບູນ ມີອັນສຳເລັດ ມີອັນປະລາໄຊ. ປາກົດການອັນນັບບໍ່ຖ້ວນຂອງໂລກພາຍນອກນອກຕົວຜ່ານອິນຊີທັງຫ້າຂອງຄົນເຮົາ ຄື ຕາ ຫູ ດັງ ລີ້ນແລະກາຍ ສ່ອງແສງເຂົ້າໃນສະໝອງຂອງຄົນເຮົາ, ທຳອິດແມ່ນຄວາມຮັບຮູ້ທາງ

ສຳຜັດ. ເມື່ອອຸປະກອນຂອງຄວາມຮັບຮູ້ທາງສຳຜັດນີ້ໄດ້ທ້ອນໂຮມຂຶ້ນຫຼາຍແລ້ວ ກໍ່ຈະເກີດການກ້າວກະໂດດອັນໜຶ່ງ, ກາຍເປັນຄວາມຮັບຮູ້ທາງເຫດຜົນ ຊຶ່ງແມ່ນແນວຄິດ. ອັນນີ້ແມ່ນຂະບວນການຄວາມຮັບຮູ້ຂະບວນໜຶ່ງ, ອັນນີ້ແມ່ນໄລຍະທຳອິດຂອງຂະບວນການຄວາມຮັບຮູ້ທັງຂະບວນ ຄື ໄລຍະຈາກວັດຖຸນອກຕົວໄປສູ່ຈິດໃຈໃນຕົວ, ໄລຍະຈາກການດຳລົງຢູ່ໄປສູ່ແນວຄິດ. ຈິດໃຈຫຼືແນວຄິດ (ຮວມທັງທິດສະດີ ນະໂຍບາຍ ແຜນການ ແລະວິທີ) ໃນເວລານີ້ ໄດ້ສ່ອງແສງກົດເກນໂລກພາຍນອກນອກຕົວຢ່າງຖືກຕ້ອງຫຼືບໍ່ນັ້ນ ຍັງບໍ່ທັນໄດ້ຮັບການຢັ້ງຢືນ, ຍັງບໍ່ສາມາດຊີ້ຂາດໄດ້ວ່າຖືກຕ້ອງຫຼືບໍ່, ຕໍ່ນັ້ນໄປກໍ່ມີໄລຍະທີ່ສອງຂອງຂະບວນການຄວາມຮັບຮູ້, ຄື ໄລຍະຈາກຈິດໃຈໄປສູ່ວັດຖຸ, ໄລຍະຈາກແນວຄິດໄປສູ່ການດຳລົງຢູ່, ຄືວ່ານຳເອົາຄວາມຮັບຮູ້ທີ່ໄດ້ຮັບໃນໄລຍະທຳອິດໄປສູ່ພາກປະຕິບັດທາງສັງຄົມ, ເພື່ອເບິ່ງວ່າທິດສະດີ ນະໂຍບາຍ ແຜນການ ວິທີ ຯລຯ ເຫຼົ່ານີ້ສາມາດສຳເລັດຜົນຕາມລະດັບຄາດໝາຍຫຼືບໍ່. ເວົ້າທົ່ວໄປ

ແລ້ວ, ອັນສຳເລັດຜົນ ແມ່ນຖືກຕ້ອງ, ອັນປະລາໄຊ ແມ່ນຜິດພາດ, ໂດຍສະເພາະການຕໍ່ສູ້ຂອງມະນຸດຊາດທີ່ເຮັດຕໍ່ໂລກທຳມະຊາດນັ້ນ ແມ່ນເປັນແນວນີ້. ໃນການຕໍ່ສູ້ທາງສັງຄົມ, ການທີ່ອິດທິພົນທີ່ເປັນຕົວແທນຊົນຊັ້ນກ້າວໜ້າ ມີການປະລາໄຊບາງຢ່າງໃນບາງຄາວນັ້ນ ບໍ່ແມ່ນຍ້ອນແນວຄິດບໍ່ຖືກຕ້ອງ, ແມ່ນຍ້ອນໃນການຊັ່ງຊາກຳລັງການຕໍ່ສູ້ນັ້ນ, ອິດທິພົນຝ່າຍກ້າວໜ້າຍັງບໍ່ທໍ່ອິດທິພົນຝ່າຍປະຕິການໃນຊົ່ວຄາວ, ດັ່ງນັ້ນ ຈຶ່ງໄດ້ປະລາໄຊໃນຊົ່ວຄາວ, ແຕ່ວ່າ ຍ່ອມຈະຕ້ອງສຳເລັດຜົນບໍ່ມື້ໃດກໍ່ມື້ໜຶ່ງໃນຂ້າງໜ້າ. ເມື່ອຜ່ານການທົດສອບໃນພາກປະຕິບັດແລ້ວ, ຄວາມຮັບຮູ້ຂອງຄົນເຮົາກໍ່ເກີດການກ້າວກະໂດດຂຶ້ນອີກ. ການກ້າວກະໂດດເທື່ອນີ້ ເມື່ອທຽບໃສ່ການກ້າວກະໂດດເທື່ອກ່ອນແລ້ວ ແຮ່ງມີຄວາມໝາຍຍິ່ງໃຫຍ່ກວ່າ. ເພາະວ່າມີແຕ່ການກ້າວກະໂດດເທື່ອນີ້ ຈຶ່ງສາມາດຢັ້ງຢືນໃຫ້ເຫັນວ່າການກ້າວກະໂດດເທື່ອທຳອິດຂອງຄວາມຮັບຮູ້ ຄື ແນວຄິດທິດສະດີ ນະໂຍບາຍ ແຜນການ ວິທີ ຯລຯ ທີ່ໄດ້ມາຈາກ

ຂະບວນການສ່ອງແສງໂລກພາຍນອກຕໍ່ອັນນັ້ນ ແມ່ນສິ່ງຖືກຕ້ອງຫຼືຜິດພາດ, ນອກນັ້ນ ກໍ່ບໍ່ມີວິທີອື່ນທີ່ຈະກວດສອບສັດຈະທຳໄດ້ອີກ.

«ແນວຄິດອັນຖືກຕ້ອງຂອງຄົນມາແຕ່ໃສ?» (ເດືອນ ໕-໑໙໖໓)

ຄວາມຮັບຮູ້ທີ່ຖືກຕ້ອງອັນໜຶ່ງ ມັກຈະຕ້ອງຜ່ານຈາກວັດຖຸໄປສູ່ຈິດໃຈ, ຈາກຈິດໃຈໄປສູ່ວັດຖຸ, ຄືວ່າ ຈາກພາກປະຕິບັດໄປສູ່ຄວາມຮັບຮູ້, ຈາກຄວາມຮັບຮູ້ໄປສູ່ພາກປະຕິບັດຫຼືບໄປຫຼືບມາແນວນີ້ຫຼາຍເທື່ອ ຈຶ່ງສາມາດສຳເລັດຜົນໄດ້. ອັນນີ້ແມ່ນທິດສະດີວ່າດ້ວຍຄວາມຮັບຮູ້ຂອງລັດທິມາກ, ແມ່ນທິດສະດີວ່າດ້ວຍຄວາມຮັບຮູ້ຂອງທິດສະດີວັດຖຸນິຍົມສັດຈະວິພາກ.

«ແນວຄິດອັນຖືກຕ້ອງຂອງຄົນມາແຕ່ໃສ?» (ເດືອນ ໕-໑໙໖໓)

ຜູ້ໃດກໍ່ຕາມ ຄັນຢາກເຂົ້າໃຈວັດຖຸເຫດການອັນໃດ, ນອກຈາກຕິດແທດກັບວັດຖຸເຫດການອັນນັ້ນ, ຄື ດຳລົງຊີວິດ (ລົງ

ພາກປະຕິບັດ) ໃນສະພາບແວດລ້ອມຂອງວັດຖຸເຫດການອັນນັ້ນແລ້ວ ແມ່ນບໍ່ມີທາງຈະແກ້ໄຂໄດ້. ...ຄັນເຈົ້າຢາກມີຄວາມຮູ້, ເຈົ້າກໍ່ຕ້ອງເຂົ້າຮ່ວມພາກປະຕິບັດທີ່ປະຕິວັດປ່ຽນແປງສະພາບຄວາມເປັນຈິງ. ເຈົ້າຢາກຮູ້ລົດຊາດຂອງໝາກຈອງ, ເຈົ້າກໍ່ຕ້ອງໄປປະຕິວັດປ່ຽນແປງໝາກຈອງ, ຄື ກິນເບິ່ງເອງ. ...ຄັນເຈົ້າຢາກຮູ້ທິດສະດີແລະວິທີຂອງການປະຕິວັດ, ເຈົ້າກໍ່ຕ້ອງເຂົ້າຮ່ວມການປະຕິວັດ. ຄວາມຮູ້ອັນແທ້ຈິງທັງໝົດລ້ວນແຕ່ເກີດມາຈາກບົດຮຽນໂດຍກົງ.

«ວ່າດ້ວຍພາກປະຕິບັດ» (ເດືອນ ໗-໑໙໓໗)

ຄວາມຮັບຮູ້ເລີ່ມຕົ້ນຈາກພາກປະຕິບັດ, ຜ່ານພາກປະຕິບັດໄດ້ຮັບຄວາມຮັບຮູ້ທາງທິດສະດີແລ້ວ ຍັງຕ້ອງກັບຄືນສູ່ພາກປະຕິບັດອີກ. ບົດບາດຂະຫຍັນຂັນແຂງຂອງຄວາມຮັບຮູ້, ບໍ່ພຽງແຕ່ໄດ້ສະແດງໃນການກ້າວກະໂດດຢ່າງຂະຫຍັນຂັນແຂງຈາກຄວາມຮັບຮູ້ທາງສຳຜັດໄປສູ່ຄວາມຮັບຮູ້ທາງເຫດຜົນທໍ່ນັ້ນ, ອັນທີ່ສຳຄັນກວ່ານັ້ນ ຍັງຕ້ອງສະແດງອອກໃນການກ້າວກະໂດດ

ຈາກຄວາມຮັບຮູ້ທາງເຫດຜົນໄປສູ່ພາກປະຕິບັດແຫ່ງການປະຕິວັດອີກດ້ວຍ.

«ວ່າດ້ວຍພາກປະຕິບັດ» (ເດືອນ ໗-໑໙໓໗)

ໃຜໆກໍ່ຮູ້ແຈ້ງແລ້ວວ່າ ບໍ່ວ່າເຮັດວຽກຫຍັງ, ຄົນບໍ່ຮູ້ສະພາບການຂອງວຽກນັ້ນ ລັກສະນະຂອງວຽກນັ້ນ ແລະຄວາມພົວພັນລະຫວ່າງວຽກນັ້ນກັບວຽກອື່ນແລ້ວ ກໍ່ຈະບໍ່ຮູ້ກົດເກນຂອງວຽກນັ້ນ, ກໍ່ຈະບໍ່ຮູ້ວ່າຄວນເຮັດແນວໃດ ແລະກໍ່ຈະບໍ່ສາມາດເຮັດວຽກນັ້ນໃຫ້ດີໄດ້.

«ບັນ ຫາ ຍຸດ ທະ ສາດ ຂອງ ສົງ ຄາມ ປະ ຕິວັດ ຈີນ»
(ເດືອນ ໑໒-໑໙໓໖)

ຄົນທັງຫຼາຍຄັນຢາກໄດ້ຮັບໄຊຊະນະໃນວຽກງານ ຄື ໄດ້ຮັບຜົນຕາມລະດັບຄາດໝາຍ, ແນ່ນອນ ຕ້ອງເຮັດໃຫ້ແນວຄິດຂອງຕົນສອດຄ້ອງກັບກົດເກນຂອງໂລກພາຍນອກນອກຕົວ, ຖ້າບໍ່ສອດຄ້ອງແລ້ວ ກໍ່ຈະປະລາໄຊໃນພາກປະຕິບັດ. ເມື່ອໄດ້ຜ່ານການປະລາໄຊແລ້ວ ຄົນເຮົາກໍ່ໄດ້ຮັບບົດຮຽນຈາກການປະລາ

ໄຊ, ແກ້ໄຂດັດແປງແນວຄິດຂອງຕົນໃຫ້ສອດຄ້ອງກັບກົດເກນຂອງໂລກພາຍນອກ, ຄົນເຮົາກໍ່ສາມາດປ່ຽນການປະລາໄຊເປັນໄຊຊະນະ, ທີ່ວ່າ "ການປະລາໄຊແມ່ນແມ່ຂອງຄວາມສຳເລັດ", "ພາດໄປເທື່ອໜຶ່ງສະຫຼາດຂຶ້ນໜັປໜຶ່ງ" ກໍ່ໝາຍເຖິງເຫດຜົນດັ່ງກ່າວນັ້ນເອງ.

«ວ່າດ້ວຍພາກປະຕິບັດ» (ເດືອນ ໗-໑໙໓໗)

ພວກເຮົາແມ່ນຊາວລັດທິມາກ, ລັດທິມາກສອນພວກເຮົາວ່າ ເບິ່ງບັນຫາຢ່າຊູເລີ່ມຈາກຄຳນິຍາມທີ່ເປັນນາມະທຳ, ຕ້ອງເລີ່ມຈາກຄວາມຈິງທີ່ມີຢູ່ທາງນອກຕົວແລະຕ້ອງຊອກຫາເຂັມທິດ ນະໂຍບາຍແລະວິທີຈາກການຈຳແນກຄວາມຈິງເຫຼົ່ານີ້.

«ຄຳປາໄສໃນທີ່ຊຸມນຸມສົນທະນາສິລະປະວັນນະຄະດີ
ຢູ່ເມືອງຢຽນອານ» (ເດືອນ ໕-໑໙໔໒)

ການກຳນົດເຂັມທິດວຽກງານຕາມສະພາບຕົວຈິງ ແມ່ນວິທີເຮັດວຽກຂັ້ນພື້ນຖານທີ່ສຸດ ທີ່ສະມາຊິກພັກກອມມູນິດທັງໝົດຕ້ອງຈື່ຈຳໃຫ້ຄັກ. ການທີ່ພວກເຮົາຜິດພາດນັ້ນ, ເມື່ອຄົ້ນຄວ້າ

ສາຍເຫດທີ່ພາໃຫ້ມັນເກີດຂຶ້ນແລ້ວ ລ້ວນແຕ່ແມ່ນຍ້ອນພວກເຮົາກຳນົດເຂັມທິດວຽກງານຂອງຕົນຢ່າງໃນຕົວໂດຍຫ່າງເຫີນຈາກສະພາບຕົວຈິງໃນເວລານັ້ນແລະໃນບ່ອນນັ້ນ.

«ຄຳປາໄສ ໃນກອງປະຊຸມພະນັກງານໃນເຂດປົດປ່ອຍຊານຊີ—ສຸຍຢວນ» (ວັນທີ່ ໑-໔-໑໙໔໘)

ໃນໂລກນີ້ມີແຕ່ທິດສະດີຈິດນິຍົມແລະອະພິປັດຊະຍາທີ່ນັ້ນທີ່ເບົາແຮງທີ່ສຸດ, ເພາະວ່າ ມັນປ່ອຍໃຫ້ຄົນທັງຫຼາຍເວົ້າຢ່າງຫຼັບຫູຫຼັບຕາໂດຍບໍ່ຕ້ອງອີງຕາມຄວາມເປັນຈິງນອກຕົວແລະກໍ່ບໍ່ຕ້ອງຮັບການກວດກາຈາກຄວາມເປັນຈິງນອກຕົວ. ສ່ວນທິດສະດີວັດຖຸນິຍົມແລະວິທີສັດຈະວິພາກຊ້ຳພັດຕ້ອງໃຊ້ເຫື່ອແຮງ, ມັນຕ້ອງອີງຕາມຄວາມເປັນຈິງນອກຕົວ, ທັງຕ້ອງຮັບການກວດກາຈາກຄວາມເປັນຈິງນອກຕົວ, ຖ້າບໍ່ໃຊ້ເຫື່ອແຮງແລ້ວກໍ່ຈະພະລາດໄປທາງທິດສະດີຈິດນິຍົມແລະອະພິປັດຊະຍາ.

ໝາຍເຫດໃນບົດຄວາມເລື່ອງ «ເອກະສານກ່ຽວກັບກຸ່ມຕ້ານປະຕິວັດຫູຟົງ» (ເດືອນ ៥-໑໙໕໕)

ພວກເຮົາເບິ່ງເລື່ອງໃດເລື່ອງໜຶ່ງ ຕ້ອງເບິ່ງທາດແທ້ຂອງມັນ ແລະຄວນຖືເອົາປາກົດການຂອງມັນເປັນພຽງແຕ່ສິ່ງພາທາງເຂົ້າປະຕູເທົ່ານັ້ນ, ເມື່ອເຂົ້າປະຕູແລ້ວ ກໍ່ຕ້ອງກຳທາດແທ້ຂອງມັນໄວ້ໂລດ, ອັນນີ້ຈຶ່ງແມ່ນວິທີຈຳແນກແບບວິທະຍາສາດແລະເຊື່ອຖືໄດ້.

«ພັດໄຟນ້ອຍໆສາມາດໄໝ້ລານທົ່ງ» (ວັນທີ່ ៥-໑-໑໙໓໐)

ສາຍເຫດຕົ້ນຕໍແຫ່ງການຂະຫຍາຍຕົວຂອງວັດຖຸເຫດການບໍ່ແມ່ນຢູ່ພາຍນອກຂອງວັດຖຸເຫດການ ແມ່ນຢູ່ພາຍໃນຂອງວັດຖຸເຫດການ, ແມ່ນຢູ່ທີ່ລັກສະນະຂັດແຍ້ງພາຍໃນວັດຖຸເຫດການ. ພາຍໃນວັດຖຸເຫດການໃດໆ ລ້ວນແຕ່ມີລັກສະນະຂັດແຍ້ງຊະນິດນີ້, ດ້ວຍເຫດນັ້ນ ຈຶ່ງພາໃຫ້ວັດຖຸເຫດການເກີດການເຄື່ອນໄຫວແລະການຂະຫຍາຍຕົວ. ລັກສະນະຂັດແຍ້ງພາຍໃນວັດຖຸເຫດການຊະນິດນີ້ແມ່ນສາຍເຫດຕົ້ນຕໍແຫ່ງການຂະຫຍາຍຕົວຂອງວັດຖຸເຫດການ, ສ່ວນການພົວພັນກັນແລະ

ການສິ່ງຜົນສະທ້ອນເຊິ່ງກັນແລະກັນລະຫວ່າງວັດຖຸເຫດການນີ້ ກັບວັດຖຸເຫດການອື່ນນັ້ນແມ່ນສາຍເຫດລຳດັບທີ່ສອງແຫ່ງ ການຂະຫຍາຍຕົວຂອງວັດຖຸເຫດການ.

«ວ່າດ້ວຍຄວາມຂັດແຍ້ງ» (ເດືອນ ໘-໑໙໓໗)

ວິທີສັດຈະວິພາກວັດຖຸນິຍົມຖືວ່າ ສາຍເຫດພາຍນອກແມ່ນ ເງື່ອນໄຂຂອງການປ່ຽນແປງ, ສາຍເຫດພາຍໃນແມ່ນມູນຖານ ຂອງການປ່ຽນແປງ, ສາຍເຫດພາຍນອກມີແຕ່ຜ່ານສາຍເຫດ ພາຍໃນ ຈຶ່ງມີບົດບາດໄດ້. ໄຂ່ໄກ່ຍ້ອນໄດ້ຮັບຄວາມອຸ່ນອັນ ເໝາະສົມຈຶ່ງປ່ຽນເປັນໄກ່ນ້ອຍ, ແຕ່ຄວາມອຸ່ນບໍ່ສາມາດເຮັດໃຫ້ ກ້ອນຫີນກາຍເປັນໄກ່ນ້ອຍໄດ້, ເພາະວ່າ ມູນຖານຂອງສອງສິ່ງ ນີ້ຕ່າງກັນ.

«ວ່າດ້ວຍຄວາມຂັດແຍ້ງ» (ເດືອນ ໘-໑໙໓໗)

ປັດຊະຍາຂອງລັດທິມາກຖືວ່າ ກົດເກນແຫ່ງຄວາມເປັນ ເອກະພາບຂອງດ້ານກົງກັນຂ້າມແມ່ນກົດເກນຕົ້ນຕໍຂອງຈັກກະ

ວານ. ບໍ່ວ່າໃນໂລກທຳມະຊາດ ໃນສັງຄົມມະນຸດຫຼືໃນແນວຄິດ ຂອງຄົນທັງຫຼາຍ, ກົດເກນອັນນີ້ ລ້ວນແຕ່ມີຢູ່ທົ່ວໄປ. ດ້ານກົງ ກັນຂ້າມທີ່ຂັດແຍ້ງກັນນັ້ນທັງເປັນເອກະພາບກັນ ທັງຕໍ່ສູ້ກັນ, ດ້ວຍເຫດນັ້ນ ຈຶ່ງຊຸກຍູ້ໃຫ້ວັດຖຸເຫດການເຄື່ອນໄຫວແລະປ່ຽນ ແປງ. ຄວາມຂັດແຍ້ງມີຢູ່ທົ່ວໄປ, ແຕ່ວ່າ ຍ້ອນລັກສະນະຂອງ ວັດຖຸເຫດການຕ່າງກັນ, ລັກສະນະຂອງຄວາມຂັດແຍ້ງກໍ່ຕ່າງ ກັນ. ເວົ້າສຳລັບວັດຖຸເຫດການຕົວຈິງອັນໃດອັນໜຶ່ງແລ້ວ, ຄວາມເປັນເອກະພາບຂອງດ້ານກົງກັນຂ້າມນັ້ນ ເປັນສິ່ງທີ່ມີ ເງື່ອນໄຂ ເປັນຢູ່ຊົ່ວຄາວແລະເປັນໄລຍະຜ່ານ, ດັ່ງນັ້ນ ຈຶ່ງ ແມ່ນສິ່ງສຳພັດ, ສ່ວນການຕໍ່ສູ້ຂອງດ້ານກົງກັນຂ້າມນັ້ນແມ່ນ ສິ່ງສຳບູນ.

«ບັນຫາກ່ຽວກັບການແກ້ໄຂຄວາມຂັດແຍ້ງພາຍໃນ ປະຊາຊົນຢ່າງຖືກຕ້ອງ» (ວັນທີ່ ໒໗-໒-໑໙໕໗)

ວິທີຈຳແນກກໍ່ແມ່ນວິທີສັດຈະວິພາກ. ທີ່ເອີ້ນວ່າຈຳແນກ ນັ້ນ ກໍ່ແມ່ນຈຳແນກຄວາມຂັດແຍ້ງຂອງວັດຖຸເຫດການ. ບໍ່ເຂົ້າ

ໃຈແຈ້ງຕໍ່ຊີວິດການເປັນຢູ່, ບໍ່ເຂົ້າໃຈຢ່າງແທ້ຈິງຕໍ່ຄວາມຂັດແຍ້ງທີ່ເວົ້ານັ້ນແລ້ວ ກໍ່ບໍ່ອາດມີການຈຳແນກທີ່ຖືກຈຸດໄດ້.

«ຄຳປາໄສໃນກອງປະຊຸມວຽກງານໂຄສະນາທົ່ວປະເທດຂອງພັກກອມມູນິດຈີນ» (ວັນທີ່ ໑໒-໓-໑໙໕໗)

ເລນິນເວົ້າວ່າ ການຈຳແນກສະພາບຕົວຈິງຢ່າງເປັນຕົວຈິງນັ້ນ ແມ່ນ "ສິ່ງທີ່ເປັນທາດແທ້ທີ່ສຸດຂອງລັດທິມາກ ແມ່ນວິນຍານທີ່ມີຊີວິດຂອງລັດທິມາກ". ສະຫາຍພວກເຮົາຫຼາຍຄົນຂາດຫົວຄິດໃນການຈຳແນກ, ບໍ່ຍອມຈຳແນກຄົ້ນຄວ້າວັດຖຸເຫດການອັນສັບສົນຢ່າງເລິກຊຶ້ງຫຼາຍຫຼິບຫຼາຍຕ່າວ, ແຕ່ກັບມັກເຮັດຂໍ້ສະຫຼຸບຢ່າງງ່າຍໆແບບຢືນຢັນຢ່າງສຳບູນຫຼືປະຕິເສດຢ່າງສຳບູນ. ...ຕໍ່ໄປຄວນປ່ຽນແປງສະພາບອັນນີ້.

«ການຮ່ຳຮຽນແລະສະຖານະການ» (ວັນທີ່ ໑໒-໔-໑໙໔໔)

ວິທີສັງເກດບັນຫາຂອງສະຫາຍເຫຼົ່ານີ້ບໍ່ຖືກຕ້ອງ. ພວກເຂົາເຈົ້າບໍ່ເບິ່ງດ້ານທາດແທ້ ດ້ານກະແສສຳຄັນຂອງບັນຫາ,

ພັດເນັ້ນໜັກສິ່ງທີ່ບໍ່ແມ່ນດ້ານທາດແທ້ ບໍ່ແມ່ນດ້ານກະແສສຳຄັນ. ຄວນຊີ້ໃຫ້ເຫັນວ່າ ຈະເບິ່ງຂ້າມບັນຫາທີ່ບໍ່ແມ່ນດ້ານທາດແທ້ແລະບໍ່ແມ່ນດ້ານກະແສສຳຄັນນັ້ນບໍ່ໄດ້, ຕ້ອງແກ້ໄຂມັນໃຫ້ຕົກໄປແຕ່ລະບັນຫາ. ແຕ່ວ່າ ບໍ່ຄວນຖືສິ່ງເຫຼົ່ານີ້ເປັນທາດແທ້ແລະກະແສສຳຄັນ ຈົນຫຼົງທິດທາງຂອງຕົນໄປ.

«ບັນຫາກ່ຽວກັບການຈັດຕັ້ງກະເສດຕະກຳໃຫ້ເປັນແບບສະຫະກອນ» (ວັນທີ່ ໓໑-໗-໑໙໕໕)

ເລື່ອງໃນໂລກນີ້ສັບສົນ ແລະຊີ້ຂາດໂດຍປັດໃຈດ້ານຕ່າງໆ. ການເບິ່ງບັນຫາຕ້ອງເບິ່ງຫຼາຍດ້ານ, ບໍ່ຄວນເບິ່ງພຽງແຕ່ດ້ານດຽວ.

« ກ່ຽວກັບການເຈລະຈາທີ່ເມືອງຈຸງກິງ » (ວັນທີ່ ໑໗-໑໐-໑໙໔໕)

ມີແຕ່ພວກທີ່ເບິ່ງບັນຫາຢ່າງໃນຕົວ ຢ່າງດ້ານດຽວແລະຢ່າງຜິວເຜີນທໍ່ນັ້ນ ໄປຮອດບ່ອນໃດ ບໍ່ຄຳນຶງເຖິງສະພາບການ

ຂອງສິ່ງແວດລ້ອມ, ບໍ່ພິຈາລະນາເຖິງສ່ວນທັງໝົດຂອງເລື່ອງ (ປະວັດແລະພາວະປັດຈຸບັນທັງໝົດຂອງເລື່ອງ) ແລະບໍ່ເຕາະຕ້ອງເຖິງທາດແທ້ຂອງເລື່ອງ (ລັກສະນະຂອງເລື່ອງແລະຄວາມພົວພັນພາຍໃນລະຫວ່າງເລື່ອງນີ້ກັບເລື່ອງອື່ນ) ກໍ່ອອກຄຳສັ່ງບັນຊາໂລດໂດຍສຳຄັນວ່າຕົນຖືກສະເໝີ, ຄົນແນວນີ້ບໍ່ມີເລີຍທີ່ຈະບໍ່ພະລາດລົ້ມ.

«ວ່າດ້ວຍພາກປະຕິບັດ» (ເດືອນ ໗-໑໙໓໗)

ການຄົ້ນຄວ້າບັນຫາ, ຕ້ອງຫຼີກເວັ້ນລັກສະນະໃນຕົວ ລັກສະນະດ້ານດຽວແລະລັກສະນະຜິວເຜີນ. ທີ່ເອີ້ນວ່າລັກສະນະໃນຕົວນັ້ນ ແມ່ນບໍ່ຮູ້ຈັກເບິ່ງບັນຫາຢ່າງນອກຕົວ, ໝາຍຄວາມວ່າ ບໍ່ຮູ້ຈັກໃຊ້ທັດສະນະວັດຖຸນິຍົມໄປເບິ່ງບັນຫາ. ສຳລັບຂໍ້ນີ້ເຮົາໄດ້ເວົ້າມາແລ້ວໃນບົດເລື່ອງ "ວ່າດ້ວຍພາກປະຕິບັດ". ທີ່ເອີ້ນວ່າລັກສະນະດ້ານດຽວນັ້ນ ແມ່ນບໍ່ຮູ້ຈັກເບິ່ງບັນຫາຢ່າງຮອບດ້ານ. ...ຫຼືເອີ້ນວ່າເຫັນແຕ່ພາກສ່ວນ, ບໍ່ເຫັນສ່ວນທັງໝົດ, ເຫັນແຕ່ຕົ້ນໄມ້, ບໍ່ເຫັນປ່າ. ເມື່ອເປັນແນວນີ້ ແມ່ນ

ບໍ່ສາມາດຊອກຫາວິທີແກ້ໄຂຄວາມຂັດແຍ້ງອອກມາໄດ້, ບໍ່ສາມາດເຮັດພາລະໜ້າທີ່ປະຕິວັດໃຫ້ຫຼ້ອນໄດ້, ບໍ່ສາມາດເຮັດວຽກງານທີ່ໄດ້ຮັບມອບໝາຍໃຫ້ດີໄດ້ ແລະບໍ່ສາມາດຂະຫຍາຍການຕໍ່ສູ້ແນວຄິດພາຍໃນພັກຢ່າງຖືກຕ້ອງໄດ້. ຊຸນຈື້ໄດ້ເວົ້າເຖິງການທະຫານວ່າ: "ຮູ້ເຂົາຮູ້ເຮົາ ລົບຮ້ອຍເທື່ອບໍ່ເສຍໄຊ." ທີ່ເຂົາເວົ້ານັ້ນ ແມ່ນຊີ້ເຖິງສອງຝ່າຍທີ່ສູ້ລົບກັນ. ຫວຸ້ຍເຈິງຄົນສະໄໝລາຊະວົງຖັງເຄີຍເວົ້າວ່າ: "ຟັງຫຼາຍດ້ານແຈ້ງສະຫວ່າງ, ເຊື່ອດ້ານດຽວມືດມົວ." ເຂົາກໍ່ເຂົ້າໃຈວ່າລັກສະນະດ້ານດຽວນັ້ນບໍ່ຖືກ. ແຕ່ສະຫາຍຂອງພວກເຮົາເບິ່ງບັນຫາ ມັກມີລັກສະນະດ້ານດຽວ, ຄົນແນວນີ້ກໍ່ມັກຈະຫົວຕຳຝາຢູ່ສະເໝີ. ...ເລນິນເວົ້າວ່າ: "ການທີ່ຈະເຂົ້າໃຈເປົ້າໝາຍຢ່າງແທ້ຈິງ ກໍ່ຕ້ອງກຳແລະຄົ້ນຄວ້າທຸກດ້ານ ທຸກຄວາມພົວພັນແລະ 'ສື່ສຳພັນ' ຂອງມັນ. ພວກເຮົາບໍ່ສາມາດເຮັດເຖິງຂໍ້ນີ້ໃຫ້ເຕັມເມັດເຕັມໜ່ວຍໄດ້ຢ່າງເດັດຂາດ, ແຕ່ຕ້ອງໃຫ້ມີລັກສະນະຮອບດ້ານ ຈຶ່ງຈະເຮັດໃຫ້ພວກເຮົາປ້ອງກັນບໍ່ໃຫ້ມີຄວາມຜິດພາດແລະສະພາບ

ແຂງກະດ້າງ." ພວກເຮົາຄວນຈື່ຈຳຄວາມເວົ້າຂອງທ່ານ. ລັກສະນະຜິວເຜີນນັ້ນ ແມ່ນບໍ່ເບິ່ງຈຸດພິເສດແຫ່ງສ່ວນທັງໝົດຂອງຄວາມຂັດແຍ້ງແລະຈຸດພິເສດແຫ່ງດ້ານຕ່າງໆຂອງຄວາມຂັດແຍ້ງ, ປະຕິເສດຄວາມຈຳເປັນໃນການເຂົ້າເລິກພາຍໃນວັດຖຸເຫດການໄປຄົ້ນຄວ້າຈຸດພິເສດຂອງຄວາມຂັດແຍ້ງຢ່າງລະອຽດຖີ່ຖ້ວນ, ພຽງແຕ່ຢືນເບິ່ງຢູ່ໄກໆ ພໍມອງເຫັນຮູບຊົງຂອງຄວາມຂັດແຍ້ງພໍປະມານຢ່າງເຜີນໆ ກໍ່ຢາກລົງມືແກ້ໄຂຄວາມຂັດແຍ້ງ (ຕອບບັນຫາ ແກ້ໄຂການຜິດຖຽງ ຊຳຮະວຽກງານແລະບັນຊາການສູ້ລົບ). ວິທີເຮັດແນວນີ້ ບໍ່ມີຈັກເທື່ອທີ່ຈະບໍ່ເກີດເລື່ອງຫຍຸ້ງ. ...ລັກສະນະດ້ານດຽວ ລັກສະນະຜິວເຜີນກໍ່ແມ່ນລັກສະນະໃນຕົວ, ເພາະວ່າ ວັດຖຸເຫດການນອກຕົວທັງໝົດ ທີ່ຈິງມີການພົວພັນຊຶ່ງກັນແລະກັນ ແລະມີກົດເກນພາຍໃນຂອງມັນ, ແຕ່ຄົນເຮົາບໍ່ໄປສ່ອງແສງສະພາບການເຫຼົ່ານີ້ຕາມຄວາມເປັນຈິງ, ພັດເບິ່ງພວກມັນແຕ່ດ້ານດຽວຫຼືຜິວເຜີນ, ບໍ່ເຂົ້າໃຈການພົວພັນຊຶ່ງກັນແລະກັນຂອງວັດຖຸເຫດການ, ບໍ່ເຂົ້າໃຈກົດ

ເກນພາຍໃນຂອງວັດຖຸເຫດການ, ສະນັ້ນ ວິທີແນວນີ້ແມ່ນວິທີລັດທິໃນຕົວ.

«ວ່າດ້ວຍຄວາມຂັດແຍ້ງ» (ເດືອນ ៥-໑໙໓໗)

ລັກສະນະດ້ານດຽວແມ່ນຄວາມເປັນແບບສຳບູນທາງແນວຄິດ, ແມ່ນການເບິ່ງບັນຫາຢ່າງອະພິປັດຊະຍາ. ການເບິ່ງວຽກງານຂອງພວກເຮົາດ້ວຍທັດສະນະທີ່ຢືນຢັນທຸກຢ່າງຫຼືປະຕິເສດທຸກຢ່າງນັ້ນ ລ້ວນແຕ່ແມ່ນລັກສະນະດ້ານດຽວ. ...ຢືນຢັນທັງໝົດ ກໍ່ແມ່ນເຫັນແຕ່ດ້ານດີ, ບໍ່ເຫັນດ້ານບໍ່ດີ, ເອົາແຕ່ຍ້ອງຍໍ, ຕຳນິບໍ່ໄດ້. ການເວົ້າວ່າວຽກງານຂອງພວກເຮົາດີດີໝົດທຸກຢ່າງນັ້ນ ແມ່ນບໍ່ຖືກກັບຄວາມເປັນຈິງ. ບໍ່ແມ່ນດີໝົດທຸກຢ່າງ, ຍັງມີຂໍ້ບົກພ່ອງແລະຄວາມຜິດພາດຢູ່. ແຕ່ວ່າ ກໍ່ບໍ່ແມ່ນບໍ່ດີໝົດທຸກຢ່າງ, ອັນນີ້ກໍ່ບໍ່ຖືກກັບຄວາມເປັນຈິງຄືກັນ. ຕ້ອງມີການຈຳແນກ. ການປະຕິເສດທຸກຢ່າງນັ້ນ ກໍ່ແມ່ນລົງຄວາມເຫັນຢ່າງບໍ່ມີການຈຳແນກວ່າ ເລື່ອງທັງໝົດລ້ວນແຕ່ເຮັດບໍ່ໄດ້ດີ, ການສ້າງສາສັງຄົມນິຍົມຊຶ່ງເປັນພາລະກິດອັນຍິ່ງ

ໃຫຽ່ແລະເປັນການຕໍ່ສູ້ອັນຍິ່ງໃຫຽ່ທີ່ພົນລະເມືອງຫຼາຍຮ້ອຍລ້ານຄົນດຳເນີນນີ້ ຄືກັບວ່າບໍ່ມີບ່ອນດີອັນໃດທີ່ເປັນຕາເວົ້າ, ອັນໃດກໍ່ບໍ່ດີໄປໝົດ. ບັນດາຄົນທີ່ມີທັດສະນະແນວນີ້, ແມ່ນວ່າຍັງຕ່າງກັນກັບພວກທີ່ມີໃຈເປັນສັດຕູກັບລະບອບສັງຄົມນິຍົມເຫຼົ່ານັ້ນກໍ່ຕາມ, ແຕ່ທັດສະນະແນວນີ້ແມ່ນຜິດພາດຫຼາຍ, ມີຜົນຮ້າຍຫຼາຍ, ມັນມີແຕ່ເຮັດໃຫ້ຄົນເສຽຄວາມໝັ້ນໃຈ. ການເບິ່ງວຽກງານຂອງພວກເຮົາ, ບໍ່ວ່າຈະໃຊ້ທັດສະນະທີ່ຢືນຢັນທຸກຢ່າງຫຼືທັດສະນະທີ່ປະຕິເສດທຸກຢ່າງກໍ່ຕາມ ລ້ວນແຕ່ຜິດພາດ.

«ຄຳປາໄສໃນກອງປະຊຸມວຽກງານໂຄສະນາທົ່ວປະເທດຂອງພັກກອມມູນິດຈີນ» (ວັນທີ່ ໑໒-໓-໑໙໕໗)

ຊາວລັດທິມາກເບິ່ງບັນຫາ ບໍ່ພຽງແຕ່ຕ້ອງເບິ່ງພາກສ່ວນທໍ່ນັ້ນ ຍັງຕ້ອງເບິ່ງສ່ວນທັງໝົດ. ກົບຕົວໜຶ່ງນັ່ງຢູ່ໃນນ້ຳສ້າງເວົ້າວ່າ: "ຟ້າໃຫຽ່ທໍ່ຂອບນ້ຳສ້າງ." ອັນນີ້ບໍ່ຖືກ, ເພາະວ່າ ຟ້າໃຫຽ່ບໍ່ພຽງແຕ່ທໍ່ຂອບນ້ຳສ້າງ. ຖ້າມັນເວົ້າວ່າ: "ພາກສ່ວນໜຶ່ງ

ຂອງຟ້າໃຫຽ່ທໍ່ຂອບນ້ຳສ້າງ." ອັນນີ້ຖືກ, ເພາະວ່າ ຖືກກັບຄວາມເປັນຈິງ.

«ວ່າດ້ວຍຍຸດໂທບາຍຄັດຄ້ານຈັກກະພັດນິຍົມຍີ່ປຸ່ນ» (ວັນທີ່ ໒໗-໑໒-໑໙໓໕)

ພວກເຮົາຕ້ອງຮຽນຮູ້ການເບິ່ງບັນຫາຢ່າງຮອບດ້ານ, ບໍ່ພຽງແຕ່ຕ້ອງເບິ່ງດ້ານໜ້າຂອງວັດຖຸເຫດການທໍ່ນັ້ນ, ຍັງຕ້ອງເບິ່ງດ້ານກົງກັນຂ້າມຂອງມັນອີກດ້ວຍ. ພາຍໃຕ້ເງື່ອນໄຂອັນໃດອັນໜຶ່ງ, ສິ່ງທີ່ຊົ່ວອາດຈະພາໃຫ້ເກີດຜົນດີ, ສິ່ງທີ່ດີກໍ່ອາດຈະພາໃຫ້ເກີດຜົນຊົ່ວໄດ້.

«ບັນຫາກ່ຽວກັບການແກ້ໄຂຄວາມຂັດແຍ້ງພາຍໃນປະຊາຊົນຢ່າງຖືກຕ້ອງ» (ວັນທີ່ ໒໗-໒-໑໙໕໗)

ພວກເຮົາຮັບຮູ້ວ່າ ໃນການຂະຫຽາຍຕົວທົ່ວໄປຂອງປະວັດສາດ ແມ່ນສິ່ງທີ່ເປັນວັດຖຸກຳນົດສິ່ງທີ່ເປັນຈິດໃຈ, ແມ່ນການດຳລົງຢູ່ທາງສັງຄົມກຳນົດຈິດສຳນຶກທາງສັງຄົມ; ແຕ່ວ່າ ພ້ອມກັນນັ້ນກໍ່ຮັບຮູ້ແລະຕ້ອງຮັບຮູ້ບົດບາດສະທ້ອນຄືນຂອງສິ່ງທີ່

ເປັນຈິດໃຈ, ບົດບາດສະທ້ອນຄືນຂອງຈິດສຳນຶກທາງສັງຄົມທີ່ມີຕໍ່ການດຳລົງຢູ່ທາງສັງຄົມ ແລະບົດບາດສະທ້ອນຄືນຂອງໂຄງສ້າງຊັ້ນເທິງທີ່ມີຕໍ່ພື້ນຖານເສດຖະກິດ. ອັນນີ້ບໍ່ແມ່ນຝ່າຝືນທິດສະດີວັດຖຸນິຍົມ ຫາກແມ່ນໄດ້ຫຼີກເວັ້ນທິດສະດີວັດຖຸນິຍົມກົນຈັກ ແລະໄດ້ຢຶດໝັ້ນໃນທິດສະດີວັດຖຸນິຍົມສັດຈະວິພາກນັ້ນເອງ.

«ວ່າດ້ວຍຄວາມຂັດແຍ້ງ» (ເດືອນ ໘-໑໙໓໗)

ຜູ້ຊີ້ນຳສົງຄາມ ບໍ່ສາມາດຈະຫວັງເອົາໄຊຊະນະໃນສົງຄາມໂດຍລື່ນກາຍຂອບເຂດຈຳກັດທີ່ເງື່ອນໄຂນອກຕົວອຳນວຍໃຫ້, ແຕ່ສາມາດແລະຕ້ອງພະຍາຍາມຍາດເອົາໄຊຊະນະໃນສົງຄາມຢ່າງຂະຫຽນຂັນແຂງພາຍໃນຂອບເຂດ ທີ່ເງື່ອນໄຂນອກຕົວອຳນວຍໃຫ້. ເວທີການເຄື່ອນໄຫວຂອງຜູ້ບັນຊາໃນສົງຄາມນັ້ນຕ້ອງສ້າງຢູ່ເທິງເງື່ອນໄຂນອກຕົວທີ່ອຳນວຍໃຫ້, ແຕ່ວ່າ ອາໄສເວທີນີ້ ພວກເຂົາເຈົ້າສາມາດກຳກັບໃຫ້ສະແດງລະຄອນທີ່ມີ

ຊີວິດຊີວາ ອົງອາດສະຫງ່າຜ່າເຜີຍຫຼາຍບົດຫຼາຍເລື່ອງໄດ້.

«ວ່າດ້ວຍສົງຄາມຍືດເຍື້ອຍາວນານ» (ເດືອນ ໕-໑໙໓໘)

ແນວຄິດຂອງຄົນທັງຫຼາຍຕ້ອງເຂົ້າກັບສະພາບການທີ່ໄດ້ປ່ຽນແປງໄປແລ້ວ. ແນ່ນອນ ຜູ້ໃດກໍ່ຕາມຈະຄິດທົ່ວທີບທົ່ວແດນຢ່າງບໍ່ມີຫຼັກຖານບໍ່ໄດ້, ຈະວາງແຜນການການກະທຳຂອງຕົນລື່ນກາຍເງື່ອນໄຂທີ່ສະພາບການນອກຕົວອຳນວຍໃຫ້ນັ້ນບໍ່ໄດ້, ຢ່າຂືນໄປເຮັດເລື່ອງທີ່ເຮັດບໍ່ໄດ້ແທ້. ແຕ່ວ່າ ບັນຫາໃນປັດຈຸບັນນີ້ ຍັງແມ່ນແນວຄິດນິຍົມອັນເກົ່າຫງ່ຽງຂວາເປັນມານຂັດຂວາງຢູ່ຫຼາຍດ້ານ, ເຮັດໃຫ້ວຽກງານຫຼາຍດ້ານບໍ່ສາມາດເຂົ້າກັບການຂະຫຍາຍຕົວຂອງສະພາບການນອກຕົວ. ບັນຫາໃນປັດຈຸບັນນີ້ ແມ່ນເລື່ອງຊຶ່ງທີ່ຈິງແລ້ວ ເມື່ອໃຊ້ຄວາມພະຍາຍາມກໍ່ສາມາດເຮັດໄດ້ນັ້ນ ພັດມີຫຼາຍຄົນເຫັນວ່າເຮັດບໍ່ໄດ້.

ຄຳນຳຂອງບົດຄວາມເລື່ອງ «ກະແສສູງສັງຄົມນິຍົມໃນຊົນນະບົດຈີນ» (ວັນທີ ໒໗-໑໒-໑໙໕໕)

ບໍ່ວ່າເລື່ອງໃດ ກໍ່ຄວນໃຊ້ສະໝອງຄຶດໃຫ້ດີ. ໄທເຮົາເຄີຍເວົ້າວ່າ: "ຫງຸນຄື້ອສິນ ກິນກໍ່ອອກ." ໝາຍຄວາມວ່າ ຄຶດຫຼາຍກໍ່ເກີດສະຕິປັນຍາ. ຢາກລົບລ້າງລັກສະນະຫຼັບຫູຫຼັບຕາອັນໜາແໜ້ນພາຍໃນພັກຂອງພວກເຮົາ, ຕ້ອງສົ່ງເສີມການຄຶດເຄືອງ, ຮຽນຮູ້ວິທີຈຳແນກວັດຖຸເຫດການ, ປູກຝັງນິດໄສໃນການຈຳແນກ.

«ການຮ່ຳຮຽນແລະສະຖານະການ» (ວັນທີ ໑໒-໔-໑໙໔໔)

ຂະບວນການໃດໆ ຖ້າມີຄວາມຂັດແຍ້ງຫຼາຍອັນ, ໃນຄວາມຂັດແຍ້ງເຫຼົ່ານັ້ນ ແນ່ນອນ ຕ້ອງມີອັນໜຶ່ງເປັນສຳຄັນ, ມີບົດບາດນຳພາແລະຊີ້ຂາດ, ສ່ວນຄວາມຂັດແຍ້ງອື່ນໆແມ່ນຢູ່ໃນຖານະສຳຮອງແລະຂຶ້ນກັບ. ດ້ວຍເຫດນີ້ ເມື່ອຄົ້ນຄວ້າຂະບວນການໃດໆ, ຖ້າເປັນຂະບວນການສັບສົນທີ່ມີຄວາມຂັດແຍ້ງແຕ່ສອງອັນຂຶ້ນໄປ ກໍ່ຕ້ອງອອກແຮງສຸດຂີດໄປຊອກຫາຄວາມຂັດ

ແຍ້ງສຳຄັນຂອງມັນອອກມາ. ເມື່ອກຳຄວາມຂັດແຍ້ງສຳຄັນນີ້ໄດ້ແລ້ວ, ບັນຫາທັງໝົດກໍ່ແກ້ໄຂໄດ້ຢ່າງງ່າຍໆ.

«ວ່າດ້ວຍຄວາມຂັດແຍ້ງ» (ເດືອນ ໘-໑໙໓໗)

ໃນສອງດ້ານທີ່ຂັດແຍ້ງກັນ, ຍ່ອມມີດ້ານໜຶ່ງເປັນດ້ານສຳຄັນ, ອີກດ້ານໜຶ່ງເປັນດ້ານສຳຮອງ. ດ້ານສຳຄັນ ຄື ທີ່ເອີ້ນວ່າດ້ານທີ່ມີບົດບາດນຳພາໃນຄວາມຂັດແຍ້ງ. ລັກສະນະຂອງວັດຖຸເຫດການ ກຳນົດໂດຍດ້ານສຳຄັນຂອງຄວາມຂັດແຍ້ງທີ່ມີຖານະຄອບງຳເປັນສຳຄັນ.

ແຕ່ວ່າ ສະພາບການນີ້ບໍ່ແມ່ນສິ່ງຕາຍຕົວ, ດ້ານສຳຄັນກັບດ້ານບໍ່ສຳຄັນຂອງຄວາມຂັດແຍ້ງນັ້ນ ປີ້ນປ່ຽນກັນຢູ່, ລັກສະນະຂອງວັດຖຸເຫດການກໍ່ປ່ຽນແປງໄປຕາມ.

«ວ່າດ້ວຍຄວາມຂັດແຍ້ງ» (ເດືອນ ໘-໑໙໓໗)

ພວກເຮົາບໍ່ພຽງແຕ່ຕ້ອງວາງພາລະໜ້າທີ່ອອກທໍ່ນັ້ນ, ຍັງຕ້ອງແກ້ໄຂບັນຫາວິທີການທີ່ຈະເຮັດໃຫ້ພາລະໜ້າທີ່ນັ້ນສຳເລັດ

ດ້ວຍ. ພາລະໜ້າທີ່ຂອງພວກເຮົາຄືຂ້າມນ້ຳ, ແຕ່ຖ້າບໍ່ມີຂົວຫຼືບໍ່ມີເຮືອກໍ່ຂ້າມບໍ່ໄດ້. ຄັນບໍ່ແກ້ໄຂບັນຫາຂົວຫຼືເຮືອ, ການຂ້າມນ້ຳ ກໍ່ເປັນຄຳເວົ້ານ້ຳເຕົ້າເປົ່າ. ຄັນບໍ່ແກ້ໄຂບັນຫາວິທີການ, ພາລະໜ້າທີ່ກໍ່ເປັນການຫຼັບຕາເວົ້າເທົ່ານັ້ນ.

«ເອົາໃຈໃສ່ຊີວິດການເປັນຢູ່ຂອງມວນຊົນ ສົນໃຈນຳວິທີເຮັດວຽກ» (ວັນທີ່ ໒໗-໑-໑໙໓໔)

ໜ້າທີ່ວຽກງານໃດໆກໍ່ຕາມ, ຖ້າບໍ່ມີການຮຽກຮ້ອງໂດຍທົ່ວໄປແລະທົ່ວເຖິງແລ້ວ ກໍ່ບໍ່ສາມາດລະດົມມວນຊົນອັນກວ້າງໃຫຍ່ໃຫ້ປະຕິບັດຕາມໄດ້. ແຕ່ຖ້າພະນັກງານນຳພາຈຳກັດຢູ່ແຕ່ການຮຽກຮ້ອງທົ່ວໄປ ຫາກບໍ່ນຳເອົາວຽກງານທີ່ໄດ້ຮຽກຮ້ອງນັ້ນໄປປະຕິບັດຢ່າງເລິກຊຶ້ງໃນອົງການຈັດຕັ້ງບາງບ່ອນຢ່າງລະອຽດແລະໂດຍກົງ, ບຸກແຕກຈຸດໜຶ່ງ ເພື່ອຮັບເອົາບົດຮຽນ, ແລ້ວໃຊ້ບົດຮຽນນີ້ໄປຊີ້ນຳພະແນກການອື່ນໆແລ້ວ ກໍ່ບໍ່ມີທາງທົດສອບໄດ້ວ່າ ການຮຽກຮ້ອງທົ່ວໄປທີ່ຕົນສະເໜີນັ້ນຖືກຕ້ອງຫຼືບໍ່,

ກໍ່ບໍ່ມີທາງເພີ່ມເນື້ອໃນຂອງການຮຽກຮ້ອງທົ່ວໄປໃຫ້ສົມບູນ, ກໍ່ຈະມີອັນຕະລາຍພາໃຫ້ການຮຽກຮ້ອງທົ່ວໄປບໍ່ປາກົດເປັນຈິງຂຶ້ນໄດ້.

«ບັນຫາບາງຂໍ້ກ່ຽວກັບວິທີນຳພາ» (ວັນທີ່ ໑-໖-໑໙໔໓)

ບໍ່ວ່າພະນັກງານນຳພາຜູ້ໃດ ຖ້າບໍ່ໄດ້ຮັບບົດຮຽນຕົວຈິງຈາກຈຳເພາະບຸກຄົນ ຈຳເພາະກໍລະນີໃນຈຳເພາະພະແນກການຂັ້ນລຸ່ມແລ້ວ ກໍ່ບໍ່ສາມາດຊີ້ນຳທຸກພະແນກການຢ່າງກວ້າງຂວາງໄດ້. ວິທີນີ້ຕ້ອງສົ່ງເສີມຢ່າງທົ່ວເຖິງ ເພື່ອເຮັດໃຫ້ພະນັກງານຜູ້ນຳພາທຸກຂັ້ນສາມາດຮຽນໃຊ້ໃຫ້ເປັນ.

«ບັນຫາບາງຂໍ້ກ່ຽວກັບວິທີນຳພາ» (ວັນທີ່ ໑-໖-໑໙໔໓)

ໃນເຂດໃດເຂດໜຶ່ງບໍ່ຄວນມີວຽກງານໃຈກາງຫຼາຍອັນພ້ອມກັນ, ພາຍໃນເວລາໃດເວລາໜຶ່ງ ວຽກງານໃຈກາງຄວນມີພຽງ

ແຕ່ອັນໜຶ່ງແລະມີວຽກງານອື່ນໆທີ່ເປັນລຳດັບທີສອງ ທີ່ສານປະກອບນຳ. ດັ່ງນັ້ນ ຜູ້ຮັບຜິດຊອບຮວມໃນເຂດໜຶ່ງ ຕ້ອງພິຈາລະນາເຖິງປະວັດການຕໍ່ສູ້ແລະສະພາບແວດລ້ອມການຕໍ່ສູ້ໃນບ່ອນນັ້ນ, ຈັດວາງວຽກງານທຸກຢ່າງໄວ້ໃນຖານະອັນເໝາະສົມ, ບໍ່ແມ່ນຕົນເອງບໍ່ມີແຜນການໃດໆ, ມີແຕ່ເຮັດຕາມຄຳຊີ້ນຳຂອງຂັ້ນເທິງ ສັ່ງເລື່ອງໃດກໍ່ເຮັດເລື່ອງນັ້ນຊຶ່ງໄດ້ເກີດມີ "ວຽກງານໃຈກາງ" ຫຼາຍຢ່າງແລະພາວະທີ່ສົບລະວົນບໍ່ມີລະບຽບ. ອົງການຂັ້ນເທິງກໍ່ບໍ່ຄວນຊີ້ໃຫ້ອົງການຂັ້ນລຸ່ມເຮັດວຽກງານຫຼາຍຢ່າງໃນເວລາດຽວກັນໂດຍບໍ່ຈຳແນກເບົາ ໜັກ ດ່ວນຫຼືບໍ່ດ່ວນຢ່າງບໍ່ມີໃຈກາງ, ຈົນເຮັດໃຫ້ເກີດການສົບລະວົນໃນຈັງຫວະວຽກງານຂອງຂັ້ນລຸ່ມແລະບໍ່ໄດ້ຮັບຜົນຕາມທີ່ກຳນົດໄວ້. ພະນັກງານຜູ້ນຳພາຕ້ອງອີງຕາມເງື່ອນໄຂປະວັດ ແລະເງື່ອນໄຂສະພາບແວດລ້ອມໃນແຕ່ລະເຂດຕົວຈິງ ວາງແຜນການສ່ວນທັງໝົດຢ່າງເປັນເອກະພາບ, ກຳນົດຈຸດໜັກຂອງວຽກງານແລະລະບຽບຂອງວຽກງານໃນແຕ່ລະໄລຍະຢ່າງຖືກຕ້ອງ, ທັງຍຶດ

ໝັ້ນປະຕິບັດຂໍ້ກຳນົດນີ້ຕໍ່ໄປ ແລະຕ້ອງໃຫ້ໄດ້ຮັບຜົນອັນແນ່ນອນ, ອັນນີ້ແມ່ນສິລະປະການນຳພາຊະນິດໜຶ່ງ.

«ບັນຫາບາງຂໍ້ກ່ຽວກັບວິທີນຳພາ» (ວັນທີ່ ໑-໖-໑໙໔໓)

ຕ້ອງກຳລຳດັບບາດກ້າວຂອງວຽກງານຢູ່ທຸກເວລາ, ແລກປ່ຽນບົດຮຽນ ແລະແກ້ໄຂດັດແປງຄວາມຜິດພາດ. ຢ່າລໍຖ້າຫຼາຍເດືອນ ເຄິ່ງປີຫຼືຈົນຮອດໜຶ່ງປີໄປແລ້ວ ຈຶ່ງເປີດປະຊຸມສະຫຼຸບ ຄິດບັນຊີຮວມແລະແກ້ໄຂດັດແປງຮວມບາດດຽວ. ເຮັດແນວນີ້ເສຍຫາຍຫຼາຍໂພດ. ຖ້າແກ້ໄຂດັດແປງໃຫ້ທັນເວລາ, ເສຍຫາຍກໍ່ຈະໜ້ອຍແດ່.

«ກ່ຽວກັບນະໂຍບາຍອຸດສາຫະກຳແລະພານິດຊະກຳ» (ວັນທີ່ ໒໗-໒-໑໙໔໘)

ຢ່າລໍຖ້າໃຫ້ບັນຫາໂຮມເປັນກອງ, ເກີດເລື່ອງຫຍຸ້ງສັບປະ

ປີຂຶ້ນແລ້ວ ຈຶ່ງໄປແກ້ໄຂ. ແນວໃດຜູ້ນຳພາກໍ່ຕ້ອງເດີນຢູ່ໜ້າຂະບວນເຄື່ອນໄຫວ, ຢ່າຕົກຢູ່ທ້າຍຂະບວນ.

ໝາຍເຫດໃນບົດຄວາມເລື່ອງ «ການເໝົາວຽກຕານລະດູການ» (ປີ ໑໙໕໕)

ສິ່ງທີ່ພວກເຮົາຕ້ອງການນັ້ນ ແມ່ນອາລົມຈິດໃຈອັນຟົດຟື້ນແຕ່ທຸ່ນທ່ຽງ, ການເຮັດວຽກຢ່າງຮີບຮ້ອນແຕ່ມີລະບຽບ.

«ບັນ ຫາ ຍຸດ ທະ ສາດ ຂອງ ສົງ ຄາມ ປະ ຕິວັດ ຈີນ» (ເດືອນ ໑໒-໑໙໓໖)

໒໓. ການສຳຫຼວດຄົ້ນຄວ້າ

ຜູ້ເຮັດວຽກພາກຕົວຈິງທຸກຄົນຕ້ອງສຳຫຼວດສະພາບການຈາກຂັ້ນລຸ່ມ. ສຳລັບຜູ້ທີ່ຮູ້ແຕ່ທິດສະດີບໍ່ຮູ້ສະພາບການຕົວຈິງນັ້ນ, ວຽກງານສຳຫຼວດແບບນີ້ແຮ່ງມີຄວາມຈຳເປັນ, ຖ້າບໍ່ດັ່ງນັ້ນ ພວກເຂົາເຈົ້າກໍ່ບໍ່ສາມາດເອົາທິດສະດີປະສານກັບພາກຕົວຈິງໄດ້. "ບໍ່ມີການສຳຫຼວດກໍ່ບໍ່ມີສິດອອກສຽງ", ຄຳເວົ້ານີ້ ເຖິງແມ່ນວ່າເຄີຍຖືກຄົນເຍີ້ຍຫຍັນວ່າເປັນ"ທິດສະດີບົດຮຽນຄັບແຄບ"ກໍ່ຕາມ, ແຕ່ວ່າ ຈົນຮອດດຽວນີ້ເຮົາກໍ່ບໍ່ກິນແໜງ; ບໍ່ພຽງແຕ່ບໍ່ກິນແໜງ, ເຮົາຍັງຄົງຍຶດໝັ້ນວ່າ ບໍ່ມີການສຳຫຼວດບໍ່ອາດມີສິດອອກສຽງໄດ້. ມີຫຼາຍຄົນ"ພໍລົງຈາກລົດ"ກໍ່ຊີຍົງຊີຍາຍເວົ້າພົ້ງໆ, ສະເໜີຄວາມເຫັນ, ຕຳນິອັນນີ້, ຕິຕຽນອັນນັ້ນ, ຄວາມຈິງ ຄົນແບບນີ້ສິບຄົນຕ້ອງປະລາໄຊ

ທັງສິບຄົນ. ເພາະວ່າ ການເວົ້າພົ້ງໆຫຼືການຕຳນິແບບນີ້, ບໍ່ໄດ້ຜ່ານການສຳຫຼວດຢ່າງລະອຽດຖີ່ຖ້ວນ, ພຽງແຕ່ເວົ້າໄປທົ່ວທິບທົ່ວແດນຢ່າງເບົາປັນຍາ. ພັກຂອງພວກເຮົາໄດ້ເສຽປຽບຍ້ອນອັນທີ່ເອີ້ນວ່າ "ມະຫາລາຊະທູດ" ນີ້ນັບບໍ່ຖ້ວນແລ້ວ. ແຕ່ "ມະຫາລາຊະທູດ" ນີ້ຊ້ຳເຫາະໄປທົ່ວຟ້າທົ່ວດິນ, ມີຢູ່ເກືອບທຸກແຫ່ງທຸກຫົນ. ສະຕາລິນເວົ້າຢ່າງຖືກຕ້ອງວ່າ: "ທິດສະດີຫາກບໍ່ປະສານກັບພາກປະຕິບັດໃນການປະຕິວັດ ກໍ່ຈະກາຍເປັນທິດສະດີທີ່ບໍ່ມີເປົ້າໝາຍ." ແນ່ນອນ ຍັງແມ່ນຄວາມຂອງທ່ານເວົ້າຖືກວ່າ: "ພາກປະຕິບັດຫາກບໍ່ເອົາທິດສະດີປະຕິວັດເປັນເຂັມຊີ້ທິດ ກໍ່ຈະກາຍເປັນການປະຕິບັດທີ່ຫຼັບຫູຫຼັບຕາ." ນອກຈາກນັກປະຕິບັດທີ່ຫຼັບຫູຫຼັບຕາ ທີ່ບໍ່ມີອະນາຄົດທີ່ບໍ່ເຫັນກວ້າງມອງໄກແລ້ວ ຈະເອີ້ນວ່າພວກ"ທິດສະດີບົດຮຽນຄັບແຄບ"ບໍ່ໄດ້.

«ຄຳນຳແລະຄຳຕໍ່ທ້າຍຂອງບົດຄວາມເລື່ອງ "ການສຳຫຼວດຊົນນະບົດ"» (ເດືອນ ມ,໔-໑໙໔໑)

ທ່າທີຊະນິດນີ້ແມ່ນທ່າທີທີ່ຊອກຫາສັດຈະຈາກຄວາມເປັນຈິງ. "ຄວາມເປັນຈິງ"ແມ່ນບັນດາວັດຖຸເຫດການທີ່ມີຢູ່ນອກຕົວ, "ສັດຈະ"ແມ່ນການພົວພັນພາຍໃນຂອງວັດຖຸເຫດການນອກຕົວ, ຄື ກົດເກນ, "ຊອກຫາ"ກໍ່ຄືພວກເຮົາໄປຄົ້ນຄວ້າ. ພວກເຮົາຕ້ອງເລີ່ມຈາກສະພາບທີ່ເປັນຈິງທັງໃນ ແລະ ນອກປະເທດ ໃນແລະນອກແຂວງ ໃນແລະນອກເມືອງ ໃນແລະນອກເຂດ, ຖອດເອົາກົດເກນທີ່ມີຢູ່ແຕ່ເດີມ ບໍ່ແມ່ນເສກສັນຂຶ້ນມາ, ໝາຍຄວາມວ່າ ຄົ້ນຄວ້າເອົາຄວາມພົວພັນພາຍໃນຂອງເຫດການທີ່ເກີດຂຶ້ນຢູ່ອ້ອມແອ້ມຕົວເຮົາອອກມາ ເພື່ອເປັນສິ່ງພາທາງແກ່ການກະທຳຂອງພວກເຮົາ. ຖ້າຈະເຮັດແນວນີ້ ກໍ່ຕ້ອງບໍ່ອາໄສຈິນຕະນາການທາງໃນຕົວ, ບໍ່ອາໄສຄວາມເຮັ່ງຮ້ອນຊົ່ວຂະນະ, ບໍ່ອາໄສປຶ້ມຕຳລາຢ່າງຕາຍຕົວ, ແຕ່ອາໄສຄວາມຈິງທີ່ມີຢູ່ນອກຕົວ, ກຳອຸປະກອນຢ່າງລະອຽດ ແລ້ວຖອດເອົາຂໍ້ສະຫຼຸບທີ່ຖືກຕ້ອງອອກມາຈາກອຸປະກອນເຫຼົ່ານີ້ໂດຍ

ຢູ່ໃຕ້ການຊີ້ນຳຂອງຫຼັກທິດສະດີທົ່ວໄປຂອງລັດທິມາກເລນິນ.

«ດັດແປງການຮ່ຳຮຽນຂອງພວກເຮົາ» (ເດືອນ ໕-໑໙໔໑)

"ຫຼັບຕາຈັບນົກຈອກ", "ຕາບອດງົມປາ", ມະລຸ້ມມະລ້ອຍ ບໍ່ຮອບຄອບ, ຄຸຍໂມ້ໂອ້ອວດ, ພໍໃຈແຕ່ຄວາມຮູ້ເຄິ່ງໆກາງໆ ຊຶ່ງເປັນທ່າທຳນອງທີ່ຊົ່ວທີ່ສຸດ ແລະ ຝ່າຝືນກັບຈິດໃຈພື້ນຖານຂອງລັດທິມາກເລນິນຢ່າງສິ້ນເຊີງເຫຼົ່ານີ້ ຍັງຄົງມີຢູ່ໃນໝູ່ສະຫາຍຫຼາຍຄົນໃນພັກຂອງພວກເຮົາ. ມາກ ອັງແກນ ເລນິນແລະສະຕາລິນໄດ້ສັ່ງສອນພວກເຮົາໃຫ້ຄົ້ນຄວ້າສະພາບຢ່າງຈິງຈັງ, ເລີ່ມຈາກສະພາບການອັນແທ້ຈິງນອກຕົວ, ບໍ່ແມ່ນເລີ່ມຈາກຄວາມປາຖະໜາໃນຕົວ; ແຕ່ສະຫາຍພວກເຮົາຫຼາຍຄົນຊ້ຳພັດຝ່າຝືນສັດຈະທຳຂໍ້ນີ້ໂດຍກົງ.

«ດັດແປງການຮ່ຳຮຽນຂອງພວກເຮົາ» (ເດືອນ ໕-໑໙໔໑)

ເຈົ້າບໍ່ສາມາດແກ້ໄຂບັນຫານັ້ນບໍ່? ຄັນຊັ້ນ ເຈົ້າກໍ່ໄປສຳຫຼວດພາວະປັດຈຸບັນແລະປະວັດຂອງບັນຫາອັນນັ້ນສາ! ເມື່ອເຈົ້າໄດ້ສຳຫຼວດຈະແຈ້ງຄັກແນ່ແລ້ວ, ເຈົ້າກໍ່ຈະມີວິທີແກ້ໄຂບັນຫານັ້ນ. ຂໍ້ສະຫຼຸບທັງໝົດເກີດຂຶ້ນໃນບັ້ນປາຍການສຳຫຼວດສະພາບການ, ບໍ່ແມ່ນຢູ່ກ່ອນໜ້າການສຳຫຼວດສະພາບການ. ມີແຕ່ຄົນໂງ່ຈ້າທໍ່ນັ້ນ ຈຶ່ງບໍ່ເຮັດການສຳຫຼວດ, ມີແຕ່ນັ່ງບີບຄັ້ນສະໝອງ"ຄິດຫາວິທີ", "ກະແຜນການ"ຢູ່ແຕ່ເຂົາເຈົ້າຜູ້ດຽວຫຼືຮ່ວມກັບຄົນກຸ່ມໜຶ່ງທີ່ເຂົາເຈົ້າຊັກຊວນມາ. ຕ້ອງຮູ້ວ່າການເຮັດແນວນັ້ນບໍ່ສາມາດຄິດຫາວິທີທີ່ດີອັນໃດແລະກະແຜນການທີ່ດີອັນໃດອອກມາໄດ້ຢ່າງແນ່ນອນ.

«ຄັດຄ້ານລັດທິປຶ້ມຕຳລາ» (ເດືອນ ໕-໑໙໓໐)

ການສຳຫຼວດປຽບຄື"ຖືພາສິບເດືອນ", ການແກ້ໄຂບັນຫາປຽບຄື"ປະສູດໃນມື້ໜຶ່ງ". ການສຳຫຼວດກໍ່ແມ່ນແກ້ໄຂບັນຫາ.

«ຄັດຄ້ານລັດທິປຶ້ມຕຳລາ» (ເດືອນ ໕-໑໙໓໐)

ຄວນໃຊ້ທິດສະດີ ແລະ ວິທີຂອງລັດທິມາກເລນິນສຳຫຼວດ

ແລະຄົ້ນຄວ້າສະພາບແວດລ້ອມຮອບຕົວຢ່າງເປັນລະບົບແລະລະອຽດຖີ່ຖ້ວນ. ບໍ່ແມ່ນອາໄສແຕ່ຄວາມເຮັ່ງຮ້ອນໄປເຮັດວຽກ, ແຕ່ຕ້ອງເຮັດດັ່ງສະຕາລິນໄດ້ເວົ້າມານັ້ນຄື ເອົານ້ຳໃຈທ້າວຫານປະຕິວັດປະສານເຂົ້າກັບຈິດໃຈຕົວຈິງ.

«ດັດແປງການຮ່ຳຮຽນຂອງພວກເຮົາ» (ເດືອນ ໕-໑໙໔໑)

ຢາກເຂົ້າໃຈສະພາບການ ມີແຕ່ວິທີດຽວ ຄື ສຳຫຼວດສັງຄົມ ສຳຫຼວດສະພາບການອັນມີຊີວິດຊີວາຂອງຊົນຊັ້ນຕ່າງໆໃນສັງຄົມ. ເວົ້າສຳລັບຜູ້ເຮັດວຽກຊີ້ນຳແລ້ວ, ວິທີການພື້ນຖານທີ່ສຸດເພື່ອເຂົ້າໃຈສະພາບການໄດ້ ແມ່ນເລືອກຕົວເມືອງ ໒–໓ ເມືອງແລະໝູ່ບ້ານ ໒–໓ ບ່ອນຢ່າງມີແຜນການ, ແລ້ວດຳເນີນການສຳຫຼວດອັນຖີ່ຖ້ວນຫຼາຍເທື່ອດ້ວຍທັດສະນະພື້ນຖານລັດທິມາກ ຄື ວິທີຈຳແນກຊົນຊັ້ນ.

«ຄຳນຳແລະຄຳຕໍ່ທ້າຍຂອງບົດຄວາມເລື່ອງ "ການສຳຫຼວດຊົນນະບົດ"» (ເດືອນ ໓,໔-໑໙໔໑)

ເປີດປະຊຸມສຳຫຼວດແຕ່ລະເທື່ອບໍ່ຕ້ອງມີຄົນຫຼາຍ, ພຽງ ໓–໕ ຄົນຫຼື ໗–໘ ຄົນກໍ່ພໍ. ຕ້ອງໃຫ້ມີເວລາພໍ, ຕ້ອງມີຫົວຂໍ້ສຳຫຼວດ, ຍັງຕ້ອງປາກຖາມມືຈົດເອງ, ທັງອະພິປາຍກັບຜູ້ມາປະຊຸມ. ສະນັ້ນ ຖ້າບໍ່ມີນ້ຳໃຈອັນເຕັມໄປດ້ວຍຄວາມທ້າວຫັນເຮັ່ງຮ້ອນ, ບໍ່ມີຄວາມຕັດສິນໃຈລົດສາຍຕາລົງສູ່ຂັ້ນລຸ່ມ, ບໍ່ມີຄວາມປາຖະໜາທີ່ສະແຫວງຫາຄວາມຮູ້, ບໍ່ມີນ້ຳໃຈທີ່ປະຖິ້ມທ່າທາງວາງຕົວອັນເປັນຕາໜ່າຍແລະບໍ່ຍອມເປັນລູກສິດນ້ອຍແລ້ວ ກໍ່ຍ່ອມຈະເຮັດບໍ່ໄດ້ຫຼືເຮັດບໍ່ໄດ້ດີຢ່າງແນ່ນອນ.

«ຄຳນຳແລະຄຳຕໍ່ທ້າຍຂອງບົດຄວາມເລື່ອງ "ການສຳຫຼວດຊົນນະບົດ"» (ເດືອນ ໓,໔-໑໙໔໑)

ການຈັດວາງກຳລັງອັນຖືກຕ້ອງຂອງຜູ້ບັນຊາມາຈາກການຕັດສິນໃຈອັນຖືກຕ້ອງ, ການຕັດສິນໃຈອັນຖືກຕ້ອງມາຈາກການວິນິດໄສອັນຖືກຕ້ອງ, ການວິນິດໄສອັນຖືກຕ້ອງມາຈາກການສືບຂ່າວອັນຖີ່ຖ້ວນແລະຈຳເປັນ ແລະການຮ່ນຕອງຫຼັກ

ຖານຕ່າງໆທີ່ສືບມາໄດ້ຢ່າງຕໍ່ເນື່ອງສຳພັນກັນ. ຜູ້ບັນຊາຕ້ອງໃຊ້ວິທີການສືບຂ່າວອັນຈຳເປັນ ແລະ ເທົ່າທີ່ຈະເຮັດໄດ້ທັງໝົດ, ເອົາຫຼັກຖານຕ່າງໆ ກ່ຽວກັບສະພາບການຝ່າຍສັດຕູທີ່ສືບມາໄດ້ນັ້ນ ມາຮິ່ນຕອງຢ່າງຖິ້ມເຫຼື້ອເອົາແຍ້, ຖິ້ມທຽມເອົາແທ້, ຈາກພີ້ເຖິງພຸ້ນ, ຈາກນອກເຖິງໃນ, ແລ້ວເອົາສະພາບການຝ່າຍຕົນຕື່ມເຂົ້າໃສ່, ຄົ້ນຄວ້າການຊັ່ງຊາແລະການພົວພັນກັນລະຫວ່າງສອງຝ່າຍ, ແລ້ວປະກອບເປັນການວິນິດໄສ, ຕັດສິນຕົກລົງໃຈ, ເຮັດເປັນແຜນການຂຶ້ນ,—ອັນນີ້ແມ່ນຂະບວນການຮັບຮູ້ສະພາບການທັງຂະບວນຂອງນັກການທະຫານໃນເວລາກ່ອນທີ່ຈະວາງແຜນການຍຸດທະສາດ ແຜນການບັ້ນລົບຫຼືແຜນການສູ້ລົບແຕ່ລະເທື່ອ.

«ບັນ ຫາ ຍຸດ ທະ ສາດ ຂອງ ສົງ ຄາມ ປະ ຕິວັດ ຈີນ»
(ເດືອນ ໑໒-໑໙໓໖)

໒໔. ການແກ້ໄຂດັດແປງແນວຄິດທີ່ຜິດ

ເຖິງວ່າວຽກງານຂອງພວກເຮົາໄດ້ຮັບຜົນສຳເລັດອັນຍິ່ງໃຫຍ່ທີ່ສຸດກໍ່ຕາມ, ກໍ່ບໍ່ມີເຫດຜົນອັນໃດທີ່ຄວນອວດອົ່ງທະນົງຕົວ. ຄວາມຖ່ອມຕົວພາໃຫ້ຄົນກ້າວໜ້າ, ຄວາມອວດອົ່ງພາໃຫ້ຄົນຫຼ້າຫຼັງ, ພວກເຮົາຄວນຈື່ຈຳສັດຈະທຳນີ້ໄວ້ຕະຫຼອດການ.

«ຄຳປາໄສເປີດກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດເທື່ອທີ່ ໘ ຂອງພັກກອມມູນິດຈີນ» (ວັນທີ ໑໕-໙-໑໙໕໖)

ຍ້ອນໄຊຊະນະ, ອາລົມອວດອົ່ງ ອາລົມທີ່ຖືວ່າຕົນເປັນຜູ້ມີຄຸນງາມຄວາມດີ ອາລົມທີ່ຢຸດຊະງັກບໍ່ພະຍາຍາມກ້າວໜ້າ ອາລົມມັກແຕ່ສະໜຸກສະບາຍບໍ່ຍອມມີ ຊີວິດເປັນຢູ່ຢ່າງທຸກຍາກ

ລຳບາກອີກ ອາດຈະເກີດຂຶ້ນຢູ່ພາຍໃນພັກ. ຍ້ອນໄຊຊະນະ, ປະຊາຊົນຂອບໃຈພວກເຮົາ, ຊົນຊັ້ນເຈົ້າທຶນກໍ່ຈະອອກມາຍົກຍໍພວກເຮົາ. ກຳລັງປະກອບອາວຸດຂອງສັດຕູບໍ່ສາມາດຜາບແພ້ພວກເຮົາໄດ້, ຂໍ້ນີ້ໄດ້ຮັບການຢັ້ງຢືນມາແລ້ວ. ແຕ່ການຍົກຍໍຂອງຊົນຊັ້ນເຈົ້າທຶນອາດຈະຜາບແພ້ຜູ້ມີຈິດໃຈອ່ອນແອໃນຖັນແຖວຂອງພວກເຮົາໄດ້. ອາດຈະມີຊາວພັກກອມມູນິດແບບນີ້ຈຳນວນໜຶ່ງ, ພວກເຂົາເຈົ້າບໍ່ເຄີຍຖືກສັດຕູທີ່ຖືປືນຜາບແພ້, ຢູ່ຕໍ່ໜ້າສັດຕູເຫຼົ່ານັ້ນ ພວກເຂົາເຈົ້າສົມຊື່ວ່າເປັນວິລະຊົນ; ແຕ່ພວກເຂົາເຈົ້າບໍ່ສາມາດຕ້ານທານກັບການບຸກໂຈມຕີດ້ວຍລູກປືນໂອບນ້ຳຕານໄດ້, ຢູ່ຕໍ່ໜ້າລູກປືນໂອບນ້ຳຕານນັ້ນ ພວກເຂົາເຈົ້າຕ້ອງເສຽໃຊ. ພວກເຮົາຕ້ອງປ້ອງກັນບໍ່ໃຫ້ເກີດສະພາບການແນວນີ້.

«ຄຳລາຍງານໃນກອງປະຊຸມຕົ້ນຄະນະເທື່ອທີ່ ໒ ຂອງຄະນະກຳມະການສູນກາງສະໄໝທີ່ ໗ ຂອງພັກກອມມູນິດຈີນ» (ວັນທີ່ ໕-໓-໑໙໔໙)

ທະແນນແຕ່ພວກເຮົາຕົກຢູ່ໃນຄວາມຫຼັບຫູຫຼັບຕາ ແລະຂາດຄວາມຕື່ນຕົວ, ເລື່ອງຈຳນວນຫຼາຍ ກໍ່ອາດຈະກາຍເປັນພົກໃຫຍ່ໃຫ້ພວກເຮົາ, ກາຍເປັນຫາບໜັກໃຫ້ພວກເຮົາ. ຕົວຢ່າງຄື ການເຄີຍຜິດພາດ ອາດຈະເຮັດໃຫ້ຄົນຮູ້ສຶກວ່າ ແນວໃດຕົນກໍ່ໄດ້ຜິດພາດໄປແລ້ວ, ແຕ່ນັ້ນໄປ ຈິດໃຈກໍ່ຫົດຫ່ຽວເຫງົາຫງອຍ; ການບໍ່ເຄີຍຜິດພາດ ກໍ່ອາດຈະເຮັດໃຫ້ຄົນຮູ້ສຶກວ່າ ຕົນບໍ່ເຄີຍຜິດພາດ, ແຕ່ນັ້ນໄປກໍ່ອວດອົ່ງຂຶ້ນ. ການເຮັດວຽກງານບໍ່ໄດ້ຜົນ ອາດຈະເຮັດໃຫ້ຄົນໂສກເສົ້າໝົດກຳລັງໃຈ; ການເຮັດວຽກງານໄດ້ຜົນ ກໍ່ອາດຈະເຮັດໃຫ້ຄົນຈອງຫອງພອງຂົນ. ຜູ້ທີ່ມີປະວັດຕໍ່ສູ້ສັ້ນ, ຍ້ອນແນວນັ້ນ ອາດບໍ່ຮັບຜິດຊອບຕໍ່ວຽກງານ; ຜູ້ທີ່ມີປະວັດຕໍ່ສູ້ຍາວ, ຍ້ອນແນວນັ້ນ ອາດຖືວ່າຕົນຖືກສະເໝີ. ຜູ້ເປັນກຳມະກອນຊາວນາກໍ່ອາດຖືເອົາກຳເນີດອັນມີກຽດຂອງຕົນດູໝິ່ນນັກຮຽນຮູ້; ນັກຮຽນຮູ້ກໍ່ອາດຖືເອົາການມີຄວາມຮູ້ບາງຢ່າງຂອງຕົນດູໝິ່ນຜູ້ເປັນກຳມະກອນຊາວນາ. ຄວາມຊ່ຽວຊານໃນງານວິຊາຕ່າງໆ ລ້ວນແຕ່ອາດກາຍເປັນທຶນໃນ

ການອວດອົ່ງທະນົງຕົວແລະດູໝິ່ນຜູ້ອື່ນໄດ້. ຈົນກະທັ້ງອາຍຸກໍ່ອາດກາຍເປັນເຄື່ອງມືທີ່ພາໃຫ້ອວດອົ່ງໄດ້: ຊາວໜຸ່ມອາດຖືວ່າຕົນສະຫຼາດມີຄວາມສາມາດ ເລີຍດູໝິ່ນຜູ້ເຖົ້າ, ຜູ້ເຖົ້າກໍ່ອາດຖືວ່າຕົນມີບົດຮຽນອຸດົມສົມບູນ ເລີຍດູໝິ່ນຊາວໜຸ່ມ. ຖ້າບໍ່ມີຄວາມຕື່ນຕົວແລ້ວ, ເລື່ອງຕ່າງໆທຳນອງນີ້ ກໍ່ຈະກາຍເປັນຫາບໜັກຫຼືພົກໃຫຍ່ໄດ້.

«ການຮ່ຳຮຽນແລະສະຖານະການ» (ວັນທີ່ ໑໒-໔-໑໙໔໔)

ສະຫາຍສ່ວນໜຶ່ງທີ່ເຮັດວຽກໃນກອງທັບໄດ້ຕິດນິດໄສຈອງຫອງຊະນິດໜຶ່ງ ຄື ວາງອຳນາດບາດໃຫຍ່ຕໍ່ນັກລົບ ຕໍ່ປະຊາຊົນ ຕໍ່ຝ່າຍປົກຄອງແລະຕໍ່ພັກ, ຕິຕຽນແຕ່ສະຫາຍທີ່ເຮັດວຽກງານທ້ອງຖິ່ນ, ບໍ່ຕິຕຽນຕົນເອງ, ເຫັນແຕ່ຜົນງານ, ບໍ່ເຫັນຂໍ້ບົກພ່ອງ, ມັກຟັງແຕ່ຄວາມຍົກຍໍ, ບໍ່ມັກຟັງຄວາມຕຳນິ. ...ກອງທັບຕ້ອງເອົາໃຈໃສ່ນຳການກຳຈັດພະຍາດຊະນິດນີ້.

«ຈົ່ງຈັດຕັ້ງກັນຂຶ້ນ» (ວັນທີ່ ໒໙-໑໑-໑໙໔໓)

ວຽກງານທີ່ທຸກຍາກລຳບາກປຽບຄືຫາບທີ່ວາງຢູ່ຕໍ່ໜ້າພວກເຮົາ, ເບິ່ງວ່າພວກເຮົາກ້າຫາບແບກຫຼືບໍ່. ຫາບມີອັນເບົາອັນໜັກ. ມີບາງຄົນຢ້ານໜັກມັກເບົາ, ຊຸກຫາບໜັກໃຫ້ຜູ້ອື່ນ, ຕົວເອງເລືອກເອົາຫາບເບົາ. ອັນນີ້ກໍ່ບໍ່ແມ່ນທ່າທີທີ່ດີ. ມີບາງສະຫາຍບໍ່ແມ່ນແນວນີ້, ຄວາມສຸກສະບາຍໄວ້ໃຫ້ຜູ້ອື່ນ, ເລືອກເອົາຫາບໜັກມາຫາບ, ຍອມທຸກກ່ອນເພິ່ນ ຮັບສຸກລຸນເພິ່ນ. ສະຫາຍແບບນີ້ ແມ່ນສະຫາຍທີ່ດີ. ນ້ຳໃຈຂອງຊາວລັດທິກອມມູນິດແນວນີ້, ພວກເຮົາຕ້ອງຮ່ຳຮຽນເອົາ.

« ກ່ຽວກັບການເຈລະຈາທີ່ເມືອງຈຸງກິງ » (ວັນທີ່ ໑໗-໑໐-໑໙໔໕)

ມີຄົນບໍ່ໜ້ອຍບໍ່ຮັບຜິດຊອບຕໍ່ວຽກງານ, ຢ້ານໜັກມັກເບົາ, ຊຸກຫາບໜັກໃຫ້ຜູ້ອື່ນ, ຕົນເອງເລືອກເອົາອັນເບົາ. ບໍ່ວ່າເລື່ອງໃດ ກໍ່ຄຳນຶງເຖິງຕົນເອງກ່ອນ, ແລ້ວຈຶ່ງຄຳນຶງເຖິງຜູ້ອື່ນ. ເມື່ອອອກແຮງໜ້ອຍໜຶ່ງ ກໍ່ຖືວ່າເປັນເລື່ອງພິລຶກ, ມັກຄຸຍໂວໂອ້ອວດ, ຢ້ານແຕ່ຜູ້ອື່ນບໍ່ຮູ້ນຳ. ຕໍ່ສະຫາຍແລະປະຊາຊົນ

ບໍ່ແມ່ນເຕັມໄປດ້ວຍຄວາມອົບອຸ່ນຮັກແພງ, ຫາກແມ່ນຈືດໆຈາງໆ ເສີຍເມີຍບໍ່ເອົາໃຈໃສ່ ນິ່ງຊາຕາຍດ້ານ. ທີ່ຈິງ ຄົນຈະນິດນີ້ບໍ່ແມ່ນສະມາຊິກພັກກອມມູນິດ, ຢ່າງໜ້ອຍກໍ່ນັບເປັນສະມາຊິກພັກກອມມູນິດທີ່ບໍລິສຸດບໍ່ໄດ້.

«ລະນຶກເຖິງນໍແມນ ເບທູນ» (ວັນທີ່ ໒໑-໑໒-໑໙໓໙)

ຜູ້ທີ່ຕັ້ງຕົວເປັນອິດສະລະຈະນິດນີ້ ມັກແຍກອອກຈາກລັດທິ "ຕັ້ງຕົວເປັນເອກ"ຂອງພວກເຂົາເຈົ້າບໍ່ໄດ້, ໃນບັນຫາຄວາມພົວພັນກັນລະຫວ່າງຕົວບຸກຄົນກັບພັກນັ້ນ, ພວກເຂົາເຈົ້າມັກຈະບໍ່ຖືກຕ້ອງ. ແມ່ນວ່າທາງປາກພວກເຂົາເຈົ້າກໍ່ວ່າເຄົາລົບນັບຖືພັກຄືກັນ, ແຕ່ໃນຕົວຈິງແລ້ວຊໍ້າພັດເອົາຕົວບຸກຄົນໄວ້ໃນລໍາດັບໜຶ່ງ, ເອົາພັກໄວ້ໃນລໍາດັບສອງ. ຄົນຈະນິດນີ້ວິນກັບຫຍັງແດ່?ວິນກັບຊື່ສຽງ ວິນກັບຕໍາແໜ່ງ ວິນກັບການອອກໜ້າສະແດງຕົວ. ເມື່ອພວກເຂົາເຈົ້າໄດ້ຄວບຄຸມວຽກງານສ່ວນໜຶ່ງແລ້ວ ກໍ່ຈະຕັ້ງຕົວເປັນອິດສະລະ. ເພື່ອສິ່ງເຫຼົ່ານີ້, ພວກເຂົາ

ເຈົ້າກໍ່ແກ່ດຶງຄົນສ່ວນໜຶ່ງ, ປັດເຂ່ຍຄົນສ່ວນໜຶ່ງ, ຍົກຍໍປະຈົບປະແຈງກັນ, ດຶງພັກດຶງພວກຢູ່ໃນໝູ່ສະຫາຍ, ນໍາເອົາທ່າທໍານອງຕໍ່າຊ້າສາມານຂອງພັກການເມືອງຊົນຊັ້ນເຈົ້າທຶນເຂົ້າມາໃນພັກກອມມູນິດ. ຄົນຈະນິດນີ້ເສຍປຽບກໍ່ຍ້ອນຄວາມບໍ່ສັດຊື່. ເຮົາຄິດວ່າ ພວກເຮົາຄວນເຮັດວຽກດ້ວຍຄວາມຊື່ສັດສຸດຈະລິດ; ໃນໂລກນີ້, ຖ້າບໍ່ມີທ່າທີສັດຊື່ ຈະເຮັດວຽກບາງຢ່າງໃຫ້ສໍາເລັດ ແມ່ນບໍ່ໄດ້ຢ່າງເດັດຂາດ.

«ປັບປຸງທ່າທໍານອງຂອງພັກ» (ວັນທີ່ ໑-໒-໑໙໔໒)

ສະມາຊິກພັກກອມມູນິດຕ້ອງເຂົ້າໃຈຫຼັກເຫດຜົນທີ່ວ່າຄວາມຕ້ອງການຂອງພາກສ່ວນຕ້ອງຂຶ້ນກັບຄວາມຕ້ອງການຂອງພາກຮວມ. ຄວາມເຫັນອັນໃດອັນໜຶ່ງ, ເມື່ອເບິ່ງໃນສະພາບພາກສ່ວນນັ້ນປະຕິບັດໄດ້, ແຕ່ເບິ່ງໃນສະພາບພາກຮວມນັ້ນປະຕິບັດບໍ່ໄດ້, ກໍ່ຄວນເອົາພາກສ່ວນຂຶ້ນກັບພາກຮວມ. ໃນສະພາບກົງກັນຂ້າມກໍ່ຄືກັນ, ເມື່ອເບິ່ງໃນສະພາບພາກສ່ວນນັ້ນປະຕິບັດບໍ່ໄດ້, ແຕ່ເບິ່ງໃນສະພາບພາກຮວມນັ້ນ

ປະຕິບັດໄດ້ ກໍ່ຄວນເອົາພາກສ່ວນຂຶ້ນກັບພາກຮອມຄືກັນ. ອັນນີ້ແມ່ນທັດສະນະທີ່ເຫັນແກ່ພາກຮອມ.

« ຖານະຂອງພັກກອມມູນິດຈີນໃນສົງຄາມຊາດ »

(ເດືອນ ໑໐-໑໙໓໘)

ລັດທິນັກສະໜຸກ. ຄົນທີ່ມີລັດທິເອກະຊົນຊຶ່ງສະແດງອອກໃນດ້ານນັກສະໜຸກ, ໃນກອງທັບແດງກໍ່ມີຢູ່ບໍ່ໜ້ອຍ. ພວກເຂົາເຈົ້າຫວັງແຕ່ໃຫ້ກອງທະຫານເຂົ້າຕົວເມືອງໃຫຍ່. ການທີ່ພວກເຂົາເຈົ້າຢາກໄປຕົວເມືອງໃຫຍ່ນັ້ນ ບໍ່ແມ່ນເພື່ອໄປເຮັດວຽກ, ແມ່ນເພື່ອໄປຫາຄວາມສະໜຸກ. ສິ່ງທີ່ພວກເຂົາເຈົ້າບໍ່ມັກທີ່ສຸດນັ້ນແມ່ນເຮັດວຽກໃນເຂດແດງຊຶ່ງມີຊີວິດການເປັນຢູ່ທຸກຍາກລຳບາກ.

«ກ່ຽວກັບການແກ້ໄຂດັດແປງແນວຄິດທີ່ຜິດພາຍໃນພັກ» (ເດືອນ ໑໒-໑໙໒໙)

ຕ້ອງຄັດຄ້ານຄວາມຫ່ຽງທາງລັດທິເຫັນແກ່ພະແນກຕົນທີ່ຄຳນຶງເຖິງແຕ່ຕົນເອງ ບໍ່ຄຳນຶງເຖິງຜູ້ອື່ນ. ຖ້າຜູ້ໃດບໍ່ເອົາ

ຫົວຊາຄວາມຫຍຸ້ງຍາກຂອງຜູ້ອື່ນ, ບໍ່ຍອມໃຫ້ຜູ້ອື່ນຍົກຍ້າຍພະນັກງານທີ່ຂຶ້ນກັບຕົນ ຫຼືຍົກຍ້າຍແຕ່ຜູ້ອ່ອນໃຫ້, "ເປັ່ງນ້ຳນາຕົນ ຖ້ວມນາເພິ່ນ", ບໍ່ຄິດເຖິງພະແນກການອື່ນ ບ່ອນອື່ນແລະຜູ້ອື່ນເລີຍ, ຄົນຊະນິດນີ້ເອີ້ນວ່າ ພວກລັດທິເຫັນແກ່ພະແນກຕົນຊຶ່ງໄດ້ສູນເສຍນ້ຳໃຈລັດທິກອມມູນິດໄປໝົດແລ້ວ. ການບໍ່ຄຳນຶງເຖິງພາກສ່ວນໃຫຍ່, ເສີຍເມີຍບໍ່ເອົາໃຈໃສ່ພະແນກການອື່ນ ບ່ອນອື່ນແລະຜູ້ອື່ນນັ້ນ ກໍ່ແມ່ນຈຸດພິເສດຂອງພວກລັດທິເຫັນແກ່ພະແນກຕົນນັ້ນແຫຼະ. ສຳລັບຄົນຊະນິດນີ້ ຕ້ອງອົບຮົມໃຫ້ຫຼາຍ, ເຮັດໃຫ້ພວກເຂົາເຈົ້າຮູ້ວ່າ ອັນນີ້ແມ່ນຄວາມຫ່ຽງທາງລັດທິພັກພວກຊະນິດໜຶ່ງ, ຖ້າຂະຫຍາຍຕົວຕໍ່ໄປ ກໍ່ອັນຕະລາຍທີ່ສຸດ.

«ປັບປຸງທ່າທ່ຳນອງຂອງພັກ» (ວັນທີ່ ໑-໒-໑໙໔໒)

ລັດທິເສລີສະແດງອອກຫຼາຍແບບ.

ເນື່ອງຈາກແມ່ນຄົນລຶ້ງເຄີຍກັນ ຄົນຖິ່ນດຽວກັນ ແມ່ນເພື່ອນຮຽນ ເພື່ອນຮ່ວມໃຈ ຄົນທີ່ຮັກກັນ ເພື່ອນຮ່ວມວຽກມາ

ແຕ່ເທິງຫຼືຄົນເຄີຍຢູ່ໃຕ້ບັງຄັບບັນຊານາແຕ່ກ່ອນ, ເຖິງຮູ້ຄັກວ່າບໍ່ຖືກ ກໍ່ບໍ່ຖົກຖຽງໃນທາງຫຼັກການກັບເຂົາເຈົ້າ, ປ່ອຍໄປຕາມເລື່ອງ, ເພື່ອຈະໄດ້ຢູ່ນຳກັນຢ່າງສະຫງົບແລະສະໜິດສະໜົມກັນ. ຫຼືເວົ້າພຽງແຕ່ເບົາບາງພິວເຜີນ, ບໍ່ແກ້ໄຂໃຫ້ເຖິງຖອງ, ເອົາແຕ່ອະລຸ້ມອະຫຼ່ວຍກິນກຽວກັນ. ຜົນສຸດທ້າຍ ກໍ່ເປັນໄພແກ່ໝູ່ຄະນະແລະກໍ່ເປັນໄພແກ່ຕົນ. ອັນນີ້ເປັນແບບທີ່ໜຶ່ງ.

ຕຳນິລັບຫຼັງຢ່າງບໍ່ຮັບຜິດຊອບ, ບໍ່ສະເໜີຄວາມເຫັນຕໍ່ອົງການຈັດຕັ້ງຢ່າງຂະຫຍັນຫ້າວຫັນ. ຕໍ່ໜ້າບໍ່ເວົ້າ, ລັບຫຼັງເວົ້າທົ່ວທິບ; ເວລາປະຊຸມບໍ່ເວົ້າ, ເລີກປະຊຸມແລ້ວເວົ້າທົ່ວທິບ. ໃນໃຈບໍ່ມີຫຼັກການຊີວິດຮວມໝູ່, ເອົາແຕ່ເສລີຕາມອາລົມ. ອັນນີ້ເປັນແບບທີ່ສອງ.

ເລື່ອງບໍ່ກ່ຽວກັບຕົນ ກໍ່ບໍ່ທຸລະ; ເຖິງຮູ້ຄັກວ່າບໍ່ຖືກ ກໍ່ຖືວ່າເວົ້າໜ້ອຍເປັນດີ; ຊ່າງເອົາຕົວລອດເປັນຍອດດີ, ຂໍແຕ່ໃຫ້ຕົນບໍ່ຜິດກໍ່ເປັນພໍ. ອັນນີ້ເປັນແບບທີ່ສາມ.

ບໍ່ປະຕິບັດຕາມຄຳສັ່ງ, ຖືຄວາມເຫັນຂອງຕົນເປັນເອກ. ມີ

ແຕ່ຢາກໃຫ້ອົງການຈັດຕັ້ງເບິ່ງແຍງຕົນ, ບໍ່ຕ້ອງການວິໄນຂອງການຈັດຕັ້ງ. ອັນນີ້ເປັນແບບທີ່ສີ່.

ການຕໍ່ສູ້ແລະຖົກຖຽງກັບຄວາມເຫັນທີ່ບໍ່ຖືກຕ້ອງນັ້ນ ບໍ່ແມ່ນເພື່ອສາມັກຄີ, ເພື່ອກ້າວໜ້າ, ເພື່ອເຮັດວຽກໃຫ້ດີຂຶ້ນ, ແຕ່ເປັນການໂຈມຕີບຸກຄົນ, ກໍ່ເລື່ອງຕາມອາລົມ, ລະບາຍຄວາມຄຽດແຄ້ນສ່ວນຕົວ, ຫາທາງແກ້ແຄ້ນ. ອັນນີ້ເປັນແບບທີ່ຫ້າ.

ເມື່ອໄດ້ຍິນຄວາມໂຈທະນາທີ່ບໍ່ຖືກຕ້ອງ ກໍ່ບໍ່ໂຕ້ບໍ່ຖຽງ, ຈົນຮອດໄດ້ຍິນຄວາມເວົ້າຂອງພວກຕ້ານປະຕິວັດ ກໍ່ບໍ່ລາຍງານ, ໜັ້ງເຮັດເສີຍເວີຍ, ເຮັດຄືບໍ່ມີຫຍັງເກີດຂຶ້ນ. ອັນນີ້ເປັນແບບທີ່ຫົກ.

ພົບມວນຊົນບໍ່ໂຄສະນາ, ບໍ່ລະດົມຈິດໃຈ, ບໍ່ສະແດງປາຖະກະຖາ, ບໍ່ສຳຫຼວດ, ບໍ່ໄຕ່ຖາມ, ບໍ່ເອົາໃຈໃສ່ຄວາມເດືອດຮ້ອນຂອງເຂົາເຈົ້າ, ໜັ້ງເສີຍດູດາຍ, ລືມເສຽວ່າຕົນເອງແມ່ນສະມາຊິກພັກກອມມູນິດຜູ້ໜຶ່ງ, ເຮັດຄືກັບວ່າສະມາຊິກ

ພັກກອມມູນິດເປັນຊາວບ້ານທຳມະດາ. ອັນນີ້ເປັນແບບທີ່ເຈັດ.

ເມື່ອເຫັນການກະທຳທີ່ມີຄວາມເສຽຫາຍແກ່ຜົນປະໂຫຽດຂອງມວນຊົນແລ້ວ ບໍ່ຄຽດແຄ້ນ, ບໍ່ຕັກເຕືອນ, ບໍ່ຫ້າມປາມ, ບໍ່ອະທິບາຍ, ປ່ອຍໄປຕາມເລື່ອງ. ອັນນີ້ເປັນແບບທີ່ແປດ.

ເຮັດວຽກບໍ່ເອົາຈິງເອົາຈັງ, ບໍ່ມີແຜນການທີ່ແນ່ນອນ, ບໍ່ມີທິດທາງທີ່ແນ່ນອນ, ເຮັດໄປພໍແລ້ວວຽກ, ພໍແລ້ວມື້ແລ້ວວັນ, ເປັນພະສົງມື້ໜຶ່ງກໍ່ຕີລະຄັງໄປມື້ໜຶ່ງ. ອັນນີ້ເປັນແບບທີ່ເກົ້າ.

ຖືວ່າຕົນມີບຸນຄຸນຄວາມດີຕໍ່ການປະຕິວັດ, ວາງທ່າເປັນຜູ້ມີອາວຸໂສ, ວຽກໃຫຍ່ເຮັດບໍ່ໄດ້, ວຽກນ້ອຍພັດບໍ່ເຮັດ, ເຮັດວຽກມະລຸ້ມມະລ້ອຍ, ການຮ່ຳຮຽນຍ່ອນຍານ. ອັນນີ້ເປັນແບບທີ່ສິບ.

ຕົນເອງຜິດແລ້ວ ກໍ່ຮູ້ວ່າຜິດ, ແຕ່ບໍ່ຢາກດັດແປງແກ້ໄຂ, ໃຊ້ລັດທິເສລີຕໍ່ຕົນເອງ. ອັນນີ້ເປັນແບບທີ່ສິບເອັດ.

«ຄັດຄ້ານລັດທິເສລີ» (ວັນທີ່ ໗-໙-໑໙໓໗)

ລັດທິເສລີໃນອົງການຈັດຕັ້ງຮວມໝູ່ທີ່ປະຕິວັດນັ້ນເປັນໄພທີ່ສຸດ. ມັນເປັນນ້ຳກົດຊະນິດໜຶ່ງ, ເຮັດໃຫ້ຄວາມສາມັກຄີແຕກຊະຊາຍ, ຄວາມພົວພັນຍ່ອນຍານ, ວຽກງານບໍ່ຂັນແຂງ, ຄວາມເຫັນແຕກແຍກ. ມັນເຮັດໃຫ້ຖັນແຖວປະຕິວັດເສຽການຈັດຕັ້ງແລະວິໄນທີ່ເຂັ້ມງວດພົ້ນແກ່ນ, ເຮັດໃຫ້ນະໂຍບາຍບໍ່ສາມາດໄດ້ຮັບການປະຕິບັດຢ່າງເຖິງທີ່ສຸດແລະ ເຮັດໃຫ້ອົງການຈັດຕັ້ງຂອງພັກ ກັບ ມວນຊົນທີ່ພັກນຳພານັ້ນຫ່າງເຫີນອອກຈາກກັນ. ອັນນີ້ແມ່ນທ່າຫ່ຽງອັນຊົ່ວຮ້າຍໝັກໜ່ວງຊະນິດໜຶ່ງ.

«ຄັດຄ້ານລັດທິເສລີ» (ວັນທີ່ ໗-໙-໑໙໓໗)

ພວກລັດທິເສລີເບິ່ງຫຼັກການຂອງລັດທິມາກເປັນຄຳພີນາມະທຳ. ພວກເຂົາເຈົ້າເຫັນດີນຳລັດທິມາກ, ແຕ່ບໍ່ກຽມຈະປະຕິບັດ ຫຼືບໍ່ກຽມຈະປະຕິບັດໃຫ້ຄົບຖ້ວນ, ບໍ່ກຽມຈະເອົາລັດທິມາກມາແທນລັດທິເສລີຂອງຕົນ. ຄົນເຫຼົ່ານີ້ມີທັງລັດທິມາກ, ມີທັງລັດທິເສລີ: ທາງປາກແມ່ນລັດທິມາກ, ທາງເຮັດແມ່ນລັດທິເສລີ; ຕໍ່

ຜູ້ອື່ນໃຊ້ລັດທິນາກ, ຕໍ່ຕົນເອງໃຊ້ລັດທິເສລີ. ສິນຄ້າສອງຢ່າງນັ້ນມີຄົບພິດ, ຕ່າງກໍ່ມີປະໂຫຍດຂອງໃຜລາວ. ອັນນີ້ແມ່ນວິທີຄິດຂອງຄົນສ່ວນໜຶ່ງ.

«ຄັດຄ້ານລັດທິເສລີ» (ວັນທີ ໗-໙-໑໙໓໗)

ລັດຂອງປະຊາຊົນແມ່ນປ້ອງກັນຮັກສາປະຊາຊົນ. ເມື່ອມີລັດຂອງປະຊາຊົນແລ້ວ, ປະຊາຊົນຈຶ່ງມີຄວາມອາດສາມາດໃນການອົບຮົມ ແລະ ດັດແປງຕົນເອງໂດຍໃຊ້ວິທີປະຊາທິປະໄຕໃນຂອບເຂດທົ່ວປະເທດແລະໃນຂະໜາດທີ່ທຸກຄົນເຂົ້າຮ່ວມ, ເຮັດໃຫ້ຕົນເອງຫຼຸດພົ້ນຈາກຜົນສະທ້ອນຂອງພວກປະຕິການພາຍໃນແລະພາຍນອກ (ຜົນສະທ້ອນນີ້ ໃນປັດຈຸບັນຍັງໃຫຍ່ຫຼາຍ, ທັງຈະມີຢູ່ອີກເປັນເວລາເຫິງນານ ບໍ່ອາດຈະດັບສູນໄປຢ່າງໄວ), ດັດແປງຄວາມເຄີຍຊິນອັນບໍ່ດີ ແລະ ແນວຄິດອັນບໍ່ດີຂອງຕົນທີ່ໄດ້ມາຈາກສັງຄົມເກົ່າ ເພື່ອບໍ່ໃຫ້ຕົນໄປສູ່ທາງຜິດຕາມການຊັກຈູງຂອງພວກປະຕິການ ແລະກ້າວໜ້າຕໍ່ໄປ, ກ້າວໜ້າໄປສູ່ສັງຄົມສັງຄົມນິຍົມແລະສັງຄົມກອມມູນິດ.

«ວ່າດ້ວຍການຜະເດັດການປະຊາທິປະໄຕປະຊາຊົນ»
(ວັນທີ ໓໐-໖-໑໙໔໙)

ຄົນຜູ້ໜຶ່ງຈະເຮັດຄວາມດີຈັກເລັກນ້ອຍນັ້ນບໍ່ຍາກ, ອັນຍາກນັ້ນແມ່ນເຮັດຄວາມດີບໍ່ເຮັດຄວາມຊົ່ວຕະຫຼອດຊີວິດ, ມີປະໂຫຍດແກ່ມວນຊົນອັນກວ້າງໃຫຍ່ສະເໝີຕົ້ນສະເໝີປາຍ, ມີປະໂຫຍດແກ່ຊາວໜຸ່ມສະເໝີຕົ້ນສະເໝີປາຍ, ມີປະໂຫຍດແກ່ການປະຕິວັດສະເໝີຕົ້ນສະເໝີປາຍ, ຕໍ່ສູ້ຢ່າງທໍລະຫົດອົດທົນຫຼາຍສິບປີຄືມື້ດຽວ, ອັນນີ້ຈຶ່ງແມ່ນຍາກແສນຍາກໄດ!

«ຄຳອວຍພອນວັນເກີດຂອງສະຫາຍອູ່ຍີ່ຈາງຄົບຮອບ ໖໐ ປີ» (ວັນທີ ໑໕-໑-໑໙໔໐)

໒໕. ຄວາມສາມັກຄີ

ຄວາມເປັນເອກະພາບຂອງປະເທດ ຄວາມສາມັກຄີຂອງປະຊາຊົນ ຄວາມສາມັກຄີຂອງບັນດາຊົນຊາດພາຍໃນປະເທດ, ສິ່ງເຫຼົ່ານີ້ ແມ່ນສິ່ງຮັບປະກັນອັນພື້ນຖານທີ່ເຮັດໃຫ້ພາລະກິດຂອງພວກເຮົາຕ້ອງຊະນະຢ່າງແນ່ນອນ.

«ບັນຫາກ່ຽວກັບການແກ້ໄຂຄວາມຂັດແຍ້ງພາຍໃນປະຊາຊົນຢ່າງຖືກຕ້ອງ» (ວັນທີ ໒໗-໒-໑໙໕໗)

ມີແຕ່ຜ່ານຄວາມສາມັກຄີຂອງພັກກອມມູນິດ ຈິ່ງສາມາດບັນລຸເຖິງຄວາມສາມັກຄີຂອງທົ່ວທັງຊົນຊັ້ນແລະຂອງທົ່ວທັງຊົນຊາດ, ມີແຕ່ຜ່ານຄວາມສາມັກຄີຂອງທົ່ວທັງຊົນຊັ້ນແລະຂອງທົ່ວທັງຊົນຊາດ ຈິ່ງສາມາດຜາບແພ້ສັດຕູ, ສຳເລັດພາລະໜ້າທີ່

ການປະຕິວັດຊາດແລະປະຊາທິປະໄຕໄດ້.

«ຕໍ່ສູ້ເພື່ອຍາດແຍ່ງມວນຊົນເປັນລ້ານເປັນໂກດເຂົ້າຮ່ວມແນວໂຮມຊາດຕໍ່ຕ້ານຍີ່ປຸ່ນ» (ວັນທີ ໗-໕-໑໙໓໗)

ພວກເຮົາຕ້ອງເຮັດໃຫ້ກຳລັງທັງໝົດຂອງພັກເຮົາສາມັກຄີກັນເຂົ້າຢ່າງເຂັ້ມແຂງພາຍໃຕ້ຫຼັກການຂອງການຈັດຕັ້ງແລະວິໄນຂອງລະບອບປະຊາທິປະໄຕຣວມສູນ. ບໍ່ວ່າສະຫາຍຜູ້ໃດ, ທະແນນແຕ່ເຂົາເຈົ້າຍິນດີປະຕິບັດຕາມໂຄງການການເມືອງຂອງພັກ ກົດລະບຽບຂອງພັກແລະມະຕິຂອງພັກ, ພວກເຮົາກໍ່ຕ້ອງສາມັກຄີກັບເຂົາເຈົ້າ.

«ວ່າດ້ວຍລັດຖະບານປະສົມ» (ວັນທີ ໒໔-໔-໑໙໔໕)

ໃນປີ ໑໙໔໒ ພວກເຮົາເຄີຍໄດ້ສະຫຼຸບວິທີປະຊາທິປະໄຕໃນການແກ້ໄຂຄວາມຂັດແຍ້ງພາຍໃນປະຊາຊົນນັ້ນໃຫ້ເປັນສູດຕົວຈິງອັນໜຶ່ງ, ເອີ້ນວ່າ "ສາມັກຄີ—ຕຳນິ—ສາມັກຄີ". ເວົ້າລະອຽດຈັກໜ່ອຍກໍ່ຄື ເລີ່ມຈາກຄວາມປາຖະໜາສາມັກຄີ ຜ່ານ

ການຕຳນິຫຼືການຕໍ່ສູ້ ເຮັດໃຫ້ຄວາມຂັດແຍ້ງໄດ້ຮັບການແກ້ໄຂ ແລ້ວກ້າວໄປເຖິງຄວາມສາມັກຄີອັນໃໝ່ເທິງພື້ນຖານໃໝ່. ຕາມບົດຮຽນຂອງພວກເຮົາ, ອັນນີ້ແມ່ນວິທີຖືກຕ້ອງອັນໜຶ່ງໃນການແກ້ໄຂຄວາມຂັດແຍ້ງພາຍໃນປະຊາຊົນ.

«ບັນຫາກ່ຽວກັບການແກ້ໄຂຄວາມຂັດແຍ້ງພາຍໃນປະຊາຊົນຢ່າງຖືກຕ້ອງ» (ວັນທີ ໒໗-໒-໑໙໕໗)

ກອງທັບນີ້ມີຄວາມສາມັກຄີອັນດີທີ່ສຸດທັງພາຍໃນ ແລະ ພາຍນອກ. ຢູ່ພາຍໃນ—ລະຫວ່າງພະນັກງານກັບນັກລົບ ລະຫວ່າງຂັ້ນເທິງກັບຂັ້ນລຸ່ມແລະລະຫວ່າງວຽກງານທະຫານ ວຽກງານການເມືອງແລະວຽກງານພະລາທິການ; ຢູ່ພາຍນອກ—ລະຫວ່າງທະຫານກັບປະຊາຊົນ ລະຫວ່າງຝ່າຍທະຫານກັບຝ່າຍປົກຄອງ ແລະ ລະຫວ່າງພວກເຮົາກັບເພື່ອນມິດ ລ້ວນແຕ່ສາມັກຄີເປັນອັນໜຶ່ງອັນດຽວກັນ, ທຸກປາກົດການທີ່ມີຜົນຮ້າຍຕໍ່ຄວາມສາມັກຄີ ລ້ວນແຕ່ຢູ່ໃນປະເພດທີ່ຕ້ອງກຳຈັດທັງນັ້ນ.

«ວ່າດ້ວຍລັດຖະບານປະສົມ» (ວັນທີ ໒໔-໔-໑໙໔໕)

໒໗. ວິໄນ

ພາຍໃນປະຊາຊົນ, ປະຊາທິປະໄຕເປັນສິ່ງຄູ່ກັນກັບການຮວມສູນ, ເສລີພາບເປັນສິ່ງຄູ່ກັນກັບວິໄນ. ສິ່ງເຫຼົ່ານີ້ ລ້ວນແຕ່ແມ່ນສອງດ້ານທີ່ຂັດແຍ້ງກັນໃນອົງເອກະພາບອົງດຽວ, ພວກມັນທັງຂັດແຍ້ງກັນ ທັງເປັນເອກະພາບກັນ, ພວກເຮົາບໍ່ຄວນເນັ້ນໜັກດ້ານໜຶ່ງ ປະຕິເສດອີກດ້ານໜຶ່ງຢ່າງເບິ່ງດ້ານດຽວ. ພາຍໃນປະຊາຊົນ, ບໍ່ມີເສລີພາບບໍ່ໄດ້, ແຕ່ບໍ່ມີວິໄນກໍ່ບໍ່ໄດ້; ບໍ່ມີປະຊາທິປະໄຕບໍ່ໄດ້, ແຕ່ບໍ່ມີການຮວມສູນກໍ່ບໍ່ໄດ້. ຄວາມເປັນເອກະພາບລະຫວ່າງປະຊາທິປະໄຕກັບການຮວມສູນ, ຄວາມເປັນເອກະພາບລະຫວ່າງເສລີພາບກັບວິໄນນັ້ນ ກໍ່ແມ່ນລະບອບປະຊາທິປະໄຕຮວມສູນຂອງພວກເຮົາ. ພາຍໃຕ້ລະບອບນີ້ ປະຊາຊົນໄດ້ມີປະຊາທິປະໄຕແລະເສລີພາບອັນກວ້າງຂວາງ; ພ້ອມ

ກັນນັ້ນ ຍັງຕ້ອງຜູກມັດຕົນເອງດ້ວຍວິໄນສັງຄົມນິຍົມ.

«ບັນຫາກ່ຽວກັບການແກ້ໄຂຄວາມຂັດແຍ້ງພາຍໃນ
ປະຊາຊົນຢ່າງຖືກຕ້ອງ» (ວັນທີ່ ໒໗-໒-໑໙໕໗)

ຕ້ອງເວົ້າເນັ້ນເຖິງວິໄນຂອງພັກອີກໃໝ່: (໑) ບຸກຄົນຂຶ້ນກັບການຈັດຕັ້ງ; (໒) ສ່ວນໜ້ອຍຂຶ້ນກັບສ່ວນຫຼາຍ; (໓) ຂັ້ນລຸ່ມຂຶ້ນກັບຂັ້ນເທິງ; (໔) ທົ່ວພັກຂຶ້ນກັບສູນກາງ. ຜູ້ໃດທຳລາຍວິໄນເຫຼົ່ານີ້ ຜູ້ນັ້ນກໍ່ແມ່ນທຳລາຍເອກະພາບຂອງພັກ.

« ຖານະຂອງພັກກອມມູນິດຈີນໃນສົງຄາມຊາດ »
(ເດືອນ ໑໐-໑໙໓໘)

ວິໄນຂອງພັກຂໍ້ໜຶ່ງແມ່ນສ່ວນໜ້ອຍຂຶ້ນກັບສ່ວນຫຼາຍ. ເມື່ອຄວາມເຫັນຂອງຕົນຖືກປະຕິເສດແລ້ວ, ຄົນສ່ວນໜ້ອຍຕ້ອງສະໜັບສະໜູນມະຕິທີ່ຄົນສ່ວນຫຼາຍໄດ້ຜ່ານ. ນອກຈາກເວລາຈຳເປັນໃຫ້ສະເໜີອອກອະພິປາຍອີກໃນການປະຊຸມເທື່ອໜ້າ

ແລ້ວ ຈະສະແດງການຄັດຄ້ານໃດໆໃນການກະທຳບໍ່ໄດ້.

«ກ່ຽວກັບການແກ້ໄຂດັດແປງແນວຄິດທີ່ຜິດພາຍໃນ
ພັກ» (ເດືອນ ໑໒-໑໙໒໙)

ວິໄນໃຫຍ່ ໓ ຂໍ້ມີດັ່ງລຸ່ມນີ້:

(໑) ທຸກການກະທຳຕ້ອງຟັງຄຳບັນຊາ;

(໒) ບໍ່ເອົາໄໝຫຍິບເສັ້ນໜຶ່ງ ຫຼືເຂັມດວງໜຶ່ງຂອງມວນຊົນ;

(໓) ຂອງທີ່ຍຶດໄດ້ທັງໝົດຕ້ອງມອບໃຫ້ສ່ວນຮວມ.

ຂໍ້ຄວນເອົາໃຈໃສ່ ໘ ຂໍ້ມີດັ່ງລຸ່ມນີ້:

(໑) ປາກເວົ້າອ່ອນໂຍນ;

(໒) ຊື້ຂາຍທ່ຽງທຳ;

(໓) ຢືມຂອງຕ້ອງສົ່ງ;

(໔) ເຮັດຂອງເປ່ຕ້ອງໃຊ້;

(໕) ບໍ່ຕີບໍ່ດ່າຄົນ;

(໖) ບໍ່ທຳລາຍເຄື່ອງປູກຂອງຝັງ;

(ກ) ບໍ່ລ່ວງເກີນແມ່ຍິງ;

(ຂ) ບໍ່ທາລຸນຊະເລີຍເສິກ.

«ຄຳສັ່ງກອງບັນຊາການສູງສຸດ ຂອງກອງທັບປົດປ່ຽປະຊາຊົນຈີນ ກ່ຽວກັບການປະກາດໃຊ້ວິໄນໃຫຽ່ ໓ ຂໍ້ແລະຂໍ້ຄວນເອົາໃຈໃສ່ ໘ ຂໍ້ອີກເທື່ອໃໝ່» (ວັນທີ ໑໐-໑໐-໑໙໔໗)

ຕ້ອງຍົກສະຕິຕໍ່ວິໄນໃຫ້ສູງ, ປະຕິບັດຄຳສັ່ງ ປະຕິບັດນະໂຍບາຍແລະປະຕິບັດວິໄນໃຫຽ່ ໓ ຂໍ້ ຂໍ້ຄວນເອົາໃຈໃສ່ ໘ ຂໍ້ຢ່າງເດັດດ່ຽວ, ກອງທັບກັບປະຊາຊົນເປັນອັນໜຶ່ງອັນດຽວກັນ, ກອງທັບກັບຝ່າຍປົກຄອງເປັນອັນໜຶ່ງອັນດຽວກັນ, ພະນັກງານກັບນັກລົບເປັນອັນໜຶ່ງອັນດຽວກັນ, ທົ່ວກອງທັບເປັນອັນໜຶ່ງອັນດຽວກັນ, ບໍ່ຍອມໃຫ້ປາກົດການໃດໆທີ່ທຳລາຍວິໄນນີ້ຢູ່ໄດ້.

« ຖະແຫຼງການຂອງກອງທັບປົດປ່ຽປະຊາຊົນຈີນ » (ເດືອນ ໑໐-໑໙໔໗)

໔໗. ການຕຳນິແລະຕຳນິຕົນເອງ

ພັກກອມມູນິດບໍ່ຢ້ານການຕຳນິດອກ, ເພາະວ່າ ພວກເຮົາແມ່ນຊາວລັດທິມາກ, ສັດຈະທຳຢູ່ຝ່າຍພວກເຮົາ, ມວນຊົນພື້ນຖານຄືກຳມະກອນຊາວນາຢູ່ຝ່າຍພວກເຮົາ.

«ຄຳປາໄສໃນກອງປະຊຸມວຽກງານໂຄສະນາທົ່ວປະເທດຂອງພັກກອມມູນິດຈີນ» (ວັນທີ ໑໒-໓-໑໙໕໗)

ນັກວັດຖຸນິຍົມທີ່ສົມບູນບໍ່ຢ້ານຂາມສິ່ງໃດໝົດ, ພວກເຮົາຫວັງວ່າ ຜູ້ທີ່ຮ່ວມກັບພວກເຮົາບາກບັ່ນຕໍ່ສູ້ທັງໝົດ ສາມາດແບກຫາບໜ້າທີ່ຮັບຜິດຊອບຢ່າງກ້າຫານ ຜ່ານຜ່າຄວາມຫຽຸ້ງຍາກ ບໍ່ຢ້ານຄວາມລົ້ມເຫຼວ ບໍ່ຢ້ານມີຄົນນິນທາຫົວຂວັນ ແລະກໍ່ບໍ່ຢ້ານຕຳນິ ແລະສະເໜີຄວາມເຫັນຕໍ່ຊາວພັກກອມມູນິດພວກເຮົາ. "ເຖິງຈະຖືກປາດເນື້ອເຖືອໜັງ ຍັງກ້າລາກເຈົ້າຈັກກະ

ພັດລົງຈາກມ້າ", ໃນເວລາຕໍ່ສູ້ເພື່ອສັງຄົມນິຍົມແລະລັດທິກອມມູນິດນັ້ນ ພວກເຮົາຕ້ອງມີນ້ຳໃຈອັນອົງອາດກ້າຫານແນວນີ້.

«ຄຳປາໄສໃນກອງປະຊຸມວຽກງານໂຄສະນາທົ່ວປະເທດຂອງພັກກອມມູນິດຈີນ» (ວັນທີ່ ໑໒-໓-໑໙໕໗)

ພວກເຮົາມີການຕຳນິແລະຕຳນິຕົນເອງຊຶ່ງເປັນອາວຸດຂອງລັດທິມາກເລນິນ. ພວກເຮົາສາມາດປັດທ່າທຳນອງທີ່ບໍ່ດີຖິ້ມ, ຮັກສາທ່າທຳນອງທີ່ດີເດັ່ນໄວ້.

«ຄຳລາຍງານໃນກອງປະຊຸມເຕັມຄະນະເທື່ອທີ່ ໒ ຂອງຄະນະກຳມະການສູນກາງສະໄໝທີ່ ໗ ຂອງພັກກອມມູນິດຈີນ» (ວັນທີ່ ໕-໓-໑໙໔໙)

ມີການຕຳນິຕົນເອງຢ່າງເອົາຈິງເອົາຈັງຫຼືບໍ່ນັ້ນ ກໍ່ແມ່ນເຄື່ອງໝາຍອັນເດັ່ນຊັດອັນໜຶ່ງທີ່ຈຳແນກຄວາມຕ່າງກັນລະຫວ່າງພວກເຮົາກັບພັກການເມືອງອື່ນໆ. ພວກເຮົາເຄີຍເວົ້າວ່າ ເຮືອນຊານຄວນປັດກວາດເລື້ອຍໆ, ບໍ່ປັດກວາດ ກໍ່ຈະເຕັມແຕ່ຂີ້ຝຸ່ນ; ໜ້າຕາຄວນລ້າງສ່ວຍເລື້ອຍໆ, ບໍ່ລ້າງສ່ວຍ

ກໍ່ຈະມີຂີ້ຝຸ່ນເຕັມໜ້າ. ແນວຄິດຂອງສະຫາຍເຮົາ ວຽກງານຂອງພັກເຮົາ ກໍ່ອາດຕິດຂີ້ຝຸ່ນຄືກັນ, ກໍ່ຄວນປັດກວາດແລະລ້າງສ່ວຍຄືກັນ. ອັນທີ່ວ່າ "ນ້ຳໄຫຼຍ່ອມບໍ່ເນົ່າ, ເດືອປະຕູຍ່ອມບໍ່ຜຸ" ນັ້ນ ໝາຍຄວາມວ່າ ສິ່ງເຫຼົ່ານີ້ໄດ້ຕ້ານທານການກັດກິນຂອງຈຸລິນທີແລະຊີວະຊາດອື່ນໆ ໄດ້ໃນລະຫວ່າງເຄື່ອນໄຫວຢ່າງບໍ່ຢຸດໜິ້ງ. ສຳລັບພວກເຮົາ ການສຳຫຼວດວຽກງານເລື້ອຍໆ, ຂະຫຍາຍທ່າທຳນອງປະຊາທິປະໄຕໃນລະຫວ່າງສຳຫຼວດ, ບໍ່ຢ້ານການຕຳນິແລະຕຳນິຕົນເອງ ແລະການປະຕິບັດຕາມພາສິດທີ່ເປັນປະໂຫຍດຂອງປະຊາຊົນຈີນທີ່ວ່າ "ເມື່ອຮູ້ກໍ່ເວົ້າ, ເມື່ອເວົ້າກໍ່ໃຫ້ສຸດຄວາມ", "ຜູ້ເວົ້າບໍ່ມີໂທດ, ຜູ້ຟັງຄວນລະເວັ້ນ", "ຜິດແລ້ວຕ້ອງແກ້, ບໍ່ຜິດກໍ່ຖືເປັນການເຕືອນ" ນັ້ນ ແມ່ນວິທີດຽວທີ່ມີຜົນສັກສິດໃນການຕ້ານທານຂີ້ຝຸ່ນການເມືອງ ແລະຕົວຈຸລິນທີການເມືອງຕ່າງໆທີ່ມາກັດກິນແນວຄິດຂອງສະຫາຍພວກເຮົາແລະຕົນຕົວຂອງພັກເຮົາ.

«ວ່າດ້ວຍລັດຖະບານປະສົມ» (ວັນທີ່ ໒໔-໔-໑໙໔໕)

ການເປັນປໍລະປັກກັນ ແລະ ການຕໍ່ສູ້ລະຫວ່າງແນວຄິດທີ່ຕ່າງກັນພາຍໃນພັກນັ້ນເກີດຂຶ້ນເລື້ອຍໆ, ອັນນີ້ແມ່ນການສ່ອງແສງຂອງຄວາມຂັດແຍ້ງລະຫວ່າງຊົນຊັ້ນ ແລະ ຄວາມຂັດແຍ້ງລະຫວ່າງວັດຖຸເຫດການໃໝ່ກັບເກົ່າຂອງສັງຄົມທີ່ມີຢູ່ພາຍໃນພັກ. ຖ້າພາຍໃນພັກບໍ່ມີຄວາມຂັດແຍ້ງແລະການຕໍ່ສູ້ແນວຄິດເພື່ອແກ້ໄຂຄວາມຂັດແຍ້ງແລ້ວ, ຊີວິດຂອງພັກກໍ່ຈະຢຸດຊະງັກ.

«ວ່າດ້ວຍຄວາມຂັດແຍ້ງ» (ເດືອນ ໘-໑໙໓໗)

ພວກເຮົາຍຶດຖືຄວາມເຫັນໃຫ້ມີການຕໍ່ສູ້ແນວຄິດຢ່າງຂະຫຍັນຫ້າວຫັນ, ເພາະວ່າ ມັນເປັນອາວຸດທີ່ບັນລຸເຖິງຄວາມສາມັກຄີພາຍໃນພັກແລະພາຍໃນອົງການປະຕິວັດ ເພື່ອເປັນຜົນດີຕໍ່ການສູ້ລົບ. ສະມາຊິກພັກກອມມູນິດແລະຜູ້ປະຕິວັດທຸກຄົນຄວນຈັບອາວຸດນີ້ຂຶ້ນ.

ແຕ່ວ່າ ລັດທິເສລີນັ້ນຍຸບເລີກການຕໍ່ສູ້ແນວຄິດ, ຍຶດຖືຄວາມເຫັນໃຫ້ມີຄວາມສະຫງົບຢ່າງບໍ່ມີຫຼັກການ, ຜົນສຸດທ້າຍກໍ່ເກີດທ່າທຳນອງອັນເປື່ອຍເຍື່ອຍຕ່ຳຊ້າສາມານຂຶ້ນ, ເຮັດໃຫ້

ອົງການຈັດຕັ້ງບາງບ່ອນແລະບາງຄົນພາຍໃນພັກ ແລະ ພາຍໃນອົງການປະຕິວັດເສື່ອມໂຊມລົງໃນດ້ານການເມືອງ.

«ຄັດຄ້ານລັດທິເສລີ» (ວັນທີ ໗-໙-໑໙໓໗)

ໃນການຄັດຄ້ານລັດທິໃນຕົວ ລັດທິພັກພວກແລະການປະພັນຕາມຫຼັກ ໕ ພາກຕາຍຕົວໃນພັກນັ້ນ, ພວກເຮົາມີຄະຕິສອງຂໍ້ທີ່ຕ້ອງເອົາໃຈໃສ່: ຂໍ້ທີ່ ໑ ແມ່ນ“ຖອດຖອນບົດຮຽນຈາກຄວາມຜິດແຕ່ກ່ອນ ເພື່ອລະມັດລະວັງພາຍຫຼັງ”, ຂໍ້ທີ່ ໒ ແມ່ນ “ປົວພະຍາດກູ້ຊີວິດຄົນ”. ຕໍ່ຄວາມຜິດພາດແຕ່ກ່ອນນັ້ນແມ່ນອນຕ້ອງເປີຍແບ, ບໍ່ໄວ້ໜ້າໄວ້ຕາ, ຕ້ອງໃຊ້ທ່າທີແບບວິທະຍາສາດມາຈຳແນກ ແລະຕຳນິວິຈານສິ່ງບໍ່ດີທີ່ຜ່ານມາເພື່ອໃຫ້ການເຮັດວຽກງານໃນພາຍຫຼັງໄດ້ລະມັດລະວັງແດ່, ເຮັດໃຫ້ດີຂຶ້ນແດ່. ອັນນີ້ແມ່ນຄວາມໝາຍຂອງ “ ຖອດຖອນບົດຮຽນຈາກຄວາມຜິດແຕ່ກ່ອນ ເພື່ອລະມັດລະວັງພາຍຫຼັງ” ນັ້ນແຫຼະ. ແຕ່ວ່າ ຈຸດປະສົງທີ່ພວກເຮົາເປີຍແບຄວາມຜິດພາດແລະຕຳນິວິຈານຂໍ້ບົກພ່ອງນັ້ນ ຄືກັບນາຍໝໍປົວພະຍາດ ແມ່ນເພື່ອກູ້

ຊີວິດຄົນແທ້ງ ບໍ່ແມ່ນເຮັດໃຫ້ຄົນຕາຍ. ຄົນຜູ້ໜຶ່ງເຈັບໄສ້ເຫຼືອ, ນາຍໝໍຕັດໄສ້ເຫຼືອແລ້ວ, ຄົນຜູ້ນີ້ກໍ່ຖືກກູ້ຊີວິດໄດ້. ຄົນຜູ້ໃດທີ່ໄດ້ຜິດພາດ, ທະແນນແຕ່ເຂົາເຈົ້າບໍ່ອຳພະຍາດບໍ່ຢ້ານການປົວ, ບໍ່ດື້ດ້ານຍຶດຖືຄວາມຜິດພາດ ຈົນຮອດຂັ້ນປິ່ນປົວບໍ່ໄດ້, ຫາກມີຄວາມຊື່ສັດຈິງໃຈ ຍິນດີຮັບການປິ່ນປົວ ແລະ ຍິນດີດັດແປງແກ້ໄຂແທ້ງ, ພວກເຮົາກໍ່ຕ້ອງຊົມເຊີຍເຂົາເຈົ້າ, ປົວພະຍາດຂອງເຂົາເຈົ້າໃຫ້ຫາຍ, ເຮັດໃຫ້ເຂົາເຈົ້າກາຍເປັນສະຫາຍດີຜູ້ໜຶ່ງ. ວຽກງານນີ້ບໍ່ແມ່ນຟາດໄປຕະພຶດຍົກໜຶ່ງ ເພື່ອໝ່ຳໃຈຊົ່ວຄາວກໍ່ສາມາດໄດ້ຜົນຢ່າງເດັດຂາດ. ຕໍ່ພະຍາດດ້ານແນວຄິດແລະພະຍາດດ້ານການເມືອງ, ບໍ່ຄວນໃຊ້ທ່າທີຫຍາບຊ້າສາມານເປັນອັນຂາດ, ຕ້ອງໃຊ້ທ່າທີ "ປົວພະຍາດກູ້ຊີວິດຄົນ", ອັນນີ້ຈຶ່ງແມ່ນວິທີອັນຖືກຕ້ອງແລະບັງເກີດຜົນ.

«ປັບປຸງທ່າທຳນອງຂອງພັກ» (ວັນທີ ໑-໒-໑໙໔໒)

ກ່ຽວກັບບັນຫາການຕຳນິພາຍໃນພັກນັ້ນ ຍັງອີກຂໍ້ໜຶ່ງທີ່ຕ້ອງເວົ້າຮອດຄື ການຕຳນິຂອງສະຫາຍບາງຄົນ ບໍ່ເອົາໃຈໃສ່ເລື່ອງ

ໃຫຍ່, ເອົາໃຈໃສ່ແຕ່ເລື່ອງເລັກໆນ້ອຍໆ. ພວກເຂົາເຈົ້າບໍ່ເຂົ້າໃຈວ່າ ໜ້າທີ່ສຳຄັນຂອງການຕຳນິແມ່ນຊີ້ໃຫ້ເຫັນຄວາມຜິດພາດທາງການເມືອງແລະຄວາມຜິດພາດທາງການຈັດຕັ້ງ. ສຳລັບຂໍ້ບົກພ່ອງຂອງບຸກຄົນນັ້ນ, ຖ້າບໍ່ກ່ຽວກັບຄວາມຜິດພາດທາງການເມືອງແລະທາງການຈັດຕັ້ງແລ້ວ ກໍ່ບໍ່ຈຳເປັນຕຳນິຕິຕຽນຫຼາຍໂພດ, ຈົນເຮັດໃຫ້ສະຫາຍບໍ່ຮູ້ຈະເຮັດແນວໃດດີ. ເມື່ອການຕຳນິແບບນີ້ຂະຫຍາຍຕົວໄປແລ້ວ, ຈິດໃຈພາຍໃນພັກກໍ່ຈະສຸມໃສ່ຂໍ້ບົກພ່ອງເລັກໆນ້ອຍໆໝົດ, ທຸກຄົນກໍ່ຈະກາຍເປັນສຸພາບບຸລຸດຂີ້ສະທ່ຽມຈຽມຕົວທີ່ສຸດ, ກໍ່ຈະລືມພາລະໜ້າທີ່ທາງການເມືອງຂອງພັກໄປ, ອັນນີ້ເປັນໄພອັນຕະລາຍຢ່າງໃຫຍ່ຫຼວງ.

«ກ່ຽວກັບການແກ້ໄຂດັດແປງແນວຄິດທີ່ຜິດພາຍໃນພັກ» (ເດືອນ ໑໒-໑໙໒໙)

ການຕຳນິພາຍໃນພັກຕ້ອງປ້ອງກັນບໍ່ໃຫ້ໃນຕົວ ແລະ ຊີ້ຂາດຕາມໃຈມັກແລະເຮັດໃຫ້ການຕຳນິເປັນແບບຕໍ່າຊ້າສາມານ,

ປາກເວົ້າຕ້ອງມີຫຼັກຖານ, ຕຳນິຕ້ອງເອົາໃຈໃສ່ດ້ານການເມືອງ.

«ກ່ຽວກັບການແກ້ໄຂດັດແປງແນວຄິດທີ່ຜິດພາຍໃນພັກ» (ເດືອນ ໑໒-໑໙໒໙)

ການຕຳນິພາຍໃນພັກ ແມ່ນອາວຸດທີ່ເສີມສ້າງການຈັດຕັ້ງຂອງພັກໃຫ້ເຂັ້ມແຂງແລະເພີ່ມທະວີກຳລັງສູ້ລົບຂອງພັກ. ແຕ່ການຕຳນິພາຍໃນພັກໃນກອງທັບແດງ ບາງເທື່ອບໍ່ເປັນແນວນີ້, ຊ້ຳກາຍເປັນການໂຈມຕີບຸກຄົນ. ຜົນຂອງມັນຄື ບໍ່ພຽງແຕ່ໄດ້ເຮັດໃຫ້ບຸກຄົນເສຽທໍ່ນັ້ນ ຍັງໄດ້ເຮັດໃຫ້ການຈັດຕັ້ງຂອງພັກເສຽນຳດ້ວຍ. ອັນນີ້ເປັນການສະແດງອອກຂອງລັດທິເອກະຊົນຊົນຊັ້ນເຈົ້າທຶນນ້ອຍ. ວິທີແກ້ໄຂດັດແປງແມ່ນເຮັດໃຫ້ສະມາຊິກພັກເຂົ້າໃຈແຈ້ງວ່າ ຈຸດປະສົງໃນການຕຳນິນີ້ແມ່ນເພີ່ມທະວີກຳລັງສູ້ລົບຂອງພັກເພື່ອບັນລຸເຖິງໄຊຊະນະໃນການຕໍ່ສູ້ຊົນຊັ້ນ, ບໍ່ຄວນໃຊ້ການຕຳນິມາເປັນເຄື່ອງມືໂຈມຕີບຸກຄົນ.

«ກ່ຽວກັບການແກ້ໄຂດັດແປງແນວຄິດທີ່ຜິດພາຍໃນພັກ» (ເດືອນ ໑໒-໑໙໒໙)

ຍ້ອນວ່າພວກເຮົາເປັນຜູ້ຮັບໃຊ້ປະຊາຊົນ, ດັ່ງນັ້ນ ຖ້າພວກເຮົາມີຂໍ້ບົກພ່ອງ ກໍ່ບໍ່ຢ້ານຜູ້ອື່ນຕຳນິຊີ້ອອກ. ຈະແມ່ນຜູ້ໃດກໍ່ຕາມ, ໃຜຊີ້ອອກໃຫ້ພວກເຮົາກໍ່ໄດ້. ທະແນນແຕ່ເຈົ້າເວົ້າຖືກ, ພວກເຮົາກໍ່ດັດແປງແກ້ໄຂ. ວິທີທີ່ເຈົ້າເວົ້ານັ້ນມີຜົນດີຕໍ່ປະຊາຊົນ, ພວກເຮົາກໍ່ເຮັດຕາມວິທີຂອງເຈົ້າ.

«ຮັບໃຊ້ປະຊາຊົນ» (ວັນທີ ໘-໙-໑໙໔໔)

ຊາວພັກກອມມູນິດຈີນທີ່ຖືເອົາຜົນປະໂຫຍດສູງສຸດຂອງປະຊາຊົນຈີນອັນກວ້າງໃຫຍ່ທີ່ສຸດເປັນຈຸດເລີ່ມຕົ້ນນັ້ນ ເຊື່ອວ່າພາລະກິດຂອງຕົນຊອບທຳຢ່າງສົມບູນ, ບໍ່ເສຽດາຍໃນການເສຽສະຫຼະທຸກສິ່ງທຸກຢ່າງຂອງຕົນ, ກຽມພ້ອມທຸກເວລາທີ່ຈະສະຫຼະຊີວິດຂອງຕົນເພື່ອພາລະກິດຂອງພວກເຮົາ, ດັ່ງນີ້ແລ້ວຍັງຈະມີແນວຄິດ ທັດສະນະ ຄວາມເຫັນແລະວິທີອັນໃດທີ່ບໍ່ເໝາະສົມກັບຄວາມຕ້ອງການຂອງປະຊາຊົນທີ່ຍັງເສຽດາຍບໍ່ຍອມປະຖິ້ມອີກບໍ່? ພວກເຮົາຍັງຈະຍິນດີຕ້ອນຮັບຂີ້ຝຸ່ນການເມືອງ ຕົວຈຸລິນທີທາງການເມືອງໃດໆມາແປດເປື້ອນໃບໜ້າ

ອັນສະອາດຂອງພວກເຮົາ ແລະ ກັດກິນເນື້ອຕົວອັນສົມບູນຂອງພວກເຮົາອີກບໍ່? ວິລະຊົນຜູ້ເສຽຊີວິດເພື່ອການປະຕິວັດຈຳນວນນັບບໍ່ຖ້ວນ ໄດ້ສະຫຼະຊີວິດຂອງພວກເຂົາເຈົ້າເພື່ອຜົນປະໂຫຽດຂອງປະຊາຊົນ, ເຮັດໃຫ້ພວກເຮົາທີ່ຍັງມີຊີວິດຢູ່ທຸກຄົນເມື່ອຄິດຫາພວກເຂົາເຈົ້າ ກໍ່ຮູ້ສຶກເສົ້າສະຫຼົດໃຈ, ແລ້ວພວກເຮົາຍັງຈະມີຜົນປະໂຫຽດສ່ວນຕົວອັນໃດທີ່ຈະເສຽສະຫຼະບໍ່ໄດ້ ແລະຍັງມີຂໍ້ຜິດພາດອັນໃດຈະປະຖິ້ມບໍ່ໄດ້?

«ວ່າດ້ວຍລັດຖະບານປະສົມ» (ວັນທີ ໒໔-໔-໑໙໔໕)

ພວກເຮົາບໍ່ຄວນພໍອົກພໍໃຈໂລດຢ່າງເດັດຂາດໃນເມື່ອເຫັນຜົນງານຂອງຕົນ. ພວກເຮົາຄວນລະງັບຄວາມພໍໃຈຕົວເອງ, ຕຳນິຂໍ້ບົກພ່ອງຂອງຕົນທຸກເວລາ, ຄືດຽວກັບພວກເຮົາຕ້ອງສ່ວຍໜ້າຊູ່ມື້ ແລະກວາດເຮືອນຊູ່ມື້ເພື່ອຄວາມສະອາດແລະເພື່ອປັດຂີ້ຝຸ່ນຖິ້ມນັ້ນແລ້ວ.

«ຈົ່ງຈັດຕັ້ງກັນຂຶ້ນ» (ວັນທີ ໒໙-໑໑-໑໙໔໓)

ການຕຳນິຕ້ອງຕຳນິໃຫ້ທັນເວລາ, ຢ່າຊູນັກແຕ່ຕຳນິລຸນຫຼັງເຫດການ.

«ບັນຫາກ່ຽວກັບການຈັດຕັ້ງກະເສດຕະກຳໃຫ້ເປັນແບບສະຫະກອນ» (ວັນທີ ໓໑-໗-໑໙໕໕)

ຄວາມຜິດພາດ ແລະຄວາມເສຽຫາຍໄດ້ສັ່ງສອນພວກເຮົາ, ເຮັດໃຫ້ພວກເຮົາສະຫຼາດຂຶ້ນແດ່, ວຽກງານຂອງພວກເຮົາກໍ່ເຮັດໄດ້ດີຂຶ້ນແດ່. ບໍ່ວ່າພັກການເມືອງໃດໆ, ບຸກຄົນໃດໆ, ຍ່ອມຍາກທີ່ຈະຫຼີກເວັ້ນຄວາມຜິດພາດໄດ້, ແຕ່ພວກເຮົາຮຽກຮ້ອງໃຫ້ຜິດພາດໜ້ອຍແດ່. ຜິດພາດແລ້ວກໍ່ຕ້ອງດັດແປງແກ້ໄຂ, ດັດແປງແກ້ໄຂແຮ່ງໄວ ແຮ່ງເຖິງຖອງ ກໍ່ແຮ່ງດີ.

«ວ່າດ້ວຍການຜະເດັດການປະຊາທິປະໄຕປະຊາຊົນ» (ວັນທີ ໓໐-໖-໑໙໔໙)

໔໙. ສະມາຊິກພັກກອມມູນິດ

ສະມາຊິກພັກກອມມູນິດຜູ້ໜຶ່ງ ຄວນມີຈິດໃຈກວ້າງຂວາງ ປອດໃສ, ຊື່ສັດສຸດຈະລິດ, ຂະຫຍັນຫ້າວຫັນ, ຖືເອົາຜົນປະໂຫຽດຂອງການປະຕິວັດເປັນຍອດຊີວິດ, ເອົາຜົນປະໂຫຽດສ່ວນຕົວຂຶ້ນກັບຜົນປະໂຫຽດຂອງການປະຕິວັດ; ບໍ່ວ່າຍາມໃດ ແລະຢູ່ບ່ອນໃດກໍ່ຍຶດໝັ້ນຫຼັກການທີ່ຖືກຕ້ອງ, ຕໍ່ສູ້ກັບແນວຄິດ ແລະການປະພຶດທີ່ບໍ່ຖືກຕ້ອງທັງປວງຢ່າງບໍ່ຮູ້ອິດຮູ້ເມື່ອຍ ເພື່ອ ປັບປຸງຊີວິດຮວມໝູ່ຂອງພັກໃຫ້ໝັ້ນຄົງ, ປັບປຸງຄວາມພົວພັນ ລະຫວ່າງພັກກັບມວນຊົນໃຫ້ໝັ້ນຄົງ; ເອົາໃຈໃສ່ພັກແລະມວນ ຊົນຍິ່ງກວ່າເອົາໃຈໃສ່ສ່ວນຕົວ, ເອົາໃຈໃສ່ຜູ້ອື່ນຍິ່ງກວ່າເອົາ ໃຈໃສ່ຕົນເອງ. ແນວນີ້ຈຶ່ງນັບວ່າເປັນສະມາຊິກພັກກອມມູນິດ

ຜູ້ໜຶ່ງໄດ້.

«ຄັດຄ້ານລັດທິເສລີ» (ວັນທີ່ ໗-໙-໑໙໓໗)

ຄວນເຮັດໃຫ້ສະຫາຍທຸກຄົນເຂົ້າໃຈວ່າ ທຸກກິລິຍາວາຈາ ຂອງຊາວພັກກອມມູນິດ ຕ້ອງຖືການສອດຄ່ອງກັບຜົນປະໂຫຽດ ອັນໃຫຍ່ທີ່ສຸດຂອງປວງປະຊາຊົນອັນກວ້າງໃຫຍ່ທີ່ສຸດ ແລະ ໄດ້ ຮັບການສະໜັບສະໜູນອູ້ມຊູຈາກປວງປະຊາຊົນອັນກວ້າງໃຫຍ່ ທີ່ສຸດ ເປັນມາດຕະຖານສູງສຸດ.

«ວ່າດ້ວຍລັດຖະບານປະສົມ» (ວັນທີ່ ໒໔-໔-໑໙໔໕)

ບໍ່ວ່າຍາມໃດແລະຢູ່ບ່ອນໃດ, ສະມາຊິກພັກກອມມູນິດກໍ່ບໍ່ ຄວນຖືເອົາຜົນປະໂຫຽດສ່ວນຕົວໄວ້ໃນລຳດັບໜຶ່ງ, ແຕ່ຄວນ ເອົາຜົນປະໂຫຽດສ່ວນຕົວຂຶ້ນກັບຜົນປະໂຫຽດຂອງຊາດ ແລະ ຂອງປວງປະຊາຊົນ. ດ້ວຍເຫດນັ້ນ ຄວາມເຫັນແກ່ປະໂຫຽດ ສ່ວນຕົວ ຄວາມຫຍໍ້ທໍ້ຄ້ານອຽກ ການສໍ້ລາດບັງຫຼວງເສື່ອມ ຊາມ ລັດທິອອກໜ້າສະແດງຕົວ ໆລໆ ເປັນສິ່ງໜ້າດູໝິ່ນທີ່ສຸດ; ແຕ່ນ້ຳໃຈທີ່ເຫັນແກ່ສ່ວນຮວມບໍ່ເຫັນແກ່ສ່ວນຕົວ ການຂະ

ຫຽັນຫ້າວຫັນມານະພະຍາຍາມ ການເຂັ້ມງວດຕໍ່ຕົນເພື່ອສ່ວນຮວມແລະການກົ້ມໜ້າກົ້ມຕາບາກບັ່ນເຮັດວຽກນັ້ນ ຈິ່ງເປັນທີ່ໜ້າເຄົາລົບນັບຖື.

« ຖານະຂອງພັກກອມມູນິດຈີນໃນສົງຄາມຊາດ »
(ເດືອນ ໑໐-໑໙໓໘)

ຊາວພັກກອມມູນິດຕ້ອງກຽມຕົວຍຶດໝັ້ນສັດຈະທຳຢູ່ທຸກເວລາ, ເພາະວ່າ ສັດຈະທຳໃດໆລ້ວນແຕ່ສອດຄ້ອງກັບຜົນປະໂຫຽດຂອງປະຊາຊົນ; ຊາວພັກກອມມູນິດຕ້ອງກຽມຕົວດັດແກ້ຄວາມຜິດພາດຢູ່ທຸກເມື່ອ, ເພາະວ່າ ຄວາມຜິດພາດໃດໆ ລ້ວນແຕ່ບໍ່ສອດຄ້ອງກັບຜົນປະໂຫຽດຂອງປະຊາຊົນ.

«ວ່າດ້ວຍລັດຖະບານປະສົມ» (ວັນທີ ໒໔-໔-໑໙໔໕)

ບໍ່ວ່າຕໍ່ເລື່ອງໃດ, ສະມາຊິກພັກກອມມູນິດລ້ວນແຕ່ຕ້ອງຕັ້ງຄຳຖາມວ່າເປັນສັງ, ລ້ວນແຕ່ຕ້ອງຜ່ານສະໝອງຂອງຕົນຕຶກຕອງຢ່າງລະອຽດຮອບຄອບ, ຄຶດເບິ່ງວ່າມັນຖືກກັບຄວາມ

ຈິງຫຼືບໍ່, ມີເຫດຜົນແທ້ຫຼືບໍ່, ບໍ່ຄວນລຽຕາມຢ່າງຫຼັບຫູຫຼັບຕາເປັນອັນຂາດ, ບໍ່ຄວນສົ່ງເສີມລັດທິຂຽ້າເປັນອັນຂາດ.

«ປັບປຸງທ່າທ່ຳນອງຂອງພັກ» (ວັນທີ່ ໑-໒-໑໙໔໒)

ຕ້ອງສົ່ງເສີມໃຫ້ຄຳນຶງເຖິງພາກສ່ວນໃຫຽ່. ສະມາຊິກພັກແຕ່ລະຄົນ ວຽກງານພາກສ່ວນແຕ່ລະຢ່າງ ຄວາມເວົ້າຫຼືການກະທຳແຕ່ລະຢ່າງ ລ້ວນແຕ່ຕ້ອງຖືຜົນປະໂຫຽດຂອງທົ່ວພັກເປັນຈຸດເລີ່ມຕົ້ນ, ບໍ່ໃຫ້ຝ່າຝືນຫຼັກການນີ້ຢ່າງເດັດຂາດ.

«ປັບປຸງທ່າທ່ຳນອງຂອງພັກ» (ວັນທີ່ ໑-໒-໑໙໔໒)

ສະມາຊິກພັກກອມມູນິດຄວນເປັນຕົວຢ່າງໃນການຊອກຫາສັດຈະຈາກຄວາມເປັນຈິງ, ທັງເປັນຕົວຢ່າງໃນດ້ານເບິ່ງກວ້າງເຫັນໄກ. ເພາະວ່າ ມີແຕ່ຊອກຫາສັດຈະຈາກຄວາມເປັນຈິງຈິ່ງສາມາດສຳເລັດພາລະໜ້າທີ່ທີ່ໄດ້ກຳນົດໄວ້; ມີແຕ່ເບິ່ງກວ້າງເຫັນໄກ ຈິ່ງຈະບໍ່ຫຼົງທິດຜິດທາງໃນການມຸ່ງໜ້າກ້າວເດີນໄດ້.

« ຖານະຂອງພັກກອມມູນິດຈີນໃນສົງຄາມຊາດ »
(ເດືອນ ໑໐-໑໙໓໘)

ສະມາຊິກພັກກອມມູນິດຄວນເປັນຜູ້ທີ່ເບິ່ງກວ້າງເຫັນໄກທີ່ສຸດ ອຸດົມດ້ວຍນ້ຳໃຈເສຽສະຫຼະທີ່ສຸດ ເດັດດ່ຽວໜຽວແໜ້ນທີ່ສຸດ ທັງສາມາດຖ່ອມຕົວຊອກຮູ້ສະພາບການທີ່ສຸດ ອາໄສສ່ວນຫຼາຍຂອງມວນຊົນ ແລະໄດ້ຮັບການສະໜັບສະໜຸນອູ້ມຊູຈາກມວນຊົນ.

«ພາລະໜ້າທີ່ ຂອງພັກກອມມູນິດຈີນໃນສະໄໝຕໍ່ຕ້ານ
ຍີ່ປຸ່ນ» (ວັນທີ່ ໓-໕-໑໙໓໗)

ສະມາຊິກພັກກອມມູນິດຄວນເປັນຕົວຢ່າງໃນການຮ່ຳຮຽນອີກດ້ວຍ, ພວກເຂົາເຈົ້າເປັນຄູສອນຂອງປວງປະຊາຊົນຢູ່ຊູ່ມື້, ທັງເປັນລູກສິດຂອງປວງປະຊາຊົນຢູ່ຊູ່ມື້.

« ຖານະຂອງພັກກອມມູນິດຈີນໃນສົງຄາມຊາດ »
(ເດືອນ ໑໐-໑໙໓໘)

ໃນຂະບວນເຄື່ອນໄຫວຂອງປວງປະຊາຊົນ, ສະມາຊິກພັກກອມມູນິດຄວນເປັນເພື່ອນມິດຂອງປວງປະຊາຊົນ, ບໍ່ແມ່ນ

ເປັນເຈົ້ານາຍຂອງປວງປະຊາຊົນ, ເປັນຄູສອນຢ່າງບໍ່ຮູ້ອິດເມື່ອຍ, ບໍ່ແມ່ນເປັນນັກຫຼິ້ນການເມືອງແບບລັດທິອາດຍາສິດ.

« ຖານະຂອງພັກກອມມູນິດຈີນໃນສົງຄາມຊາດ »
(ເດືອນ ໑໐-໑໙໓໘)

ສະມາຊິກພັກກອມມູນິດຈະຫ່າງເຫີນຈາກຄົນສ່ວນ ຫຼາຍ ໃນມວນຊົນ ຈະບໍ່ຫົວຊາຕໍ່ສະພາບການຂອງຄົນສ່ວນຫຼາຍ ແລ້ວນຳພາຖັນແຖວຜູ້ກ້າວໜ້າຈຳນວນໜ້ປສ່ຽງບຸກໄປໜ້າຕາມລຳພັງນັ້ນບໍ່ໄດ້ຢ່າງເດັດຂາດ; ຕ້ອງເອົາໃຈໃສ່ຈັດຕັ້ງການພົວພັນອັນແໜ້ນແຟ້ນລະຫວ່າງຜູ້ກ້າວໜ້າກັບມວນຊົນອັນກວ້າງໃຫຽ່. ອັນນີ້ແມ່ນທັດສະນະທີ່ຄຳນຶງເຖິງສ່ວນຫຼາຍ.

« ຖານະຂອງພັກກອມມູນິດຈີນໃນສົງຄາມຊາດ »
(ເດືອນ ໑໐-໑໙໓໘)

ຊາວພັກກອມມູນິດພວກເຮົາປຽບຄືແນວປູກ ປະຊາຊົນປຽບຄືທີ່ດິນ. ເມື່ອພວກເຮົາໄປຮອດບ່ອນໃດບ່ອນໜຶ່ງ ກໍ່ຕ້ອງ

ປະສານເຂົ້າກັບປະຊາຊົນໃນບ່ອນນັ້ນ, ຢັ່ງຮາກແຕກດອກຢູ່ໃນໝູ່ປະຊາຊົນ.

« ກ່ຽວກັບການເຈລະຈາທີ່ເມືອງຈຸງກິງ » (ວັນທີ່ ໑໗-໑໐-໑໙໔໕)

ບໍ່ວ່າໃນບັນຫາໃດໆ, ສະມາຊິກພັກກອມມູນິດພວກເຮົາຕ້ອງປະສານເຂົ້າກັບມວນຊົນໃຫ້ໄດ້. ຖ້າສະມາຊິກພັກຂອງພວກເຮົານັ່ງຢູ່ແຕ່ໃນເຮືອນຕະຫຼອດຊາດຕະຫຼອດເຊັ່ນບໍ່ອອກໄປໃສ, ບໍ່ສູ້ລົມແຂ່ງຝົນ, ບໍ່ເຫັນໂລກ, ສະມາຊິກພັກແບບນີ້ມີປະໂຫຍດຫຍັງແດ່ຕໍ່ປະຊາຊົນຈີນ? ບໍ່ມີປະໂຫຍດຈັກດີ້ດອກ, ພວກເຮົາບໍ່ຕ້ອງການຄົນແບບນີ້ເປັນສະມາຊິກພັກ. ສະມາຊິກພັກກອມມູນິດພວກເຮົາຄວນສູ້ລົມແຂ່ງຝົນ, ໄປເຫັນໂລກ; ຝົນລົມໃນບ່ອນນີ້ແມ່ນພ້າຝົນລົມແດງແຫ່ງການຕໍ່ສູ້ຂອງມວນຊົນ, ໂລກໃນບ່ອນນີ້ແມ່ນໂລກອັນກວ້າງໃຫຍ່ແຫ່ງການຕໍ່ສູ້ຂອງມວນຊົນ.

«ຈົ່ງຈັດຕັ້ງກັນຂຶ້ນ» (ວັນທີ່ ໒໙-໑໑-໑໙໔໓)

ບົດບາດຕະລຸມບອນແລະບົດບາດທີ່ເປັນຕົວຢ່າງຂອງສະມາ

ຊິກພັກກອມມູນິດສຳຄັນທີ່ສຸດ. ໃນກອງທັບສາຍທີ ໘ ແລະກອງທັບທີ່ ໔ ໃໝ່, ສະມາຊິກພັກກອມມູນິດຄວນເປັນຕົວຢ່າງໃນການສູ້ລົບພິລະອາດຫານ, ເປັນຕົວຢ່າງໃນການປະຕິບັດຕາມຄຳສັ່ງ, ເປັນຕົວຢ່າງໃນການຮັກສາວິໄນ, ເປັນຕົວຢ່າງໃນການເຮັດວຽກງານການເມືອງ ແລະເປັນຕົວຢ່າງໃນດ້ານສາມັກຄີພາຍໃນເປັນອັນໜຶ່ງອັນດຽວກັນ.

« ຖານະຂອງພັກກອມມູນິດຈີນໃນສົງຄາມຊາດ » (ເດືອນ ໑໐-໑໙໓໘)

ສະມາຊິກພັກກອມມູນິດບໍ່ຄວນຖືວ່າຕົນຖືກສະເໝີ ຊຶ່ງຂັງມັງມໍ ຈອງຫອງຂົ່ມຄົນ ຖືວ່າຕົນເອງອັນໃດກໍ່ດີໝົດ ຜູ້ອື່ນອັນໃດກໍ່ບໍ່ດີໝົດເປັນອັນຂາດ; ບໍ່ຄວນຂັງໂຕຢູ່ໃນຫ້ອງນ້ອຍ ຄຸຍໂມ້ໂອ້ອວດ ຕັ້ງຕົວເປັນເຈົ້າໃຫຍ່ນາຍໂຕເປັນອັນຂາດ.

«ສຸນທອນພົດໃນສະພາທີ່ປຶກສາລາຊະການເຂດແດນຕໍ່ແດນແຂວງສ່ານຊີ — ການຊູ — ໜິງເສັຽ» (ວັນທີ່ ໒໑-໑໑-໑໙໔໑)

ສະມາຊິກພັກກອມມູນິດຕ້ອງຫ່ຽງຫູຟັງຄວາມເຫັນຂອງບຸກຄົນນອກພັກແລະໃຫ້ຜູ້ອື່ນມີໂອກາດເວົ້າ. ຄັນຜູ້ອື່ນເວົ້າຖືກ, ພວກເຮົາຄວນຊົມເຊີຍ ແລະຕ້ອງຮ່ຳຮຽນຈຸດດີຂອງຜູ້ອື່ນ; ຄັນຜູ້ອື່ນເວົ້າບໍ່ຖືກ ກໍ່ຄວນໃຫ້ຜູ້ອື່ນເວົ້າໝົດ, ແລ້ວຈຶ່ງຄ່ຽງອະທິບາຍທີຫຼັງ.

«ສຸນທອນພົດໃນສະພາທີ່ປຶກສາລາຊະການເຂດແດນຕໍ່ແດນແຂວງສ່ານຊີ — ການຊູ — ໜິງເສັ້ຽ»
(ວັນທີ່ ໒໑-໑໑-໑໙໔໑)

ຕໍ່ຜູ້ທີ່ເຄີຍຜິດພາດໃນວຽກງານ, ນອກຈາກຜູ້ທີ່ບໍ່ອາດປິ່ນປົວໄດ້ແລ້ວ, ສະມາຊິກພັກກອມມູນິດບໍ່ແມ່ນໃຊ້ທ່າທີປັດເຂ່ຽ, ແມ່ນໃຊ້ທ່າທີຕັກເຕືອນບອກສອນ, ເຮັດໃຫ້ເຂົາເຈົ້າກັບໃຈປ່ຽນແປງໂດຍໄວ, ຖິ້ມອັນເກົ່າເອົາອັນໃໝ່.

« ຖານະຂອງພັກກອມມູນິດຈີນໃນສົງຄາມຊາດ »
(ເດືອນ ໑໐-໑໙໓໘)

ຕໍ່ຄົນຫຼ້າຫຼັງນັ້ນ, ທ່າທີຂອງສະມາຊິກພັກກອມມູນິດ ບໍ່ແມ່ນເບິ່ງເບົາພວກເຂົາເຈົ້າ ດູໝິ່ນພວກເຂົາເຈົ້າ, ແຕ່ຕ້ອງໃກ້ຊິດຕິດແທດພວກເຂົາເຈົ້າ ສາມັກຄີພວກເຂົາເຈົ້າ ລຸລິ່ງພວກເຂົາເຈົ້າແລະເຊີດຊູກຳລັງໃຈໃຫ້ພວກເຂົາເຈົ້າກ້າວໜ້າ.

« ຖານະຂອງພັກກອມມູນິດຈີນໃນສົງຄາມຊາດ »
(ເດືອນ ໑໐-໑໙໓໘)

໔໙. ພະນັກງານ

ເພື່ອປະກັນບໍ່ໃຫ້ພັກແລະປະເທດຂອງພວກເຮົາປ່ຽນສີ, ພວກເຮົາບໍ່ພຽງແຕ່ຕ້ອງການແນວທາງແລະນະໂຍບາຍອັນຖືກຕ້ອງເທົ່ານັ້ນ, ຍັງຕ້ອງການບຳລຸງແລະກໍ່ສ້າງຜູ້ສືບຕໍ່ພາລະກິດປະຕິວັດຂອງຊົນຊັ້ນກຳມາຊີບເປັນລ້ານເປັນໂກດອີກດ້ວຍ.

ເວົ້າເຖິງທີ່ສຸດແລ້ວ ບັນຫາທີ່ບຳລຸງຜູ້ສືບຕໍ່ພາລະກິດປະຕິວັດຊົນຊັ້ນກຳມາຊີບ ແມ່ນບັນຫາທີ່ວ່າ ພາລະກິດປະຕິວັດຂອງລັດທິມາກເລນິນຊຶ່ງນັກປະຕິວັດຊົນຊັ້ນກຳມາຊີບລຸ້ນກ່ອນບຸກເບີກສ້າງຂຶ້ນນັ້ນ ຈະມີຄົນສືບຕໍ່ຫຼືບໍ່, ແມ່ນບັນຫາທີ່ວ່າ ໃນອະນາຄົດ ການນຳພາຂອງພັກແລະລັດຂອງພວກເຮົາຈະຕົກຢູ່ໃນກຳມືຂອງນັກປະຕິວັດຊົນຊັ້ນກຳມາຊີບຕໍ່ໄປໄດ້ຫຼືບໍ່, ແມ່ນບັນຫາທີ່ວ່າ ລູກຫຼານລຸ້ນຫຼັງຂອງພວກເຮົາຈະກ້າວໜ້າຕໍ່ໄປຕາມ

ເສັ້ນທາງອັນຖືກຕ້ອງຂອງລັດທິມາກເລນິນໄດ້ຫຼືບໍ່ ແລະກໍ່ແມ່ນບັນຫາທີ່ວ່າ ພວກເຮົາຈະປ້ອງກັນຢ່າງມີໄຊບໍ່ໃຫ້ລັດທິແກ້ຄະລຸດຊີບສະແດງຊ້ຳຢູ່ໃນປະເທດຈີນໄດ້ຫຼືບໍ່ນັ້ນເອງ. ຮວມຄວາມແລ້ວ, ອັນນີ້ແມ່ນບັນຫາຄວາມເປັນຄວາມຕາຍອັນສຳຄັນທີ່ສຸດທີ່ກ່ຽວພັນກັບຊະຕາກຳຂອງພັກແລະຂອງປະເທດຊາດພວກເຮົາ. ອັນນີ້ແມ່ນແຜນການໃຫຍ່ຮ້ອຍປີ ແຜນການໃຫຍ່ພັນປີ ແຜນການໃຫຍ່ໝື່ນປີຂອງພາລະກິດປະຕິວັດຊົນຊັ້ນກຳມາຊີບ. ໂດຍອີງຕາມການປ່ຽນແປງທີ່ໄດ້ເກີດຂຶ້ນໃນສະຫະພາບໂຊວຽດ, ພວກນັກພະຍາກອນຂອງຈັກກະພັດນິຍົມກໍ່ຝາກຄວາມຫວັງ “ການຜັນປ່ຽນໂດຍສັນຕິ” ໄວ້ນຳຄົນລຸ້ນທີ ໓ ຫຼືລຸ້ນທີ ໔ ຂອງພັກຈີນ. ແນວໃດພວກເຮົາກໍ່ຕ້ອງເຮັດໃຫ້ຄຳພະຍາກອນຂອງຈັກກະພັດນິຍົມນີ້ລົ້ມລະລາຍລົງຢ່າງຮາບຄາບ. ແນວໃດພວກເຮົາກໍ່ຕ້ອງເອົາໃຈໃສ່ບຳລຸງແລະກໍ່ສ້າງຜູ້ສືບຕໍ່ພາລະກິດປະຕິວັດແຕ່ຂັ້ນເທິງຕະຫຼອດຂັ້ນລຸ່ມຢ່າງທົ່ວເຖິງ ຢ່າງເປັນປະຈຳບໍ່ຂາດໄລຍະ.

ຈະເປັນຜູ້ສືບຕໍ່ພາລະກິດປະຕິວັດຊົນຊັ້ນກຳມາຊີບໄດ້ຕ້ອງປະກອບດ້ວຍເງື່ອນໄຂຫຍັງແດ່?

ພວກເຂົາເຈົ້າຕ້ອງເປັນນັກລັດທິມາກເລນິນແທ້, ບໍ່ແມ່ນພວກລັດທິແກ້ທີ່ຕິດປ້າຍລັດທິມາກເລນິນຄືດັ່ງຄະລຸດຊິບ.

ພວກເຂົາເຈົ້າຕ້ອງເປັນນັກປະຕິວັດທີ່ຮັບໃຊ້ຄົນຈຳນວນສ່ວນຫຼາຍທີ່ສຸດຂອງປະເທດຈີນ ແລະ ຂອງໂລກຢ່າງສຸດອົກສຸດໃຈ, ບໍ່ແມ່ນຮັບໃຊ້ຜົນປະໂຫຍດຊັ້ນຊົນອະພິສິດຊົນຊັ້ນເຈົ້າທຶນຫຍ່ອນໜ້ອຍພາຍໃນປະເທດ ແລະຮັບໃຊ້ຜົນປະໂຫຍດຂອງຈັກກະພັດນິຍົມແລະພວກປະຕິການໃນໂລກຄືດັ່ງຄະລຸດຊິບ.

ພວກເຂົາເຈົ້າຕ້ອງເປັນນັກການເມືອງຊົນຊັ້ນກຳມາຊີບທີ່ສາມາດສາມັກຄີກັບຄົນສ່ວນຫຼາຍທີ່ສຸດເພື່ອເຮັດວຽກຮ່ວມກັນ. ບໍ່ພຽງແຕ່ຕ້ອງສາມັກຄີຜູ້ທີ່ມີຄວາມເຫັນຄືກັບຕົນ, ຍັງຕ້ອງຊ່າງສາມັກຄີຜູ້ທີ່ມີຄວາມເຫັນຕ່າງກັບຕົນ, ຍັງຕ້ອງຊ່າງສາມັກຄີຜູ້ທີ່ເຄີຍຄັດຄ້ານຕົນຊຶ່ງໄດ້ຖືກພາກປະຕິບັດຢັ້ງຢືນວ່າເຂົາຜິດນັ້ນອີກດ້ວຍ. ແຕ່ວ່າ ຕ້ອງຍົກສະຕິລະວັງຕົວເປັນພິເສດ

ຕໍ່ພວກນັກໃຫຍ່ໃຝ່ສູງແລະເຈົ້າເລ່ເຈົ້າກົນຄືດັ່ງຄະລຸດຊິບ, ປ້ອງກັນບໍ່ໃຫ້ຄົນຊົ່ວແບບນີ້ຍາດຍຶດເອົາການນຳພາຂັ້ນຕ່າງໆຂອງພັກແລະລັດ.

ພວກເຂົາເຈົ້າຕ້ອງເປັນຕົວຢ່າງໃນການປະຕິບັດລະບອບປະຊາທິປະໄຕຮວມສູນຂອງພັກ, ຕ້ອງຮຽນຮູ້ວິທີນຳພາແບບ "ມາຈາກມວນຊົນ, ແລ້ວໄປສູ່ມວນຊົນ", ຕ້ອງຝຶກຝົນໃຫ້ມີທ່າທຳນອງປະຊາທິປະໄຕທີ່ຊ່າງຮັບຟັງຄວາມຄິດຄວາມເຫັນຂອງມວນຊົນ. ຈະທຳລາຍລະບອບປະຊາທິປະໄຕຮວມສູນຂອງພັກ ວາງອຳນາດບາດໃຫຍ່ ຫຼອນໂຈມຕີສະຫາຍຢ່າງກະທັນຫັນ ບໍ່ເວົ້າເຫດເວົ້າຜົນ ໃຊ້ອຳນາດຜະເດັດການໂດຍເອກະຊົນຄືດັ່ງຄະລຸດຊິບນັ້ນບໍ່ໄດ້.

ພວກເຂົາເຈົ້າຕ້ອງຖ່ອມຕົວ ສຸຂຸມຮອບຄອບ ລະເວັ້ນຄວາມອວດອົ່ງທະນົງຕົວ ລະເວັ້ນຄວາມຮ້ອນຮົນ ເຕັມໄປດ້ວຍນ້ຳໃຈຕຳນິຕົນເອງ ກ້າດັດແປງແກ້ໄຂຂໍ້ບົກພ່ອງແລະຄວາມຜິດພາດໃນວຽກງານຂອງຕົນ. ຈະປົກປິດຄວາມຜິດຊົ່ວ,

ໂຮບເອົາຄຸນງາມຄວາມດີທັງໝົດມາເປັນຂອງຕົນ, ໂຍນຄວາມຜິດທັງໝົດໃຫ້ຜູ້ອື່ນຄືດັ່ງຄະລຸດຊິບນັ້ນບໍ່ໄດ້ເປັນອັນຂາດ.

ຜູ້ສືບຕໍ່ພາລະກິດປະຕິວັດຊົນຊັ້ນກຳມາຊີບເກີດຂຶ້ນໃນການຕໍ່ສູ້ຂອງມວນຊົນ, ຈະເລີນເຕີບໃຫຍ່ຂຶ້ນຈາກການຫຼໍ່ຫຼອມໃນທ່າມກາງລົມແຮງຟອງໃຫຍ່ການປະຕິວັດ. ຄວນສຳຫຼວດກວດສອບແລະສັງເກດພະນັກງານ, ຄັດເລືອກແລະບຳລຸງສ້າງຜູ້ສືບຕໍ່ພາລະກິດຢູ່ໃນການຕໍ່ສູ້ຂອງມວນຊົນເປັນເວລາຍາວນານ.

ຄັດຈາກບົດຄວາມເລື່ອງ «ກ່ຽວກັບລັດທິກອມມູນິດຈອມປອມຂອງຄະລຸດຊິບແລະບົດຮຽນໃນປະວັດສາດຂອງໂລກໃນເລື່ອງນີ້» (ວັນທີ່ ໑໔-໗-໑໙໖໔)

ການຈັດຕັ້ງຂອງພັກເຮົາຕ້ອງຂະຫຍາຍໄປທົ່ວປະເທດ, ຕ້ອງກໍ່ສ້າງພະນັກງານເປັນຈຳນວນພື່ນໆດ້ວຍຄວາມຕື່ນຕົວ, ຕ້ອງມີຜູ້ນຳມວນຊົນຜູ້ດີທີ່ສຸດຫຼາຍຮ້ອຍຄົນ. ພະນັກງານແລະຜູ້ນຳເຫຼົ່ານີ້ຮູ້ລັດທິມາກເລນິນ, ເຫັນກວ້າງມອງໄກທາງການເມືອງ, ມີຄວາມສາມາດໃນການເຮັດວຽກ, ເຕັມໄປດ້ວຍນ້ຳ

ໃຈເສຍສະຫຼະ, ສາມາດແກ້ໄຂບັນຫາໂດຍຕົນເອງໄດ້, ມີຄວາມຫຍຸ້ງຍາກບໍ່ຫວັ່ນໄຫວ, ເຮັດວຽກເພື່ອຊາດ ເພື່ອຊົນຊັ້ນ ເພື່ອພັກຢ່າງຊື່ສັດສຸດຈະລິດ. ພັກອາໄສຄົນເຫຼົ່ານີ້ໄປໃກ້ຊິດຕິດແທດກັບສະມາຊິກພັກແລະມວນຊົນ, ອາໄສຄົນເຫຼົ່ານີ້ນຳພາມວນຊົນຢ່າງເຂັ້ມແຂງໄປບັນລຸເຖິງຈຸດປະສົງໂຄ່ນລົ້ມສັດຕູ. ຄົນເຫຼົ່ານີ້ບໍ່ເຫັນແກ່ຜົນປະໂຫຍດສ່ວນຕົວ, ບໍ່ມີລັດທິວິລະຊົນເອກະຊົນແລະລັດທິອອກໜ້າສະແດງຕົວ, ບໍ່ກຽດຄ້ານແລະບໍ່ຫຍິ່ງຫໍ້, ບໍ່ມີລັດທິພັກພວກທີ່ອວດອ້າງທະນົງຕົວ, ພວກເຂົາເຈົ້າແມ່ນວິລະຊົນຂອງຊາດຂອງຊົນຊັ້ນທີ່ເຫັນແກ່ສ່ວນຮວມບໍ່ເຫັນແກ່ສ່ວນຕົວ, ອັນນີ້ແຫຼະແມ່ນອຸປະນິໄສແລະທ່າທາງທີ່ສະມາຊິກພັກກອມມູນິດ ພະນັກງານຂອງພັກແລະຜູ້ນຳຂອງພັກຄວນມີ.

«ຕໍ່ສູ້ເພື່ອຍາດແຍ່ງມວນຊົນເປັນລ້ານເປັນໂກດເຂົ້າຮ່ວມແນວໂຮມຊາດຕໍ່ຕ້ານຍີ່ປຸ່ນ» (ວັນທີ່ ໗-໕-໑໙໓໗)

ຫຼັງຈາກໄດ້ກຳນົດແນວທາງການເມືອງແລ້ວ ພະນັກງານແມ່ນປັດໃຈຊີ້ຂາດ. ດັ່ງນັ້ນ ການບຳລຸງສ້າງພະນັກງານໃຫ້ເປັນຈຳນວນຫຼາຍຢ່າງມີແຜນການ ກໍ່ແມ່ນໜ້າທີ່ສູ້ລົບຂອງພວກເຮົາ.

« ຖານະຂອງພັກກອມມູນິດຈີນໃນສົງຄາມຊາດ »
(ເດືອນ ໑໐-໑໙໓໘)

ນະໂຍບາຍພະນັກງານຂອງພັກກອມມູນິດຄວນຖືຕາມມາດຕະຖານນີ້ ຄື ສາມາດປະຕິບັດແນວທາງຂອງພັກຢ່າງເດັດດ່ຽວ ປະຕິບັດຕາມວິໄນຂອງພັກ ສຳພັນກັບມວນຊົນຢ່າງສະໜິດແໜ້ນ ມີຄວາມສາມາດເຮັດວຽກໂດຍຕົນເອງ ເຮັດວຽກຢ່າງຂະຫຍັນຫ້າວຫັນ ບໍ່ສະແຫວງຫາຜົນປະໂຫຍດສ່ວນຕົວຫຼືບໍ່, ອັນນີ້ແມ່ນແນວທາງ "ໃຊ້ຄົນຕາມຄຸນສົມບັດແລະຄວາມສາມາດ" ນັ້ນເອງ.

« ຖານະຂອງພັກກອມມູນິດຈີນໃນສົງຄາມຊາດ »
(ເດືອນ ໑໐-໑໙໓໘)

ຕ້ອງຍຶດໝັ້ນລະບອບທີ່ພະນັກງານເຂົ້າຮ່ວມອອກແຮງງານການຜະລິດຮວມໝູ່. ພະນັກງານຂອງພັກແລະຂອງລັດພວກເຮົາແມ່ນຜູ້ອອກແຮງງານທຳມະດາ, ບໍ່ແມ່ນເຈົ້ານາຍທີ່ຂີ່ຄໍປະຊາຊົນ. ພະນັກງານຕ້ອງຮັກສາຄວາມສຳພັນອັນກວ້າງຂວາງ, ເປັນປະຈຳແລະສະໜິດແໜ້ນທີ່ສຸດກັບປະຊາຊົນຜູ້ອອກແຮງງານໂດຍຜ່ານການເຂົ້າຮ່ວມອອກແຮງງານການຜະລິດຮວມໝູ່. ອັນນີ້ແມ່ນເລື່ອງໃຫຍ່ເລື່ອງໜຶ່ງທີ່ມີລັກສະນະຕົ້ນຕໍໃນລະບອບສັງຄົມນິຍົມ, ມັນຊ່ວຍກຳຈັດລັດທິອາດຍາສິດ, ປ້ອງກັນບໍ່ໃຫ້ເກີດລັດທິແກ້ແລະລັດທິຄຳພີ.

ຄັດຈາກບົດຄວາມເລື່ອງ «ກ່ຽວກັບລັດທິກອມມູນິດຈອມປອມຂອງຄະລຸດຊົບແລະບົດຮຽນໃນປະວັດສາດຂອງໂລກໃນເລື່ອງນີ້» (ວັນທີ ໑໔-໗-໑໙໖໔)

ຕ້ອງຊ່າງສັງເກດພະນັກງານ. ບໍ່ພຽງແຕ່ຕ້ອງສັງເກດຊົ່ວໄລຍະໜຶ່ງເລື່ອງໜຶ່ງຂອງພະນັກງານທີ່ນັ້ນ ຍັງຕ້ອງສັງເກດຊີວະ

ປະວັດທັງໝົດແລະວຽກງານທັງໝົດຂອງເຂົາເຈົ້າ, ອັນນີ້ແມ່ນວິທີສຳຄັນໃນການສັງເກດພະນັກງານ.

« ຖານະຂອງພັກກອມມູນິດຈີນໃນສົງຄາມຊາດ »

(ເດືອນ ໑໐-໑໙໕໘)

ຕ້ອງຈ່າງໃຊ້ພະນັກງານ. ສະຫຼຸບແລ້ວ ໜ້າທີ່ຂອງຜູ້ນຳພາສຳຄັນແມ່ນສອງເລື່ອງ ຄື ວາງຄວາມຄິດເຫັນອອກແລະໃຊ້ພະນັກງານ. ທຸກແຜນການ ມະຕິ ຄຳສັ່ງ ຄຳຊີ້ແຈງ ໆລໆ ລ້ວນແຕ່ຢູ່ໃນປະເພດ "ວາງຄວາມຄິດເຫັນອອກ" ທັງນັ້ນ. ການທີ່ຈະເຮັດໃຫ້ຄວາມຄິດເຫັນທັງໝົດນີ້ໄດ້ຮັບການປະຕິບັດ ກໍ່ຕ້ອງສາມັກຄີພະນັກງານ ແລະຊຸກຍູ້ໃຫ້ພວກເຂົາເຈົ້າໄປເຮັດ, ອັນນີ້ຢູ່ໃນປະເພດ "ໃຊ້ພະນັກງານ".

« ຖານະຂອງພັກກອມມູນິດຈີນໃນສົງຄາມຊາດ »

(ເດືອນ ໑໐-໑໙໕໘)

ຕ້ອງຈ່າງຖະໜອມຮັກແພງພະນັກງານ. ວິທີຖະໜອມຮັກແພງນັ້ນຄື ໑. ຊີ້ນຳພວກເຂົາເຈົ້າ. ຄືວ່າປ່ອຍໃຫ້ພວກເຂົາເຈົ້າ

ເຮັດວຽກຢ່າງເຕັມທີ່ ເພື່ອໃຫ້ພວກເຂົາເຈົ້າກ້າຮັບຜິດຊອບ; ພ້ອມກັນນັ້ນ ຍັງໃຫ້ການຊີ້ແຈງເໝາະກັບເວລາ, ເພື່ອໃຫ້ພວກເຂົາເຈົ້າສາມາດສົ່ງເສີມຫົວຄິດປະດິດສ້າງຂອງພວກເຂົາເຈົ້າພາຍໃຕ້ແນວທາງການເມືອງຂອງພັກ. ໒. ຍົກລະດັບພວກເຂົາເຈົ້າໃຫ້ສູງ. ຄືວ່າໃຫ້ໂອກາດຮໍ່າຮຽນ, ອົບຮົມພວກເຂົາເຈົ້າ, ເພື່ອໃຫ້ພວກເຂົາເຈົ້າຍົກລະດັບທິດສະດີແລະຄວາມສາມາດເຮັດວຽກໃຫ້ສູງຂຶ້ນອີກກ້າວໜຶ່ງ. ໓. ສຳຫຼວດກວດກາວຽກງານຂອງພວກເຂົາເຈົ້າ, ຊ່ວຍພວກເຂົາເຈົ້າສະຫຼຸບບົດຮຽນ, ເພື່ອຂະຫຍາຍຜົນງານແລະແກ້ໄຂດັດແປງຄວາມຜິດພາດ. ມີການມອບໝາຍແຕ່ບໍ່ມີການສຳຫຼວດກວດກາ ຈົນວ່າເກີດຄວາມຜິດໜັກໜ່ວງຂຶ້ນແລ້ວ ຈຶ່ງເອົາໃຈໃສ່, ອັນນີ້ບໍ່ແມ່ນວິທີຖະໜອມຮັກແພງພະນັກງານ. ໔. ສຳລັບພະນັກງານທີ່ມີຄວາມຜິດນັ້ນ, ໂດຍທົ່ວໄປແລ້ວຄວນໃຊ້ວິທີລຸລ້ຽງ, ຊ່ວຍພວກເຂົາເຈົ້າດັດແປງແກ້ໄຂຄວາມຜິດ. ມີແຕ່ພວກທີ່ຜິດພາດໜັກໜ່ວງທັງບໍ່ຮັບການຊີ້ນຳນັ້ນ ຈຶ່ງຄວນໃຊ້ວິທີຕໍ່ສູ້. ໃນບ່ອນນີ້ ຄວາມອົດທົນເປັນ

ສິ່ງຈຳເປັນ: ການສຸບພວກໃຫຍ່ "ລັດທິສວຍໂອກາດ" ໃຫ້ພວກເຂົາເຈົ້າຢ່າງງ່າຍດາຍແລະໃຊ້ວິທີ "ເປີດການຕໍ່ສູ້" ຢ່າງງ່າຍດາຍນັ້ນບໍ່ຖືກ. ໕. ເບິ່ງແຍງຄວາມຫຍຸ້ງຍາກຂອງພວກເຂົາເຈົ້າ. ພະນັກງານຜູ້ທີ່ມີບັນຫາຫຍຸ້ງຍາກໃນເລື່ອງເຈັບໄຂ້ໄດ້ປ່ວຍ ຊີວິດການເປັນຢູ່ແລະຄອບຄົວເປັນຕົ້ນ ຕ້ອງເອົາໃຈໃສ່ເບິ່ງແຍງໃນຂອບເຂດທີ່ສາມາດເຮັດໄດ້. ສິ່ງເຫຼົ່ານີ້ແມ່ນວິທີການທີ່ຖະໜອມຮັກແພງພະນັກງານນັ້ນເອງ.

« ຖານະຂອງພັກກອມມູນິດຈີນໃນສົງຄາມຊາດ »
(ເດືອນ ໑໐-໑໙໓໘)

ຜູ້ເປັນຫຼັກແຫຼ່ງນຳພາທີ່ສຳນັກຄິດເປັນອັນໜຶ່ງອັນດຽວແລະໃກ້ຊິດຕິດແທດມວນຊົນແທ້ນັ້ນ ຕ້ອງຄ່ອຍໆເປັນຮູບເປັນຮ່າງຂຶ້ນໃນການຕໍ່ສູ້ຂອງມວນຊົນ, ບໍ່ແມ່ນຈະເປັນຮູບເປັນຮ່າງຂຶ້ນໂດຍຫ່າງເຫີນຈາກການຕໍ່ສູ້ຂອງມວນຊົນ. ພາຍໃຕ້ສະພາບການສ່ອນຫຼາຍ, ຕະຫຼອດໄລຍະການຕໍ່ສູ້ອັນຍິ່ງໃຫຍ່ອັນໜຶ່ງ, ຫຼັກແຫຼ່ງນຳພາໃນໄລຍະຕົ້ນ ໄລຍະກາງແລະໄລຍະສຸດທ້າຍນັ້ນ,

ບໍ່ຄວນເປັນແລະບໍ່ອາດຈະເປັນຄືດຽວກັນໝົດ: ຕ້ອງເລື່ອນເອົາຜູ້ຂະຫຍັນຫ້າວຫັນທີ່ເກີດຂຶ້ນໃນການຕໍ່ສູ້ນັ້ນຂຶ້ນມາປ່ຽນແທນພວກທີ່ປຽບທຽບແລ້ວເຫັນວ່າອ່ອນກວ່າຫຼືຜູ້ທີ່ເສື່ອມຊາມແລ້ວໃນບັນດາຫຼັກແຫຼ່ງເດີມຢ່າງບໍ່ຂາດສາຍ.

« ບັນຫາບາງຂໍ້ກ່ຽວກັບວິທີນຳພາ » (ວັນທີ່ ໑-໖-໑໙໔໓)

ພັກເຮົາຖ້າບໍ່ມີພະນັກງານໃໝ່ອັນກວ້າງໃຫຍ່ມາຮ່ວມມືເປັນອັນໜຶ່ງອັນດຽວກັນກັບພະນັກງານເກົ່າແລ້ວ, ພາລະກິດຂອງພວກເຮົາກໍ່ຈະຢຸດຊະງັກ. ດັ່ງນັ້ນ ພະນັກງານເກົ່າທັງໝົດຄວນຕ້ອນຮັບພະນັກງານໃໝ່ ແລະເອົາໃຈໃສ່ພະນັກງານໃໝ່ດ້ວຍນ້ຳໃຈອົບອຸ່ນທີ່ສຸດ. ຖືກຢູ່, ພະນັກງານໃໝ່ມີຂໍ້ບົກພ່ອງ, ພວກເຂົາເຈົ້າເຂົ້າຮ່ວມການປະຕິວັດຍັງບໍ່ດົນ, ຍັງຂາດບົດຮຽນ, ໃນໝູ່ເຂົາເຈົ້າມີບາງຄົນຍັງບໍ່ພົ້ນຈາກການນຳເອົາທາງແນວຄິດບໍ່ດີຂອງສັງຄົມເກົ່າຕິດມາພ້ອມ ຊຶ່ງແມ່ນເສດເຫຼືອ

ຂອງແນວຄິດວັດທິເອກະຊົນຂອງຊົນຊັ້ນເຈົ້າທຶນນ້ອຍ. ແຕ່ຂໍ້ບົກພ່ອງເຫຼົ່ານີ້ສາມາດຄ່ອຍໆກຳຈັດຖິ້ມໂດຍຜ່ານການອົບຮົມແລະການຫຼໍ່ຫຼອມໃນການປະຕິວັດໄດ້. ຈຸດດີຂອງພວກເຂົາເຈົ້ານັ້ນກໍ່ດັ່ງສະຕາລິນໄດ້ເຄີຍເວົ້າມາຄື ມີຄວາມຮູ້ສຶກໄວຕໍ່ວັດຖຸເຫດການໃໝ່ໆ, ດັ່ງນັ້ນ ຈິ່ງມີຄວາມເຮັ່ງຮ້ອນແລະຄວາມຂະຫຍັນຫ້າວຫັນໃນລະດັບສູງ, ແຕ່ວ່າ ພະນັກງານເກົ່າບາງຄົນຊ້ຳພັດຂາດຈຸດນີ້. ພະນັກງານໃໝ່ແລະເກົ່າຄວນເຄົາລົບນັບຖືຊຶ່ງກັນແລະກັນ, ຮ່ຳຮຽນຊຶ່ງກັນແລະກັນ, ເອົາຈຸດດີມາແທນໃສ່ຈຸດອ່ອນ, ເພື່ອສາມັກຄີເປັນອັນໜຶ່ງອັນດຽວກັນ, ດຳເນີນພາລະກິດຮອມ, ກັ້ນກາງຄວາມຫ່ຽງໄປທາງລັດທິພັກພວກ.

«ປັບປຸງທ່າທຳນອງຂອງພັກ» (ວັນທີ່ ໑-໖-໑໙໔໘)

ບໍ່ພຽງແຕ່ຕ້ອງເອົາໃຈໃສ່ພະນັກງານຜູ້ເປັນສະມາຊິກພັກ, ຍັງຕ້ອງເອົາໃຈໃສ່ພະນັກງານຜູ້ບໍ່ແມ່ນສະມາຊິກພັກອີກດ້ວຍ. ຢູ່ນອກພັກມີຜູ້ມີຄວາມສາມາດເປັນຈຳນວນຫຼາຍ, ພັກກອມ

ມູນິດຈະບໍ່ເອົາຫົວຊາຕໍ່ພວກເຂົາເຈົ້າບໍ່ໄດ້. ການປະຖິ້ມນິດໄສໂດດດ່ຽວຖືຕົວ ຊ່າງເຮັດວຽກຮ່ວມກັນກັບພະນັກງານຜູ້ບໍ່ແມ່ນສະມາຊິກພັກ ຊ່ວຍເຫຼືອພວກເຂົາເຈົ້າຢ່າງຈິງໃຈ ໃຊ້ທ່າທີອັນອົບອຸ່ນຖານສະຫາຍຕໍ່ພວກເຂົາເຈົ້າ, ແລະເອົາຄວາມຂະຫຍັນຫ້າວຫັນຂອງພວກເຂົາເຈົ້າປະກອບເຂົ້າໃນພາລະກິດອັນຍິ່ງໃຫຍ່ໃນການຕໍ່ຕ້ານຍີ່ປຸ່ນແລະສ້າງປະເທດຊາດນັ້ນ ແມ່ນໜ້າທີ່ຂອງສະມາຊິກພັກກອມມູນິດທຸກຄົນ.

« ຖານະຂອງພັກກອມມູນິດຈີນໃນສົງຄາມຊາດ »

(ເດືອນ ໑໐-໑໙໓໘)

໓໐. ຊາວໜຸ່ມ

ໂລກແມ່ນຂອງພວກເຈົ້າແລະກໍ່ແມ່ນຂອງພວກເຮົາ, ແຕ່ເວົ້າເຖິງກົກເຖິງຮາກແລ້ວ ແມ່ນຂອງພວກເຈົ້າ. ພວກເຈົ້າຊາວໜຸ່ມມີນ້ຳໃຈສົດຊື່ນພິດພື້ນ, ພວມຢູ່ໃນໄວຈະເລີນຮຸ່ງເຮືອງ, ຄືກັບຕາເວັນໃນຍາມ ໘,໙ ໂມງເຊົ້າ. ຄວາມຫວັງຝາກໄວ້ກັບພວກເຈົ້າ.

....

ໂລກແມ່ນຂອງພວກເຈົ້າ. ອະນາຄົດຂອງປະເທດຈີນແມ່ນຂອງພວກເຈົ້າ.

ຄຳສົນທະນາໃນໂອກາດພົບນັກສຶກສາແລະນັກສຶກສາຝຶກພາກປະຕິບັດຂອງຈີນໃນຕ່າງປະເທດທີ່ໂມສະກູ (ວັນທີ່ ໑໗-໑໑-໑໙໕໗)

ຕ້ອງໃຫ້ຊາວໜຸ່ມທັງໝົດເຂົ້າໃຈວ່າ ເວລານີ້ ປະເທດເຮົາຍັງເປັນປະເທດທຸກຈົນຫຼາຍ ແລະບໍ່ສາມາດປ່ຽນແປງສະພາບແນວນີ້ໃນຂັ້ນຮາກຖານພາຍໃນເວລາອັນສັ້ນໆໄດ້, ຕ້ອງອາໄສຊາວໜຸ່ມແລະປະຊາຊົນທັງປວງ ສາມັກຄີກັນບາກບັ່ນຕໍ່ສູ້ເປັນເວລາຫຼາຍສິບປີ, ສ້າງປະເທດທີ່ຮັ່ງມີເຂັ້ມແຂງຂຶ້ນດ້ວຍສອງຝ່າມືຂອງຕົນ. ການສ້າງຕັ້ງລະບອບສັງຄົມນິຍົມຂຶ້ນນັ້ນໄດ້ໄຂທາງໄປສູ່ແດນອຸດົມຄະຕິໃຫ້ແກ່ພວກເຮົາ, ແຕ່ການປາກົດເປັນຈິງຂຶ້ນຂອງແດນອຸດົມຄະຕິນີ້ ຍັງຕ້ອງອາໄສການອອກເຫື່ອເຫແຮງຢ່າງຂະຫຍັນໝັ່ນພຽນຂອງພວກເຮົາ.

«ບັນຫາກ່ຽວກັບການແກ້ໄຂຄວາມຂັດແຍ້ງພາຍໃນປະຊາຊົນຢ່າງຖືກຕ້ອງ» (ວັນທີ່ ໒໗-໒-໑໙໕໗)

ຍ້ອນຂາດບົດຮຽນການເມືອງແລະບົດຮຽນໃນຊີວິດສັງຄົມ, ຊາວໜຸ່ມຈຳນວນບໍ່ໜ້ອຍ ຈຶ່ງບໍ່ຮູ້ຈັກປຽບທຽບປະເທດຈີນເກົ່າກັບປະເທດຈີນໃໝ່, ຍາກທີ່ຈະເຂົ້າໃຈຢ່າງເລິກຊຶ້ງໄດ້ວ່າ

ປະຊາຊົນປະເທດເຮົາເຄີຍຜ່ານການຕໍ່ສູ້ອັນແສນລຳບາກແນວໃດ ຈຶ່ງຫຼຸດພົ້ນຈາກການກົດຂີ່ຂອງຈັກກະພັດນິຍົມແລະພວກປະຕິການກົກນິນຕັງ ແລະການສ້າງຕັ້ງສັງຄົມສັງຄົມນິຍົມອັນສວຍງາມຂຶ້ນຈະຕ້ອງຜ່ານການອອກແຮງງານຢ່າງທໍລະຫົດເປັນເວລາຍາວນານແນວໃດ. ດ້ວຍເຫດນີ້ ໃນໝູ່ປະຊາຊົນຕ້ອງດຳເນີນການອົບຮົມທາງການເມືອງຢ່າງມີຊີວິດຊີວາແລະຕິດແທດກັບຄວາມເປັນຈິງຢູ່ເນື່ອງນິດ, ທັງຄວນເອົາຄວາມຫຍຸ້ງຍາກທີ່ເກີດຂຶ້ນນັ້ນອະທິບາຍຊີ້ແຈງໃຫ້ພວກເຂົາເຈົ້າຕາມຄວາມເປັນຈິງແລະຮ່ວມກັບພວກເຂົາເຈົ້າຄົ້ນຄວ້າວິທີທີ່ຈະແກ້ໄຂຄວາມຫຍຸ້ງຍາກແນວໃດຢູ່ສະເໝີ.

«ບັນຫາກ່ຽວກັບການແກ້ໄຂຄວາມຂັດແຍ້ງພາຍໃນປະຊາຊົນຢ່າງຖືກຕ້ອງ» (ວັນທີ ໒໗-໒-໑໙໕໗)

ຊາວໜຸ່ມເປັນກຳລັງທີ່ຂະຫຍັນຫ້າວຫັນທີ່ສຸດແລະມີຊີວິດຊີວາທີ່ສຸດສ່ວນໜຶ່ງໃນກຳລັງສັງຄົມທັງໝົດ. ພວກເຂົາເຈົ້າມັກ

ຮ່ຳຮຽນທີ່ສຸດ, ມີແນວຄິດນິຍົມອັນເກົ່າໜ້ອຍທີ່ສຸດ, ໂດຍສະເພາະໃນສະໄໝສັງຄົມນິຍົມກໍ່ແຮ່ງເປັນແນວນີ້. ຫວັງວ່າທຸກອົງການຈັດຕັ້ງຂອງພັກໃນທຸກບ່ອນຄົງຈະຮ່ວມມືຊ່ວຍເຫຼືອອົງການຈັດຕັ້ງຂອງຄະນະຊາວໜຸ່ມ, ເອົາໃຈໃສ່ຄົ້ນຄວ້າວ່າ ຈະສົ່ງເສີມກຳລັງຂອງຊາວໜຸ່ມເປັນພິເສດແນວໃດ, ບໍ່ຄວນຖືພວກເຂົາເຈົ້າຄືກັນກັບຄົນທົ່ວໄປແລະລົບລ້າງຈຸດພິເສດຂອງພວກເຂົາເຈົ້າ. ແນ່ນອນ ຊາວໜຸ່ມຕ້ອງຮ່ຳຮຽນນຳຜູ້ເຖົ້າຜູ້ແກ່ແລະຜູ້ໃຫຍ່, ຕ້ອງດຳເນີນການເຄື່ອນໄຫວທີ່ມີປະໂຫຍດຕ່າງໆໂດຍພະຍາຍາມຂໍຄວາມເຫັນດີເຫັນພ້ອມຈາກຜູ້ເຖົ້າຜູ້ແກ່ແລະຜູ້ໃຫຍ່ເທົ່າທີ່ຈະເຮັດໄດ້.

ໝາຍເຫດໃນບົດຄວາມເລື່ອງ «ກອງຕະລຸນບອນຊາວໜຸ່ມຂອງສະຫະກອນການຜະລິດກະເສດທີ ໙ ຕາແສງຊິນພິງ ເມືອງຈົງຊານ» (ປີ ໑໙໕໕)

ເອົາຫຍັງເປັນມາດຕະຖານເພື່ອສັງເກດຊາວໜຸ່ມຜູ້ໜຶ່ງວ່າເປັນຜູ້ປະຕິວັດຫຼືບໍ່? ຈະເອົາອັນໃດໄປວິນິດໄສເຂົາເຈົ້າ? ມີແຕ່

ນາດຕະຖານດຽວ ຄື ຕ້ອງເບິ່ງວ່າເຂົາເຈົ້າຍິນດີຫຼືບໍ່ຍິນດີ ທັງປະຕິບັດຫຼືບໍ່ປະຕິບັດການຮ່ວມປະສານເປັນອັນໜຶ່ງອັນດຽວກັບມວນຊົນກຳມະກອນຊາວນາອັນກວ້າງໃຫຍ່. ຄົນຍິນດີທັງປະຕິບັດການຮ່ວມປະສານກັບກຳມະກອນຊາວນາແລ້ວກໍ່ແມ່ນຜູ້ປະຕິວັດ, ຖ້າບໍ່ດັ່ງນັ້ນ ກໍ່ແມ່ນຜູ້ບໍ່ປະຕິວັດຫຼືແມ່ນຜູ້ຕ້ານປະຕິວັດ. ຄັນມື້ນີ້ເຂົາເຈົ້າຮ່ວມປະສານກັບມວນຊົນກຳມະກອນຊາວນາ, ມື້ນີ້ເຂົາເຈົ້າກໍ່ແມ່ນຜູ້ປະຕິວັດ, ແຕ່ຫາກມື້ອື່ນເຂົາເຈົ້າບໍ່ໄປຮ່ວມປະສານຫຼືກັບມາກົດຂີ່ປະຊາຊົນ, ເຂົາເຈົ້າກໍ່ແມ່ນຜູ້ບໍ່ປະຕິວັດຫຼືແມ່ນຜູ້ຕ້ານປະຕິວັດແລ້ວ.

«ທິດທາງຂະບວນເຄື່ອນໄຫວຊາວໜຸ່ມ» (ວັນທີ່ ໔-໕-໑໙໓໙)

ໃນເວລາທີ່ນັກຮຽນຮູ້ຍັງບໍ່ທັນໄດ້ສະໜິດຕິດແທດເປັນປຶກແຜ່ນດຽວກັບການຕໍ່ສູ້ປະຕິວັດຂອງມວນຊົນ ຍັງບໍ່ທັນໄດ້ຕັດສິນໃຈຮັບໃຊ້ຜົນປະໂຫຍດຂອງມວນຊົນ ແລະ ຮ່ວມປະສານກັບ

ມວນຊົນນັ້ນ, ພວກເຂົາເຈົ້າມັກມີທ່າຫ່ຽງທາງລັດທິໃນຕົວແລະທາງລັດທິເອກະຊົນ, ແນວຄິດຂອງພວກເຂົາເຈົ້າມັກຫວ້າງເປົ່າ, ການກະທຳຂອງພວກເຂົາເຈົ້າມັກຫວັ່ນໄຫວຄອນແຄນ. ດ້ວຍເຫດນີ້ ແມ່ນວ່ານັກຮຽນຮູ້ປະຕິວັດອັນກວ້າງໃຫຍ່ຂອງຈີນມີບົດບາດຕະລຸນບອນແລະບົດບາດເປັນຂົວກໍ່ຕາມ, ແຕ່ບໍ່ແມ່ນວ່ານັກຮຽນຮູ້ເຫຼົ່ານີ້ຈະສາມາດປະຕິວັດຈົນເຖິງທີ່ສຸດໄດ້ໝົດທຸກຄົນ. ໃນຍາມການປະຕິວັດຕົກຢູ່ໃນພາວະຄັບຂັນ, ຄົນສ່ວນໜຶ່ງໃນໝູ່ພວກເຂົາເຈົ້າກໍ່ຈະປົກໜີຈາກຖັນແຖວປະຕິວັດ, ໃຊ້ທ່າທີຫຍໍ້ທໍ້; ຄົນສ່ວນໜ້ອຍໃນໝູ່ພວກເຂົາເຈົ້າ ກໍ່ຈະກາຍເປັນສັດຕູຂອງການປະຕິວັດ. ມີແຕ່ຢູ່ໃນການຕໍ່ສູ້ອັນຍາວນານຂອງມວນຊົນທໍ່ນັ້ນ, ຈຸດບົກພ່ອງຂອງນັກຮຽນຮູ້ນີ້ຈຶ່ງຈະແກ້ໄຂໄດ້.

« ການປະຕິວັດຈີນກັບພັກກອມມູນິດຈີນ » (ເດືອນ ໑໒-໑໙໓໙)

ນອກຈາກຄວນສົມທົບວຽກງານໃຈກາງຂອງພັກຕໍ່ໄປແລ້ວ, ຄະນະຊາວໜຸ່ມຍັງຕ້ອງມີວຽກສະເພາະຂອງຕົນທີ່ເໝາະສົມກັບຈຸດພິເສດຂອງຊາວໜຸ່ມ. ປະເທດຈີນໃໝ່ຕ້ອງຄຳນຶງເຖິງຊາວໜຸ່ມທັງຫຼາຍ, ຕ້ອງເອົາໃຈໃສ່ນຳຄວາມເຕີບໃຫຽ່ຂອງລຸ່ນໜຸ່ມ. ພວກຊາວໜຸ່ມຕ້ອງຮ່ຳຮຽນ ຕ້ອງເຮັດວຽກ, ແຕ່ວ່າ ໄວໜຸ່ມແມ່ນໄວທີ່ພວມຂຶ້ນໃຫຽ່ໃສ່ເຕັມ. ດ້ວຍເຫດນີ້ ຈຶ່ງຕ້ອງເບິ່ງແຍງທັງສອງດ້ານຂອງຊາວໜຸ່ມຢ່າງເຕັມທີ່ ຄື ດ້ານການເຮັດວຽກ ການຮ່ຳຮຽນແລະດ້ານການຊື່ນມ່ວນ ການກິລາ ການພັກຜ່ອນ.

ຄຳຊີ້ນຳ ໃນໂອກາດ ຕ້ອນ ຮັບການເຂົ້າພົບ ຂອງຄະນະປະທານກອງປະຊຸມໃຫຽ່ຜູ້ແທນທົ່ວປະເທດ ຂອງຄະນະຊາວໜຸ່ມເທື່ອທີ່ ໔ (ວັນທີ ໓໐-໖-໑໙໕໓)

໓໑. ແມ່ຍິງ

ໂດຍທົ່ວໄປແລ້ວ, ຜູ້ຊາຍຈີນແມ່ນຢູ່ໃຕ້ການບັງຄັບຂອງອຳນາດທີ່ເປັນລະບົບ ໓ ຊະນິດ (ອຳນາດການເມືອງ ອຳນາດວົງຕະກຸນ ອຳນາດສາສະໜາ—ຜູ້ລຽບລຽງ), ...ສ່ວນແມ່ຍິງນັ້ນ, ນອກຈາກຢູ່ໃຕ້ການບັງຄັບຂອງອຳນາດ ໓ ຊະນິດດັ່ງກ່າວຂ້າງເທິງແລ້ວ, ຍັງຢູ່ໃຕ້ການບັງຄັບຂອງຜູ້ຊາຍ (ອຳນາດຜົວ) ອີກດ້ວຍ. ອຳນາດ ໔ ຊະນິດ—ອຳນາດການເມືອງ ອຳນາດວົງຕະກຸນ ອຳນາດສາສະໜາ ແລະ ອຳນາດຜົວເຫຼົ່ານີ້ເປັນຕົວແທນແນວຄິດ ແລະລະບອບຂອງກົດລະບຽບວົງຕະກຸນແບບສັກດີນາທັງໝົດ, ເປັນເຊືອກໃຫຽ່ທີ່ສຸດ ໔ ເສັ້ນທີ່ຜູກມັດປະຊາຊົນຈີນໂດຍສະເພາະແມ່ນຊາວນາ. ເລື່ອງຊາວນາໂຄ່ນລົ້ມອຳນາດການເມືອງຂອງເຈົ້າທີ່ດິນໃນຊົນນະບົດແນວໃດນັ້ນ

ໄດ້ເວົ້າມາແລ້ວໃນຂ້າງຕົ້ນ. ອຳນາດການເມືອງຂອງເຈົ້າທີ່ດິນ ເປັນແກນຂອງອຳນາດທັງປວງ. ເມື່ອອຳນາດການເມືອງຂອງເຈົ້າທີ່ດິນຖືກໂຄ່ນລົ້ມລົງແລ້ວ, ອຳນາດວົງຕະກູນ ອຳນາດສາສະໜາ ແລະ ອຳນາດຜົວກໍ່ຫວັ່ນໄຫວຄອນແຄນໄປຕາມໝົດ. . . . ແຕ່ໃດໆມາ ອຳນາດຜົວຢູ່ໃນໝູ່ຊາວນາທຸກກໍ່ອ່ອນແດ່ຈັກໜ່ອຍ, ເພາະວ່າ ໃນທາງເສດຖະກິດ ແມ່ຍິງຊາວນາທຸກຕ້ອງເຂົ້າຮ່ວມການອອກແຮງງານຫຼາຍກວ່າແມ່ຍິງຊົນຊັ້ນຮັ່ງມີ, ສະນັ້ນ ພວກເຂົາເຈົ້າຈຶ່ງມີສິດປາກເວົ້າ ຈົນຮອດມີສິດຕັດສິນວຽກງານໃນຄອບຄົວຫຼາຍແດ່ຈັກໜ່ອຍ. ເມື່ອຮອດບໍ່ທໍ່ໃດປີມານີ້, ເສດຖະກິດໃນຊົນນະບົດແຮ່ງລົ້ມລະລາຍລົງ, ເງື່ອນໄຂພື້ນຖານທີ່ຜູ້ຊາຍຄອບຄຸມແມ່ຍິງນັ້ນ ໄດ້ຖືກທຳລາຍແລ້ວ. ໃນມໍ່ໆນີ້ ພໍຂະບວນເຄື່ອນໄຫວຂອງຊາວນາເກີດຂຶ້ນ, ໃນທ້ອງຖິ່ນຫຼາຍແຫ່ງ, ແມ່ຍິງກໍ່ໄດ້ຈັດຕັ້ງສະຫະພັນແມ່ຍິງຊົນນະບົດຂຶ້ນນຳ, ໂອກາດທີ່ແມ່ຍິງເງີຍໜ້າເງີຍຕາໄດ້ມາຮອດແລ້ວ, ອຳນາດຜົວກໍ່ນັບມື້ນັບຫວັ່ນໄຫວຄອນແຄນ. ຮວມຄວາມແລ້ວ, ເມື່ອອຳ

ນາດຊາວນາໄດ້ເພີ່ມທະວີຫຼາຍຂຶ້ນ, ແນວຄິດແລະລະບອບຂອງກົດລະບຽບວົງຕະກູນແບບສັກດີນາທັງໝົດກໍ່ໄດ້ຫວັ່ນໄຫວຄອນແຄນໄປນຳ.

«ລາຍງານການສຳຫຼວດຂະບວນເຄື່ອນໄຫວຂອງຊາວນາແຂວງຫູໜານ» (ເດືອນ ມ-໑໙໒໗)

ຈົ່ງສາມັກຄີກັນເຂົ້າ, ເຂົ້າຮ່ວມການຜະລິດແລະການເຄື່ອນໄຫວການເມືອງ, ປັບປຸງຖານະເສດຖະກິດແລະຖານະການເມືອງຂອງແມ່ຍິງໃຫ້ດີຂຶ້ນ.

ຄຳຂວັນທີ່ຂຽນໃຫ້ວາລະສານ « ແມ່ຍິງຈີນໃໝ່ » ສະບັບປະຖົມ ວັນທີ ໒໐-໗-໑໙໔໙

ຮຽກຮ້ອງໃຫ້ປົກປັກຮັກສາຜົນປະໂຫຍດຂອງຊາວໜຸ່ມ ແມ່ຍິງແລະເດັກນ້ອຍ, ສົງເຄາະຊາວໜຸ່ມທີ່ບໍ່ໄດ້ເຂົ້າຮຽນຍ້ອນທຸກຍາກ ແລະເຮັດໃຫ້ຊາວໜຸ່ມ ແມ່ຍິງຈັດຕັ້ງກັນຂຶ້ນ, ເຂົ້າຮ່ວມການເຮັດວຽກງານຕ່າງໆທີ່ມີຜົນປະໂຫຍດຕໍ່ສົງຄາມຕໍ່ຕ້ານຍີ່

ປຸ່ນແລະຄວາມກ້າວໜ້າຂອງສັງຄົມໃນຖານະສະເໝີພາບ, ເຮັດໃຫ້ເສລີພາບໃນການແຕ່ງດອງ ແລະ ສະເໝີພາບລະຫວ່າງຍິງຊາຍປາກົດເປັນຈິງຂຶ້ນ, ເຮັດໃຫ້ຊາວໜຸ່ມແລະເດັກນ້ອຍໄດ້ຮັບການຮ່ຳຮຽນທີ່ມີປະໂຫຍດ; . . .

«ວ່າດ້ວຍລັດຖະບານປະສົມ» (ວັນທີ ໒໔-໔-໑໙໔໕)

ການສັບຊ້ອນແຮງງານຢ່າງມີການຈັດຕັ້ງ ແລະ ຊຸກຍູ້ແມ່ຍິງເຂົ້າຮ່ວມການຜະລິດ ແມ່ນພາລະໜ້າທີ່ພື້ນຖານທີ່ສຸດໃນດ້ານການຜະລິດກະເສດຕະກຳຂອງພວກເຮົາ.

« ນະໂຍບາຍເສດຖະກິດຂອງພວກເຮົາ » (ວັນທີ ໒໓-໑-໑໙໓໔)

ເພື່ອສ້າງສາສັງຄົມສັງຄົມນິຍົມທີ່ຍິ່ງໃຫຍ່, ການລະດົມມວນຊົນແມ່ຍິງ ອັນກວ້າງໃຫຍ່ເຂົ້າຮ່ວມການເຄື່ອນໄຫວການຜະລິດນັ້ນ ມີຄວາມໝາຍໃຫຍ່ຫຼວງທີ່ສຸດ. ໃນການຜະລິດ, ຕ້ອງເຮັດໃຫ້ການທີ່ຍິງຊາຍເຮັດວຽກຢ່າງດຽວກັນໄດ້ຮັບຄ່າຕອບແທນທໍ່

ກັນປາກົດເປັນຈິງ. ມີແຕ່ຢູ່ໃນຂະບວນການດັດແປງເປັນແບບສັງຄົມນິຍົມໃນທົ່ວທັງສັງຄົມທໍ່ນັ້ນ ຈຶ່ງສາມາດເຮັດໃຫ້ຄວາມສະເໝີພາບອັນແທ້ຈິງລະຫວ່າງຍິງຊາຍປາກົດເປັນຈິງຂຶ້ນໄດ້.

ໝາຍເຫດໃນບົດຄວາມເລື່ອງ «ແມ່ຍິງໄດ້ກ້າວເຂົ້າສູ່ແນວລົບການອອກແຮງງານແລ້ວ» (ປີ ໑໙໕໕)

ຫຼັງຈາກຈັດຕັ້ງເປັນແບບສະຫະກອນແລ້ວ, ສະຫະກອນເປັນຈຳນວນຫຼາຍຮູ້ສຶກວ່າແຮງງານບໍ່ພຽງພໍ, ມີຄວາມຈຳເປັນຕ້ອງລະດົມມວນຊົນແມ່ຍິງອັນກວ້າງໃຫຍ່ທີ່ແຕ່ກ່ອນບໍ່ໄດ້ເຂົ້າຮ່ວມການອອກແຮງງານກາງໄຮ່ກາງນາໃຫ້ເຂົ້າຮ່ວມແນວລົບອອກແຮງງານ. ...ແມ່ຍິງຂອງປະເທດຈີນແມ່ນແຮງງານອັນຍິ່ງໃຫຍ່ຊະນິດໜຶ່ງ. ຕ້ອງຂຸດຄົ້ນແຮງງານນີ້ໃຫ້ເຂົ້າຮ່ວມການຕໍ່ສູ້ເພື່ອສ້າງສາປະເທດສັງຄົມນິຍົມທີ່ຍິ່ງໃຫຍ່.

ໝາຍເຫດໃນບົດຄວາມເລື່ອງ «ລະດົມຊົນຂວາຍແມ່ຍິງເຂົ້າຮ່ວມການຜະລິດໄດ້ແກ້ໄຂຄວາມຫຍຸ້ງຍາກທີ່ແຮງງານບໍ່ພຽງພໍ» (ປີ ໑໙໕໕)

ໃຫ້ແຮງງານແມ່ຍິງທັງໝົດເຂົ້າຮ່ວມແນວລົບອອກແຮງງານທຸກຖ້ອນໜ້າພາຍໃຕ້ຫຼັກການເຮັດວຽກຢ່າງດຽວກັນໄດ້ຮັບຄ່າຕອບແທນທ່ກັນ, ຂໍ້ຮຽກຮ້ອງນີ້ ຄວນເຮັດໃຫ້ປາກົດເປັນຈິງຂຶ້ນພາຍໃນເວລາອັນສັ້ນທີ່ທີ່ຈະສັ້ນໄດ້.

ໝາຍເຫດໃນບົດຄວາມເລື່ອງ « ແຜນການຂອງສະຫະພັນແມ່ຍິງປະຊາທິປະໄຕເມືອງສິງໄຖກ່ຽວກັບວຽກງານແມ່ຍິງໃນຂະບວນເຄື່ອນໄຫວຂະຫຍາຍການຈັດຕັ້ງກະເສດຕະກຳເປັນແບບສະຫະກອນ » (ປີ ໑໙໕໕)

໓໒. ວັດທະນະທຳແລະສິລະປະ

ໃນໂລກປັດຈຸບັນນີ້, ວັດທະນະທຳຫຼືສິລະປະວັນນະຄະດີທັງໝົດ ລ້ວນແຕ່ເປັນຂອງຊົນຊັ້ນໃດຊົນຊັ້ນໜຶ່ງແລະຂຶ້ນກັບແນວທາງການເມືອງອັນໃດອັນໜຶ່ງ. ທີ່ຈິງແລ້ວ ສິລະປະເພື່ອສິລະປະ ສິລະປະທີ່ເໜືອຊົນຊັ້ນ ສິລະປະທີ່ຄຽງຄູ່ກັບການເມືອງຫຼືຕ່າງເປັນອິດສະລະພໍໃຈພໍມັນນັ້ນ ແມ່ນບໍ່ມີດອກ. ສິລະປະວັນນະຄະດີຂອງຊົນຊັ້ນກຳມາຊີບ ແມ່ນພາກສ່ວນໜຶ່ງຂອງພາລະກິດປະຕິວັດທັງໝົດຂອງຊົນຊັ້ນກຳມາຊີບ, ຄືດັ່ງເລນິນໄດ້ເວົ້າວ່າມັນແມ່ນ "ໝາກເພືອງແລະຕາປູກ້າວ"ໃນເຄື່ອງຈັກປະຕິວັດທັງເຄື່ອງ.

«ຄຳປາໄສໃນທີ່ຊຸມນຸມສົນທະນາສິລະປະວັນນະຄະດີຢູ່ເມືອງຢຽນອານ» (ເດືອນ ໕-໑໙໔໒)

ສຳລັບມວນມະຫາຊົນແລ້ວ, ວັດທະນະທຳປະຕິວັດ ແມ່ນອາວຸດອັນແຂງແຮງຂອງການປະຕິວັດ. ກ່ອນການປະຕິວັດ, ວັດທະນະທຳປະຕິວັດ ແມ່ນການກຽມທາງແນວຄິດຂອງການປະຕິວັດ; ໃນລະຫວ່າງການປະຕິວັດ, ແມ່ນແນວລົບອັນຈຳເປັນ ແລະສຳຄັນແນວໜຶ່ງຢູ່ໃນແນວລົບຮວມຂອງການປະຕິວັດ.

«ວ່າດ້ວຍລັດທິປະຊາທິປະໄຕໃໝ່» (ເດືອນ ໑-໑໙໔໐)

ສິລະປະວັນນະຄະດີຂອງພວກເຮົາລ້ວນແຕ່ແມ່ນເພື່ອມວນມະຫາຊົນ, ກ່ອນອື່ນ ແມ່ນເພື່ອກຳມະກອນຊາວນາທະຫານ, ສ້າງແຕ່ງຂຶ້ນເພື່ອກຳມະກອນຊາວນາທະຫານ ແລະ ເພື່ອໃຫ້ກຳມະກອນຊາວນາທະຫານໃຊ້.

«ຄຳປາໄສໃນທີ່ຊຸມນຸມສົນທະນາສິລະປະວັນນະຄະດີ
ຢູ່ເມືອງຢຽນອານ» (ເດືອນ ໕-໑໙໔໒)

ຜູ້ເຮັດວຽກທາງສິລະປະວັນນະຄະດີຂອງພວກເຮົາ ຕ້ອງເຮັດພາລະໜ້າທີ່ນີ້ໃຫ້ຫຼ້ອນ, ຕ້ອງຍ້າຍຈຸດຢືນມາໃຫ້ໄດ້, ຕ້ອງຍ້າຍມາເທື່ອລະກ້າວ, ຍ້າຍມາທາງຝ່າຍກຳມະກອນຊາວນາ

ທະຫານ, ຍ້າຍມາທາງຝ່າຍຊົນຊັ້ນກຳມາຊີບໃຫ້ໄດ້ໃນລະຫວ່າງຊຶມເລິກເຂົ້າສູ່ມວນຊົນກຳມະກອນຊາວນາທະຫານແລະຊຶມເລິກເຂົ້າສູ່ການຕໍ່ສູ້ຕົວຈິງ, ໃນລະຫວ່າງຮ່ຳຮຽນລັດທິມາກແລະຮ່ຳຮຽນສັງຄົມ. ມີແຕ່ເຮັດແນວນີ້ເທົ່ານັ້ນ, ພວກເຮົາຈຶ່ງຈະມີສິລະປະວັນນະຄະດີທີ່ເພື່ອກຳມະກອນຊາວນາທະຫານຢ່າງແທ້ຈິງ ແລະມີສິລະປະວັນນະຄະດີຂອງຊົນຊັ້ນກຳມາຊີບທີ່ແທ້ຈິງໄດ້.

«ຄຳປາໄສໃນທີ່ຊຸມນຸມສົນທະນາສິລະປະວັນນະຄະດີ
ຢູ່ເມືອງຢຽນອານ» (ເດືອນ ໕-໑໙໔໒)

ຕ້ອງເຮັດໃຫ້ສິລະປະວັນນະຄະດີກາຍເປັນພາກປະກອບສ່ວນໜຶ່ງຂອງເຄື່ອງຈັກປະຕິວັດທັງເຄື່ອງເປັນຢ່າງດີ, ເຮັດເປັນອາວຸດອັນແຂງແຮງເພື່ອສາມັກຄີປະຊາຊົນ ອົບຮົມປະຊາຊົນ ໂຈມຕີສັດຕູແລະດັບສູນສັດຕູ, ຊ່ວຍປະຊາຊົນຮ່ວມຈິດຮ່ວມໃຈກັນຕໍ່ສູ້ກັບສັດຕູ.

«ຄຳປາໄສໃນທີ່ຊຸມນຸມສົນທະນາສິລະປະວັນນະຄະດີ
ຢູ່ເມືອງຢຽນອານ» (ເດືອນ ໕-໑໙໔໒)

ການວິຈານສິລະປະວັນນະຄະດີມີສອງມາດຕະຖານ, ອັນໜຶ່ງແມ່ນມາດຕະຖານການເມືອງ, ອັນໜຶ່ງແມ່ນມາດຕະຖານສິລະປະ. . . .

ມີທັງມາດຕະຖານການເມືອງ ແລະ ມາດຕະຖານສິລະປະ, ຄວາມພົວພັນລະຫວ່າງສອງອັນນີ້ເປັນແນວໃດ? ການເມືອງບໍ່ແມ່ນຈະທໍ່ກັນກັບສິລະປະ, ໂລກະທັດທົ່ວໄປກໍ່ບໍ່ແມ່ນທໍ່ກັນກັບວິທີສ້າງແຕ່ງສິລະປະກຳແລະວິທີວິຈານສິລະປະ. ພວກເຮົາບໍ່ພຽງແຕ່ປະຕິເສດມາດຕະຖານການເມືອງທີ່ເປັນນາມະທຳແລະບໍ່ປ່ຽນແປງເດັດຂາດທໍ່ນັ້ນ, ຍັງປະຕິເສດມາດຕະຖານສິລະປະທີ່ເປັນນາມະທຳແລະບໍ່ປ່ຽນແປງເດັດຂາດຄືກັນ, ຊົນຊັ້ນຕ່າງໆໃນທຸກສັງຄົມຊົນຊັ້ນ ລ້ວນແຕ່ມີມາດຕະຖານການເມືອງແລະມາດຕະຖານສິລະປະຕ່າງກັນ. ແຕ່ບໍ່ວ່າຊົນຊັ້ນໃດໃນສັງຄົມຊົນຊັ້ນໃດໆ, ຍ່ອມຈະເອົາມາດຕະຖານການເມືອງວາງຢູ່ອັນດັບທີ່ໜຶ່ງ ແລະ ເອົາມາດຕະຖານສິລະປະວາງຢູ່ອັນດັບທີ່ສອງ. . . .ຄວາມຮຽກຮ້ອງຕ້ອງການຂອງພວກເຮົານັ້ນ ແມ່ນ

ໃຫ້ການເມືອງກັບສິລະປະເປັນເອກະພາບກັນ ເນື້ອໃນກັບຮູບການເປັນເອກະພາບກັນ ແລະ ເນື້ອໃນການເມືອງທີ່ປະຕິວັດກັບຮູບການສິລະປະອັນຈົບງາມສົມບູນເທົ່າທີ່ຈະເຮັດໄດ້ນັ້ນເປັນເອກະພາບກັນ. ສິລະປະກຳທີ່ຂາດລັກສະນະສິລະປະນັ້ນ, ບໍ່ຄ່າໃນດ້ານການເມືອງຈະກ້າວໜ້າປານໃດ ກໍ່ບໍ່ມີກຳລັງ. ດ້ວຍເຫດນີ້ ພວກເຮົາທັງຄັດຄ້ານສິລະປະກຳທີ່ມີທັດສະນະການເມືອງຜິດພາດ ທັງຄັດຄ້ານຄວາມຫງ່ຽງທີ່ເອີ້ນວ່າ "ແບບຄຳຂວັນ"ຊຶ່ງມີແຕ່ທັດສະນະການເມືອງອັນຖືກຕ້ອງ ແຕ່ບໍ່ມີກຳລັງສິລະປະ. ພວກເຮົາຄວນດຳເນີນການຕໍ່ສູ້ໃນສອງແນວລົບໃນບັນຫາສິລະປະວັນນະຄະດີ.

«ຄຳປາໄສໃນທີ່ຊຸມນຸມສົນທະນາສິລະປະວັນນະຄະດີ
ຢູ່ເມືອງຢຽນອານ» (ເດືອນ ໕-໑໙໔໒)

ເຂັມທິດທີ່ວ່ານານາດອກໄມ້ພ້ອມກັນບານ ບັນດາສຳນັກແຂ່ງກັນເວົ້ານັ້ນ ແມ່ນເຂັມທິດທີ່ຊຸກຍູ້ໃຫ້ສິລະປະຂະຫຍາຍຕົວ

ແລະວິທະຍາສາດກ້າວໜ້າ, ແມ່ນເຂັມທິດທີ່ຊຸກຍູ້ໃຫ້ວັດທະນະທຳສັງຄົມນິຍົມຂອງປະເທດເຮົາຈະເລີນຮຸ່ງເຮືອງ. ໃນດ້ານສິລະປະ, ຮູບການແລະທຳນອງທີ່ຕ່າງກັນສາມາດຂະຫຍາຍຕົວໄດ້ຢ່າງເສລີ, ໃນດ້ານວິທະຍາສາດ, ຝ່າຍວິຊາການທີ່ຕ່າງກັນສາມາດຖົກຖຽງກັນໄດ້ຢ່າງເສລີ. ພວກເຮົາເຫັນວ່າການໃຊ້ກຳລັງຝ່າຍບໍລິຫານ ບັງຄັບໃຫ້ເຜີຍແຜ່ທຳນອງແບບໜຶ່ງແລະວິຊາການຝ່າຍໜຶ່ງ ໂດຍຫ້າມໃຊ້ທຳນອງອີກແບບໜຶ່ງແລະວິຊາການອີກຝ່າຍໜຶ່ງນັ້ນ ມີຜົນຮ້າຍຕໍ່ການຂະຫຍາຍສິລະປະແລະວິທະຍາສາດ. ບັນຫາຖືກຫຼືຜິດໃນດ້ານສິລະປະແລະວິທະຍາສາດນັ້ນ ຄວນແກ້ໄຂໂດຍຜ່ານການອະພິປາຍກັນຢ່າງເສລີໃນວົງການສິລະປະແລະວົງການວິທະຍາສາດ, ແກ້ໄຂໂດຍຜ່ານພາກປະຕິບັດທາງສິລະປະແລະວິທະຍາສາດ, ແຕ່ບໍ່ຄວນແກ້ໄຂດ້ວຍວິທີອັນງ່າຍດາຍ.

«ບັນຫາກ່ຽວກັບການແກ້ໄຂຄວາມຂັດແຍ້ງພາຍໃນປະຊາຊົນຢ່າງຖືກຕ້ອງ» (ວັນທີ່ ໒໗-໒-໑໙໕໗)

ກອງທັບທີ່ບໍ່ມີວັດທະນະທຳແມ່ນກອງທັບທີ່ໂງ່ຈ້າ ແລະ ກອງທັບທີ່ໂງ່ຈ້າຍ່ອມບໍ່ສາມາດເອົາຊະນະສັດຕູໄດ້.

«ແນວໂຮມໃນວຽກງານວັດທະນະທຳ» (ວັນທີ່ ໓໐ ໑໐-໑໙໔໔)

໓໓. ການຮ່ຳຮຽນ

ໃນການປ່ຽນປະເທດຈີນຊຶ່ງເປັນປະເທດກະເສດຕະກຳທີ່ຫຼ້າຫຼັງ ໃຫ້ກາຍເປັນປະເທດອຸດສາຫະກຳທີ່ຈະເລີນກ້າວໜ້ານັ້ນ, ວຽກງານຢູ່ຕໍ່ໜ້າພວກເຮົາລຳບາກຫຼາຍ, ບົດຮຽນຂອງພວກເຮົາບໍ່ພຽງພໍທີ່ສຸດ. ດັ່ງນັ້ນ ຈຶ່ງຕ້ອງຊ່າງຮ່ຳຮຽນ.

> «ຄຳປາໄສເປີດກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດເທື່ອທີ່ ໘ ຂອງພັກກອມມູນິດຈີນ» (ວັນທີ່ ໑໕-໙-໑໙໕໖)

ສະພາບການປ່ຽນແປງຢູ່ສະເໝີ, ເພື່ອໃຫ້ແນວຄຶດຂອງຕົນເໝາະສົມກັບສະພາບການໃໝ່ ກໍ່ຕ້ອງຮ່ຳຮຽນ. ເຖິງວ່າເປັນຜູ້ທີ່ເຂົ້າໃຈລັດທິມາກຫຼາຍພໍສົມຄວນ ແລະ ຜູ້ທີ່ມີຫຼັກໝັ້ນຊົນຊັ້ນກຳມາຊີບເດັດດ່ຽວໜຽວແໜ້ນພໍສົມຄວນແລ້ວກໍ່ຕາມ, ກໍ່ຍັງ

ຕ້ອງຮ່ຳຮຽນຕື່ມອີກ, ຕ້ອງຮັບເອົາວັດຖຸເຫດການໃໝ່, ຕ້ອງຄົ້ນຄວ້າບັນຫາໃໝ່.

> «ຄຳປາໄສໃນກອງປະຊຸມວຽກງານໂຄສະນາທົ່ວປະເທດຂອງພັກກອມມູນິດຈີນ» (ວັນທີ່ ໑໒-໓-໑໙໕໗)

ພວກເຮົາສາມາດຮຽນຮູ້ສິ່ງທີ່ພວກເຮົາບໍ່ເຄີຍຮູ້ມາແຕ່ກ່ອນ. ພວກເຮົາບໍ່ພຽງແຕ່ຊ່າງທຳລາຍໂລກເກົ່າທໍ່ນັ້ນ ຍັງຊ່າງສ້າງສາໂລກໃໝ່ອີກດ້ວຍ.

> «ຄຳລາຍງານໃນກອງປະຊຸມເຕັມຄະນະເທື່ອທີ່ ໒ ຂອງຄະນະກຳມະການສູນກາງສະໄໝທີ່ ໗ ຂອງພັກກອມມູນິດຈີນ» (ວັນທີ່ ໕-໓-໑໙໔໙)

ທ່າທີໃນການຮ່ຳຮຽນມີສອງຊະນິດ. ຊະນິດໜຶ່ງແມ່ນທ່າທີແບບລັດທິຄຳພີ ຄື ສິ່ງທີ່ເໝາະສົມແລະບໍ່ເໝາະສົມກໍ່ຂົນເອົາມາໝົດໂດຍບໍ່ເອົາຫົວຊາສະພາບການຂອງປະເທດເຮົາ. ທ່າທີຊະນິດນີ້ບໍ່ດີ. ທ່າທີອີກຊະນິດໜຶ່ງ ຄື ໃນເວລາຮ່ຳຮຽນນັ້ນ

ໃຊ້ສະໝອງຄິດເບິ່ງ, ຮຽນເອົາສິ່ງທີ່ເໝາະສົມກັບສະພາບຂອງປະເທດເຮົາ ຄື ຕ້ອງຖອດຖອນເອົາບົດຮຽນທີ່ມີຜົນດີຕໍ່ພວກເຮົາ, ສິ່ງທີ່ພວກເຮົາຕ້ອງການນັ້ນແມ່ນທ່າທີຊະນິດນີ້.

«ບັນຫາກ່ຽວກັບການແກ້ໄຂຄວາມຂັດແຍ້ງພາຍໃນ
ປະຊາຊົນຢ່າງຖືກຕ້ອງ» (ວັນທີ່ ໒໗-໒-໑໙໕໗)

ທິດສະດີຂອງມາກ ອັງແກນ ເລນິນແລະສະຕາລິນ ແມ່ນທິດສະດີທີ່ "ໃຊ້ໄດ້ເໝາະສົມທົ່ວທຸກບ່ອນ". ບໍ່ຄວນຖືທິດສະດີຂອງພວກທ່ານເປັນຄຳພີຕາຍຕົວ, ແຕ່ຄວນຖືເປັນເຂັມຊີ້ທິດຂອງການກະທຳ. ບໍ່ຄວນຮຽນແຕ່ຄຳສັບແລະປະໂຫຽກຂອງລັດທິມາກເລນິນ, ແຕ່ຄວນຮ່ຳຮຽນໂດຍຖືເປັນວິທະຍາສາດຂອງການປະຕິວັດ. ບໍ່ພຽງແຕ່ຕ້ອງເຂົ້າໃຈຂໍ້ສະຫຼຸບກ່ຽວກັບກົດເກນທົ່ວໄປທີ່ມາກ ອັງແກນ ເລນິນແລະສະຕາລິນໄດ້ມາຈາກການຄົ້ນຄວ້າຊີວິດພາກຕົວຈິງແລະບົດຮຽນປະຕິວັດອັນກວ້າງຂວາງທີ່ນັ້ນ ແລະຍັງຕ້ອງຮ່ຳຮຽນເອົາຫຼັກພື້ນ ແລະ ວິທີການຂອງພວກທ່ານໃນການສັງເກດບັນຫາ ແລະ ແກ້ໄຂບັນຫາອີກດ້ວຍ.

« ຖານະຂອງພັກກອມມູນິດຈີນໃນສົງຄາມຊາດ »
(ເດືອນ ໑໐-໑໙໓໘)

ຖ້າມີທິດສະດີອັນຖືກຕ້ອງ, ຫາກພຽງແຕ່ເອົາມາຄຸຍກັນລ້າງຄາວໜຶ່ງ, ແລ້ວມ້ຽນຂຶ້ນຫິ້ງໄວ້ ບໍ່ປະຕິບັດຕາມ, ເມື່ອເປັນແນວນີ້, ເຖິງວ່າທິດສະດີນີ້ຈະດີປານໃດກໍ່ບໍ່ມີຄວາມໝາຍຫຍັງເລີຍ.

«ວ່າດ້ວຍພາກປະຕິບັດ» (ເດືອນ ໗-໑໙໓໗)

ສຳລັບທິດສະດີລັດທິມາກ ຕ້ອງຮຽນຮູ້ຊຶມຊາບ ແລະ ເອົາໄປໃຊ້ໄດ້, ຈຸດປະສົງໃນການຮຽນຮູ້ຊຶມຊາບກໍ່ເພື່ອເອົາໄປໃຊ້ທັງນັ້ນ. ຖ້າເຈົ້າສາມາດນຳເອົາທັດສະນະລັດທິມາກເລນິນໄປອະທິບາຍບັນຫາຕົວຈິງຈັກບັນຫາສອງບັນຫາແລ້ວ ກໍ່ຄວນໄດ້ຮັບການຍ້ອງຍໍ, ກໍ່ນັບວ່າມີຜົນງານແດ່ເລັກນ້ອຍ. ສິ່ງທີ່ເຈົ້າ

ອະທິບາຍນັ້ນແຮ່ງຫຼາຍ ແຮ່ງກວ້າງຂວາງ ແຮ່ງເລິກຊຶ້ງ, ຜົນງານຂອງເຈົ້າກໍ່ແຮ່ງຫຼາຍ.

«ປັບປຸງທ່າທຳນອງຂອງພັກ» (ວັນທີ ໑-໒-໑໙໔໒)

ທິດສະດີລັດທິມາກເລນິນກັບພາກຕົວຈິງຂອງການປະຕິວັດຈີນຈະປະສານກັນແນວໃດ? ເວົ້າຢ່າງງ່າຍໆກໍ່ຄື "ຍິງທະນູຢ່າງມີເປົ້າໝາຍ". "ທະນູ"ກໍ່ແມ່ນລູກໜ້າ, "ເປົ້າໝາຍ"ກໍ່ແມ່ນເປົ້າ, ຍິງໜ້າຕ້ອງແນໃສ່ເປົ້າ. ການພົວພັນລະຫວ່າງລັດທິມາກເລນິນກັບການປະຕິວັດຈີນນັ້ນ ກໍ່ແມ່ນການພົວພັນລະຫວ່າງລູກໜ້າກັບເປົ້າ. ມີສະຫາຍບາງຄົນຊ້ຳພັດ "ຍິງທະນູຢ່າງບໍ່ມີເປົ້າໝາຍ", ຍິງໄປທົ່ວທິບທົ່ວແດນ, ຄົນແນວນີ້ຍ່ອມຈະເຮັດໃຫ້ການປະຕິວັດເສຍຫາຍໄດ້ງ່າຍ.

«ປັບປຸງທ່າທຳນອງຂອງພັກ» (ວັນທີ ໑-໒-໑໙໔໒)

ຜູ້ທີ່ມີບົດຮຽນໃນການເຮັດວຽກຕ້ອງຮ່ຳຮຽນທາງດ້ານທິດສະດີ, ຕ້ອງຕັ້ງອົກຕັ້ງໃຈອ່ານໜັງສື, ແລ້ວຈຶ່ງສາມາດເຮັດໃຫ້ບົດຮຽນນັ້ນມີຄວາມເປັນລະບຽບ, ມີລັກສະນະຮອບຮອມແລະຍົກຂຶ້ນເປັນທິດສະດີໄດ້, ແລ້ວຈຶ່ງອາດຈະບໍ່ເຂົ້າໃຈຜິດວ່າບົດຮຽນພາກສ່ວນເປັນສັດຈະທຳທົ່ວໄປ ຈຶ່ງບໍ່ຜິດພາດທາງລັດທິບົດຮຽນ.

«ປັບປຸງທ່າທຳນອງຂອງພັກ» (ວັນທີ ໑-໒-໑໙໔໒)

ການອ່ານໜັງສືແມ່ນການຮ່ຳຮຽນ, ການເອົາມາໃຊ້ກໍ່ເປັນການຮ່ຳຮຽນ ທັງເປັນການຮ່ຳຮຽນອັນສຳຄັນຍິ່ງກວ່າອີກຊ້ຳ. ຮ່ຳຮຽນສົງຄາມຈາກສົງຄາມ—ອັນນີ້ແມ່ນວິທີສຳຄັນຂອງພວກເຮົາ. ຜູ້ທີ່ບໍ່ມີໂອກາດເຂົ້າໂຮງຮຽນ ກໍ່ຍັງຮ່ຳຮຽນສົງຄາມໄດ້ຄືກັນ, ຄື ຮ່ຳຮຽນໃນສົງຄາມ. ສົງຄາມປະຕິວັດແມ່ນເລື່ອງຂອງປວງປະຊາຊົນ, ຕາມທຳມະດາ, ບໍ່ແມ່ນຮຽນແລ້ວຈຶ່ງໄປເຮັດ, ແມ່ນເຮັດຂຶ້ນແລ້ວຈຶ່ງຮ່ຳຮຽນ, ການເຮັດກໍ່ແມ່ນການຮ່ຳຮຽນ.

«ບັນ ຫາ ຍຸດ ທະ ສາດ ຂອງ ສົງ ຄາມ ປະ ຕິວັດ ຈີນ»

(ເດືອນ ໑໒-໑໙໓໖)

ຈາກ " ຊາວບ້ານ " ໄປເປັນທະຫານນີ້ໄລຍະຫ່າງກັນໄລຍະໜຶ່ງ, ແຕ່ບໍ່ຍາວຄືກຳແພງຍາວໝື່ນລີ້ແລະສາມາດລົບລ້າງໄດ້ຢ່າງວ່ອງໄວ, ການເຮັດປະຕິວັດ, ການເຮັດສົງຄາມ ກໍ່ແມ່ນວິທີທີ່ລົບລ້າງໄລຍະຫ່າງນີ້. ທີ່ວ່າການຮຽນແລະການໃຊ້ແມ່ນຂອງບໍ່ງ່າຍນັ້ນ ກໍ່ໝາຍຄວາມວ່າ ຮຽນໄດ້ເຖິງຖອງແລະໃຊ້ໄດ້ຊຳນານນັ້ນບໍ່ແມ່ນຂອງງ່າຍ. ທີ່ວ່າຊາວບ້ານສາມາດກາຍເປັນທະຫານໄດ້ຢ່າງໄວວານັ້ນ, ໝາຍຄວາມວ່າ ຈະເຂົ້າປະຕູວິຊາທະຫານນີ້ກໍ່ບໍ່ຍາກ. ຮວມສອງດ້ານນີ້ເຂົ້າກັນ, ກໍ່ອາດຈະໃຊ້ຄຳບູຮານຂອງຈີນຄຳໜຶ່ງມາເວົ້າໄດ້ວ່າ "ໂລກນີ້ບໍ່ມີເລື່ອງຍາກສຳລັບຄົນຕັ້ງໃຈຈິງ." ໃນເມື່ອເຂົ້າປະຕູນີ້ບໍ່ຍາກແລ້ວ ຈະຮຽນໃຫ້ເລິກຊຶ້ງກໍ່ໄດ້ຄືກັນ, ທະແນນແຕ່ຕັ້ງໃຈ, ທະແນນແຕ່ຊ່າງຮ່ຳຮຽນເອົາທໍ່ນັ້ນແລ້ວ.

«ບັນຫາຍຸດທະສາດຂອງສົງຄາມປະຕິວັດຈີນ»

(ເດືອນ ໑໒-໑໙໓໖)

ພວກເຮົາຕ້ອງຮ່ຳຮຽນວຽກງານເສດຖະກິດນຳຜູ້ຊຳນານທັງໝົດ(ບໍ່ວ່າຜູ້ໃດ). ຍົກພວກເຂົາເຈົ້າເປັນຄູ, ຮຽນຢ່າງເຄົາລົບນົບນອບ, ຮ່ຳຮຽນຢ່າງຊື່ສັດສຸດຈະລິດ. ບໍ່ຮູ້ກໍ່ວ່າບໍ່ຮູ້, ຢ່າຕີວ່າຮູ້.

«ວ່າດ້ວຍການປະເດັດການປະຊາທິປະໄຕປະຊາຊົນ»

(ວັນທີ ໓໐-໖-໑໙໔໙)

ບັນຫາຄວາມຮູ້ນັ້ນແມ່ນບັນຫາວິທະຍາສາດບັນຫາໜຶ່ງ ຈະປອມແປງແລະອວດອ້າງແຕ່ໜ້ອຍດຽວກໍ່ບໍ່ໄດ້, ສິ່ງທີ່ຕ້ອງການຢ່າງເດັດຂາດນັ້ນຊ້ຳພັດແມ່ນດ້ານກົງກັນຂ້າມຂອງມັນ—ທ່າທີຊື່ສັດແລະຖ່ອມຕົວ.

«ວ່າດ້ວຍພາກປະຕິບັດ» (ເດືອນ ໗-໑໙໓໗)

ສັດຕູໃນການຮ່ຳຮຽນນັ້ນ ແມ່ນຄວາມພໍອົກພໍໃຈໃນຕົວເອງ, ເມື່ອຈະຕັ້ງໃຈຮຽນສິ່ງໃດສິ່ງໜຶ່ງແດ່ເລັກນ້ອຍ ກໍ່ຕ້ອງເລີ່ມຕົ້ນຈາກຄວາມບໍ່ຮູ້ພໍອົກພໍໃຈຕົວເອງ. ຕໍ່ຕົນເອງ ຕ້ອງ"ຮຽນບໍ່ເບື່ອບໍ່ໜ່າຍ", ຕໍ່ຜູ້ອື່ນ ຕ້ອງ"ສອນບໍ່ອິດບໍ່ເມື່ອຍ", ພວກ

ເຮົາຄວນມີທ່າທີແບບນີ້.

« ຖານະຂອງພັກກອມມູນິດຈີນໃນສົງຄາມຊາດ »

(ເດືອນ ໑໐-໑໙໓໘)

ມີບາງຄົນໄດ້ອ່ານປຶ້ມລັດທິມາກໜ້ອຍໜຶ່ງ ກໍ່ຖືວ່າຕົນມີຄວາມຮູ້ແລ້ວ, ແຕ່ວ່າ ຍັງບໍ່ໄດ້ຮຽນເຂົ້າສະໝອງ, ຍັງບໍ່ທັນຢັ່ງຮາກລົງໃນສະໝອງ, ຍັງບໍ່ຮູ້ຈັກໃຊ້, ຈິດໃຈອາລົມທາງຊົນຊັ້ນຍັງແມ່ນອັນເກົ່າ. ຍັງມີຄົນສ່ວນໜຶ່ງອີກອວດອົ່ງທີ່ສຸດ, ອ່ານໜັງສືບໍ່ທໍ່ໃດຄຳ ກໍ່ຖືວ່າຕົນເກັ່ງພິລຶກ, ຈົນເຫີນໜ້າຂຶ້ນຟ້າ, ແຕ່ຖ້າປະສົບກັບພ້າຝົນລົມແດງແລ້ວ, ຫຼັກໝັ້ນຂອງພວກເຂົາເຈົ້າ, ທຽບກັບກຳມະກອນແລະຊາວນາຜູ້ອອກແຮງງານສ່ວນຫຼາຍແລ້ວ ກໍ່ແຕກຕ່າງກັນຫຼາຍ. ພວກກ່ອນຫວັ່ນໄຫວຄອນແຄນ, ພວກຫຼັງເດັດດ່ຽວໝັ້ນແໜ້ນ, ພວກກ່ອນມີທ່າທີບໍ່ຈະແຈ້ງ, ພວກຫຼັງມີທ່າທີຈະແຈ້ງ.

«ຄຳປາໄສໃນກອງປະຊຸມວຽກງານໂຄສະນາທົ່ວປະເທດຂອງພັກກອມມູນິດຈີນ» (ວັນທີ ໑໒-໓-໑໙໕໗)

ການຮ່ຳຮຽນລັດທິມາກ ບໍ່ພຽງແຕ່ຕ້ອງຮຽນຈາກປຶ້ມທໍ່ນັ້ນ, ສຳຄັນຍັງຕ້ອງຜ່ານການຕໍ່ສູ້ຊົນຊັ້ນ ຜ່ານພາກປະຕິບັດໃນວຽກງານແລະໃກ້ຊິດຕິດແທດກັບມວນຊົນກຳມະກອນຊາວນາຈິ່ງສາມາດຮຽນໄດ້ຢ່າງແທ້ຈິງ. ຖ້າວ່ານັກຮຽນຮູ້ຂອງພວກເຮົາໄດ້ອ່ານປຶ້ມຂອງລັດທິມາກເລັກນ້ອຍແລ້ວ, ທັງໄດ້ມີຄວາມເຂົ້າໃຈແດ່ໃນເວລາໃກ້ຊິດຕິດແທດກັບມວນຊົນກຳມະກອນຊາວນາແລະໃນພາກປະຕິບັດວຽກງານຂອງຕົນ, ແລ້ວພວກເຮົາທຸກຄົນກໍ່ມີຄວາມເວົ້າຮ່ວມກັນ, ບໍ່ພຽງແຕ່ມີຄວາມເວົ້າຮ່ວມກັນໃນດ້ານລັດທິຮັກຊາດແລະຄວາມເວົ້າຮ່ວມກັນໃນດ້ານລະບອບສັງຄົມນິຍົມທໍ່ນັ້ນ ຍັງມີຄວາມເວົ້າຮ່ວມກັນໃນດ້ານໂລກະທັດລັດທິກອມມູນິດໄດ້ອີກ. ຖ້າເປັນແນວນີ້ແລ້ວ, ວຽກງານຂອງໝົດທຸກຄົນ ກໍ່ຈະເຮັດໄດ້ດີຫຼາຍຂຶ້ນຢ່າງແນ່ນອນ.

«ຄຳປາໄສໃນກອງປະຊຸມວຽກງານໂຄສະນາທົ່ວປະເທດຂອງພັກກອມມູນິດຈີນ» (ວັນທີ ໑໒-໓-໑໙໕໗)

毛 主 席 语 录

外文出版社出版（北京）
1972年版
编号：（老撾）1050—821
00077
1—L—734Pc